
ຂ່າວດີ
Good News

# ຮູບ

1. 2 ຕີໂມທີ 3:16    2 ເປໂຕ 1:20-21
2. ເອເສຖຽນ 28:16-19 ເອຊາຢາ 14:12-15  ພະນິມິດ 12:7-9
3. ປະຖົມມະການ 1:1 - 5
4. ປະຖົມມະການ 1:6-23
5. ປະຖົມມະການ 1:24-2:4
6. ປະຖົມມະການ 2:8-9,15-17
7. ປະຖົມມະການ 3:1-6
8. ປະຖົມມະການ 3:7-13
9. ປະຖົມມະການ 3:14-21
10. ປະຖົມມະການ 3:22-24
11. ປະຖົມມະການ 4:1-2
12. ປະຖົມມະການ 4:3-7
13. ປະຖົມມະການ 4:8-12
14. ປະຖົມມະການ 6:5-22
15. ປະຖົມມະການ 7:1-24
16. ປະຖົມມະການ 8:13-22 ປະຖົມມະການ 9:1-2, 8-17
17. ປະຖົມມະການ 12:1-7
18. ປະຖົມມະການ 15:1-6 ປະຖົມມະການ 17:1-7,15-16;
    ປະຖົມມະການ  21:1-3 ໂລມ 4:18-22
19. ປະຖົມມະການ 22:1-19
20. ອົບພະຍົບ 3:1-10; 5:1-4
21. ອົບພະຍົບ 12:1-14
22. ອົບພະຍົບ 12:21-32
23. ອົບພະຍົບ 19:1-20
24. ອົບພະຍົບ 20:1-21 ອົບພະຍົບ 31:18

25. ອິບພະຍົບ 32:1-35
26. ອິບພະຍົບ 25:1-9
27. ລະບຽບພວກເລວີ 17:10,11
28. ລະບຽບພວກເລວີ 16:2-5, 15-17 ລະບຽບພວກເລວ 16:29-34
29. ຈົດເຊັນບັນຊີ 13:1-3, 26-33
30. ຈົດເຊັນບັນຊີ 21:4 - 7
31. ຈົດເຊັ ບັ ຊີ 21:8,9
32. ເອຊາຢາ 8:19,20 ເອຊາຢາ 44:9-20
33. ເອຊາຢາ 59:20,21 ເອຊາຢາ 60:1-3
34. ເອຊາຢາ 7:14; 9:6,7; 52:14 ມີກາ 5:2 ເອຊາຢາ 53:3-5,8,9
    ເພງສັນລະເສີນ 22:14-18; 16:10
35. ລູກາ 1:26-38
36. ລູກາ 2:8-16
37. ມັດທາຍ 3:13-17
38. ມັດທາຍ 4:1-11
39. ມັດທາຍ 4:18-22
40. ມັດທາຍ 8:23-27
41. ມັດທາຍ 17:14-21
42. ໂຢຮັນ 3:1-3
43. ໂຢຮັນ 3:4-8
44. ໂຢຮັນ 3:9-21
45. ມາລະໂກ 14:16-26
46. ໂຢຮັນ 19:16-30
47. ມັດທາຍ 27:50-56 ເຮັບເລີ 10:19-22
48. ມັດທາຍ 28:1-10
49. ກິດຈະການ 1:6-11
50. ກິດຈະການ 2:1-13

ແປວໄຟຢູ່ເທິງພວກເຂົາແຕ່ລະລີ້ນ ມັນຈຶ່ງເກີດສິ່ງນີ້ ກໍ່ຍ້ອນວ່າພຣະເຈົ້າພຣະວິນຍານບໍລິສຸດໄດ້ລົງມາຢູ່ເທິງຫົວພວກເຂົາ ຫຼັງຈາກນັ້ນ ລີ້ນທີ່ເປັນແປວໄຟ ກໍ່ໄດ້ໄປຈາກພວກເຂົາ ແຕ່ພຣະວິນຍານຈະຢູ່ໃນໃຈຂອງພວກເຂົາ ພຣະວິນຍານຈະຊ່ວຍພວກເຂົາ ແລະບອກພວກເຂົາຫຼາຍສິ່ງຫຼາຍຢ່າງ ແລະເຮັດໃຫ້ພວກເຂົາເຂັ້ມແຂງ ພຣະເຢຊູໄດ້ສົ່ງພຣະວິນຍານລົງມາເພື່ອໜູນໃຈ ແລະຊ່ວຍເຫຼືອພວກເຂົາ



**ກິດຈະການ 1:9-11**

ເມື່ອພຣະອົງຂຶ້ນໄປແລ້ວ ມີທູດສະຫວັນສອງອົງ ມາເວົ້າກັບສາວົກບອກໃຫ້ຮູ້ວ່າ ພຣະເຢຊູຈະກັບມາ ໃນໂລກນີ້ອີກຄັ້ງໜຶ່ງ ແຕ່ການສະເດັດມາຄັ້ງນີ້ ພຣະອົງຈະບໍ່ມາຊ່ວຍມະນຸດໃຫ້ພົ້ນ ບາບ ເພາະການນັ້ນພຣະອົງໄດ້ເຮັດສຳເລັດແລ້ວ ໃນການສະເດັດມາຄັ້ງທີ່ສອງນີ້ ພຣະອົງຈະມາເປັນຜູ້ພິພາກສາຂອງມະນຸດໂລກ ກ່ອນທີ່ ພຣະອົງຈະຕາຍເທິງໄມ້ກາງແຂນ ພຣະອົງໄດ້ບອກໃຫ້ຜູ້ນຳຊາວຢິວຮູ້ເລື່ອງນີ້ແລ້ວ ເມື່ອພຣະເຢຊູຈະມາເປັນຜູ້ພິພາກສານັ້ນ ທຸກຄົນທີ່ບໍ່ຍອມເຫັນພ້ອມກັບພຣະເຈົ້າ ແລະບໍ່ວາງໃຈໃນພຣະເຢຊູ ຈະຕ້ອງຖືກຖິ້ມລົງໃນບຶງໄຟ ທີ່ໄຫມ້ຢູ່ເປັນນິດ ພ້ອມກັບຊາຕານແລະສະໝຸນຂອງມັນ

**ການມາຂອງພະວິນຍານບໍລິສຸດ**

**ກິດຈະການ 2:1-3**

ມື້ໜຶ່ງໃນຂະນະທີ່ໝູ່ຂອງພຣະເຢຊູກຳລັງອະທິຖານຮ່ວມກັນ ກໍ່ໄດ້ມີສຽງອັນໃຫຍ່ຄືກັບສຽງລົມທີ່ມາຈາກທ້ອງຟ້າ ແລະສຽງນັ້ນກໍ່ໄດ້ອ້ອມຮອບພວກເຂົ້າຢູ່ທີ່ເຮືອນຂອງພວກເຂົາ ເຖິງແມ່ນວ່າພວກເຂົາຈະບໍ່ຮູ້ສຶກເຖິງລົມເຫຼົານັ້ນ ແລະມີຫຍັງຢູ່ເທິງຫົວຂອງພວກເຂົາ ຄືກັບລີ້ນທີ່ເປັນ



## ບົດທີ 1
## ພຣະຄຳພີ
## ເປັນໜັງສື ຂອງພຣະຜູ້ສ້າງ

ຖ້າເຮົາຢາກຈະຮູ້ເຖິງຄວາມສັ້ນຍາວ ຫລືນ້ຳໜັກຂອງອີ່ຫຍັງຈັກຢ່າງໜຶ່ງ ເຮົາຈະຕ້ອງວັດຫລືຊັ່ງເບິ່ງ. ເມື່ອເຮົາວັດຫລືຊັ່ງເບິ່ງສິ່ງນັ້ນ ເຮົາຈະຕ້ອງໃຊ້ເຄື່ອງຊັ່ງຫລືເຄື່ອງແທກ ທີ່ຄົນທົ່ວໄປຍອມຮັບວ່າ ເປັນມາດຕະຖານທີ່ຖືກຕ້ອງ.

ແຕ່ເມື່ອເວົ້າ ເຖິງພຣະເຈົ້າ ຫລືຜູ້ສ້າງ ຄົນເຮົາກໍ່ມັກຈະເວົ້າຕາມຄວາມຄິດຂອງຕົນເອງ. ບາງຄົນກໍ່ຄິດວ່າພຣະເຈົ້າເປັນຄືຄົນ ຫລືຄືສັດ. ບາງຄົນກໍ່ຄິດວ່າພຣະເຈົ້ານັ້ນເປັນດວງຕາເວັນ ດວງຈັນ ຫລືຕົ້ນໄມ້.

ຄິດໄປຕ່າງໆ ນາໆ ເປັນເຊັ່ນນັ້ນກໍ່ເພາະວ່າ ເຮົາບໍ່ມີມາດຕະຖານທີ່ຈະວັດແທກ ຫລືພິສູດໄດ້. ເຮົາຈິ່ງເວົ້າໄປຕາມຄວາມຄິດ ຫລືຄວາມເຂົ້າໃຈຂອງຕົນເອງ. ເວົ້າໄດ້ວ່າເກືອບຈະບໍ່ມີໃຜທີ່ເຫັນດີກັນໃນເລື່ອງນີ້. ສະນັ້ນເຮົາຈິ່ງຕ້ອງການມາດຕະຖານ ທີ່ຢູ່ນອກເໜືອຕົວເຮົາເອງ.

ມີທາງດຽວເທົ່ານັ້ນ ທີ່ເຮົາຈະຮູ້ຈັກພຣະຜູ້ສ້າງໄດ້ ຄືໂດຍການທີ່ພຣະເຈົ້າສຳແດງພຣະອົງເອງແກ່ເຮົາ ແລະເວົ້າກັບເຮົາ.





ເມື່ອໂທມັດໄດ້ເຫັນລາວກໍ່ເຊື່ອ ແຕ່ພຣະເຢຊູບອກວ່າ "ຜູ້ທີ່ບໍ່ເຫັນເຮົາ ແຕ່ເຊື່ອກໍ່ເປັນສຸກ" ເຮົາບໍ່ຈຳເປັນຕ້ອງເຫັນພຣະເຢຊູກັບຕາຂອງເຮົາເອງ ເພາະຜູ້ທີ່ເຫັນແລະແຕະຕ້ອງພຣະອົງມີຫລວງຫລາຍ ແລະຄົນເຫລົ່ານັ້ນ ໄດ້ເປັນພະຍານແກ່ເຮົາ ຕາມທີ່ຂຽນໄວ້ໃນພຣະຄຳພີ

**ຄຳສັ່ງທີ່ສຳຄັນທີ່ພຣະອົງໃຫ້**

ໃນ **ມາລະໂກ 16:15-18** ເຮົາພົບຄຳສັ່ງທີ່ສຳຄັນທີ່ພຣະອົງໃຫ້ແກ່ທຸກຄົນທີ່ເຊື່ອພຣະອົງ ພຣະເຢຊູໄດ້ຕາຍເພື່ອທຸກຄົນ ແລະຢາກໃຫ້ມະນຸດພົ້ນຈາກບາບ ຄວາມຕາຍ ແລະອຳນາດຊາຕານ ພຣະເຈົ້າຮັກທຸກຄົນ ແລະບໍ່ຢາກໃຫ້ໃຜໄປຢູ່ໃນທີ່ເຊິ່ງພຣະອົງຕຽມໄວ້ໃຫ້ຊາຕານ ແລະສະໝຸນຂອງມັນ

ເຮົາທັງຫລາຍໄດ້ຍິນເລື່ອງນີ້ແລ້ວ ເຮົາທັງຫລາຍບໍໄດ້ເຫັນພຣະເຢຊູກັບຕາເຮົາ ແຕ່ເຮົາໄດ້ຍິນຄວາມຈິງ ໂດຍທາງພຣະຄຳພີ ພຣະເຈົ້າບອກວ່າເຮົາທຸກຄົນ ຕ້ອງເຊື່ອຂ່າວປະເສີດນີ້ ເຮົາຕ້ອງເຊື່ອວ່າພຣະເຢຊູເປັນຜູ້ຊ່ວຍໃຫ້ລອດ ຜູ້ຍອມຕາຍເພື່ອຊ່ວຍເຮົາໃຫ້ພົ້ນບາບ ຖ້າເຮົາເຫັນພ້ອມກັບພຣະເຈົ້າ ແລະວາງໃຈໃນພຣະເຢຊູ ແຕ່ພຽງຜູ້ດຽວ ພຣະເຈົ້າຈະຍົກໂທດບາບຂອງເຮົາ ແລະຈະໃຫ້ເຮົາຮັບຊີວິດນິລັນດອນ

**ພຣະເຢຊູສະເດັດຂຶ້ນໄປສະຫວັນ**
**ມາລະໂກ 16:19,20**

ເມື່ອພຣະເຢຊູໄດ້ສັ່ງໃຫ້ພວກສາວົກ ໄປປະກາດຂ່າວປະເສີດນີ້ແກ່ມະນຸດທັງປວງແລ້ວ ພຣະອົງຈຶ່ງຈາກພວກເຂົາ ແລະກັບໄປຢູ່ກັບພຣະບິດາໃນສະຫວັນ ການທີ່ພຣະເຢຊູສະເດັດຂຶ້ນໄປຢູ່ໃນສະຫວັນນັ້ນໄດ້ທຳນວາຍໄວ້ໃນ **ເພງສັນລະເສີນ 68:18**



**ບົດທີ 30**

**ພຣະເຢຊູກັບໄປສູ່ສະຫວັນ**

**ມາລະໂກ 16:9-20**

**ໂຢຮັນ 20:24-29**

**ກິດຈະການ 1:9-11**

**ກິດຈະການ 2:1-3**

**ພຣະເຢຊູໄດ້ສຳແດງ**
**ພຣະອົງແກ່ພວກສາວົກ**
**ມາລະໂກ 16:9-15**
**ໂຢຮັນ 20:24-29**

ຄົນທຳອິດທີ່ໄດ້ເຫັນພຣະເຢຊູຫລັງຈາກການເປັນຄືນມານັ້ນ ຄືມາລີຊາວມັກດາລາ ແຕ່ເມື່ອມາລີໄປບອກຄົນອື່ນໆ ພວກເຂົາຍັງບໍ່ເຊື່ອ

ພຣະອົງຮູ້ວ່າ ພວກສາວົກຕ້ອງມີການພິສູດໃນເລື່ອງນີ້ເຖິງຈະເຊື່ອ ເຫດສະນັ້ນ ພຣະອົງຈຶ່ງສະແດງພຣະອົງແກ່ເຫລົ່າສາວົກ ຫລາຍຫົນຫລາຍແຫ່ງ ເຮົາພົບທັງໝົດ 10 ຄັ້ງໃນພຣະຄຳພີ ທີ່ພຣະອົງສຳແດງພຣະອົງໃຫ້ສາວົກໄດ້ເຫັນແຈ້ງ ແລະຮູ້ແທ້ວ່າ ພຣະອົງເປັນຄືນມາຈາກຄວາມຕາຍແທ້ໆ

**ໂຢຮັນ 20:24-29** ຄັ້ງໜຶ່ງມີສາວົກຄົນໜຶ່ງ ຊື່ໂທມັດ ທີ່ບອກໝູ່ເພື່ອນວ່າ ລາວຈະບໍ່ເຊື່ອວ່າພຣະເຢຊູເປັນຄືນມາແທ້ໆ ຈົນກວ່າຈະໄດ້ເຫັນຮອຍຕະປູທີ່ພຣະຫັດ ແລະພຣະບາດ ແລະບາດທັງສີ່ຂ້າງຂອງພຣະອົງ ພຣະເຢຊູຊົງຮັກໂທມັດ ແລະມາພົບກັບລາວເພື່ອໃຫ້ລາວ ເຫັນ





ຖ້າເຮົາຈະໄປທີ່ບ້ານຂອງໃຜຈັກຄົນ ເຮົາກໍ່ຕ້ອງຮູ້ຈັກຜູ້ທີ່ເປັນເຈົ້າຂອງບ້ານນັ້ນກ່ອນ ແລະເຈົ້າຂອງບ້ານ ຈະຕ້ອງແນະນຳເຮົາ ແລະພາເຮົາໄປເຖິງບ້ານຂອງລາວ. ເຊັ່ນດຽວກັນ ເມື່ອເຮົາຢູ່ໃນໂລກທີ່ມີຜູ້ສ້າງໄດ້ສ້າງມານັ້ນ ເປັນສິ່ງທີ່ສຳຄັນຫລາຍ ທີ່ເຮົາຈະຕ້ອງຮູ້ຈັກ
ພຣະເຈົ້າ ຜູ້ສ້າງໂລກນັ້ນ.

ເມື່ອກ່ອນ ເຮົາອາດມີຄຳຖາມຫລາຍເລື່ອງກ່ຽວກັບສິ່ງຕ່າງໆ ທັງສິ່ງທີ່ເຮົາເບິ່ງເຫັນ ແລະສິ່ງທີ່ເຮົາບໍ່ສາມາດເບິ່ງເຫັນໄດ້ ເຊັ່ນວິນຍານຕ່າງໆ ຖ້າເຮົາຍຶດເອົາຄວາມຄິດຂອງມະນຸດມາເປັນຄຳຕອບ ເຮົາຄົງບໍ່ສາມາດໄດ້ຄຳຕອບທີ່ຖືກຕ້ອງ ເພາະວ່າມະນຸດຕ່າງຄົນ ກໍຕ່າງຄິດ ແລະຄວາມຄິດຂອງຄົນ ຍ່ອມແຕກຕ່າງກັນໄປ.

ມີຜູ້ດຽວເທົ່ານັ້ນ ທີ່ສາມາດໃຫ້ຄຳຕອບທີ່ຖືກຕ້ອງແກ່ເຮົາໄດ້. ຜູ້ນັ້ນຄືພຣະຜູ້ສ້າງ. ພຣະຜູ້ສ້າງນັ້ນ ໄດ້ສຳແດງຄວາມຈິງກ່ຽວກັບສິ່ງຕ່າງໆ ເຫລົ່ານັ້ນ ຜ່ານທາງພຣະຄຳພີ.

ບັນພະບູລຸດຂອງເຮົາ ບໍ່ຄ່ອຍຈະຮູ້ຄຳຕອບຂອງຄຳຖາມເຫລົ່ານີ້ ເພາະເຂົາບໍ່ມີໂອກາດຮູ້ເຖິງສິ່ງທີ່ຂຽນໄວ້ໃນໜັງສືຫົວນີ້. ດຽວນີ້ເຖິງເວລາແລ້ວ ທີ່ພວກເຮົາຈະໄດ້ຮຽນຮູ້. ມີຄົນຫລວງຫລາຍໃນທຸກປະເທດ ທີ່ບໍ່ຮູ້ຄວາມຈິງ ເພາະເຂົາປະຕິເສດຄວາມຈິງຂອງພຣະເຈົ້າ.

ພຣະຄຳພີນີ້ເປັນຄຳເວົ້າຂອງພຣະເຈົ້າ ເຊິ່ງດຽວນີ້ໄດ້ມາເຖິງພວກເຮົາແລ້ວ. ພວກເຮົາໄດ້ອ່ານໜັງສືເຫລັ້ມນີ້ ຂອງພຣະເຈົ້າແລ້ວ ແລະເຮົາເຊື່ອທຸກສິ່ງທີ່ພຣະເຈົ້າບອກແກ່ເຮົາ.

ພຣະເຈົ້າໄດ້ບອກໃຫ້ເຮົາຮູ້ເຖິງພຣະລັກສະນະຂອງພຣະເຈົ້າ ແລະບອກເຖິງເລື່ອງມະນຸດ ສັດ ວິນຍານຕ່າງໆ ແລະສິ່ງອື່ນໆອີກດ້ວຍ.

### ຂ່າວສານຂອງພຣະເຈົ້າເປັນຂ່າວສານສຳຄັນທີ່ສຸດສຳລັບມະນຸດ

ສົມມຸດວ່າ ພວກເຮົາໄດ້ຍິນຂ່າວວ່າ ມີພວກສັດຕູກຳລັງສະສົມອາວຸດຕຽມຈະມາບຸກລຸກໝູ່ບ້ານຂອງເຮົາ. ເຮົາຈິ່ງສົ່ງຜູ້ສອດແນມເພື່ອໄປເບິ່ງວ່າ ຂ່າວນັ້ນຈະເປັນຄວາມຈິງຫລືບໍ່. ເມື່ອຜູ້ສອດແນມກັບມາ ພວກເຮົາຈະສົນໃຈໃນຂ່າວສານ ທີ່ເຂົານຳມາບອກນັ້ນບໍ່? ເຮົາຄົງສົນໃຈແນ່ນອນ ເພາະຂ່າວສານນັ້ນເປັນເລື່ອງກ່ຽວກັບຄວາມເປັນຄວາມຕາຍ ຂອງພວກເຮົາ. ແຕ່ພວກເຮົາຮູ້ບໍ່ ຂ່າວສານຂອງພຣະເຈົ້ານັ້ນສຳຄັນຍິ່ງກວ່າ ຂ່າວສານຂອງຜູ້ສື່ສານເຫລົ່ານັ້ນອີກ?

ມີແຕ່ພຣະເຈົ້າ ຜູ້ສ້າງພຽງຜູ້ດຽວເທົ່ານັ້ນ ທີ່ສາມາດບອກໃຫ້ເຮົາຮູ້ຄວາມຈິງທັງໝົດໄດ້. ດຽວນີ້ພວກເຮົາຍັງເຂົ້າໃຈບໍ່ຫລາຍໃນເລື່ອງຂອງພຣະເຈົ້າ. ແຕ່ຖ້າເຮົາຮຽນນຳກັນຕໍ່ໄປຈະເຫັນວ່າ ພຣະເຈົ້າອົງນີ້ເປັນຜູ້ຍິ່ງໃຫຍ່ສູງສຸດ ຍິ່ງໃຫ່ຍກວ່າສິ່ງສັກສິດທັງຫລາຍ ແລະຂ່າວສານຂອງພຣະອົງນັ້ນ ເປັນເລື່ອງສຳຄັນ ຍິ່ງກວ່າເລື່ອງອື່ນທີ່ເຮົາໄດ້ຍິນມາ.

ພວກເຮົາຕ່າງ ກໍ່ມີພາລະກິດທີ່ຕ້ອງເຮັດ ແຕ່ຖ້າເຮົາບໍ່ຍອມສະລະເວລາ ເຮົາຈະພາດໂອກາດ ທີ່ຈະໄດ້ຍິນເລື່ອງນີ້. ຜູ້ທີ່ບໍ່ຍອມຟັງເລື່ອງນີ້ວັນໜຶ່ງເຂົາຈະຕ້ອງພົບກັບຄວາມເສຍໃຈທີ່ໄດ້ພາດໂອກາດ ແລະເສຍໃຈໄປຕະຫລອດຊົ່ວນິລັນດອນ.

### ພຣະເຈົ້າໄດ້ເລືອກບາງຄົນໃຫ້ເປັນຜູ້ຂຽນພຣະຄຳພີ
### 2 ເປໂຕ 1:20—21 ແລະ 2 ຕີໂມທີ 3:16

ເມື່ອນາຍົກລັດຖະມົນຕີ ຢາກແຈ້ງຂ່າວສຳຄັນໃຫ້ແກ່ໝູ່ບ້ານຂອງເຮົາ ທ່ານຄົງບໍ່ມາທີ່ໝູ່ບ້ານຂອງເຮົາດ້ວຍໂຕເອງ. ທ່ານອາດສົ່ງຜູ້ສື່ສານມາຫາເຮົາ ແລະຄົນນັ້ນຈະເວົ້າແທນທ່ານໃຫ້ເຮົາຟັງ.





### ທົບທວນ

1. ເປັນຫຍັງພຣະເຈົ້າຈິ່ງຈີກມ່ານໃນວິຫານຂາດເປັນສອງທ່ອນ?
2. ເອຊາຢາໄດ້ທຳນວາຍໄວ້ຢ່າງໃດກ່ຽວກັບການຝັງສົບຂອງຜູ້ຊ່ວຍໃຫ້ລອດ?
3. ເມື່ອພຣະເຢຊູຮ້ອງວ່າ "ສຳເລັດແລ້ວ" ພຣະອົງໝາຍຄວາມວ່າຢ່າງໃດ?
4. ແມ່ນຫຍັງເປັນຄ່າໄຖ່ສຳລັບພວກເຮົາເພື່ອໃຫ້ເຮົາພົ້ນຈາກຄວາມບາບຂອງເຮົາ?
5. ພຣະສັນຍາຂອງພຣະເຈົ້າທີ່ໃຫ້ແກ່ມະນຸດໃນສວນເອເດັນໄດ້ສຳເລັດເມື່ອໃດ?

### ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ພຣະເຢຊູຄຣິດເປັນພຣະເຈົ້າແທ້
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທພຣະອົງ
- ພຣະເຢຊູຄຣິດເປັນຜູ້ຊ່ວຍໃຫ້ລອດແຕ່ພຽງຜູ້ດຽວ

ເປັນສອງທ່ອນ ເຫດສະນັ້ນ ເຮົາຮູ້ວ່າ ພຣະເຈົ້າຊົງພໍພຣະໄທກັບການເສຍສະຫລະ ຂອງພຣະເຢຊູ ເຊິ່ງເປັນຄ່າໄຖ່ສຳລັບຄວາມບາບຂອງເຮົາ ໃນຂະນະນັ້ນ ພຣະເຈົ້າໄດ້ເປີດຫົນທາງ ໃຫ້ມະນຸດມາເຖິງພຣະອົງໄດ້ ແຕ່ຄ່າໄຖ່ບາບຍັງບໍ່ຄົບບໍລິບູນ ພຣະເຈົ້າຄົງບໍ່ໃຫ້ພຣະເຢຊູເປັນຄືນ ມາຈາກຄວາມຕາຍ

ເຮົາອາດຍົກຕົວຢ່າງໄດ້ດັ່ງນີ້ ຖ້າຜູ້ພິພາກສາຕັດສິນໃຫ້ນັກໂທດຈຳຄຸກ 10 ປີ ລາວຕ້ອງຢູ່ໃນຄຸກໃຫ້ຄົບຕາມກຳນົດ ລາວຈຶ່ງຈະພົ້ນໂທດຫລັງຈາກຄົບກຳນົດແລ້ວ ລາວກໍ່ເປັນອິດສະຫລະ ແລະບໍ່ຕ້ອງຢ້ານທີ່ຈະຖືກຈັບ ເພາະຂະດີນັ້ນອີກ ໃນທຳນອງດຽວກັນ ພຣະເຈົ້າເປັນຜູ້ພິພາກສາມະນຸດ ແລະເຮົາຮູ້ວ່າ ພຣະອົງພໍພຣະໄທກັບຄ່າໄຖ່ຂອງພຣະເຢຊູ ເພາະພຣະອົງໄດ້ປ່ອຍພຣະເຢຊູອອກຈາກຄວາມຕາຍ

ສະນັ້ນ ເຮົາຈຶ່ງຮູ້ວ່າ ເຮົາບໍ່ຕ້ອງເສຍຄ່າໄຖ່ອີກ ພຣະເຢຊູຍອມເສຍສະຫລະທັງໝົດເພື່ອເຮົາແລ້ວ ຖ້າເຮົາພົ້ນຈາກຄວາມບາບ ຄວາມຕາຍ ແລະອຳນາດຊາຕານ ເຮົາຕ້ອງວາງໃຈໃນພຣະເຢຊູຢ່າງສິ້ນ ເຊິງເຮົາຕ້ອງແນ່ໃຈວ່າ ພຣະໂລຫິດຂອງພຣະອົງເປັນຄ່າໄຖ່ທີ່ຄົບຖ້ວນ ແລະການທີ່ພຣະອົງຈະເປັນຄືນມານັ້ນ ເປັນການຢືນຢັນວ່າ ເຮົາໄດ້ຊີວິດນິລັນດອນແລ້ວ





ເຊັ່ນດຽວກັນ ພຣະເຈົ້າຜູ້ສ້າງໄດ້ຕັດສິນໃຈເລືອກຄົນບາງຄົນ ເພື່ອໃຫ້ເຂົາເຫລົ່ານັ້ນ ຂຽນພຣະຄຳພີຂຶ້ນ ແລະຄົນເຫລົ່ານັ້ນ ກໍ່ໄດ້ຂຽນ ສະເພາະສິ່ງທີ່ພຣະເຈົ້າບອກໃຫ້ເຂົາຂຽນເທົ່ານັ້ນ. ເຂົາບໍ່ໄດ້ຂຽນຕາມໃຈຫລືຕາມຄວາມນຶກຄິດຂອງຕົນເອງ. ແຕ່ພຣະວິນຍານບໍລິສຸດຂອງ ພຣະເຈົ້າ ໄດ້ນຳຄວາມຄິດຈິດໃຈຂອງເຂົາ ເພື່ອໃຫ້ເຂົາຮູ້ວ່າຄວນຈະຂຽນຈັ່ງໃດ.

ຜູ້ທີ່ຂຽນພຣະຄຳພີນັ້ນ ສ່ວນຫລາຍເປັນຄົນອິດສະລາເອັນ. ພຣະຜູ້ສ້າງໄດ້ເລືອກປະມານ 40 ຄົນ ເພື່ອໃຫ້ເຂົາຂຽນພຣະຄຳພີ ແລະ ຄົນທັງ 40 ຄົນນີ້ ກໍ່ບໍ່ແມ່ນຄົນໃນຍຸກສະໄໝດຽວກັນ ແຕ່ຢູ່ໃນຄົນລະຍຸກສະໄໝ.

ຕັ້ງແຕ່ຂຽນຫົວທຳອິດ ຈົນເຖິງຫົວສຸດທ້າຍນັ້ນ ໃຊ້ເວລາເຖິງ 1600 ປີ. ຫົວທຳອິດຂຽນຂຶ້ນປະມານ 1500 ປີກ່ອນປະເຢຊູໄດ້ເກີດມາ ແລະຫົວສຸດທ້າຍນັ້ນ ຂຽນຂຶ້ນປະມານ 100 ປີກ່ອນປະເຢຊູໄດ້ເກີດມາ.

ຜູ້ຂຽນແຕ່ລະຄົນນັ້ນ ບໍ່ໄດ້ມານັ່ງປຶກສາຫາລືກັນກ່ອນ ເພາະວ່າເຂົາຢູ່ໃນຄົນລະຍຸກສະໄໝ. ຖານະຕຳແໜ່ງ ຫລືອາຊີບການງານກໍ່ແຕກຕ່າງກັນໄປ. ບາງຄົນເປັນຄົນລ້ຽງສັດ. ບາງຄົນເປັນຊາວປະມົງ. ບາງຄົນເປັນຄົນເກັບພາສີ. ບາງຄົນເປັນທ່ານໝໍ ແລະບາງຄົນເປັນເຈົ້າຊີວິດ.

**ພຣະຄຳພີເປັນເລື່ອງດຽວ**

ເຖິງວ່າຜູ້ຂຽນຈະມີຫລາຍຄົນເຊັ່ນນັ້ນ ແຕ່ຂໍ້ຄວາມທັງ 40 ຄົນຂຽນກໍ່ເປັນເລື່ອງດຽວກັນ. ມີໃຈຄວາມດຽວກັນ. ມີຈຸດປະສົງດຽວກັນ. ຄວາມໝາຍດຽວກັນ. ທຸກຫົວຕິດຕໍ່ປະສານກັນຢ່າງຕໍ່ເນື່ອງ ບໍ່ຂັດແຍ້ງກັນ.

ຖ້າສົມມຸດວ່າ ເຮົາຈະໃຫ້ຄົນ 10 ຄົນຂຽນໜັງສືຂຶ້ນ ໂດຍທີ່ຄົນທັງ 10 ນັ້ນ ບໍ່ໄດ້ພົບປະກັນເລີຍ ແລະບໍ່ມີໃຜບອກນຳວ່າ ໃຫ້ຂຽນເລື່ອງຫຍັງ ແລະໃຫ້ເຂົາຢູ່ກັນຄົນລະບ່ອນ ຄົນລະແຫ່ງ. ທ່ານຄິດວ່າສິ່ງທີ່ທັງ 10 ຄົນຂຽນນັ້ນຈະມີຈັກເລື່ອງ? ແນ່ນອນຈະຕ້ອງມີເຖິງ 10 ເລື່ອງ.

ແຕ່ເປັນຫຍັງ ພຣະຄຳພີຈຶ່ງເປັນເລື່ອງດຽວກັນໄດ້ທັງໆ ທີ່ມີຜູ້ຂຽນເຖິງ 40 ຄົນ? ທີ່ເປັນເຊັ່ນນັ້ນ ກໍ່ເພາະວ່າພຣະຄຳພີນັ້ນ ເປັນສິ່ງທີ່ມາຈາກພຣະເຈົ້າ. ພຣະວິນຍານອົງດຽວນັ້ນ ໄດ້ດົນຈິດດົນໃຈຂອງທັງ 40 ຄົນນັ້ນ ໃຫ້ເຂົາຂຽນພຣະຄຳພີຂຶ້ນ ຕາມໃຈຂອງພຣະອົງເອງ. ບໍ່ແມ່ນຕາມໃຈຂອງຜູ້ຂຽນ. ດັ່ງນັ້ນ ພຣະຄຳພີຈຶ່ງເປັນເລື່ອງດຽວກັນ.

**ພຣະຄຳພີປະກອບດ້ວຍ 66 ເຫລັ້ມ**

ປຶ້ມເຫລັ້ມທຳອິດໃນພຣະຄຳພີນັ້ນ ຂຽນໄວ້ປະມານ 3500 ປີມາແລ້ວ ແລະຫລັງຈາກທີ່ໄດ້ຂຽນເຫລັ້ມທຳອິດແລ້ວ ພຣະເຈົ້າກໍ່ໄດ້ໃຫ້ຄົນອື່ນຂຽນເຫລັ້ມອື່ນໆ ອີກຈົນຈົບ.

ພຣະຄຳພີປະກອບດ້ວຍໜັງສືທັງໝົດ 66 ເຫລັ້ມດ້ວຍກັນ ແລະໃນຈຳນວນ 66 ເຫລັ້ມນີ້ ຍັງແບ່ງອອກເປັນ 2 ພາກຄື:
ພາກພັນທະສັນຍາເດີມ ແລະ ພາກພັນທະສັນຍາໃໝ່. ພຣະຄຳພີເດີມນັ້ນມີ 39 ເຫລັ້ມ. ສ່ວນພຣະຄຳພີໃຫ່ມມີ 27 ເຫລັ້ມ.

ພຣະຄຳພີເດີມ ຂຽນເປັນພາສາເຮັບເຣີ ເຊິ່ງເປັນພາສາຂອງປະເທດອິດສະລາເອັນ

ສ່ວນພຣະຄຳພີໃຫມ່ນັ້ນ ເປັນພາສາເກຣັກ. ເຫດທີ່ຂຽນເປັນພາສາເກຣັກ ກໍ່ເພາະວ່າໃນສະໄໝນັ້ນ ພາສາເກຣັກເປັນພາສາກາງ ທີ່ໃຊ້ກັນຢ່າງກວ້າງຂວາງໃນຫລາຍໆ ປະເທດ.





ພຣະເຢຊູເປັນພຣະເຈົ້າແທ້ ພຣະອົງເຂົ້າມາໃນໂລກ ແລະບັງເກີດເປັນມະນຸດ ຈຶ່ງສາມາດຊ່ວຍເຮົາໃຫ້ພົ້ນຈາກຄວາມບາບ, ຄວາມຕາຍ ແລະອຳນາດຂອງຊາຕານ ກ່ອນທີ່ພຣະອົງໄດ້ລົງມາຈາກສະຫວັນ ພຣະອົງຊົງຮູ້ວ່າ ຈະຕ້ອງສະຫລະຊີວິດເພື່ອເຮົາ ແລະຮູ້ພ້ອມວ່າ ພຣະອົງຈະເປັນຄືນມາ ແລະຈະບໍ່ຕ້ອງຕາຍອີກເລີຍ

ຄວາມໝາຍຂອງ **ເພງສັນລະເສີນ 16:10** ໝາຍເຖິງການທີ່ຜູ້ຊ່ວຍໃຫ້ລອດຈະເປັນຄືນມາຈາກຕາຍ

ແມ້ນວ່າທູດສະຫວັນນັ້ນໄດ້ສັ່ງໃຫ້ຜູ້ຍິງເຫລົ່ານັ້ນ ກັບໄປບອກເລື່ອງນີ້ ແກ່ພວກສາວົກກໍ່ຕາມ ແຕ່ພວກເຂົາຢ້ານຫລາຍ ຈຶ່ງຮີບໜີໄປ ຍັງບໍ່ທັນບອກໃຜໃຫ້ຮູ້ເຖິງເຫດການທີ່ເກີດຂຶ້ນນັ້ນ

**ພຣະເຈົ້າພໍພຣະໄທໃນການເສຍສະຫລະຂອງພຣະເຢຊູ**

ສາເຫດຢ່າງໜຶ່ງ ທີ່ເຮັດໃຫ້ເຮົາແນ່ໃຈວ່າ ພຣະເຢຊູຊົງເປັນຜູ້ຊ່ວຍໃຫ້ລອດຂອງມະນຸດ ຄືການທີ່ພຣະເຈົ້າໄດ້ໃຫ້ພຣະເຢຊູເປັນຄືນມາຈາກຄວາມຕາຍ ເຫດການນີ້ ສະແດງໃຫ້ເຫັນແຈ້ງວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າແທ້ ຕາມທີ່ພຣະອົງໄດ້ບອກໄວ້ ຜູ້ນຳຊາວຢິວວາງແຜນຂ້າພຣະເຢຊູ ເພາະພຣະອົງໄດ້ບອກວ່າ ພຣະອົງເປັນພຣະບຸດຂອງພຣະເຈົ້າ ແລະເປັນຜູ້ຊ່ວຍໃຫ້ລອດ ແລະໃນທີ່ສຸດ ພວກເຂົາໄດ້ຂ້າພຣະອົງແທ້ ແຕ່ຫລັງຈາກນັ້ນ ພຣະເຈົ້າໄດ້ເຮັດໃຫ້ພຣະອົງເປັນຄືນມາ ເພື່ອທຸກຄົນຈະໄດ້ຮູ້ແຈ້ງວ່າ ພຣະເຢຊູເວົ້າເປັນຄວາມຈິງທຸກປະການ

ເມື່ອພຣະເຢຊູຕາຍເທິງກາງແຂນນັ້ນ ພຣະອົງຮ້ອງສຽງດັງວ່າ "ສຳເລັດແລ້ວ" ໃນຂະນະນັ້ນ ພຣະເຈົ້າຈີກມ່ານໃນພຣະວິຫານໃຫ້ຂາດ



ພຣະເຢຊູ ບໍ່ຢູ່ທີ່ນັ້ນແລ້ວ ກ່ອນທີ່ຜູ້ຍິງເຫລົ່ານັ້ນຈະມາເຖິງທີ່ນັ້ນ ພຣະເຈົ້າໄດ້ສົ່ງທູດສະຫວັນ ມາກິ້ງຫີນກ້ອນໃຫຍ່ນັ້ນ ອອກຈາກປາກ ອຸໂມງແລ້ວ

ແລະເມື່ອພວກຜູ້ຍິງຫລຽວເບິ່ງທາງໃນອຸໂມງພວກເຂົາເຫັນ ທູດສະຫວັນນັ່ງຢູ່ໃນນັ້ນ ຜູ້ຍິງເຫລົ່ານັ້ນຈຶ່ງຢ້ານຫລາຍ ແຕ່ທູດສະຫວັນໄດ້ໜູນໃຈພວກເຂົາວ່າ ບໍ່ຕ້ອງຢ້ານ ແຕ່ໃຫ້ພວກເຂົາກັບໄປບອກ ພວກສາວົກ ໃຫ້ຮູ້ເລື່ອງທີ່ພຣະເຢຊູເປັນຄືນມາ ຢ່າງທີ່ພຣະອົງໄດ້ບອກໄວ້ກັບ ພວກເຂົາແລ້ວ

ແທ້ຈິງພວກສາວົກໜ້າຈະຮູ້ວ່າ ພຣະອົງຈະເປັນຄືນມາເພາະພຣະອົງໄດ້ບອກເຫລົ່າສາວົກຫລາຍໆ ຄັ້ງວ່າ ພຣະອົງຈະເປັນຄືນມາໃນວັນທີ່ສາມ ບາງທີພວກເຂົາອາດຈື່ບໍ່ໄດ້ ຫລືອາດຄິດວ່າ ເປັນໄປບໍ່ໄດ້ທີ່ຈະເປັນຄືນມາແທ້ໆ

ຢ່າງໃດກໍ່ຕາມ ເມື່ອພຣະເຈົ້າໃຫ້ພຣະສັນຍາແກ່ມະນຸດ ບໍ່ວ່າຈະຍາກພຽງໃດ ພຣະອົງສາມາດເຮັດຕາມພຣະສັນຍານັ້ນ ແລະຈະສຳເລັດແນ່ນອນ





**ພຣະຄຳພີແປອອກເປັນຫລາຍພາສາ**

ພຣະຄຳພີເປັນປຶ້ມເຫລັ້ມດຽວໃນໂລກ ທີ່ມີການແປອອກເປັນພາສາຕ່າງໆ ຫລາຍທີ່ສຸດ. ໃນປະຈຸບັນນີ້ ໄດ້ແປອອກເປັນພາສາຕ່າງໆ ແລ້ວປະມານ 1600 ພາສາ ແລະພຣະຄຳພີຍັງເປັນປຶ້ມທີ່ມີຄົນອ່ານຫລາຍທີ່ສຸດໃນໂລກ.

ເຮົາຈະຮຽນພຣະຄຳພີນຳກັນ ໃນພາສາທີ່ພວກເຮົາເຂົ້າໃຈໄດ້. ແຕ່ພຣະຄຳພີເປັນປຶ້ມເຫລັ້ມໃຫ່ຍ ເຮົາຈະຕ້ອງໃຊ້ເວລາໃນການສອນ ໂດຍສອນເທື່ອລະເລັກລະໜ້ອຍ. ເຮົາຈະສອນສິ່ງທີ່ສຳຄັນທີ່ສຸດກ່ອນ ຄືກັບການສ້າງບ້ານ. ຜູ້ສ້າງບ້ານນັ້ນຈະຕ້ອງປູກເສົາກ່ອນ ແລ້ວຄ່ອຍໆ ຕໍ່ເຕີມສິ່ງອື່ນໆ ເມື່ອເຖິງເວລາອັນຄວນ.

**ທົບທວນ**

1. ເມື່ອພຣະເຈົ້າຢາກແຈ້ງຄວາມຈິງຂອງພຣະອົງແກ່ມະນຸດ ພຣະອົງຍອມໃຫ້ທຸກໆ ຄົນສະໝັກເປັນຜູ້ຂຽນບໍ?
2. ຄົນເຫລົ່ານັ້ນ ທີ່ຂຽນພຣະຄຳພີຢູ່ໃນສະໄໝດຽວກັນບໍ່?
3. ມີຜູ້ຂຽນປະມານຈັກຄົນ?
4. ຜູ້ຂຽນເປັນຄົນຊົນຊາດໃດ?
5. ຜູ້ຂຽນເຫລັ້ມທຳອິດຂຽນເປັນພາສາຫຍັງ? ໄດ້ຂຽນຈັກປີມາແລ້ວ?
6. ເປັນຫັຍງຂ່າວສານໃນພຣະຄຳພີ ຈຶ່ງເປັນຂ່າວສານສຳຄັນ?
7. ເປັນຫຍັງເຮົາຄວນສຶກສາພຣະຄຳພີ?

**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫ່ຍທີ່ສຸດ ແລະຊົງຄອບຄອງເໜືອທຸກສິ່ງ



## ບົດທີ 2
## ພຣະເຈົ້າເປັນຢູ່ກ່ອນທຸກສິ່ງ
## ປະຖົມມະການ 1:1

**ສ້າງຄວາມສົນໃຈ**

ເຮົາທຸກຄົນກໍ່ຮູ້ຢູ່ແກ່ໃຈວ່າ ໃນໂລກນີ້ນອກຈາກສິ່ງທີ່ເຮົາເບິ່ງເຫັນກັບຕາແລ້ວນັ້ນ ກໍຍັງມີບາງສິ່ງ ບາງຢ່າງ ເຊິ່ງເຮົາບໍ່ສາມາດເບິ່ງເຫັນກັບຕາໄດ້. ເຊັ່ນ ລົມ ຄື້ນ ວິທະຍຸ ກະແສໄຟຟ້າ ແລະ ວິນຍານຕ່າງໆ. ສິ່ງເຫລົ່ານີ້ເຂົ້າໃຈຍາກ ແຕ່ເຮົາຕ້ອງຍອມ ຮັບວ່າ ມີຢູ່ແທ້. ຜູ້ທີ່ສຳຄັນທີ່ສຸດ ທີ່ເຮົາເບິ່ງບໍ່ເຫັນ ຄືພຣະເຈົ້າ.

**ພຣະເຈົ້າຊົງເປັນຢູ່ກ່ອນທຸກສິ່ງ**

ຄຳທຳອິດທີ່ພຣະເຈົ້າໄດ້ຂຽນໄວ້ໃນໜັງສືຂອງພຣະອົງຄື ຄຳວ່າ, “ໃນປະຖົມມະການ”. ຄຳນີ້ເຮັດໃຫ້ເຮົາຮູ້ວ່າ ມີການເລີ້ມຕົ້ນທຸກສິ່ງທີ່ເຮົາເຫັນກັບຕາ. ແຕ່ພຣະເຈົ້າທີ່ເຮົາເບິ່ງບໍ່ເຫັນນັ້ນ ບໍ່ມີວັນເລີ່ມຕົ້ນ. ພຣະອົງຊົງເປັນຢູ່ຕະຫລອດການ.

ໃນພຣະຄຳພີ ປະຖົມມະການ 1:1 ໄດ້ບອກເຮົາວ່າ ພຣະເຈົ້າເປັນຢູ່ກ່ອນທຸກສິ່ງທຸກຢ່າງ. ກ່ອນທີ່ໂລກນີ້ຈະເກີດຂຶ້ນ ກ່ອນທີ່ດວງອາທິດດວງຈັນ ແລະດວງດາວຕ່າງໆ ຈະເກີດຂຶ້ນ. ພຣະເຈົ້າຜູ້ສ້າງນັ້ນ ກໍ່ເປັນ





**15:39-41** ໃນຂໍ້39 ເຮົາເຫັນວ່າ ແມ້ນແຕ່ນາຍຮ້ອຍທະຫານໂຣມຍັງຍອມຮັບວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ

ແລະໃນຂໍ້40-41 ເຮົາເຫັນວ່າ ມີຜູ້ຍິງຫລາຍຄົນທີ່ນັບຖືພຣະອົງ ໄດ້ຢູ່ກັບພຣະອົງຈົນເຖິງນາທີສຸດທ້າຍ

**ພຣະເຢຊູຖືກຝັງໄວ້ທີ່ອຸໂມງ**

**ມາລະໂກ 15:42-46**

ໂຢເຊັບຄົນນີ້ ເປັນຄົນມັ່ງມີ ລາວເປັນສະມາຊິກສະພາ ແຕ່ລາວບໍ່ເຫັນນຳກັບການປະຫານຊີວິດພຣະເຢຊູ ລາວຂໍສົບຂອງພຣະເຢຊູຈາກປີລາດ

ເມື່ອລາວໄດ້ຮັບອະນຸຍາດແລ້ວ ລາວຈຶ່ງນຳສົບຂອງພຣະເຢຊູໄປຝັງໄວ້ໃນອຸໂມງຂອງຕົນເອງ ສິ່ງເຫລົ່ານີ້ໄດ້ເກີດຂຶ້ນຕາມຄຳທຳນວາຍຂອງເອຊາຢາຜູ້ທຳນວາຍຂອງພຣະເຈົ້າ ເຊິ່ງໄດ້ທຳນວາຍວ່າ “ໃນຄວາມຕາຍຂອງທ່ານນັ້ນ ພວກເຂົາໄດ້ຈັດໄວ້ກັບເສດຖີ” ເລື່ອງນີ້ກໍ່ໄດ້ເກີດຂຶ້ນແທ້ຕາມຄຳທຳນວາຍໃນ **ເອຊາຢາ53:9** ເພາະໂຢເຊັບຜູ້ໄດ້ຈັດການຝັງສົບຂອງພຣະເຢຊູນັ້ນ ເປັນເສດຖີແທ້

**ຂ່າວຈາກທູດສະຫວັນ**

**ມາລະໂກ 16:1-8**

ບັດນີ້ເປັນມື້ທີ່ສາມທີ່ພຣະເຢຊູຖືກຄຶງຕາຍ ເປັນວັນອາທິດຕອນເຊົ້າໆ ມື້ນັ້ນມີຜູ້ຍິງທີ່ເຊື່ອພຣະເຢຊູ ບາງຄົນພວກເຂົາເອົາເຄື່ອງຫອມມາເພື່ອຈະສະໂລມສົບຂອງພຣະເຢຊູ ເພາະພວກເຂົາບໍ່ທັນເຮັດໃນວັນທີ່ຝັງສົບນັ້ນ

ເມື່ອມາເຖິງອຸໂມງແລ້ວ ພວກເຂົາແປກໃຈຫລາຍ ເພາະສົບຂອງ

ເມື່ອຊາວອິດສະລະເອນມີທໍາເນັບ ພວກເຂົາຕ້ອງຂ້າແກະທຸກເຊົ້າທຸກແລງ ເພື່ອເປັນເຄື່ອງບູຊາ ແລະເລືອດຂອງມັນຕ້ອງທາທີ່ແທ່ນບູຊາ ແຕ່ພຣະໂລຫິດຂອງພຣະເຢຊູ ມີຄ່າຫລາຍກວ່າເລືອດສັດທັງຫລາຍໃນໂລກ

ສິ່ງທີ່ພຣະເຢຊູເຮັດໃຫ້ສໍາເລັດທີ່ກາງແຂນນັ້ນ ເປັນທີ່ພໍພຣະໄທຂອງພຣະເຈົ້າທຸກປະການ ເຫດສະນັ້ນ ພຣະເຈົ້າຈະຍົກໂທດບາບຂອງທຸກຄົນທີ່ວາງໃຈໃນພຣະເຢຊູ ແລະຈະໃຫ້ຊີວິດນິລັນດອນແກ່ພວກເຂົາ ພວກເຂົາບໍ່ຈໍາເປັນຕ້ອງຖືກແຍກຈາກພຣະເຈົ້າອີກແລ້ວ ພຣະສັນຍາຂອງພຣະເຈົ້າທີ່ໃຫ້ແກ່ມະນຸດໃນສວນເອເດນນັ້ນກໍ່ສໍາເລັດແລ້ວໂດຍຄວາມຕາຍຂອງພຣະເຢຊູທີ່ກາງແຂນ

**ຜ້າມ່ານໃຫຍ່ໃນວິຫານ ຖືກຈີກອອກ**

**ມາລະໂກ 15:38**

ໃນມາລະໂກ 15:38 ເຮົາເຫັນວ່າ ຜ້າມ່ານໃຫຍ່ໃນວິຫານ ຖືກຈີກອອກເປັນສອງທ່ອນ ຕັ້ງແຕ່ເທິງຈົນຮອດລຸ່ມ

ພຣະເຈົ້າເປັນຜູ້ຈີກເພື່ອສະແດງວ່າ ພຣະອົງພໍພຣະໄທກັບການເສຍສະຫລະຂອງພຣະເຢຊູ ເຫດສະນັ້ນ ຈະຕ້ອງບໍ່ຂ້າສັດເປັນເຄື່ອງບູຊາຕໍ່ໄປອີກແລ້ວ ທາງທີ່ມະນຸດຈະມາເຖິງພຣະເຈົ້າໄດ້ ກໍ່ຖືກເປີດອອກໂດຍການຕາຍຂອງພຣະເຢຊູ

ແລ້ວບໍ່ຕ້ອງມີມ້ານ ທີ່ແຍກມະນຸດອອກຈາກພຣະເຈົ້າອີກຕໍ່ໄປ ພຣະເຈົ້າຈະຍອມຮັບທຸກຄົນທີ່ວາງໃຈໃນພຣະເຢຊູ





ຢູ່ແລ້ວ ຄືພຣະອົງມີຢູ່ກ່ອນແລ້ວ.

ພຣະເຈົ້າທ່ຽງແທ້ນັ້ນ ບໍ່ມີການເລີ້ມຕົ້ນ ແລະບໍ່ມີທີ່ສິ້ນສຸດ ໝາຍຄວາມວ່າ ບໍ່ມີການເກີດ ບໍ່ມີການຕາຍ. ສິ່ງຕ່າງໆ ທີ່ເຮົາເບິ່ງເຫັນໃນໂລກນີ້ ລ້ວນແຕ່ມີການເລີ້ມຕົ້ນ ແລະກໍ່ມີທີ່ສິ້ນສຸດກັນທັງນັ້ນ ແຕ່ພຣະເຈົ້າທ່ຽງແແທ້ນັ້ນ ເປັນຢູ່ຕະຫລອດການ ບໍ່ມີວັນສິ້ນສຸດ.

**ພຣະເຈົ້າບໍ່ຈໍາເປັນຕ້ອງເພິ່ງພາອາໄສສິ່ງໜຶ່ງສິ່ງໃດທັງສິ້ນ**

ຖ້າພຣະເຈົ້າເປັນຢູ່ກ່ອນທຸກສິ່ງແລ້ວ ພຣະເຈົ້າຈະອາໄສຢູ່ບ່ອນໃດ ແລະຈະຢູ່ໄດ້ຢ່າງໃດ? ຕາມທໍາມະຊາດຂອງມະນຸດ ແລະສິ່ງຕ່າງໆໃນໂລກນີ້ ທຸກສິ່ງທຸກຢ່າງນັ້ນລ້ວນແລ້ວ ແຕ່ຕ້ອງການທີ່ຢູ່ອາໄສ. ຕ້ອງເພິ່ງພາອາໄສກັນແລະກັນ ຈຶ່ງສາມາດດໍາລົງຊີວິດຢູ່ໄດ້.

ຖ້າຫາກ ພຣະເຈົ້າເປັນຄືເຮົາແລ້ວ ພຣະອົງກໍ່ຄົງຈະຢູ່ບໍ່ໄດ້ແນ່ນອນ. ແຕ່ວ່າພຣະເຈົ້າທ່ຽງແທ້ນັ້ນ ບໍ່ຈໍາເປັນຕ້ອງເພິ່ງພາອາໄສສິ່ງຕ່າງໆ ເຊັ່ນອາຫານ ນໍ້າ ອາກາດ ຫລືບ້ານສໍາລັບອາໄສຢູ່. ພຣະອົງຢູ່ໄດ້ໂດຍບໍ່ຈໍາເປັນຕ້ອງມີຫຍັງເລີຍ ເພາະວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າ ຜູ້ຢູ່ເໜືອສິ່ງສາລະພັດ.

**ພຣະເຈົ້າຊົງເປັນວິນຍານ**

ເຫດທີ່ພຣະເຈົ້າບໍ່ຕ້ອງເພິ່ງພາອາໄສ ເພາະວ່າພຣະອົງເປັນວິນຍານ. ບໍ່ມີຮ່າງກາຍເໝືອນທີ່ພວກເຮົາເປັນມະນຸດ. ພຣະເຈົ້າບໍ່ມີເນື້ອໜັງ. ບໍ່ມີກະດູກຄືຄົນ ຫລືສັດຕ່າງໆ.

ກ່ອນທີ່ຈະມີແຜ່ນດິນໂລກ ດວງອາທິດ ດວງຈັນ ແລະດວງດາວຕ່າງໆນັ້ນ ພວກເຮົາຄິດວ່າ ພຣະເຈົ້າຢູ່ໃສ?

ເຮົາບໍ່ສາມາດເບິ່ງເຫັນພຣະເຈົ້າ ແລະບໍ່ສາມາດຮູ້ວ່າພຣະອົງຢູ່ໄສ ນອກຈາກພຣະອົງເອງຈະບອກໃຫ້ເຮົາຮູ້. ໃນພຣະຄຳພີ ທີ່ເຮົາຈະພົບຄວາມຈິງທີ່ວ່າ ພຣະເຈົ້າຢູ່ທຸກແຫ່ງຫົນ. ພຣະເຈົ້າຢູ່ເທິງຟ້າທີ່ສູງສຸດ. ຢູ່ໃນທະເລທີ່ລຶກທີ່ສຸດ. ພຣະອົງຢູ່ກັບເຮົາທີ່ນີ້ ແລະຢູ່ໃນບ້ານຂອງພວກເຮົາທຸກຄົນ. ພຣະອົງຢູ່ໃນປ່າ ໃນສວນ ແລະເທິງພູເຂົາທຸກທີ່.

ບາງທີເຮົາເຄີຍໄດ້ຍິນເຖິງຜີ ຫລືວິນຍານຊົ່ວ ທີ່ອາໄສຢູ່ໃນຕົ້ນໄມ້ ຫລືຕາມຫີນຜາ ຕາມແມ່ນ້ຳລຳທານ ຫລືຕາມພູເຂົາ. ແຕ່ພຣະເຈົ້າ ຜູ້ຊົງສ້າງນັ້ນບໍ່ຄືຜີ. ຜີບໍ່ສາມາດຢູ່ໄດ້ຫລາຍທີ່ ແຕ່ພຣະເຈົ້າຊົງຢູ່ທົ່ວທຸກຫົນແຫ່ງ ໃນເວລາດຽວກັນ.

ບໍ່ມີໃຜເໝືອນພຣະເຈົ້າ. ພຣະເຈົ້າເປັນຜູ້ສູງສຸດ. ບໍ່ມີໃຜສາມາດສ້າງບ້ານໃຫ້ພຣະເຈົ້າອາໄສຢູ່ໄດ້.

**ພຣະເຈົ້າເປັນ ຕຣີເອກະນຸພາບ (ສາມໃນໜຶ່ງ)**

ເມື່ອພວກເຮົາຟັງເລື່ອງຂອງພຣະເຈົ້າຕໍ່ໄປ ເຮົາຈະຮຽນຮູ້ຫລາຍຂຶ້ນກ່ຽວກັບພຣະເຈົ້າ. ພຣະເຈົ້າມີພຽງອົງດຽວ ແຕ່ພຣະອົງເຄີຍສຳແດງພຣະອົງອອກມາສາມພຣະພາກ ຫລືສາມຢ່າງ:

- ບາງຄັ້ງເຮົາເຫັນພຣະເຈົ້າເປັນພຣະບິດາ ຄືພໍ່ທີ່ຍິ່ງໃຫຍ່ທີ່ສຸດ.
- ບາງຄັ້ງເຮົາເຫັນພຣະເຈົ້າເປັນພຣະບຸດ ຜູ້ເມດຕາກະລຸນາຕໍ່ເຮົາ.
- ບາງຄັ້ງເຮົາເຫັນພຣະເຈົ້າຜູ້ຊົງເປັນພຣະວິນຍານບໍລິສຸດ.

ທັງສາມນີ້ເປັນພຣະເຈົ້າອົງດຽວ ແລະເທົ່າທຽມກັນທຸກປະການ.







**ບົດທີ 29**

**ພຣະເຢຊູ**

**ເປັນຄືນມາຈາກຕາຍ**

**ມາລະໂກ 15:37-46**

**ມາລະໂກ 16:1-8**

**ການສິ້ນພຣະຊົນຂອງ**
**ພຣະເຢຊູ**
**ມາລະໂກ 15:37-41;**
**ໂຢຮັນ19:30**

ໃນມາລະໂກ 15:37 ເຮົາເຫັນເຖິງການທີ່ ພຣະເຢຊູຮ້ອງສຽງດັງ ແຕ່ ເຮົາບໍ່ພົບຄຳເວົ້າສຸດທ້າຍ ຂອງພຣະເຢຊູ ຖ້າເຮົາອ່ານຈາກໂຢຮັນເຮົາຈະພົບຄຳເວົ້າສຸດທ້າຍ ເຊິ່ງພຣະເຢຊູເວົ້າດ້ວຍສຽງດັງວ່າ "ສຳເລັດແລ້ວ" **ໂຢຮັນ19:30**

ຄຳນີ້ໝາຍຄວາມວ່າ ການງານທີ່ພຣະເຢຊູຕ້ອງເຮັດໃນໂລກ ໄດ້ ສຳເລັດແລ້ວ ການທີ່ພຣະອົງມາຊ່ວຍມະນຸດໃຫ້ພົ້ນຈາກຄວາມບາບ ຄວາມຕາຍ ແລະອຳນາດຂອງຊາຕານ ໄດ້ສຳເລັດສິ້ນແລ້ວ ພຣະໂລຫິດຂອງພຣະອົງໄດ້ໄຫລອອກເປັນຄ່າໄຖ່ສຳລັບພວກເຮົາທຸກຄົນແລ້ວ

ຕອນທີ່ຊາວອິດສະລະເອນຍັງຢູ່ໃນປະເທດອີຢິບພວກເຂົາຕ້ອງຂ້າແກະແລະເອົາເລືອດຂອງມັນທາໄວ້ທີ່ວົງກົບຂອງປະຕູບຸດຫົວປີຂອງພວກເຂົາ ຈຶ່ງພົ້ນຄວາມຕາຍ

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຢຊູຄຣິດເປັນມະນຸດແທ້
- ມະນຸດເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ພຣະເຢຊູຄຣິດເປັນຜູ້ຊ່ວຍໃຫ້ລອດແຕ່ພຽງຜູ້ດຽວ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ





## ທົບທວນ

1. ສະໄໝນີ້ເຮົາຈະຮູ້ຈັກພຣະເຈົ້າໄດ້ໂດຍວິທີໃດ?
2. ພຣະເຈົ້າຕ້ອງການທີ່ຢູ່ ຕ້ອງການອາຫານ ອາກາດ ແລະນໍ້າດື່ມບໍ່?
3. ພຣະເຈົ້າມີຮ່າງກາຍເໝືອນມະນຸດບໍ່?
4. ຄຳວ່າ “ພຣະເຈົ້າຊົງເປັນຢູ່ຕະຫລອດການ” ໝາຍຄວາມວ່າຈັ່ງໃດ?
5. ພຣະເຈົ້າຢູ່ໃສ?
6. ພຣະເຈົ້າສຳແດງອອກ ໃນສາມພຣະພາກ ມີຫຍັງແດ່?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະ ຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ຕະຫລອດເວລາ



## ບົດທີ 3
## ພຣະເຈົ້າສ້າງທູດສະຫວັນ
**ເອຊາຢາ 14:12-17**
**ໂຢບ 38:4 -7**

### ວິນຍານເປັນໃຜ ແລະມາຈາກໃສ?

ພວກເຮົາອາດຈະບໍ່ເຄີຍຮູ້ຈັກພຣະເຈົ້າມາກ່ອນ ແຕ່ກໍ່ມີວິນຍານບາງຢ່າງ ທີ່ເຮົາເຄີຍຮູ້ຈັກ ຫລືເຄີຍຢ້ານ. ວິນຍານເຫລົ່ານັ້ນ ເຄີຍເຮັດໃຫ້ເຮົາເຈັບປ່ວຍ ຫລືຕາຍກໍໄດ້ ແຕ່ກໍ່ບໍ່ມີໃຜທີ່ຮູ້ແລະເຂົ້າ ໃຈກ່ຽວກັບເລື່ອງວິນຍານເຫລົ່ານີ້ ຢ່າງລະອຽດວ່າມັນເປັນຫຍັງ? ມາຈາກໃສ?

ບາງຄົນກໍ່ເອີ້ນມັນວ່າ ຜີລືເຈົ້າທີ່ເຈົ້າທາງ ແລະກໍ່ເອີ້ນກັນໄປຕ່າງໆນາໆ ຕາມທີ່ຕົນເອງເຂົ້າໃຈ. ແຕ່ພຣະຄຳພີໄດ້ສອນຢ່າງຊັດເຈນວ່າ ວິນຍານເຫລົ່ານັ້ນເປັນໃຜມາຈາກໃສ?

### ພຣະເຈົ້າໄດ້ສ້າງທູດສະຫວັນກ່ອນສິ່ງອື່ນໆ

ກ່ອນທີ່ພຣະເຈົ້າສ້າງໂລກ ແລະສິ່ງອື່ນໆ ໃນໂລກນັ້ນ ພຣະເຈົ້າໄດ້ສ້າງທູດສະຫວັນ ໃຫ້ເປັນຜູ້ຮັບໃຊ້ຂອງພຣະອົງ. ທູດສະຫວັນມີລັກສະນະເປັນວິນຍານເໝືອນພຣະເຈົ້າ ແຕ່ອຳນາດທີ່ພວກເຂົາໄດ້ຮັບຈາກພຣະເຈົ້ານັ້ນ ບໍ່ທຽບເທົ່າອຳນາດອັນຍິ່ງໃຫຍ່ຂອງພຣະເຈົ້າ.





### ທົບທວນ

1. ເປັນຫຍັງການທີ່ພຣະເຢຊູຖືກທໍລະມານເປັນສິ່ງຍາກສຳລັບພຣະອົງທັງໆ ທີ່ພຣະອົງເປັນພຣະເຈົ້າແທ້?
2. ໃຜເປັນຜູ້ຊັກນຳຈິດໃຈຂອງຢູດາ ແລະບັນດາຜູ້ທີ່ຢາກຂ້າພຣະເຢຊູ?
3. ສະໄໝປັດຈຸບັນຊາຕານຊັກນຳຈິດໃຈຂອງໃຜ?
4. ພຣະເຢຊູເຄີຍເຮັດຜິດພຣະບັນຍັດບໍ່?
5. ຜູ້ທີ່ຢືນຂຶ້ນປັກປຳພຣະເຢຊູນັ້ນເປັນພະຍານແບບໃດ?
6. ເມື່ອມີຄົນພ້ອງພຣະເຢຊູເປັນເລື່ອງບໍ່ຈິງພຣະອົງຕອບຢ່າງໃດ?
7. ເມື່ອມະຫາປະໂລຫິດຖາມວ່າ "ທ່ານເປັນພຣະຄຣິດພຣະບຸດຂອງພຣະເຈົ້າຫລື" ພຣະອົງຕອບວ່າຢ່າງໃດ?
8. ເປັນຫຍັງມະຫາປະໂລຫິດໃຈຮ້າຍເຖິງກັບສີກເສື້ອຜ້າຂອງຕົນ?
9. ພວກທະຫານເຮັດຫຍັງກັບພຣະເຢຊູແດ່?
10. ໃຜແດ່ທີ່ໄດ້ທຳນວາຍເຖິງການກະທຳຂອງຜູ້ທີ່ເຮັດການອັບປະຍົດແກ່ພຣະອົງ?
11. ມົງກຸດໜາມເປັນສັນຍາລັກແນເຖິງຫຍັງ?
12. ເປັນຫຍັງພຣະເຢຊູຈຶ່ງຍອມໃຫ້ມະນຸດຄຶງພຣະອົງທີ່ກາງແຂນ?
13. ກະສັດດາວິດໄດ້ທຳນວາຍໄວ້ຢ່າງໃດກ່ຽວກັບພຣະຫັດແລະພຣະບາດຂອງຜູ້ຊ່ວຍໃຫ້ລອດ?
14. ເປັນຫຍັງຈຶ່ງເກີດຄວາມມືດເທິງແຜ່ນດິນເມື່ອພຣະເຢຊູຢູ່ເທິງກາງແຂນ?
15. ປ້າຍທີ່ປີລາດຂຽນ ແລະຕິດໄວ້ເໜືອຫົວຂອງພຣະເຢຊູ ຂຽນວ່າຈັ່ງໃດ?

ຢ່າງນັ້ນ

**ພຣະເຢຊູຕ້ອງຖືກແຍກຈາກພຣະບິດາ ເນື່ອງຈາກບາບຂອງເຮົາ**
**ມາລະໂກ 15:33-36**

ເປັນຫຍັງຈຶ່ງເກີດມືດມົວໃນແຜ່ນດິນສາມຊົ່ວໂມງ? ເປັນຫຍັງດວງອາທິດບໍ່ສ່ອງສະຫວ່າງໃນເວລານັ້ນ? ເພາະພຣະເຈົ້າຊົງຫັນພຣະພັກຂອງພຣະອົງຈາກພຣະເຢຊູ ແລະຖິ້ມພຣະອົງຢູ່ໂດດດ່ຽວ ເປັນຫຍັງພຣະເຈົ້າເຮັດຢ່າງນັ້ນ ຕໍ່ພຣະເຢຊູບຸດທີ່ຮັກຂອງພຣະອົງ? ພຣະເຢຊູບໍ່ເຄີຍເຮັດຜິດຕໍ່ພຣະບິດາແມ້ນແຕ່ເທື່ອດຽວ ເປັນຫຍັງພຣະບິດາຈຶ່ງຖິ້ມພຣະອົງໄວ້ ແລະບໍ່ຍອມເບິ່ງພຣະອົງເລີຍ?

ເພາະໃນເວລານັ້ນພຣະເຢຊູກຳລັງຮັບໂທດບາບຂອງເຮົາທັງຫລາຍ ແລະບາບເຮັດໃຫ້ພຣະອົງຕ້ອງແຍກຈາກພຣະເຈົ້າ ພຣະເຢຊູໄດ້ເສຍຄ່າໄຖ່ເຮົາໃຫ້ພົ້ນບາບຄົບຖ້ວນແລ້ວ ເພື່ອພຣະເຈົ້າຈະຍົກໂທດບາບຂອງເຮົາໄດ້ ໝາຍເຖິງທຸກຄົນທີ່ເຫັນພ້ອມກັບພຣະເຈົ້າ ແລະວາງໃຈໃນພຣະເຢຊູ

ຕັ້ງແຕ່ສະໄຫມຂອງອາດາມ ພຣະເຈົ້າໄດ້ເຕືອນອາດາມວ່າ ຖ້າລາວຝ່າຝືນກົດພຣະເຈົ້າ ລາວຈະຕ້ອງຖືກແຍກໄປຈາກພຣະເຈົ້າ ເມື່ອບາບເກີດຂຶ້ນ ກໍ່ຕ້ອງມີການລົງໂທດ ຄືຖືກແຍກຈາກພຣະເຈົ້າ ເຫດສະນັ້ນພຣະເຢຊູຈຶ່ງຕ້ອງຖືກແຍກຈາກພຣະບິດາ ເພື່ອຈະໃຫ້ເຮົາພົ້ນຈາກຄວາມບາບຂອງເຮົາ





ທູດສະຫວັນເຫລົ່ານີ້ໄປໄສມາໄສໄດ້ ແຕ່ເຂົາບໍ່ສາມາດຢູ່ທົ່ວທຸກຫົນທຸກແຫ່ງ ເໝືອນພຣະເຈົ້າໄດ້. ພວກເຂົາມີຖານະຕ່ຳກວ່າພຣະເຈົ້າ. ພຣະເຈົ້າສ້າງທູດສະຫວັນດີທຸກອົງ ແລະສ້າງໄວ້ເພື່ອໃຫ້ພວກເຂົາຮັບໃຊ້ພຣະອົງ.

ຈຳນວນຂອງທູດສະຫວັນມີຫລາຍ ຈົນນັບບໍ່ຖ້ວນ. ທູດສະຫວັນນັ້ນບໍ່ມີການສືບພັນ ບໍ່ມີການແຕ່ງງານ ບໍ່ມີລູກ ບໍ່ມີເມຍ. ເມື່ອພຣະເຈົ້າສ້າງມີຈຳນວນເທົ່າໃດ ດຽວນີ້ກໍ່ຍັງມີຈຳນວນເທົ່າເດີມຢູ່.

ທູດສະຫວັນເຄີຍຮ່ວມກັນນະມັດສະການພຣະເຈົ້າ ໃນສະຖານທີ່ແຫ່ງໜຶ່ງ ທີ່ເຮົາເອີ້ນວ່າ “ເມືອງສະຫວັນ” ເຊິ່ງເປັນເມືອງທີ່ບໍລິສຸດ ແລະດີພ້ອມໝົດທຸກປະການ.

**ພຣະເຈົ້າສ້າງທູດສະຫວັນເພື່ອເປັນຜູ້ຮັບໃຊ້ຂອງພຣະອົງ**

ຈຸດປະສົງຂອງພຣະເຈົ້າໃນການສ້າງທູດສະຫວັນຄື ໃຫ້ພວກເຂົາຮັກ ແລະຮັບໃຊ້ພຣະອົງ. ພວກເຂົາເປັນຜູ້ທີ່ພຣະອົງຊົງສ້າງ ເພາະສະນັ້ນ ເຂົາຈຶ່ງເປັນຂອງພຣະອົງ. ເມື່ອພຣະເຈົ້າໄດ້ສ້າງເຂົາກໍ່ສົມຄວນທີ່ເຂົາຈະເຊື່ອຟັງພຣະເຈົ້າ ເພາະພຣະເຈົ້າເປັນເຈົ້ານາຍຂອງພວກເຂົາ.

ຜູ້ທີ່ພຣະເຈົ້າສ້າງເປັນຜູ້ດີຮອບຄອບ. ພຣະເຈົ້າຊົງບໍລິສຸດ. ດັ່ງນັ້ນຜູ້ທີ່ພຣະເຈົ້າສ້າງຈຶ່ງເປັນຜູ້ດີ ແລະບໍລິສຸດດ້ວຍ. ພຣະເຈົ້າໃຫ້ທູດສະຫວັນເຫລົ່ານີ້ ມີສະຕິປັນຍາ ແລະມີລິດອຳນາດ ແຕ່ບໍ່ເທົ່າທຽມກັບພຣະເຈົ້າ.

**ເມືອງສະຫວັນ**

“ສະຫວັນ” ເປັນບ່ອນເຊິ່ງພຣະເຈົ້າສ້າງ ເພື່ອເປັນທີ່ລວບລວມຄົນ

ຂອງພຣະອົງ ແລະເຫລົ່າທູດສະຫວັນທັງຫລາຍ. ສະຫວັນເປັນທີ່ບໍລິສຸດໝົດຈົດ. ແຕ່ມະນຸດເຮົາ ຍັງບໍ່ມີໃຜເຄີຍເຫັນ. ບໍ່ມີໃຜສາມາດໄປເຖິງສະຫວັນໄດ້ ໂດຍໃຊ້ວິທີການຂອງມະນຸດເອງ.

**ເລື່ອງຂອງລູຊີເຟີ**

ໃນຈຳນວນທູດສະຫວັນຫລາຍອົງ ທີ່ພຣະເຈົ້າຊົງສ້າງ ມີຢູ່ອົງໜຶ່ງເຊິ່ງມີຄວາມສະຫລຽວສະຫລາດ ແລະມີຄວາມສວຍງາມຫລາຍ. ທູດອົງນັ້ນມີຊື່ວ່າ ລູຊີເຟີ (ແປວ່າ ດາວປະຈຳກາງເວັນ). ພຣະເຈົ້າໄດ້ປະທານຕຳແໜ່ງທີ່ສູງແກ່ ລູຊີເຟີ.

**ລູຊີເຟີ ນຳທູດສະຫວັນອົງອື່ນໆ ກະບົດຕໍ່ພຣະເຈົ້າ**

**ເອຊາຍາ 14:12-17 ໂຢບ 38:4 -7**

ເວລາຜ່ານໄປ ລູຊີເຟີ ເກີດມີຄວາມຄິດຈອງຫອງ ອວດຕົວ ແລະຕັດສິນໃຈວ່າ ຈະຍາດເອົາຕຳແໜ່ງຂອງພຣະເຈົ້າ ຜູ້ຍິ່ງໃຫຍ່ສູງສຸດ. ລູຊີເຟີ ມີຈິດໃຈທີ່ຢາກຈະເປັນໃຫຍ່ເທົ່າທຽມພຣະເຈົ້າ.

ແຕ່ແຜນການຂອງ ລູຊີເຟີນັ້ນ ຕ້ອງພັງທະລາຍໄປ ເພາະພຣະເຈົ້າມີອຳນາດເໜືອ ລູຊີເຟີ. ແທ້ຈິງແລ້ວ ພຣະເຈົ້າເປັນຜູ້ສ້າງລູຊີເຟີຂຶ້ນມາ ແຕ່ລູຊີເຟີຄິດວ່າ ຈະເອົາຊະນະພຣະເຈົ້າໄດ້.

ມັນຈິ່ງຊັກຊວນທູດສະຫວັນອົງອື່ນໆ ອີກຫລາຍອົງ ໃຫ້ຮ່ວມໃນການກະບົດກັບມັນ.

ໃນຄັ້ງນີ້ ເປັນຫຍັງລູຊີເຟີ ແລະທູດສະຫວັນເຫລົ່ານັ້ນ ຈິ່ງມີໃຈຄິດຈອງຫອງເຊັ່ນນີ້? ພຣະເຈົ້າສ້າງພວກເຂົາ ໃຫ້ເປັນແບບນັ້ນຫວາ? ບໍ່ເລີຍ! ພຣະເຈົ້າບໍ່ເຄີຍເຮັດບາບ ຫລືບັງຄັບໃຫ້ຄົນໃດຄົນໜຶ່ງເຮັດບາບ.





ໂລກ

**ຄວາມຕາຍຂອງພຣະເຢຊູ ເປັນຄ່າໄຖ່ມະນຸດໃຫ້ພົ້ນບາບ**

ເຮົາໄດ້ຮຽນແລ້ວເຖິງການທີ່ພຣະເຈົ້າໄດ້ສົ່ງພຣະເຢຊູມາເປັນຜູ້ຊ່ວຍໃຫ້ລອດຈາກບາບ ພຣະເຢຊູຊ່ວຍມະນຸດໄດ້ຢ່າງໃດ? ພຣະເຈົ້າຍົກໂທດບາບບໍ່ໄດ້ ນອກຈາກວ່າຈະມີຜູ້ເສຍຄ່າໄຖ່ໃຫ້ຄົບຖ້ວນ ຄ່າໄຖ່ທີ່ພຣະເຈົ້າກຳນົດໄວ້ຄືຫຍັງ? ຄືຄວາມຕາຍແລະນີ້ບໍ່ແມ່ນແຕ່ຄວາມຕາຍຝ່າຍຮ່າງກາຍ ແຕ່ໝາຍເຖິງການແຍກຈາກພຣະເຈົ້າຕະຫລອດໄປນຳ ເຫດສະນັ້ນ ບໍ່ມີທາງອື່ນທີ່ພຣະເຢຊູຈະຊ່ວຍເຮົາໃຫ້ພົ້ນຈາກໂທດບາບໄດ້ ນອກຈາກທີ່ພຣະອົງຈະຕ້ອງຮັບໂທດແທນເຮົາ

ພຣະເຢຊູບໍ່ໄດ້ເຮັດຄວາມບາບຫຍັງເລີຍ ດັ່ງນັ້ນພຣະອົງຈິ່ງບໍ່ມີໂທດບາບ ພຣະອົງດີຮອບຄອບ ເມື່ອພຣະເຢຊູໄດ້ຮັບບັບຕິສະມາຈາກໂຢຮັນ ພຣະເຈົ້າໄດ້ຢືນຢັນວ່າ ພຣະອົງຊົງພໍພຣະໄທໃນພຣະເຢຊູ ພຣະເຢຊູສາມາດເປັນຜູ້ທີ່ໄຖ່ມະນຸດໃຫ້ພົ້ນຈາກບາບໄດ້ ເພາະພຣະອົງບໍ່ມີບາບເລີຍ

ໃນສະໄຫມພຣະຄຳພີເດີມ ທຸກຄົນທີ່ມາຫາພຣະເຈົ້າຕ້ອງມີເຄື່ອງບູຊາທີ່ປາສະຈາກຕຳນິ ຖ້າເປັນແກະຫລືສັດອື່ນໆ ຕ້ອງເປັນສັດທີ່ບໍ່ປ່ວຍບໍ່ມີແຜຫລືຮອຍຕຳນິ ແກະທີ່ອັບຣາຮາມໄດ້ຖະຫວາຍແທນອີຊາກບໍ່ມີຮອຍຕຳນິ ເຂົາຂອງມັນຕິດຢູ່ທີ່ຝຸ່ມໄມ້ ຖ້າອະໄວຍະວະສ່ວນອື່ນຕິດຄົງມີບາດແຜທີ່ໜັງຂອງມັນ ແຕ່ເຂົາຂອງມັນແຂງ ຈິ່ງບໍ່ເປັນບາດ ພຣະເຈົ້າຮັບເຄື່ອງບູຊາທີ່ມີຕຳນິບໍ່ໄດ້ ເພາະພຣະເຈົ້າບໍລິສຸດໝົດຈົດ ພຣະເຢຊູສາມາດຖະຫວາຍພຣະອົງເອງແກ່ພຣະເຈົ້າ ເພື່ອໄຖ່ເຮົາໃຫ້ພົ້ນບາບເນື່ອງຈາກວ່າ ພຣະເຈົ້າປາສະຈາກບາບ ແລະຍອມຕາຍແທນພວກເຮົາແກະໂຕນັ້ນຕາຍແທນອີຊາກຢ່າງໃດ ພຣະເຢຊູກໍ່ຕາຍແທນເຮົາທັງຫລາຍ

ໂມເຊຍົກງູຂຶ້ນໃນຖິ່ນທຸລະກັນດານຢ່າງໃດ ບຸດມະນຸດຄືພຣະເຢຊູຈະຕ້ອງຖືກຍົກຂຶ້ນຢ່າງນັ້ນ ບັດນີ້ພຣະເຢຊູໄດ້ຖືກຍົກຂຶ້ນແລ້ວ ເຫມືອນດັ່ງທີ່ພຣະອົງໄດ້ບອກໄວ້ແລ້ວ

ເກືອບໜຶ່ງພັນປີກ່ອນທີ່ເຫດການນີ້ຈະເກີດຂຶ້ນ ກະສັດດາວິດໄດ້ທຳນວາຍເຖິງເລື່ອງທີ່ຜູ້ຊ່ວຍໃຫ້ລອດຈະຖືກແທງທີ່ພຣະຫັດ ແລະພຣະບາດ ດາວິດກໍ່ໄດ້ຂຽນເຖິງການທີ່ລາວຈະຈັບສະຫລາກກັນເພື່ອຈະໄດ້ເສື້ອຜ້າຂອງພຣະອົງນຳພຣະເຈົ້າ ຊົງຮູ້ລ່ວງໜ້າເຖິງເຫດການນີ້ **ເພງສັນລະເສີນ 22:16 ເພງສັນລະເສີນ 22:18**

ເຖິງວ່າປີລາດບໍ່ເຊື່ອວ່າພຣະເຢຊູເປັນກະສັດຂອງພວກຢິວແທ້ລາວຍັງຂຽນປ້າຍຕິດໄວ້ເໜືອຫົວຂອງພຣະອົງວ່າ "ກະສັດຂອງພວກຢິວ" ນີ້ຄົງເປັນການທີ່ປີລາດດູຖູກພວກຢິວ ແຕ່ເປັນແຜນການຂອງພຣະເຈົ້າດ້ວຍເພື່ອທຸກຄົນທີ່ຜ່ານໄປມາທາງນັ້ນຈະໄດ້ອ່ານ ແລະຮູ້ຄວາມຈິງ

ເມື່ອພຣະເຢຊູຖືກຄຶງນັ້ນ ມີໂຈນຜູ້ຮ້າຍທີ່ຖືກຄຶງພ້ອມກັບພຣະອົງນຳເອຊາຢາຜູ້ທຳນວາຍໄດ້ຂຽນຄຳທຳນວາຍເຖິງເຫດການນີ້ໄວ້ ເຊິ່ງເຮົາສາມາດອ່ານໃນພຣະຄຳພີໄດ້ **ເອຊາຢາ 53 :12**

ສັດຕູຂອງພຣະເຢຊູໄດ້ເຢາະເຍີ້ຍ ພຣະອົງຢ່າງເຈັບແສບທີ່ສຸດແຕ່ເຫດການນີ້ ພຣະເຈົ້າຮູ້ວ່າຈະເກີດຂຶ້ນດ້ວຍກະສັດດາວິດໄດ້ຂຽນເຖິງການທີ່ສັດຕູຂອງຜູ້ຊ່ວຍໃຫ້ລອດຈະດູໝິ່ນ ແລະເວົ້າຫຍາບຊ້າຕໍ່ພຣະອົງ **ເພງສັນລະເສີນ 22:6-8**

ເຫດສະນັ້ນ ເຮົາເຫັນວ່າ ພຣະເຈົ້າຊົງຮູ້ເຖິງສິ່ງລະອຽດຕ່າງໆ ທີ່ມະນຸດຈະກະທຳຕໍ່ພຣະບຸດຂອງພຣະອົງ ກ່ອນພຣະອົງໄດ້ສະເດັດມາໃນ





ພຣະເຈົ້າເປັນຜູ້ບໍລິສຸດ ແລະສິ່ງທີ່ພຣະເຈົ້າສ້າງມານັ້ນກໍ່ບໍລິສຸດນຳ.

ທ່ານຄິດວ່າ ພຣະເຈົ້າຈະເຮັດຢ່າງໃດກັບລູຊີເຟີ ແລະລູກນ້ອງຂອງມັນ?

ພຣະເຈົ້າຮູ້ຄວາມຄິດຊົ່ວຂອງລູຊີເຟີ ແລະຄວາມຍິ່ງຈອງຫອງໃນໃຈຂອງມັນ. ບໍ່ມີໃຜສາມາດປົກປິດ ຫລືເກັບຄວາມຊົ່ວໄວ້ ຈາກພຣະເຈົ້າໄດ້. ແມ່ນແຕ່ຄວາມຄິດຂອງເຮົາ ພຣະອົງກໍ່ຊົງຮູ້ທັງສິ້ນ.

ເຮົາຄິດວ່າ ພຣະເຈົ້າຈະຍອມໃຫ້ລູຊີເຟີ ຍາດອຳນາດຂອງພຣະເຈົ້າບໍ່? ລູຊີເຟີ ມີອຳນາດຫລາຍກ່ອນພຣະເຈົ້າບໍ່?

ພຣະເຈົ້າຊົງໄດ້ສຳແດງພຣະພິໂລດ ຕໍ່ຄວາມບາບ ແລະຂັບໄລ່ພວກທູດສະຫວັນ ຜູ້ທີ່ເຮັດບາບຢູ່ໃນສະຫວັນ ທີ່ກະບົດເຫລົ່ານັ້ນອອກຈາກສະຫວັນ ຜູ້ທີ່ເຮັດບາບຈະຢູ່ໃນສະຫວັນບໍ່ໄດ້ ແຕ່ຈະຕ້ອງຕາຍເຊິ່ງໝາຍຄວາມວ່າ ທູດສະຫວັນເຫລົ່ານີ້ ຈະຕ້ອງຖືກພາກຈາກພຣະເຈົ້າຕະຫລອດໄປເປັນນິດ.

**ພຣະເຈົ້າຕຽມບຶງໄຟໄວ້ສຳລັບ ລູຊີເຟີ ແລະສະໝູນຂອງມັນ**

ຕັ້ງແຕ່ເວລານັ້ນ ລູຊີເຟີກໍ່ໄດ້ຊື່ວ່າ "ຊາຕານ" ເຊິ່ງໝາຍຄວາມວ່າ "ຜູ້ຕໍ່ຕ້ານ" ຫລື "ຜູ້ລໍ້ລວງ". ຊາຕານແລະສະໝູນຂອງມັນນັ້ນ ກໍ່ໄດ້ກາຍເປັນສັດຕູຂອງພຣະເຈົ້າ ແລະໄດ້ອາໄສຢູ່ໃນໂລກນີ້ ຕາມບ່ອນຕ່າງໆ ແລະມັນຈະຄອຍຕໍ່ຕ້ານຜົນງານຂອງພຣະເຈົ້າ ຕະຫລອດເວລາເມື່ອມີໂອກາດ.

ພຣະເຈົ້າໄດ້ຕຽມບຶງໄຟໃຫຍ່ ເປັນບ່ອນລົງໂທດຊາຕານ ແລະສະໝູນຂອງມັນ. ວິນຍານຊົ່ວເຫລົ່ານັ້ນ ຈະຕ້ອງຢູ່ບ່ອນນັ້ນ ຕະຫລອດໄປ

ເປັນນິດ.

ດຽວນີ້ຍັງບໍ່ເຖິງວັນພິພາກສາຂອງພຣະເຈົ້າ ຊາຕານແລະສະໝູນຂອງມັນ ຍັງຢູ່ໃນໂລກນີ້. ມັນມີອຳນາດສາມາດເຮັດໄດ້ຫລາຍຢ່າງ ແຕ່ມັນເປັນຜູ້ທີ່ຕໍ່ຕ້ານພຣະເຈົ້າສະເໝີ.

## ທົບທວນ

1. ຜູ້ດຽວທີ່ເປັນຢູ່ກ່ອນທີ່ຈະມີທຸກສິ່ງເກີດຂຶ້ນແມ່ນໃຜ?
2. ພຣະເຈົ້າມີຈຸດເລີ່ມຕົ້ນຫລືຈຸດຈົບບໍ່?
3. ວິນຍານຕ່າງໆ ມາຈາກໃສ?
4. ເມື່ອພຣະເຈົ້າສ້າງນັ້ນ ວິນຍານເຫລົ່ານັ້ນມີດີແດ່ ຊົ່ວແດ່ ແມ່ນບໍ່?
5. ຄວາມຜິດຂອງ ລູຊີເຟີ ແມ່ນຫຍັງ?
6. ທູດສະຫວັນທີ່ຕິດຕາມ ລູຊີເຟີ ມີຫລາຍບໍ່?
7. ພຣະເຈົ້າຮູ້ຄວາມຄິດຂອງລູຊີເຟີ ແລະສະໝູນຂອງມັນບໍ່?
8. ພຣະເຈົ້າເຮັດຫຍັງແກ່ທູດສະຫວັນທີ່ກະບົດນັ້ນ?
9. ດຽວນີ້ຊື່ຂອງລູຊີເຟີແມ່ນຫຍັງ ?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງບໍລິສຸດ ແລະມີອຳນາດເໜືອທຸກສິ່ງທຸກຢ່າງ
- ພຣະເຈົ້າຊົງບໍລິສຸດແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ຊາຕານ ຕໍ່ຕ້ານພຣະເຈົ້າແລະແຜນການຂອງພຣະອົງສະເໝີ





ເຮົາຕ່າງຫາກທີ່ເປັນຄົນຜິດ ແຕ່ພຣະອົງຍອມໃຫ້ຄົນເຫລົ່ານັ້ນໃສ່ຮ້າຍພຣະອົງ ເຮັດໃຫ້ພຣະອົງອັບອາຍ ຂາຍໜ້າ ຮັບຄວາມອັບປະຍົດ ຖືກຂ້ຽນຕີ ເຈັບປວດຢ່າງແສນສາຫັດ ແລະພຣະອົງບໍ່ຈົ່ມເລີຍ ພຣະອົງຍອມຮັບສິ່ງນັ້ນ ເພື່ອພວກເຮົາທຸກຄົນ ເພາະເຮົາເປັນຄົນບາບ ຂໍໃຫ້ເຮົາທັງຫລາຍພິດຈາລະນາເຖິງເລື່ອງນີ້ໃຫ້ດີ

## ພຣະເຢຊູຖືກຄຶງທີ່ກາງແຂນ

**ມາລະໂກ 15:22-37**

ເມື່ອເຮົາເຫັນວ່າ ຜູ້ທີ່ເຮົາຮັກມັກຈະໃກ້ເຖິງທີ່ສິ້ນສຸດຂອງຊີວິດແລ້ວ ເຮົາຢາກຈະເຂົ້າໃກ້ໆ ເພື່ອຈະໄດ້ຍິນຄຳເວົ້າ ຫລືຄຳສັ່ງສຸດທ້າຍຂອງລາວ ເຮົາທຸກຄົນສົນໃຈໃນຄຳສຸດທ້າຍຂອງຜູ້ທີ່ເຮົາຮັກເປັນພິເສດ ບົດຮຽນເຊິ່ງເຮົາຈະຮຽນນຳກັນໃນມື້ນີ້ ເຮົາຈະໄດ້ຍິນຄຳເວົ້າສຸດທ້າຍຂອງພຣະເຢຊູ ກ່ອນສິ້ນພຣະຊົນນັ້ນ

**ມາລະໂກ 15:22-32** ເຫດການທີເຮົາຈະສຶກສານຳກັນໃນມື້ນີ້ ເປັນເຫດການທີ່ສຳຄັນທີ່ສຸດໃນປະຫວັດສາດຂອງໂລກ ເຮົາຈະຮຽນເຖິງສິ່ງທີ່ພຣະເຢຊູໄດ້ກະທຳໄວ້ ເພື່ອເຮົາທຸກຄົນ ເພື່ອວ່າເຮົາຈະບໍ່ຕ້ອງຮັບໂທດບາບຂອງເຮົາ ແລະພຣະເຈົ້າຈະຕ້ອນຮັບເຮົາໃຫ້ຢູ່ກັບພຣະອົງ

ພວກທະຫານພາພຣະເຢຊູອອກໄປບໍ່ໄກຈາກກຸງເຢລູຊາເລັມປານໃດ ເຖິງທີ່ແຫ່ງໜຶ່ງຊື່ ໂຄລະໂຄທາ ພວກເຂົາໃຫ້ພຣະເຢຊູນອນລົງເທິງໄມ້ກາງແຂນ ແລະຕອກຕະປູທີ່ພຣະຫັດ ແລະພຣະບາດຂອງພຣະອົງ ເພື່ອຄຶງໄວ້ທີ່ກາງແຂນ ແລ້ວພວກເຂົາກໍ່ຍົກໄມ້ກາງແຂນນັ້ນຂຶ້ນ ເພື່ອໃຫ້ຕັ້ງໄວ້

ເຮົາຈື່ເລື່ອງທີ່ພຣະເຢຊູເວົ້າກັບນີໂກເດມໄດ້ບໍ່? ພຣະອົງບອກວ່າ

ພວກໂຣມໃຊ້ການຄຶງທີ່ກາງແຂນນັ້ນ ເພື່ອປະຫານຊີວິດນັກໂທດທີ່ຮ້າຍກາດທີ່ສຸດ ຜູ້ທີ່ຖືກຄຶງຕ້ອງຖືກທໍລະມານເປັນເວລາດົນນານກ່ອນຕາຍ ພວກຢິວບໍ່ມີເຫດຜົນອື່ນທີ່ພວກເຂົາກຽດຊັງພຣະເຢຊູ ນອກຈາກການບາບທີ່ຢູ່ໃນຈິດໃຈຂອງຕົນເອງ ແຕ່ຜູ້ທຳນວາຍໄດ້ທຳນວາຍເລື່ອງນີ້ໄວ້ຕັ້ງແຕ່ສະໄຫມພຣະຄຳພີເດີມແລ້ວ ພຣະເຈົ້າຊົງຮູ້ທຸກຢ່າງກ່ອນທີ່ສິ່ງນັ້ນຈະເກີດຂຶ້ນ **ເອຊາຢາ 53:3; ພງສັນລະເສີນ 69:4**

**ມາລະໂກ 15:16-20** ພວກທະຫານໂຣມນຳພຣະເຢຊູໄປ ແລະຂ້ຽນຕີພຣະອົງດ້ວຍແສ້ໜັງ ເຊິ່ງມີໂລຫະເຊັ່ນເມັດຕະກົ່ວ ຫລືກະດູກແຕກທີ່ປາຍຂອງມັນ ການຂ້ຽນຕີຢ່າງນັ້ນ ເຮັດໃຫ້ຜູ້ຖືກຕີເຈັບປວດເຫລືອຂະ ໜາດ ຫລັງຂອງເພິ່ນນັ້ນຈະຖືກແສ້ໜັງສີກເປັນບາດແຜເລິກເຖິງກະດູກທົ່ວທັງແຜ່ນຫລັງ ຫລັງຈາກຂ້ຽນຕີແລ້ວ

ພວກທະຫານກໍ່ພາກັນເຢາະເຢີ້ຍພຣະອົງ ໂດຍສວມເສື້ອສີມ່ວງໃຫ້ແກ່ພຣະອົງ ພວກເຂົາເອົາໜາມສານເປັນມົງກຸດສວມໃສ່ຫົວຂອງພຣະອົງ ແລ້ວທຳທ່າກາບໄຫວ້ພຣະອົງ ພວກເຮົາຈື່ໄດ້ບໍ່? ເມື່ອອາດາມແລະເອວາເຮັດບາບ ພຣະເຈົ້າໃຫ້ການສາບແຊ່ງມາເໜືອແຜ່ນດິນໂລກມີຕົ້ນໜາມ ຕົ້ນຫຍ້າເກີດຂຶ້ນທົ່ວແຜ່ນດິນໂລກ ພຣະເຢຊູໄດ້ມາເພື່ອຊ່ວຍເຮົາໃຫ້ພົ້ນຈາກການສາບແຊ່ງ ພຣະເຈົ້າຍອມໃຫ້ສັດຕູຂອງພຣະເຢຊູວາງຕົ້ນໜາມນີ້ເທິງຫົວຂອງພຣະອົງ ເພື່ອເປັນການສະແດງວ່າ ພຣະອົງຍອມຮັບການສາບແຊ່ງຂອງມະນຸດທັງປວງ

ເມື່ອພວກເຮົາໄດ້ຍິນເຖິງຜູ້ທີ່ຕ້ອງທົນຄວາມຍາກລຳບາກທັງໆ ທີ່ບໍ່ໄດ້ເກີດຈາກຄວາມຜິດຂອງຄົນໆ ນັ້ນເລີຍ ເຮົາຮູ້ສຶກເສຍໃຈຫລາຍແລະອາດມີຄວາມໂກດເຄືອງນຳແມ່ນບໍ່? ແຕ່ເມື່ອເຮົາຄິດເຖິງພຣະເຢຊູເຮົາຮູ້ສຶກຢ່າງໃດ? ພຣະອົງໄດ້ທົນທຸກ ເພື່ອພວກເຮົາ ທີ່ແທ້ແລ້ວພວກ







**ບົດທີ 4**

**ພຣະເຈົ້າຊົງສ້າງຟ້າແລະດິນ**

**ທົບທວນ**

**ປະຖົມມະການ 1:1-23**

**ສ້າງຄວາມສົນໃຈ**

ສະໄໝນີ້ເຮົາຍັງຢູ່ໃນໂລກເຊິ່ງລືມຜູ້ສ້າງ ຫລາຍໆຄົນສອນວ່າ ໂລກທີ່ເຮົາຢູ່ ແລະທຸກສິ່ງໃນໂລກເກີດໂດຍທຳມະຊາດ ໂດຍບໍ່ມີໃຜເຮັດໃຫ້ເກີດໂລກ. ແຫ່ງການສຶກສາໃນປັດຈຸບັນນີ້ ມີການສອນເຖິງວິວັດທະນາການຫລາຍເຊິ່ງເບິ່ງ ຄືວ່າເປັນຄວາມຈິງ ທີ່ພິສູດໄດ້.

ແຕ່ຄຳເວົ້າຂອງຜູ້ທີ່ສ້າງໂລກ ຕາມແຜນການຂອງພຣະອົງເອງເຊິ່ງບັນທຶກໄວ້ໃນພຣະຄຳພີນັ້ນ ຄົນຈຳນວນຫລາຍບໍ່ເຄີຍພິຈາລະນາເລີຍ.

ໃນບົດຮຽນນີ້ ເຮົາຈະພົບກັບຄວາມຈິງການເປັນມາຂອງໂລກທີ່ ຜູ້ຂຽນພຣະຄຳພີໄດ້ບັນທຶກໄວ້ ຫລາຍພັນປີມາແລ້ວ. ເຮົາບໍ່ຄວນລືມວ່າຜູ້ຂຽນພຣະຄຳພີໄດ້ຮັບການດົນໃຈຈາກພຣະເຈົ້າ. ມີຫລາຍສິ່ງທີ່ເຮົາບໍ່ຮູ້ແຕ່ສິ່ງທີ່ພຣະເຈົ້າບອກໃຫ້ເຮົາ ເຮົາຮູ້ໄດ້ແນ່ນອນ.

**ການຊົງສ້າງ**

ຈາກພຣະຄຳພີ ປະຖົມມະການ 1:1 ເຮົາເຫັນວ່າ ພຣະເຈົ້າຊົງເນລະມິດສ້າງຟ້າແລະແຜ່ນດິນ. ເຮົາໄດ້ຮຽນແລ້ວເຖິງການທີ່ພຣະເຈົ້າສ້າງທູດສະຫວັນ. ດຽວນີ້ເຮົາເຫັນວ່າ ໃນປະຖົມມະການພຣະເຈົ້າເນລະມິດສ້າງສິ່ງທັງຫລາຍ.

ຄຳວ່າ "ເນລະມິດ" ໝາຍຄວາມວ່າ ພຣະເຈົ້າສ້າງໂດຍລິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ ໂດຍບໍ່ຕ້ອງໃຊ້ສິ່ງອື່ນໃດໃນການສ້າງ.

ຖ້າເຮົາສ້າງຫຍັງຂຶ້ນມາຈັກຢ່າງໜຶ່ງ ເຮົາຈະຕ້ອງມີວັດຖຸປະກອບເຄື່ອງມື ເຄື່ອງໃຊ້ຕ່າງໆ ຢ່າງຄົບຖ້ວນ ເຮົາຈຶ່ງຈະສ້າງໄດ້ ແຕ່ພຣະເຈົ້ານັ້ນ ບໍ່ຈຳເປັນຕ້ອງໃຊ້ຫຍັງເລີຍ ໃນການສ້າງໂລກ. ພຣະຄຳພີບອກໃຫ້ເຮົາຮູ້ວ່າ ພຣະເຈົ້າພຽງແຕ່ເວົ້າອອກໄປເທົ່ານັ້ນ ສິ່ງທີ່ພຣະເຈົ້າຕ້ອງການກໍ່ເກີດຂຶ້ນທັນທີ. ພຣະເຈົ້າບໍ່ຕ້ອງມີຜູ້ຊ່ວຍ ຫລືຜູ້ແນະນຳສັ່ງສອນ ບໍ່ຕ້ອງຮຽນກ່ອນ ແຕ່ພຣະເຈົ້າເປັນຜູ້ທີ່ຮູ້ທຸກສິ່ງ. ບໍ່ມີສິ່ງໃດທີ່ພຣະເຈົ້າເຮັດບໍ່ໄດ້.

ເປັນໄປໄດ້ຢ່າງໃດ ທີ່ພຣະເຈົ້າສາມາດເຮັດໃຫ້ສິ່ງຕ່າງໆ ເກີດຂຶ້ນມາຈາກຄວາມຫວ່າງເປົ່າ ທີ່ບໍ່ມີຫຍັງເລີຍ? ເປັນໄປໄດ້ເພາະບໍ່ມີສິ່ງໃດທີ່ຍາກສຳລັບພຣະເຈົ້າ.

ມີໃຜແດ່ ທີ່ມີລິດອຳນາດຫລາຍກວ່າພຣະເຈົ້າ? ວິນຍານຕ່າງໆ ຫລືຊາຕານ ເຮັດສິ່ງນີ້ບໍ່ໄດ້. ມະນຸດໂລກກໍ່ເຮັດບໍ່ໄດ້. ແຕ່ພຣະເຈົ້າຊົງເຮັດໃຫ້ທຸກປະການ.





ໃສ່ພຣະອົງ ແລະເອົາມືຕົບພຣະອົງ ບາງຄົນກໍ່ເອົາໄມ້ຕີພຣະອົງນຳ ສິ່ງເຫລົ່ານັ້ນກໍ່ເກີດຂຶ້ນຕາມຄຳທຳນວາຍໄດ້ບັນທຶກໄວ້ໃນພຣະຄຳພີ

ເອຊາຢາໄດ້ຂຽນເລື່ອງນີ້ເກືອບ 700 ປີ ກ່ອນທີ່ສິ່ງເຫລົ່ານັ້ນຈະເກີດຂຶ້ນແທ້ໃນຊີວິດຂອງພຣະເຢຊູ ພຣະອົງກໍ່ຍອມທົນຕໍ່ການດູໝິ່ນຢຽດຢາມຢ່າງນັ້ນ ໂດຍບໍ່ໄດ້ໂຕ້ຕອບແຕ່ປະການໃດ ເຫມືອນດັ່ງທີ່ເອຊາຢາໄດ້ຂຽນໄວ້ທຸກປະການ **ເອຊາຢາ 50:6**

**ພຣະເຢຊູຕໍ່ໜ້າປີລາດເຈົ້າເມືອງ**

**ມາລະໂກ 15:1-15**

ພວກຢິວບໍ່ມີສິດປະຫານຊີວິດຜູ້ຮ້າຍດ້ວຍຕົນເອງ ເຫດສະນັ້ນພວກເຂົາຕ້ອງໄປຫາເຈົ້າເມືອງຊາວໂຣມ ເພື່ອຈະໃຫ້ພຣະເຢຊູມີໂທດເຖິງຕາຍ ປີລາດໄດ້ຍິນເລື່ອງລາວຂອງພຣະເຢຊູມາກ່ອນນັ້ນແລ້ວ ແລະຮູ້ວ່າ ບາງຄົນຢາກໃຫ້ພຣະອົງເປັນກະສັດ ສະນັ້ນປີລາດຈຶ່ງຖາມວ່າ "ທ່ານເປັນກະສັດຂອງພວກຢິວຫລື?" ພຣະເຢຊູ ບໍ່ປະຕິເສດເລື່ອງນີ້ ເພາະພຣະອົງເປັນກະສັດແທ້ ແຕ່ເມື່ອພວກຢິວຟ້ອງພຣະອົງ ພຣະອົງບໍ່ຕອບເລີຍເລື່ອງນັ້ນ ກໍ່ເກີດຂຶ້ນແທ້ຕາມທີ່ເອຊາຢາໄດ້ ທຳນວາຍໄວ້ດ້ວຍ **ເອຊາຢາ 53:7**

ຕາມທຳນຽມຂອງຊາວຢິວ ໃນເທດສະການປັດສະຄາ ທຸກປີເຈົ້າເມືອງເຄີຍປ່ອຍນັກໂທດຄົນໜຶ່ງ ເມື່ອປີລາດເຫັນວ່າ ຜູ້ນຳຊາວຢິວຢາກຂ້າພຣະເຢຊູ ເພາະຄວາມອິດສາ ປີລາດຢາກປ່ອຍພຣະອົງ ແຕ່ຕ້ອງໃຫ້ປະຊາຊົນເປັນຜູ້ຕັດສິນ ປີລາດຄິດວ່າ ປະຊາຊົນຈະເລືອກພຣະເຢຊູ ແຕ່ກົງກັນຂ້າມ ປະຊາຊົນກັບຂໍໃຫ້ປີລາດປ່ອຍບາລັບບາ ເຊິ່ງເປັນຜູ້ກໍ່ການຮ້າຍທີ່ເຄີຍຂ້າຄົນ ແລະໃຫ້ລາວຄຶງພຣະເຢຊູທີ່ກາງແຂນ

ເຂົາ ພຣະເຈົ້າໄດ້ໃຫ້ດາວິດຂຽນຄຳທຳນວາຍນີ້ໄວ້ເກືອບ 1,000 ປີ ກ່ອນພຣະເຢຊູຈະເຂົ້າມາໃນໂລກ ບັດນີ້ເມື່ອພຣະເຢຊູຢືນຢູ່ຕໍ່ໜ້າສະພາ ຄຳທີ່ດາວິດໄດ້ບັນທຶກໄວ້ນັ້ນ ກໍ່ເຖິງຄາວສຳເລັດ **ເພງສັນລະເສີນ 27:12**

ເມື່ອຄົນເຫລົ່ານັ້ນ ເວົ້າບໍ່ຈິງໃນການຟ້ອງພຣະອົງ ພຣະອົງຊົງມິດງຽບຢູ່ ບໍ່ໄດ້ຕອບໃນປະການໃດ ເພາະພຣະອົງວາງໃຈໃນພຣະບິດາ ແລະຮູ້ວ່າ ແຜນການຂອງພຣະເຈົ້າ ຈະສຳເລັດແນ່ນອນ ແຕ່ເມື່ອມະຫາປະໂລຫິດຖາມວ່າ ພຣະອົງເປັນພຣະຄຣິດຫລືບໍ່ ພຣະອົງຕອບວ່າ "ເຮົາເປັນ"

ພວກເຮົາຈື່ພຣະນາມຂອງພຣະເຈົ້າ ທີ່ພຣະອົງບອກແກ່ໂມເຊໄດ້ບໍ່? **ອົບພະຍົບ 3:14** ພຣະເຈົ້າກ່າວວ່າ "ເຮົາເປັນຜູ້ເຊິ່ງເຮົາເປັນ" ຜູ້ນຳຊາວຢິວຮູ້ດີເຖິງພຣະນາມນີ້ ແລະພວກເຂົາຮູ້ວ່າ ເມື່ອພຣະເຢຊູໃຊ້ຄຳນັ້ນ ກໍ່ໝາຍຄວາມວ່າພຣະອົງເປັນພຣະເຈົ້າ ພຣະເຢຊູກໍ່ບອກວ່າ ພຣະອົງຈະນັ່ງຂ້າງຂວາຂອງພຣະເຈົ້າ ແລະຈະສະເດັດມາໃນເມກ

ການສະເດັດມາໃນໂລກຄັ້ງທີໜຶ່ງ ພຣະອົງມາເພື່ອຈະເປັນຜູ້ຊ່ວຍໃຫ້ລອດ ສ່ວນການສະເດັດມາຄັ້ງທີ່ສອງ ພຣະອົງຈະມາດ້ວຍອະນຸພາບທີ່ຍິ່ງໃຫຍ່ ແລະຈະພິພາກສາ ມະນຸດໂລກເວລານັ້ນທຸກຄົນຈະເຫັນພຣະອົງນັ່ງຂ້າງຂວາຂອງພຣະບິດາ ແລະຈະຮູ້ວ່າພຣະອົງມີຖານະເທົ່າທຽມກັບພຣະບິດາ

ຄຳເວົ້າຂອງພຣະເຢຊູນັ້ນ ເຮັດໃຫ້ມະຫາປະໂລຫິດໃຈຮ້າຍຫລາຍ ພວກເຂົາຈຶ່ງຈີກເສື້ອຜ້າຂອງຕົນ ເພື່ອສະແດງຄວາມບໍ່ພໍໃຈໃນພຣະອົງ "ການຈີກເສື້ອຜ້ານັ້ນເປັນທຳນຽມຢ່າງໜຶ່ງຂອງຊາວຢິວ" ເມື່ອນັ້ນຄົນທັງຫລາຍ ກໍ່ສະແດງອາລົມຮ້າຍຕໍ່ກັບພຣະເຢຊູ ພວກເຂົາຖົ່ມນ້ຳລາຍ





**ແຜ່ນດິນຫວ່າງເປົ່າ ແລະຄວາມມືດປົກຄຸມຢູ່**

**ປະຖົມມະການ 1:2**

ຈາກປະຖົມມະການ 1:2 ເຮົາເຫັນວ່າ ໃນເບື້ອງຕົ້ນນັ້ນ ຍັງບໍ່ມີສິ່ງໃດທີ່ມີຊີວິດຢູ່ໃນໂລກ. ໂລກຍັງຫວ່າງເປົ່າຢູ່ ແລະມີແຕ່ຄວາມມືດ.

ແຕ່ພຣະວິນຍານຂອງພຣະເຈົ້າຢູ່ທີ່ນັ້ນ ກຳລັງລໍຄອຍກ່ອນທີ່ຈະເລີ່ມພາລະກິດອັນຍິ່ງໃຫຍ່ຂອງພຣະອົງ. ວຽກນີ້ເປັນວຽກທີ່ພຣະບິດາ ພຣະບຸດ ແລະພຣະວິນຍານ ຈະເຮັດດ້ວຍກັນ. ທຸກສິ່ງເກີດຈາກພຣະເຈົ້າອົງດຽວ ຜູ້ຊົງປະກົດພຣະອົງອອກມາ ໃນສາມພຣະພາກ.

**ຄວາມສະຫວ່າງເກີດຂຶ້ນ**

**ປະຖົມມະການ 1:3-5**

ໃນປະຖົມມະການ 1:3 ເຮົາເຫັນວ່າ ພຣະເຈົ້າເວົ້າ ແລະຄວາມສະຫວ່າງກໍເກີດຂຶ້ນ.

ທ່ານຮູ້ຈັກຜູ້ອື່ນທີ່ສາມາດໃຫ້ຄວາມສະຫວ່າງເກີດຂຶ້ນໂດຍຄຳເວົ້າບໍ່? ມະນຸດເຮົາຈະຕ້ອງເຮັດຫລາຍຢ່າງ ເພື່ອໃຫ້ມີຄວາມສະຫວ່າງເກີດຂຶ້ນ. ແຕ່ສຳລັບພຣະເຈົ້າແລ້ວ ພຣະອົງພຽງແຕ່ກ່າວເທົ່ານັ້ນ. ຄຳເວົ້າຂອງພຣະອົງມີອຳນາດ ຈຶ່ງບໍ່ເປັນການຍາກ ທີ່ຈະໃຫ້ຄວາມສະຫວ່າງເກີດຂຶ້ນ. ກ່ອນທີ່ພຣະເຈົ້າຈະສ້າງຄວາມສະຫວ່າງນັ້ນໃນໂລກນີ້ ຍັງບໍ່ມີຄວາມສະຫວ່າງເລີຍ

ໃນປະຖົມມະການ 1:4-5 ເຮົາເຫັນວ່າ ຄວາມສະຫວ່າງນັ້ນດີ ເພາະພຣະເຈົ້າເປັນຜູ້ດີຮອບຄອບ. ເຫດສັນນັ້ນທຸກສິ່ງທີ່ພຣະອົງເຮັດລ້ວນ ແຕ່ແມ່ນສິ່ງດີທັງນັ້ນ.

ສິ່ງທີ່ມະນຸດເຮັດອາດດີແດ່ ບໍ່ດີແດ່ ແຕ່ທຸກສິ່ງທີ່ພຣະເຈົ້າເຮັດນັ້ນດີຮອບຄອບ.

ມີທັງຄວາມສະຫວ່າງ ແລະຄວາມມືດ. ມີກາງເວັນ ແລະກາງຄືນເພາະເປັນແຜນການຂອງພຣະເຈົ້າ.

**ພຣະເຈົ້າເຮັດທຸກສິ່ງຕາມເວລາຂອງພຣະອົງ**

**ປະຖົມມະການ 1:6-23**

ໃນ ປະຖົມມະການ 1:6-23 ເຮົາເຫັນວ່າ ພຣະເຈົ້າສາມາດແຍກນ້ຳອອກຈາກກັນ ແລະເຮັດໃຫ້ເມກເກີດຂຶ້ນໃນທ້ອງຟ້າໄດ້. ພຣະອົງສັ່ງໃຫ້ທະເລຢູ່ໃນບ່ອນຂອງມັນ ແລະໃຫ້ແຜ່ນດິນປະກົດອອກມາ.

ບໍ່ມີຜູ້ອື່ນທີ່ເຄີຍສັ່ງທະເລໃຫ້ຖອຍອອກຈາກບົກ ແລະທະເລໄດ້ເຊື່ອຟັງຜູ້ນັ້ນ. ແຕ່ພຣະເຈົ້າພຣະຜູ້ສ້າງນັ້ນ ເປັນເຈົ້າຂອງທະເລ ເມື່ອພຣະອົງສັ່ງຢ່າງນັ້ນ ທະເລກໍ່ເຊື່ອຟັງພຣະອົງທັນທີ.

ພຣະເຈົ້າໄດ້ສ້າງຕົ້ນໄມ້ນາໆ ຊະນິດ ແລະພືດຜັກທຸກຊະນິດ. ໃນວັນທີສາມ ຕາມເວລາທີ່ພະອົງຊົງເຫັນວ່າສົມຄວນ ພຣະເຈົ້າຊົງສ້າງສິ່ງເຫລົ່ານີ້ໄວ້ ເພາະພຣະອົງມີແຜນການທີ່ຈະສ້າງມະນຸດ ພຣະອົງໃຫ້ມີຮົ່ມໄມ້ ເພື່ອໃຫ້ມະນຸດມີທີ່ພັກຜ່ອນຢ່ອນໃຈ. ໃຫ້ມີຕົ້ນໄມ້ ເພື່ອມະນຸດຈະໃຊ້ສຳລັບສ້າງທີ່ຢູ່ອາໄສ ແລະໃຫ້ມີໝາກໄມ້ທຸກຢ່າງ ເພື່ອມະນຸດຈະໄດ້ກິນ. ມີເຂົ້າຜັກກາດ ແລະພືດທີ່ເປັນອາຫານທຸກຢ່າງ ເພາະພຣະເຈົ້າມີຄວາມຮັກ ຕໍ່ຜູ້ທີ່ພຣະອົງຈະສ້າງຂຶ້ນ. ພຣະເຈົ້າໄດ້ສ້າງໂລກອັນງົດງາມໄວ້ ເປັນທີ່ອາໄສຂອງມະນຸດ. ທຸກສິ່ງທີ່ພຣະເຈົ້າສ້າງລ້ວນ ແຕ່ດີທັງນັ້ນ. ບໍ່ມີຕົ້ນຫຍ້າທີ່ມີໜາມເລີຍ.





ນານ ແລະຍອມໃຫ້ນ້ຳພຣະໄທຂອງພຣະບິດາສຳເລັດ ໃນຊີວິດຂອງພຣະອົງ

**ມາລະໂກ 14:43-51**

ເມື່ອຍັງຢູ່ໃນສວນເຄັດເສມາເນນັ້ນ ຢູດາແລະພັກພວກຂອງປະໂລຫິດ ໄດ້ມາເພື່ອຈະຈັບພຣະເຢຊູ ພວ ນັ້ນຄົງບໍ່ສຳນຶກວ່າ ຜູ້ທີ່ຊັກນຳຈິດໃຈຂອງພວກເຂົາໄດ້ເຮັດຢ່າງນັ້ນ ຄືຊາຕານ ຄົນທີ່ບໍ່ຍອມຟັງພຣະຄຳຂອງພຣະເຈົ້າໃນທຸກມື້ນີ້ຍັງບໍ່ລະນຶກວ່າ ຊາຕານເປັນຜູ້ທີ່ນຳຄວາມຄິດຂອງພວກເຂົາເຊັ່ນດຽວກັບຄົນເຫລົ່ານັ້ນ ພຣະເຢຊູຊົງຮູ້ວ່າທຸກສິ່ງທີ່ໄດ້ບັນທຶກໄວ້ໃນພຣະຄຳພີເດີມກ່ຽວກັບພຣະອົງ ຈະຕ້ອງສຳເລັດຕາມທີ່ພຣະເຈົ້າໄດ້ບອກໄວ້ ພຣະອົງຈຶ່ງຍອມໃຫ້ຄົນເຫລົ່ານັ້ນຈັບພຣະອົງໄປ

ສາວົກທັງຫລາຍຂອງພຣະເຢຊູໄດ້ພາກັນໜີ ຕາມພຣະອົງໄດ້ບອກໄວ້ກ່ອນ ແລ້ວສາວົກເຫລົ່ານັ້ນຮູ້ສຶກຢ້ານແລະສັບສົນ ພວກເຂົາຜິດຫວັງເພາະພວກເຂົາເຊື່ອວ່າ ພຣະອົງໄດ້ມາຈາກພຣະເຈົ້າເພື່ອຈະຊ່ວຍມະນຸດແຕ່ຖ້າພຣະອົງຈະຕາຍຄົງຊ່ວຍຫຍັງບໍ່ໄດ້ແລ້ວ

**ພຣະເຢຊູຕໍ່ໜ້າສະພາ**

**ມາລະໂກ 14:53-65**

ພວກປະໂລຫິດໄດ້ນຳພຣະເຢຊູໄປເຖິງສະພາຂອງພວກຢິວເພື່ອຈະຟ້ອງພຣະອົງ ພຣະເຢຊູບໍ່ເຄີຍເຮັດຜິດຄຳບັນຍັດ ແມ້ນແຕ່ຂໍ້ດຽວ ເຫດສະນັ້ນ ພວກເຂົາບໍ່ມີຫລັກຖານທີ່ຈະໃຊ້ໃນການຟ້ອງພຣະອົງ ພວກເຂົາຈຶ່ງຫາພຣະຍານປອມມາເພື່ອປັກປຳພຣະອົງ ພວກນີ້ກຽດຊັງພຣະເຢຊູໂດຍບໍ່ມີເຫດ ແຕ່ພວກເຂົາບໍ່ຢາກກັບໃຈໃນການຊົ່ວຂອງພວກເຂົາພວກເຂົາບໍ່ຢາກເຊື່ອຟັງພຣະຄຳຂອງພຣະເຈົ້າ ທີ່ພຣະເຢຊູສອນພວກ



**ບົດທີ 28**
**ພຣະເຢຊູຍອມທົນຕໍ່**
**ການດູໝິ່ນຢຽດຢາມ**
**ມາລະໂກ 14:32-65**
**15:1-20**

**ສ້າງຄວາມສົນໃຈ**

ພວກເຮົາເຄີຍຖືກຄົນອື່ນນິນທາວ່າຮ້າຍແດ່ບໍ່? ເຄີຍມີຄົນອື່ນທີ່ເຮັດໃຫ້ເຮົາມີຄວາມທຸກຮ້ອນ ເພາະພວກເຂົາກຽດຊັງເຮົາໂດຍບໍ່ມີເຫດຜົນບໍ່? ເຮົາທຸກຄົນອາດເຄີຍທົນກັບຄວາມອັບອາຍຂາຍໜ້າ ເນື່ອງຈາກການຖືກຄົນອື່ນດູຖູກດູໝິ່ນຢຽດຢາມ ບົດຮຽນໃນມື້ນີ້ ເຮົາຈະຮຽນເຖິງຜູ້ໜຶ່ງທີ່ຖືກດູຖູກດູໝິ່ນຫຼາຍກວ່າເຮົາຫລາຍຮ້ອຍຫລາຍພັນເທົ່າ

**ສວນເຄັດເສມາເນ**
**ມາລະໂກ 14:32-41**

ເຖິງວ່າພຣະເຢຊູເປັນພຣະເຈົ້າແທ້ ພຣະອົງກໍ່ເປັນມະນຸດແທ້ດ້ວຍ ການທີ່ພຣະອົງຈະຕ້ອງຖືກທໍລະມານອັນແສນສາຫັດນັ້ນ ເປັນສິ່ງທີ່ຍາກຫລາຍສໍາລັບພຣະອົງ ພຣະອົງຊົງຮູ້ວ່າ ຖ້າພຣະອົງຈະເປັນຜູ້ຊ່ວຍໃຫ້ລອດຂອງມະນຸດ ພຣະອົງຈະທົນຄວາມທຸກທີ່ຍາກກວ່າສິ່ງທີ່ຜູ້ອື່ນເຄີຍທົນມາ ຕັ້ງແຕ່ເລີ່ມສ້າງໂລກ ເຮົາຈະເຂົ້າໃຈເຖິງຄວາມທຸກອັນຍິ່ງໃຫຍ່ນັ້ນດັ່ງທີ່ເຮົາຈະຮຽນນໍາກັນຕໍ່ໄປນີ້ ພຣະເຢຊູອະທິຖານເປັນເວລາດົນ





ເມື່ອເຖິງເວລາຂອງພຣະເຈົ້າແລ້ວ ພຣະອົງໄດ້ສ້າງດວງອະທິດດວງຈັນ ແລະດວງດາວຕ່າງໆ ໃຫ້ປະກົດອອກມາ. ການທີ່ພຣະເຈົ້າໃຫ້ດວງດາວ ດວງຕາເວັນຢູ່ໄກແສນ ໄກຈາກໂລກ ບໍ່ຍາກສໍາລັບພຣະ
ເຈົ້າ.
ພຣະອົງບໍ່ຕ້ອງມີເຄື່ອງຍົກດວງດາວຂຶ້ນ. ພຣະອົງພຽງແຕ່ເວົ້າເທົ່ານັ້ນທຸກສິ່ງກໍຕັ້ງຢູ່ໃນບ່ອນຂອງມັນ ແລະເປັນຕາມລະບຽບຂອງມັນ. ທຸກປີເຮົາມີເວລາຫວ່ານ ເວລາປູກ ແລະເວລາເກັບກ່ຽວ. ມີລະດູຮ້ອນ ລະດູໜາວ ແລະລະດູຝົນ ເພາະພຣະເຈົ້າເປັນຜູ້ມີລະບຽບ. ທຸກສິ່ງທີ່ພຣະເຈົ້າສ້າງຂຶ້ນນັ້ນເປັນສິ່ງທີ່ດີ ແລະມີປະໂຫຍດທັງສິ້ນ.

ຕໍ່ມາອີກວັນໜຶ່ງ ພຣະເຈົ້າໄດ້ສັ່ງໃຫ້ປາ ແລະສັດນໍ້າຕ່າງໆ ເກີດຂຶ້ນໃນທະເລ ແລະໃນແມ່ນໍ້າ. ທຸກສາຍມີປາໃຫຍ່ ປານ້ອຍຕາມຊະນິດຂອງມັນ.

ນອກນັ້ນພຣະອົງກໍສ້າງນົກນ້ອຍໃຫຍ່ທຸກຊະນິດນໍາ. ມະນຸດອາດເຮັດຮູບປາ ຮູບນົກໄດ້ ແຕ່ມັນບໍ່ມີຊີວິດ ແລະບໍ່ສາມາດສືບພັນໄດ້. ສິ່ງທີ່ພຣະເຈົ້າສ້າງນັ້ນ ມີຊີວິດເພາະພຣະເຈົ້າເປັນແຫລ່ງຊີວິດ. ມີໂຕຜູ້ ໂຕແມ່ ຈິ່ງສາມາດເກີດລູກໄດ້. ບໍ່ມີໃຜເໝືອນພຣະເຈົ້າ. ຜູ້ທີ່ສາມາດສ້າງສິ່ງທີ່ມີຊີວິດ ນົກແລະປາທຸກຊະນິດມີລູກ ທີ່ມີລັກສະນະຄືພໍ່ແມ່ຂອງມັນ. ນີ້ເປັນລະບຽບ ທີ່ພຣະເຈົ້າໄດ້ວາງໄວ້. ທຸກສິ່ງທີ່ພຣະເຈົ້າສ້າງລ້ວນແຕ່ເປັນສິ່ງດີທັງນັ້ນ.

## ທົບທວນ

1. ກ່ອນທີ່ພຣະເຈົ້າຊົງສ້າງທຸກສິ່ງໃຫ້ພ້ອມນັ້ນ ສະພາບຂອງໂລກນີ້ເປັນຈັ່ງໃດ?
2. ພຣະເຈົ້າໃຫ້ສິ່ງຕ່າງໆ ເກີດຂຶ້ນໂດຍວິທີໃດ?
3. ເປັນຫຍັງ ທະເລຈຶ່ງເຊື່ອຟັງຄຳສັ່ງຂອງພຣະເຈົ້າ?
4. ເປັນຫຍັງ ພຣະເຈົ້າສ້າງສິ່ງທີ່ງົດງາມຫລາຍຢ່າງ ແລະໃຫ້ມີພືດຜັກໝາກໄມ້ນານາຊະນິດ ຢູ່ໃນໂລກ?
5. ໃຜເວົ້າວ່າ ສິ່ງທີ່ພຣະເຈົ້າສ້າງນັ້ນ ດີທັງໝົດ?
6. ເປັນຫຍັງດວງຕາເວັນ ຈຶ່ງອອກມາຕາມລະບຽບທຸກວັນ ແລະດວງດາວ ດວງຈັນ ໂຄຈອນໄປຕາມລະບຽບຂອງມັນ ທຸກເດືອນທຸກປີ?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮູ້ທຸກສິ່ງ
- ພຣະເຈົ້າຊົງບໍລິສຸດ ແລະມີອຳນາດເໜືອທຸກສິ່ງທຸກຢ່າງ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ





## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ
- ຊາຕານຕໍ່ຕ້ານພຣະເຈົ້າ ແລະແຜນການຂອງພຣະອົງສະເໝີ
- ພຣະເຢຊູຄຣິດເປັນຜູ້ຊ່ວຍໃຫ້ລອດແຕ່ພຽງຜູ້ດຽວ
- ພຣະເຢຊູຄຣິດເປັນພຣະເຈົ້າແທ້

ເມື່ອພຣະເຢຊູບອກວ່າ ໂລຫິດຂອງພຣະອົງຈະໄຫລອອກ ກໍ່ໝາຍເຖິງພຣະອົງຈະສະລະຊີວິດຂອງພຣະອົງ ເພື່ອຄົນອື່ນ

ຄວາມຕາຍຂອງພຣະເຢຊູ ຈະເປັນຊີວິດແກ່ສາວົກຂອງພຣະອົງ ແມ້ນວ່າພຣະເຢຊູຈະໄປຈາກພວກສາວົກຂອງພຣະອົງ ພວກສາວົກຍັງຕ້ອງລະລຶກເຖິງພຣະອົງສະເໝີ

**ທົບທວນ**

1. ປະຊາຊົນສ່ວນຫລາຍຢາກໃຫ້ພຣະເຢຊູຊ່ວຍພວກເຂົາໃຫ້ພົ້ນຈາກຫຍັງ?
2. ເປັນຫຍັງພວກຜູ້ນຳຊາວຢິວບໍ່ກ້າຈັບພຣະເຢຊູ ແລະຂ້າພຣະອົງໃນຊ່ວງທີ່ມີການສະຫລອງເທດສະການປັດສະຄາ?
3. ຢູດາເຄີຍສຳນຶກເຖິງຄວາມບາບຂອງຕົນດ້ວຍຄວາມຈິງໃຈບໍ່? ລາວເຄີຍກັບໃຈແລະວາງໃຈໃນພຣະເຢຊູແທ້ໆ ບໍ່?
4. ຜູ້ທຳນວາຍໄດ້ທຳນວາຍວ່າ ຜູ້ຊ່ວຍໃຫ້ລອດນັ້ນຈະຖືກຂາຍດ້ວຍເງິນຈັກຫລຽນ?
5. ເມື່ອຢູດາຂາຍພຣະເຢຊູແກ່ພວກສັດຕູລາວໄດ້ເງິນເທົ່າໃດ?
6. ພຣະເຢຊູຮູ້ເຖິງແຜນການທີ່ຢູດາກະທຳໄດ້ຢ່າງໃດ?
7. ພຣະຄຳພີເພງສັນລະເສີນບອກວ່າຜູ້ທີ່ຈະຂາຍຜູ້ຊ່ວຍໃຫ້ລອດນັ້ນກ່ຽວຂ້ອງກັບພຣະອົງຢ່າງໃດ?
8. ພຣະເຢຊູບອກໃຫ້ສາວົກລະນຶກເຖິງຫຍັງເມື່ອພວກເຂົາຈະກິນຂະໜົມປັງຕໍ່ໄປ?
9. ນ້ຳອາງຸ່ນໝາຍເຖິງຫຍັງ?







**ບົດທີ 5**

**ພຣະເຈົ້າສ້າງມະນຸດ**

**ປະຖົມມະການ 1:24 - 2:8**

**ໂຢບ 38:7**

**ສ້າງຄວາມສົນໃຈ**

ຖ້າເຮົາໄປໃນບ່ອນທີ່ມີສັດເຄີຍຕາຍ ເຮົາຮູ້ສຶກຈັ່ງໃດ? ຢ້ານບໍ່? ເປັນຫຍັງ? ຖ້າໄປໃນບ່ອນເຊິ່ງມີຄົນເຄີຍຕາຍ ເຊັ່ນແຂວນຄໍຕາຍ ຫລືຖືກຂ້າຕາຍ ຫລືປະສົບອຸບັດຕິເຫດຕາຍ ເຮົາຮູ້ສຶກຈັ່ງໃດ? ຮູ້ສຶກຢ້ານບໍ່? ແນ່ນອນ!

ຄົງຈະມີຫລາຍຄົນຮູ້ສຶກຢ້ານໃນບ່ອນທີ່ມີຄົນຕາຍ. ນີ້ສະ ແດງໃຫ້ເຮົາເຫັນວ່າ ມະນຸດແຕກຕ່າງຈາກສັດທັງຫລາຍ. ເປັນຫຍັງຈິ່ງເປັນເຊັ່ນນັ້ນ? ມື້ນີ້ເຮົາຈະພົບຄຳຕອບຈາກພຣະຄຳພີທີ່ເຮົາຈະຮຽນນຳກັນ.

**ພຣະເຈົ້າສ້າງສັດທຸກຊະນິດ**

ໃນວັນທີຫົກ ພຣະເຈົ້າກ່າວອີກ ສັດຕ່າງໆຈິ່ງເກີດຂຶ້ນເທິງແຜ່ນດິນຕາມຄຳສັ່ງຂອງພຣະເຈົ້າ ມີທັງສັດລ້ຽງ ແລະສັດປ່າທຸກຊະນິດ.

ເມື່ອເຮົາເບິ່ງຮູບສັດຈາກຫລາຍໆ ປະເທດ ເຮົາເຫັນວ່າຕ່າງກັນຫລາຍ. ມີທັງໂຕໃຫຍ່ ໂຕນ້ອຍ ແລະມີຮູບຮ່າງເໝາະສົມກັບທີ່ຢູ່ຂອງມັນ.

ເມື່ອເຮົາພິຈາລະນາເບິ່ງສັດເຫລົ່ານີ້ ເຮັດໃຫ້ເຮົາຮູ້ວ່າ ພຣະເຈົ້າຜູ້ສ້າງນັ້ນຍິ່ງໃຫຍ່ ແລະຊົງລິດທະນຸພາບ. ສັດທຸກໂຕພຣະເຈົ້າ ຊົງເຫັນວ່າດີ.

**ມະນຸດ ຖືກສ້າງຂຶ້ນ ຕາມພຣະລັກສະນະຂອງພຣະເຈົ້າ**

**ປະຖົມມະການ 1:26**

ຫລັງຈາການສ້າງສັດເຫລົ່ານັ້ນແລ້ວ ໂລກກໍ່ພ້ອມແລ້ວ ທີ່ມະນຸດຈະອາໄສຢູ່. ພຣະເຈົ້າໄດ້ຕຽມໂລກໄວ້ກ່ອນສ້າງມະນຸດ ເໝືອນພວກເຮົາໄດ້ຕຽມນາໄຮ່ຂອງເຮົາໄວ້ກ່ອນທີ່ຈະປູກ. ພຣະເຈົ້າບໍ່ໄດ້ຕຽມໂລກທີ່ງົດງາມໄວ້ເພື່ອພຣະອົງເອງ ແຕ່ພຣະອົງຊົງຕຽມໄວ້ເພື່ອມະນຸດ. ການທີ່ພຣະເຈົ້າຕຽມໂລກໄວ້ ໃຫ້ເຕັມໄປດ້ວຍ ທຸກສິ່ງທີ່ຈຳເປັນສຳລັບມະນຸດເປັນການສະແດງເຖິງຄວາມຮັກຂອງພຣະເຈົ້າ ຢ່າງຊັດເຈນ.

ໃນປະຖົມມະການ 1:26 ເຮົາພົບຄຳວ່າ “ໃຫ້ **<u>ເຮົາ</u>** ສ້າງມະນຸດຄ້າຍຄື **<u>ເຮົາ</u>**. ຄຳວ່າ **<u>ເຮົາ</u>** ນີ້ໝາຍເຖິງໃຜ? ໝາຍເຖິງ ພຣະບິດາ ພຣະບຸດແລະພຣະວິນຍານ ທັງສາມພຣະພາກຂອງພຣະເຈົ້າ. ພຣະອົງຕັດສິນໃຈວ່າ ຈະໃຫ້ມີມະນຸດເກີດມາ. ດັ່ງນັ້ນມະນຸດຈິ່ງເປັນ ສິ່ງສຳຄັນທີ່ສຸດໃນບັນດາສິ່ງທີ່ພຣະເຈົ້າສ້າງໃນໂລກ.

ພຣະເຈົ້າສ້າງມະນຸດຕາມລັກສະນະຂອງພຣະອົງ ພຣະເຈົ້າເອງເປັນຜູ້ຕັດສິນໃຈໃນເລື່ອງນີ້. ການທີ່ພຣະເຈົ້າ ໄດ້ສ້າງມະນຸດຕາມລັກສະນະຂອງພຣະອົງນັ້ນ ໝາຍເຖິງໃຫ້ວິນຍານເໝືອນພຣະເຈົ້າ. ພຣະເຈົ້າໄດ້ສ້າງສັດຕ່າງໆ ແຕ່ບໍ່ໄດ້ໃຫ້ສັດເຫລົ່ານັ້ນ ມີວິນຍານ.

ລັກສະນະ ບໍ່ແມ່ນເລື່ອງຂອງຝ່າຍຮ່າງກາຍ ເພາະພຣະເຈົ້າບໍ່ມີຮ່າງກາຍຄືເຮົາ ແຕ່ພຣະເຈົ້າເວົ້າເຖິງເລື່ອງຈິດວິນຍານ. ຮ່າງກາຍຂອງ





ແລະພຣະຍາຍາມໃຫ້ຢູດາສຳນຶກເຖິງຄວາມບາບ ທີ່ລາວກຳລັງເຮັດຢູ່ນັ້ນ ພຣະເຢຊູຈິ່ງບອກວ່າ ຄົນໜຶ່ງໃນສິບສອງຄົນນັ້ນ ຈະຂາຍພຣະອົງໃຫ້ແກ່ສັດຕູ ພຣະເຢຊຍັງຈີ້ມຂະໜົມປັງບີ້ງໜຶ່ງໃນນ້ຳຈີ້ມ ແລະສົ່ງໃຫ້ຢູດາກິນດ້ວຍ ແຕ່ສິ່ງທີ່ພຣະເຢຊູໄດ້ເວົ້າເຖິງ ແລະໄດ້ເຮັດລົງໄປນັ້ນ ບໍ່ໄດ້ເຮັດໃຫ້ຢູດາສຳນຶກ ຫລືກັບໃຈ ພຣະເຢຊູຈິ່ງເສຍພຣະໄທຫລາຍ

ພຣະເຢຊູຊົງຮູ້ວ່າທຸກສິ່ງໃນພຣະຄຳພີທີ່ກ່ຽວກັບພຣະອົງ ຈະຕ້ອງສຳເລັດ ພຣະອົງຈະຕ້ອງຕາຍ ເພາະເປັນແຜນການຂອງພຣະເຈົ້າ ແຕ່ຢູດາບໍ່ຈຳເປັນຕ້ອງເຮັດບາບໃນເລື່ອງນີ້

ໃນທຸກຍຸກທຸກສະໄໝ ພຣະເຈົ້າບໍ່ຢາກໃຫ້ມະນຸດເຮັດບາບແຕ່ມະນຸດໄດ້ເລືອກເຮັດບາບເອງ ແລະພວກເຂົາຈະຕ້ອງຮັບໂທດ ຕາມສິ່ງທີ່ພວກເຂົາໄດ້ເຮັດໄປນັ້ນ

**ຄວາມໝາຍຂອງຂະໜົມປັງ ແລະນ້ຳອາງຸ່ນ**

**ມາລະໂກ 14:22-26**

ຫລັງຈາກຮັບປະທານອາຫານແລ້ວ ພຣະເຢຊູຊົງຢິບຂະໜົມປັງຂຶ້ນມາ ແລະຫັກເປັນກ້ອນໆ ພຣະອົງອະທິບາຍວ່າ ຂະໜົມປັງທີ່ກິນນັ້ນໝາຍເຖິງກາຍຂອງພຣະອົງ ແລະພຣະອົງໄດ້ສັ່ງພວກສາວົກວ່າ ຕໍ່ໄປເມື່ອສາວົກຈະກິນຂະໜົມປັງດ້ວຍກັນ ເຮົາຄວນຈະລະນຶກເຖິງພຣະອົງແລະການເສຍສະລະຂອງພຣະອົງ ເພື່ອພວກເຂົາ

ເມື່ອພວກເຂົາດື່ມນ້ຳອາງຸ່ນ ທີ່ພຣະອົງໃຫ້ພວກເຂົານັ້ນ ພວກເຂົາຈະລະລຶກເຖິງພຣະໂລຫິດຂອງພຣະອົງ ທີ່ຈະໄຫລອອກເພື່ອຄົນອື່ນສຳລັບຊາວຢິວນັ້ນ ໂລຫິດມີຄວາມໝາຍເຖິງຊີວິດ

ຈະໄດ້ເງິນ ລາວຈຶ່ງຍອມຂາຍພຣະເຢຊູ ໃຫ້ແກ່ພວກມາຫາປະໂລຫິດ

ສິ່ງທີ່ພຣະເຈົ້າໄດ້ທຳນວາຍໄວ້ໃນພຣະຄຳພີກໍ່ເກີດຂຶ້ນຈິງ ພຣະເຈົ້າໄດ້ໃຫ້ຜູ້ທຳນວາຍຂຽນເລື່ອງນີ້ໄວ້ໃນພຣະຄຳພີ **ເພງສັນລະເສີນ 41:9** ຢູດາເຊິ່ງເປັນເພື່ອນຂອງພຣະເຢຊູມາໄດ້ສາມປີແລ້ວ ແຕ່ບັດນີ້ໄດ້ຂາຍພຣະ ເຢຊູຕາມທີ່ຂຽນໄວ້ໃນພຣະຄຳພີ

ຜູ້ຊັກນຳຈິດໃຈຂອງຢູດາໃນການຂາຍພຣະເຢຊູນັ້ນ ຄືຊາຕານ ຊາຕານກຽດຊັງພຣະເຢຊູ ເພາະພຣະອົງເປັນພຣະເຈົ້າ ແລະພຣະອົງເວົ້າຄວາມຈິງສະເຫມີ ຊາຕານຄິດວ່າ ຖ້າສາມາດເຮັດໃຫ້ຜູ້ນຳຂອງພວກຢິວຂ້າພຣະເຢຊູໄດ້ ມັນກໍ່ສາມາດຂັດຂວາງແຜນການຂອງພຣະເຈົ້າໃນການຊ່ວຍມະນຸດໃຫ້ພົ້ນບາບໄດ້

ເມື່ອຢູດາໄປຫາພວກມະຫາປະໂລຫິດ ພວກເຂົາທັງຫລາຍກໍ່ດີໃຈ ພວກເຮົາຄິດວ່າພຣະເຢຊູຮູ້ເລື່ອງນີ້ບໍ່? ໃນ **ມັດທາຍ 26:14-16** ເຮົາເຫັນວ່າ ເງິນທີ່ຢູດາໄດ້ຈາກການຂາຍພຣະເຢຊູນັ້ນ ເປັນເງິນ 30 ຫລຽນ ຜູ້ທຳນວາຍ ເສກາລີຢາໄດ້ທຳນວາຍເລື່ອງນີ້ໄວ້ຫລາຍຮ້ອຍປີກ່ອນ ທີ່ເຫດການນີ້ຈະເກີດຂຶ້ນ **ເສກາລີຢາ 11:12-13**

**ພຣະເຢຊູຊົງຮູ້ທຸກສິ່ງທີ່ຈະເກີດຂຶ້ນ**

**ມາລະໂກ 14:12-21**

ພຣະເຢຊູຢາກຮ່ວມສະຫລອງ ເທດສະການປັດສະຄາ ກັບພວກສາວົກຂອງພຣະອົງ ພຣະອົງຮູ້ລ່ວງໜ້າເຖິງຫ້ອງໃນການທີ່ຈະໃຊ້ສະຫລອງນຳກັນ ທຸກສິ່ງທີ່ພຣະອົງບອກແກ່ພວກສາວົກນັ້ນ ກໍ່ໄດ້ເກີດຂຶ້ນຕາມທີ່ພຣະອົງໄດ້ບອກໄວ້ໝົດທຸກຢ່າງ ແມ້ນວ່າບໍ່ມີໃຜບອກພຣະອົງພຣະອົງກໍ່ຮູ້ວ່າ ຢູດາ ຈະຂາຍພຣະອົງແກ່ພວກສັດຕູ ພຣະເຢຊູຮັກຢູດາ





ເຮົາ ເປັນພຽງບ່ອນອາໄສຂອງຈິດວິນຍານທີ່ພຣະເຈົ້າສ້າງ ເພາະວ່າຈິດວິນຍານສຳຄັນກວ່າຮ່າງກາຍ ຄືເຈົ້າຂອງບ້ານສຳຄັນກວ່າບ້ານ ທີ່ລາວອາໄສຢູ່.

**ຈິດວິນຍານຂອງມະນຸດອາດແຍກອອກໄດ້ 3 ດ້ານດັ່ງຕໍ່ໄປນີ້**

**1. ຄວາມຄິດ ແລະສະຕິປັນຍາ—**ພຣະເຈົ້າບໍລິບູນດ້ວຍສະຕິປັນຍາ ສາມາດພິຈາລະນາເຫດຜົນໄດ້. ເມື່ອພຣະອົງໄດ້ສ້າງມະນຸດ ພຣະອົງໄດ້ໃຫ້ມະນຸດມີຄວາມຄິດ ແລະເຂົ້າໃຈເຫດຜົນດ້ວຍ. ສັດມີຮ່າງກາຍ ແຕ່ມັນບໍ່ມີຄວາມຄິດຄືມະນຸດ. ເຫດສະນັ້ນ ເຮົາຈະນັ່ງລົມກັບສັດທີ່ເຮົາລ້ຽງ ເພື່ອຈະໃຫ້ເຂົ້າໃຈກັນບໍ່ໄດ້.

ພຣະເຈົ້າຢາກຈະເວົ້າລົມກັບມະນຸດ ຈຶ່ງສ້າງມະນຸດໃຫ້ມີຄວາມຄິດ ແຕ່ຄວາມຄິດ ແລະສະຕິປັນຍາຂອງມະນຸດນັ້ນ ບໍ່ເທົ່າທຽມກັບ ພຣະປັນຍາຂອງພຣະເຈົ້າ. ແມ່ນແຕ່ມະນຸດທີ່ມີປັນຍາຫລາຍທີ່ສຸດໃນໂລກ ຖ້າເຮົາປຽບທຽບກັບສະຕິປັນຍາຂອງພຣະເຈົ້າແລ້ວ ພວກເຂົາຍັງເໝືອນກັບເດັກນ້ອຍໆ ເຖິງຢ່າງໃດກໍ່ຕາມ ພຣະເຈົ້າສ້າງມະນຸດເພື່ອໃຫ້ມີຄວາມຄິດ ເພື່ອຈະເວົ້າລົມກັບມະນຸດ ແລະໃຫ້ມະນຸດຮູ້ເຖິງພຣະປະສົງຂອງພຣະອົງສຳລັບພວກເຂົາ.

**2. ອາລົມ—** ພຣະເຈົ້າເປັນຜູ້ທີ່ມີຄວາມຮູ້ສຶກ ຫລືອາລົມ. ພຣະອົງຮູ້ສຶກເສຍໃຈ ແລະດີໃຈ. ຮູ້ສຶກເຖິງຄວາມຮັກ ແລະຄວາມກຽດຊັງ. ເຫດທີ່ມະນຸດ ມີຄວາມຮູ້ສຶກ ກໍເພາະວ່າພຣະເຈົ້າໄດ້ສ້າງມະນຸດຕາມແບບລັກສະນະຂອງພຣະອົງ.

ເຮົາທຸກຄົນຢາກໃຫ້ລູກຂອງເຮົາຮັກເຮົາແມ່ນບໍ່? ເຊັ່ນດຽວກັນກັບພຣະເຈົ້າ ກໍຢາກໃຫ້ມະນຸດຮັກ ແລະນັບຖືພຣະອົງ. ນີ້ເປັນເຫດ

ທີ່ພຣະເຈົ້າສ້າງມະນຸດໃຫ້ມີອາລົມເໝືອນພຣະອົງ.

**3. ມີເຈດຕະນາ ຫລື ຄວາມຕັ້ງໃຈ—** ພຣະເຈົ້າມີເຈດຕະນາ ມີຄວາມຕັ້ງໃຈ. ພຣະອົງໃຊ້ຄວາມຄິດ ແລະຄວາມຕັ້ງໃຈໃນສິ່ງທີ່ພຣະອົງຈະເຮັດ. ສິ່ງອື່ນທີ່ພຣະເຈົ້າໄດ້ຊົງສ້າງນັ້ນ ບໍ່ມີຄວາມຕັ້ງໃຈໃນໂຕຂອງມັນເອງ. ພຣະເຈົ້າສ້າງແບບໃດ ມັນກໍເປັນໄປຕາມສັນຊາດຕະຍານຢ່າງນັ້ນ. ນົກບໍ່ສາມາດພັດທະນາຮັງຂອງມັນ ແຕ່ມັນຢູ່ໄປຕາມສະພາບ ທີ່ມັນເຄີຍຢູ່. ສັດບໍ່ຮູ້ຈັກສ້າງບ້ານ ຫລືຖັກເສື້ອຜ້າໃສ່ໃນຍາມໜາວ ແຕ່ມະນຸດມີໂອກາດພັດທະນາຊີວິດໃນທຸກໆ ດ້ານ ເພາະມີຄວາມຕັ້ງໃຈທີ່ຈະພັດທະນາໂຕເອງຈາກສະພາບເກົ່າ ໄປສູ່ສະພາບໃໝ່.

ແຜນການຂອງພຣະເຈົ້າ ຄືຢາກໃຫ້ມະນຸດຮູ້ຈັກພຣະອົງຜູ້ຊົງຮັກພວກເຂົາ ແລະເປັນຜູ້ຊົງມີສະຕິປັນຍາທຸກປະການ ຜູ້ໃດທີ່ຮູ້ຈັກພຣະເຈົ້າແລ້ວ ຜູ້ນັ້ນຈະຕັ້ງໃຈເຊື່ອຟັງ ແລະຈະເຮັດວຽກໃນໂລກຕາມນໍ້າພຣະໄທຂອງພຣະເຈົ້າ ຄືຈະຄອບຄອງສິ່ງຕ່າງໆ ໃນໂລກແທນພຣະເຈົ້າ.

**ອາດາມ ມະນຸດຄົນທຳອິດ**

**ປະຖົມມະການ 2:7**

ເມື່ອພຣະເຈົ້າສ້າງສິ່ງອື່ນໆ ພຣະເຈົ້າພຽງແຕ່ກ່າວອອກມາ ແລະສິ່ງນັ້ນກໍເກີດຂຶ້ນ ແຕ່ໃນ ປະຖົມມະການ 2:7 ເຮົາເຫັນວ່າ ພຣະເຈົ້າປັ້ນມະນຸດຈາກດິນໃຫ້ເປັນຜູ້ຊາຍ.

ສະແດງວ່າການສ້າງມະນຸດນັ້ນ ເປັນການສ້າງທີ່ພິເສດແທ້ໆ. ເມື່ອພຣະເຈົ້າປັ້ນຮ່າງກາຍ ຂອງຜູ້ຊາຍນັ້ນແລ້ວໆ ຊາຍນັ້ນຍັງບໍ່ມີຊີວິດ. ຍັງເປັນຮ່າງກາຍທີ່ປາສະຈາກຈິດວິນຍານ. ແຕ່ເມື່ອພຣະເຈົ້າໄດ້ລະບາຍ





ເວລາທີ່ພຣະອົງຈະເຂົ້າກຸງເຢລູຊາເລັມ ແລ້ວຄັ້ງນີ້ ພຣະເຢຊູໄດ້ສັ່ງໃຫ້ພວກສາວົກນຳລູກລາໂຕໜຶ່ງ ມາຫາພຣະອົງ ແລະພຣະອົງໄດ້ຂີ່ລູກລານັ້ນ

ປະຊາຊົນໄດ້ອອກມາຕ້ອນຮັບພຣະອົງ ເໝືອນຮັບຜູ້ເປັນກະສັດພວກເຂົາເຂົ້າໃຈວ່າພຣະອົງເປັນພຣະເມຊີອາ ທີ່ພວກຜູ້ທຳນວາຍໄດ້ທຳນວາຍເຖິງ ຄືຜູ້ຊ່ວຍຂອງພຣະເຈົ້າສົ່ງມາ

ໜ້າເສຍດາຍທີ່ຄົນສ່ວນຫລາຍບໍ່ວາງໃຈໃນພຣະອົງ ເພື່ອພຣະອົງຈະໄດ້ຊ່ວຍພວກເຂົາໃຫ້ພົ້ນຈາກຄວາມບາບຂອງພວກເຂົາ ແລະຈາກອຳນາດຂອງຊາຕານ ແລະການພິພາກສາຂອງພຣະເຈົ້າ ພວກເຂົາພຽງຢາກໃຫ້ພຣະເຢຊູຊ່ວຍພວກເຂົາໃຫ້ພົ້ນຈາກການກົດຂີ່ຂົ່ມເຫັງຂອງພວກໂຣມ ພວກເຂົາບໍ່ເຫັນດ້ວຍກັບພຣະເຈົ້າໃນເລື່ອງຄວາມບາບຂອງພວກເຂົາ

**ຢູດາຂາຍພຣະເຢຊູ**

**ມາລະໂກ 14:1-2, 10-11**

ຜູ້ນຳຂອງຊາວຢິວຕັ້ງໃຈຈະຂ້າພຣະເຢຊູ ແຕ່ລາວຢ້ານວ່າ ຈະເຮັດໃນຊ່ວງທີ່ກຳລັງສະຫລອງເທດສະການປັດສະຄາບໍ່ໄດ້ ເພາະມີຄົນຈຳນວນຫລາຍນັບຖືພຣະເຢຊູ ເຊິ່ງໄດ້ມາຊຸມນຸມກັນ ແລະອາດຈະເກີດການວຸ້ນວາຍຂຶ້ນ

ໃນພວກສາວົກພິເສດ 12 ຄົນຂອງພຣະເຢຊູ ມີຄົນໜຶ່ງຊື່ ຢູດາລາວໄດ້ຕິດຕາມພຣະເຢຊູທຸກວັນ ແຕ່ຢູດາບໍ່ສຳນຶກເຖິງຄວາມບາບຂອງຕົນດ້ວຍຈິງໃຈ ລາວຕາມພຣະເຢຊູເພື່ອປະໂຫຍດສ່ວນຕົວ ລາວບໍ່ວາງໃຈໃນພຣະເຢຊູ ເພື່ອຈະພົ້ນບາບ ເຫດສະນັ້ນ ເມື່ອລາວເຫັນໂອກາດທີ່



**ບົດທີ 27**
**ອາຫານມື້ສຸດທ້າຍ**
**ມາລະໂກ 11:1-10**
**14:1-2;10-26**

**ສ້າງຄວາມສົນໃຈ**

ບໍ່ມີໃຜ ຫລືຊົນຊາດໃດໆ ທີ່ມັກໃຫ້ຄົນຕ່າງຊາດ ຄອບຄອງພວກເຂົາ ພວກຢິວໄດ້ຢູ່ພາຍໃຕ້ອຳນາດພວກໂຣມມາຫລາຍສິບປີແລ້ວ ພວກໂຣມໄດ້ໃຊ້ອຳນາດກົດຂີ່ຂົ່ມເຫັງ ພວກເຂົາຢ່າງທາລຸນ

ຄວາມຫວັງຂອງພວກ ຢິວຢູ່ໃນພຣະເມຊີອາ ທີ່ພວກເຂົາຄິດວ່າ ຈະຊ່ວຍພວກເຂົາໃຫ້ຫລຸດພົ້ນຈາກອຳນາດຂອງຊາວໂຣມ ດັ່ງນັ້ນ ເມື່ອປະຊາຊົນໄດ້ຍິນເຖິງການອັດສະຈັນຂອງພຣະເຢ ຊູຫລາຍຄົນຄາດຫວັງວ່າ ພຣະອົງຄືຜູ້ນັ້ນແຕ່ພຣະເຢຊູບໍ່ໄດ້ມາເພື່ອໄລ່ທະຫານໂຣມອອກຈາກແຜ່ນດິນອິດສະ ລະເອນ ໃຫ້ພວກເຮົາຮຽນນຳກັນຕໍ່ໄປເພື່ອເຮົາຈະເຂົ້າໃຈແຜນການຂອງ ພຣະເຈົ້າ

**ປະຊາຊົນຕ້ອງຮັບພຣະເຢຊູໃນກຸງເຢລູຊາເລັມ**
**ມາລະໂກ 11:1-11**

ພຣະເຢຊູໄດ້ປະຕິບັດການງານຂອງພຣະອົງ ມາສາມປີກວ່າແລ້ວ ແລະຄົນທົ່ວດິນແດນອິດສະລະເອນ ໄດ້ຍິນເຖິງພຣະອົງ ແລ້ວບັດນີ້ເຖິງ





ລົມປານເຂົ້າທາງດັງ ຮ່າງກາຍທີ່ເປັນດິນນັ້ນ ກໍມີຊີວິດ ແລະສາມາດຮູ້ຈັກຮັກ ແລະເຊື່ອຟັງພຣະເຈົ້າ.

ມີໃຜແດ່ ທີ່ສາມາດໃຫ້ຊີວິດແກ່ມະນຸດ? ທູດສະຫວັນໃຫ້ຊີວິດໄດ້ບໍ່? ຊາຕານຫລືລູກນ້ອງຂອງມັນເຮັດໄດ້ບໍ່? ດວງຕາເວັນ ຫລືດວງຈັນມີອຳນາດທີ່ຈະໃຫ້ຊີວິດໄດ້ບໍ່? ບໍ່ໄດ້ແນ່ນອນ!

ແຫລ່ງຊີວິດຄືພຣະເຈົ້າເທົ່ານັ້ນ ຄືດັ່ງທີ່ຕົ້ນນ້ຳເປັນທີ່ມາຂອງແມ່ນ້ຳລຳຄອງ. ມະນຸດຄົນທຳອິດ ທີ່ຮັບຊີວິດຈາກພຣະເຈົ້າ ມີຊື່ວ່າ ອາດາມ.

ເມື່ອ ອາດາມ ຮັບລົມປານຈາກພຣະເຈົ້າ ລາວມີຊີວິດທັງກາຍແລະຈິດວິນຍານ. ເປັນຜູ້ຊາຍທີ່ແຂງແຮງທຸກປະການ. ໃນເວລານັ້ນຍັງບໍ່ມີຄວາມ ເຈັບປ່ວຍໄຂ້ໃນໂລກເລີຍ. ອາດາມ ເປັນບັນພະບູລຸດຂອງມະນຸດ ທຸກຊາດພາສາທົ່ວໂລກ. ເຮົາຈະເວົ້າເຖິງເລື່ອງຜູ້ຍິງຄົນທຳອິດຂອງໂລກໃນບົດຕໍ່ໄປ.

**ພຣະເຈົ້າ ໃຫ້ອາດາມ ຄອບຄອງທຸກສິ່ງ**
**ປະຖົມມະການ 1:28-31**

ຈາກ ປະຖົມມະການ 1:28-30 ເຮົາເຫັນວ່າ ພຣະເຈົ້າພໍພຣະໄທໃນ ອາດາມ ຄືທີ່ພໍ່ພໍໃຈໃນໂຕລູກ ທີ່ມີຄວາມແຂງແຮງສົມບູນ. ອາດາມໄດ້ອາໄສຢູ່ ໃນໂລກອັນງົດງາມ ຊຶ່ງພຣະເຈົ້າໄດ້ສ້າງໄວ້.

ພຣະເຈົ້າເວົ້າກັບ ອາດາມ ແລະມອບສິ່ງຕ່າງໆ ທີ່ພຣະອົງສ້າງນັ້ນໃຫ້ຢູ່ໃນການຄອບຄອງດູແລ ຂອງອາດາມທັງໝົດ. ພຣະເຈົ້າມີສິດທີ່ຈະມອບສິ່ງເຫລົ່ານັ້ນແກ່ ອາດາມ ເພາະທຸກສິ່ງເປັນຂອງພຣະເຈົ້າ.

ພຣະເຈົ້າບໍ່ໃຫ້ ວິນຍານຊົ່ວຄອບຄອງ ດັ່ງນັ້ນຜີຈິ່ງບໍ່ມີສິດເປັນເຈົ້າຂອງ ໃນສິ່ງທີ່ພຣະເຈົ້າສ້າງ.

ຖ້າສັດຕູຈະຍາດຊິງເອົາສິ່ງທີ່ເປັນຂອງເຮົາໄປ ແລະອວດວ່າເປັນຂອງເຂົາ ຈະເປັນສິ່ງທີ່ຖືກຕ້ອງບໍ່? ບໍ່ຖືກຕ້ອງແນ່ນອນ! ພຣະເຈົ້າເປັນຜູ້ສ້າງທຸກສິ່ງ ສະນັ້ນຂອງທຸກສິ່ງໃນໂລກເປັນຂອງພຣະເຈົ້າ. ພຣະອົງຕັດສິນໃຈວ່າ ຈະໃຫ້ສິ່ງທັງປວງຢູ່ໃນຄວາມຮັບຜິດຊອບຂອງມະນຸດ. ວິນຍານຊົ່ວບໍ່ມີສິດທີ່ຈະຄອບຄອງ ສິ່ງທີ່ພຣະເຈົ້າຊົງສ້າງເລີຍ.

ທຸກສິ່ງທີ່ພຣະເຈົ້າສ້າງນັ້ນດີໝົດ (ປະຖົມມະການ 1:31) ບໍ່ມີສິ່ງໃດທີ່ເປັນອັນຕະລາຍຕໍ່ສິ່ງຕ່າງໆ ທີ່ພຣະອົງຊົງສ້າງ. ບໍ່ມີໂລກໄພ ໄຂ້ເຈັບ.

**ວັນທີເຈັດ**

**ປະຖົມມະການ 2:1-3**

ພຣະອົງຊົງສ້າງສິ່ງຕ່າງໆ ທັງໝົດພາຍໃນຫົກມື້ກໍສຳເລັດ ແລະຄົບຖ້ວນທຸກປະການ. ສ່ວນວັນທີເຈັດນັ້ນ ພຣະອົງຢຸດພັກຈາກການ ຊົງສ້າງ ຂອງພຣະອົງ ເພາະທຸກສິ່ງຮຽບຮ້ອຍສົມບູນທຸກປະການແລ້ວ ເຮົາບໍ່ຄວນຄິດວ່າພຣະເຈົ້າອິດເມື່ອຍເພາະວຽກ ແຕ່ພຣະເຈົ້າພັກຈາກ ການສ້າງ ເພາະທຸກຢ່າງສຳເລັດແລ້ວ (ປະຖົມມະການ 2:1-3)

**ທູດສະຫວັນທັງຫລາຍ ເບິ່ງວຽກງານຂອງພຣະເຈົ້າ**

**ໂຢບ 38:7**

ພຣະຄຳພີ ບອກວ່າ ທູດສະຫວັນທີ່ດີຂອງພຣະເຈົ້າ ເບິ່ງສິ່ງທັງຫລາຍທີ່ພຣະເຈົ້າສ້າງ ແລະຮ້ອງເພັງສັນລະເສີນພຣະເຈົ້າ ດ້ວຍຄວາມຍິນດີ. ພວກເຂົາເຫັນນຳກັບພຣະເຈົ້າ ໃນສິ່ງດີງາມທີ່ສຳເລັດແລ້ວນັ້ນ





ຄວາມ ຈິງຂອງພຣະເຈົ້າ ເຊິ່ງເປັນຄວາມສະຫວ່າງ

**ທົບທວນ**

1. ເປັນຫຍັງນີໂກເດມເຊື່ອວ່າ ພຣະເຢຊູເປັນຜູ້ເຊິ່ງພຣະເຈົ້າສົ່ງມາ?
2. ເປັນຫຍັງພວກຟາລິຊາຍຈຶ່ງອວດຕົວເອງ?
3. ເມື່ອພຣະເຢຊູເວົ້າເຖິງເລື່ອງບັງເກີດໃຫມ່ຈາກນ້ຳ ພຣະອົງໝາຍເຖິງຫຍັງ?
4. ໃຜເປັນຜູ້ເຮັດວຽກໃນໃຈຂອງມະນຸດໂດຍໃຊ້ພຣະຄຳ ເພື່ອເຮັດໃຫ້ພວກເຂົາເກີດໃຫມ່ ໃນຄອບຄົວຂອງພຣະເຈົ້າ?
5. ບຸດມະນຸດທີ່ຈະຕ້ອງຖືກຍົກຂຶ້ນເຫມືອນທີ່ງູທອງສຳລິດຂອງໂມເຊນັ້ນ ໄດ້ຖືກຍົກຂຶ້ນຄືໃຜ?
6. ເປັນຫຍັງພຣະເຈົ້າສົ່ງພຣະເຢຊູເຂົ້າມາໃນໂລກ?
7. ສາເຫດທີ່ຫລາຍຄົນບໍ່ເຊື່ອຟັງພຣະຄຳຂອງພຣະເຈົ້ານັ້ນເປັນເພາະຫຍັງ?

**ຄວາມຈິງທີ່ຕ້ອງເນັ້ນ**

- ມະນຸດເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງລິດທະນຸພາບເໜືອທຸກສິ່ງ
- ມະນຸດຈະມາເຖິງພຣະເຈົ້າໄດ້ ຕ້ອງມາຕາມທາງທີ່ພຣະເຈົ້າກຳນົດໄວ້
- ພຣະເຢຊູຄຣິດເປັນຜູ້ຊ່ວຍໃຫ້ລອດພຽງແຕ່ຜູ້ດຽວ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ

ພຣະເຈົ້າໃຫ້ຄົນບາບຕ້ອງເຮັດຫຍັງແດ່ ຈຶ່ງຈະໄດ້ພົ້ນຈາກຊາຕານ ແລະຄວາມບາບ? ແລະໃຜແດ່ ທີ່ຈະພົ້ນຈາກບາບໄດ້?

ພຣະອົງບອກວ່າ "ທຸກຄົນທີ່ວາງໃຈໃນພຣະອົງນັ້ນ" ຜູ້ທີ່ວາງໃຈ ແລະເຊື່ອໃນພຣະເຢຊູ ຈະໄດ້ຊີວິດໃຫມ່ຈາກພຣະເຈົ້າ ພວກເຂົາຈະບໍ່ເປັນລູກຂອງຊາຕານອີກຕໍ່ໄປ ແຕ່ຈະເປັນລູກຂອງພຣະເຈົ້າ ເພາະສະນັ້ນ ພຣະເຢຊູບອກໃຫ້ປະຊາຊົນກັບໃຈເສຍໃຫມ່ ແລະເຊື່ອຂ່າວປະເສີດຂອງພຣະເຈົ້າ

ພຣະເຢຊູບອກວ່າ ຜູ້ທີ່ວາງໃຈໃນພຣະອົງ "ຈະບໍ່ພິນາດ" ຫມາຍຄວາມວ່າ ຈະບໍ່ຕ້ອງຮັບໂທດນິລັນດອນ ຂອງຄວາມບາບພ້ອມກັບຊາຕານ ແລະສະໝຸນຂອງມັນ ນີ້ຄືຄຳສັນຍາຂອງພຣະເຈົ້າ ເຮົາເຊື່ອວ່າຄຳສັນຍາຂອງພຣະເຈົ້າໝັ້ນຄົງ ພໍທີ່ຈະໄວ້ໃຈໄດ້ແທ້ໆ ບໍ່?ແນ່ນອນ ເພາະພຣະອົງຮັກສາຄຳສັນຍາຂອງພຣະອົງສະເຫມີທຸກປະການ

ເຮົາບໍ່ຈຳເປັນຈະຕ້ອງຖ້າໃຫ້ເຖິງວັນຕາຍກ່ອນຈຶ່ງຈະໄດ້ຮູ້ວ່າພຣະເຈົ້າຍອມຮັບເຮົາຫລືບໍ່ ພຣະເຈົ້າຍອມຮັບເຮົາແນ່ນອນ ເຮົາສາມາດໄວ້ໃຈໄດ້ຕັ້ງແຕ່ບັດນີ້ ຖ້າເຮົາເຫັນກັບພຣະເຈົ້າ ແລະວາງໃຈໃນຜູ້ຊ່ວຍໃຫ້ລອດ ແລະເຮົາກໍ່ຈະບໍ່ຕ້ອງຖືກພິພາກສາລົງໂທດ ແນ່ນອນ ຜູ້ທີ່ປະຕິເສດຈະພົ້ນໂທດບໍ່ໄດ້ ຜູ້ຊ່ວຍໃຫ້ລອດທີ່ພຣະອົງສົ່ງມາມີອົງດຽວຄືພຣະເຢຊູຄຣິດ

ສາເຫດທີ່ຫລາຍຄົນບໍ່ເຊື່ອພຣະຄຳຂອງພຣະເຈົ້າ ແລະບໍ່ຍອມໃວວາງໃຈໃນພຣະອົງ ກໍ່ເພາະພວກເຂົາມັກທາງແຫ່ງຄວາມບາບ ທີ່ພວກເຂົາເຄີຍດຳເນີນມາ ພວກເຂົາບໍ່ຍອມຮັບວ່າ ເປັນທາງທີ່ຜິດ ແລະບໍ່ຢາກປ່ຽນທາງເດີນຂອງຕົນເອງ ພວກເຂົາຮັກຄວາມມືດ ແລະບໍ່ຢາກມາເຖິງ





ແລະຊາຕານ ກັບສະໝູນຂອງມັນ ກໍ່ເບິ່ງສິ່ງທີພຣະເຈົ້າຊົງສ້າງນັ້ນນຳແຕ່ບໍ່ຮູ້ສຶກຍິນດີ. ວິນຍານຊົ່ວບໍ່ສັນລະເສີນພຣະເຈົ້າ. ເຮົາຄິດວ່າ ມັນຄິດຢ່າງໃດໃນໃຈຂອງມັນ?

**ສວນເອເດນ**

**ປະຖົມມະການ 2:4-8**

ໃນຂໍ້ 6 ເຮົາເຫັນວ່າ ໃນສວນຂອງພຣະເຈົ້າ ມີນ້ຳພຸຂຶ້ນມາຈາກແຜ່ນດິນເຮັດໃຫ້ດິນປຽກຊຸ່ມ ໃນຊ່ວງເວລານັ້ນ ຝົນຍັງບໍ່ຕົກເທິງແຜ່ນດິນຄືສະໄໝຂອງເຮົາ ແຕ່ດິນປຽກຊຸ່ມ. ສວນທີ່ພຣະເຈົ້າປູກໄວ້ນັ້ນ ຈຶ່ງອຸດົມສົມບູນ. ໃນເລື່ອງນີ້ ເປັນສິ່ງທີ່ເຮັດໃຫ້ເຮົາເຫັນຄວາມຮັກຂອງພຣະເຈົ້າ. ພຣະເຈົ້າຮັກອາດາມຫລາຍ ຈຶ່ງປູກສວນອັນງົດງາມ ແລະດີພ້ອມທຸກຢ່າງໃຫ້ອາດາມຢູ່.

ພຣະເຈົ້າບໍ່ໃຫ້ອາດາມ ເລືອກທີ່ຢູ່ຂອງຕາມລາວເອງ. ພຣະເຈົ້າມີສິດທີ່ຈະໃຫ້ອາດາມຢູ່ໃນບ່ອນທີ່ເໝາະສົມ ຕາມນ້ຳພຣະໄທຂອງພຣະອົງ ເພາະພຣະອົງເປັນຜູ້ສ້າງ.

ຖ້າເຮົາສ້າງສິ່ງໜຶ່ງສິ່ງໃດ ເຮົາກໍມີສິດທີ່ຈະຕັ້ງສິ່ງນັ້ນໄວ້ ໃນສະຖານທີ່ໃດໆ ກໍໄດ້ຕາມໃຈຂອງເຮົາ. ເຊັ່ນດຽວກັນພຣະເຈົ້າ ມີສິດທີ່ຈະເຮັດກັບທຸກສິ່ງ ຕາມທີ່ພຣະອົງຊົງພໍພຣະໄທ. ພຣະອົງມີສິດທີ່ຈະສັ່ງໃຫ້ເຮົາເຮັດສິ່ງໃດກໍ່ໄດ້. ບໍ່ມີໃຜທີ່ເປັນໃຫຍ່ກວ່າພຣະເຈົ້າ.

ບໍ່ມີວັນທີ່ພຣະເຈົ້າຈະສັ່ງໃຫ້ເຮົາເຮັດຄວາມຊົ່ວ ເພາະພຣະອົງເປັນຜູ້ທີ່ດີຮອບຄອບ ແລະພຣະອົງຊົງຮັກເຮົາຫລາຍ.

## ທົບທວນ

1. ພຣະເຈົ້າສ້າງໂລກສຳລັບໃຜ?
2. ມະນຸດກັບສັດຕ່າງກັນແນວໃດ?
3. ການສ້າງ ແບບຕາມພຣະລັກສະນະຂອງພຣະເຈົ້າ ໝາຍຄວາມວ່າແນວໃດ?
4. ມະນຸດທຸກຊາດເປັນເຊື້ອສາຍຂອງໃຜ?
5. ພຣະເຈົ້າມອບຫຍັງໃຫ້ອາດາມຄອບຄອງ?
6. ເປັນຫຍັງ ຜີສາດບໍ່ມີສິດຄອບຄອງໂລກ ແລະສິ່ງຕ່າງໆ ໃນໂລກ?
7. ໃນຄັ້ງທຳອິດ ທີ່ພຣະເຈົ້າຊົງສ້າງແລ້ວ ທຸກສິ່ງທີ່ພຣະເຈົ້າສ້າງເປັນແນວໃດ?
8. ພຣະເຈົ້າສຳແດງຄວາມຮັກ ແກ່ມະນຸດຢ່າງໃດ?
9. ເປັນຫຍັງພຣະເຈົ້າຈິ່ງພັກວຽກງານຂອງພຣະອົງໃນວັນທີເຈັດ?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງລິດທະນຸພາບເໜືອທຸກສິ່ງ
- ພຣະເຈົ້າຊົງຮອບຮູ້ ທຸກສິ່ງ ແລະເຕັມໄປດ້ວຍ ຄວາມຮັກ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງ ເໜືອທຸກສິ່ງ
- ພຣະເຈົ້າ ສື່ສານກັບມະນຸດ
- ຊາຕານ ຕໍ່ຕ້ານ ພຣະເຈົ້າສະເໝີ





ຫາຍຈາກພິດງູແລະມີຊີວິດຢູ່ໄດ້

ນີໂກເດມເຄີຍພະຍາຍາມເຮັດຕາມພຣະບັນຍັດທຸກຂໍ້ ແຕ່ເຂົາບໍ່ລະນຶກວ່າ ເຂົາບໍ່ສາມາດເຮັດໄດ້ຕາມຄົບຖ້ວນ ການກະທຳຂອງລາວນັ້ນບໍ່ພໍທີ່ຈະໃຫ້ພຣະເຈົ້າຍອມຮັບລາວໄດ້ ສິ່ງທີ່ລາວຕ້ອງເຮັດຄືຕ້ອງເລີກເພິ່ງການກະທຳຂອງຕົນເອງ ແລະຫັນມາວາງໃຈໃນຜູ້ຊ່ວຍໃຫ້ລອດ ທີ່ພຣະເຈົ້າສົ່ງມານັ້ນ ຊາວອິດສະລະເອນມາ ເບິ່ງງູທອງສຳລິດເພື່ອໃຫ້ຫາຍຈາກຄວາມເຈັບປວດນີໂກເດັນຕ້ອງ ເບິ່ງແລະວາງໃຈໃນຜູ້ຊ່ວຍໃຫ້ລອດຜູ້ດຽວ ທີ່ພຣະເຈົ້າໄດ້ປະທານໃຫ້ມະນຸດ

ເຮົາທັງຫລາຍ ກໍ່ເຫມືອນຊາວອິດສະລະເອນທີ່ຖືກງູກັດ ຊາຕານເຊິ່ງເອີ້ນວ່າ "ງູໂບຮານ" ໄດ້ລໍ້ລວງມະນຸດຕັ້ງແຕ່ອາດາມຈົນເຖິງທຸກວັນນີ້ ມະນຸດທັງຫລາຍຕ້ອງທົນຈາກພິດຮ້າຍຂອງມັນ ຄືຄວາມບາບແລະຄວາມບາບນັ້ນ ກໍ່ໄດ້ນຳຄວາມຕາຍມາເຖິງມະນຸດ ສະນັ້ນມະນຸດທຸກຄົນກຳລັງດຳເນີນໄປສູ່ຄວາມຕາຍ ຊາວອິດສະລະເອນບໍ່ສາມາດຊ່ວຍຕົນເອງໄດ້ຢ່າງໃດ ພວກເຮົາເຊິ່ງເປັນຄົນບາບ ກໍ່ຊ່ວຍຕົນເອງບໍ່ໄດ້ຢ່າງນັ້ນ ແຕ່ພຣະເຈົ້າໄດ້ປະທານໜຶ່ງສຳລັບມະນຸດ ຄືໄດ້ທາງຜູ້ຊ່ວຍໃຫ້ລອດທີ່ຈະຍົກຂຶ້ນນັ້ນ ພຣະເຢຊູບອກນໂກເດັນວ່າ ຜູ້ທີ່ວາງໃຈໃນພຣະອົງ ຈະໄດ້ຮັບຊີວິດນິລັນດອນຈາກພຣະເຈົ້າ

## ພຣະບຸດອົງດຽວຂອງພຣະເຈົ້າ

### ໂຢຮັນ 3:16-20

ພຣະເຈົ້າບໍ່ປະສົງຈະໃຫ້ໄພພິນາດໄປກັບຊາຕານ ເຫດສະນັ້ນພຣະອົງຈຶ່ງປະທານພຣະບຸດອົງດຽວຂອງພຣະອົງ ແກ່ມະນຸດໃນໂລກ ພຣະເຢຊູເປັນ "ບຸດມະນຸດ" ແລະເປັນ "ພຣະບຸດຂອງພຣະເຈົ້າ" ແລະບໍ່ມີໃຜເປັນເຫມືອນພຣະອົງ




ບັງເກີດໃຫມ່ ພຣະອົງ
ອະທິບາຍວ່າ ມະນຸດໃນ
ໂລກນີ້ມີສອງພວກ
ພວກທຳອິດ ຄືພວກທີ່ເກີດ
ພຽງຄັ້ງດຽວ ພວກນີ້ຍັງຢູ່
ໃຕ້ອຳນາດຂອງຊາຕານຢູ່

ແລະພວກທີສອງຄື ຜູ້ທີ່ໄດ້
ເກີດຄັ້ງທີ່ສອງ ໂດຍພຣະ
ວິນຍານ ແລ້ວພວກນີ້ພົ້ນ
ອຳນາດຂອງຊາຕານ ແລະ
ຢູ່ພາຍໃຕ້ການຄອບຄອງ
ຂອງ ພຣະເຈົ້າ

ຄົນທັງຫລາຍທີ່ເກີດພຽງຄັ້ງດຽວ ຍັງຢູ່ໃນຄອບຄົວຂອງຊາຕານ ແຕ່ ຜູ້ທີ່ໄດ້ເກີດສອງຄັ້ງແລ້ວນັ້ນ ໄດ້ຮັບການຍ້າຍເຂົ້າມາຢູ່ໃນຄອບຄົວຂອງ ພຣະເຈົ້າ ພຣະເຈົ້າໄດ້ສົ່ງຜູ້ຊ່ວຍໃຫ້ລອດ ລົງມາຈາກສະຫວັນແລ້ວ (ເບິ່ງ ຂໍ້ 13) ຜູ້ນັ້ນເອີ້ນວ່າ "ບຸດມະນຸດ" ເພາະມາເກີດເປັນມະນຸດ ແລະຈະຊ່ວຍມະນຸດໃຫ້ພົ້ນບາບໄດ້

ພຣະເຢຊູຍົກຕົວຢ່າງຈາກປະຫວັດສາດຂອງຊາວຢິວ ເພື່ອໃຫ້ ນີໂກເດັມລະນຶກເຖິງຄວາມຈິງຈາກເລື່ອງນັ້ນ ເມື່ອບັນພະບູລຸດຂອງ ນີໂກເດັມຢູ່ໃນຖິ່ນທຸລະກັນດານ ພວກເຂົາທັງຫລາຍໄດ້ເຮັດຜິດຕໍ່ພຣະ ເຈົ້າ ແລ້ວພຣະເຈົ້າໄດ້ໃຫ້ງູພິດອອກມາກັດຄົນ ຕາຍຫລາຍຄົນ ແຕ່ ເມື່ອພວກເຂົາກັບໃຈເສຍໃຫມ່ ພຣະເຈົ້າໃຫ້ໂມເຊສ້າງງູທອງສຳລິດ ໂຕໜຶ່ງ ຕິດໄວ້ທີ່ປາຍເສົາ ແລະທຸກຄົນກໍ່ຍອມມາເບິ່ງຮູບງູນັ້ນ ກໍ່ໄດ້







**ບົດທີ 6**

**ຊີວິດໃນສວນເອເດນ**

**ປະຖົມມະການ 2:8-25**

**ສ້າງຄວາມສົນໃຈ**

ຄ່ານິຍົມຂອງໂລກ ແລະ ຄວາມຄິດຂອງພຣະເຈົ້າຕ່າງກັນ ຫລາຍ ຄ່ານິຍົມຂອງໂລກສອນ ຫ້ເຮົາເພິ່ງຄວາມສາມາດຂອງ ຕົວເຮົາເອງ ແຕ່ພຣະຄຳຂອງ ພຣະເຈົ້າ ສອນໃຫ້ເຮົານອບ ນ້ອມຕໍ່ພຣະເຈົ້າ ດ້ວຍຄວາມ ຮັກ ແລະຄວາມໄວ້ວາງໃຈໃນ ພຣະອົງ

ຄ່ານິຍົມຂອງໂລກສອນໃຫ້ເຮົາປ້ອງກັນສິດທິຂອງເຮົາເອງ ແຕ່ພຣະຄຳພີສອນໃຫ້ເຮົາຮັບສິ່ງຕ່າງໆ ເຊິ່ງພຣະເຈົ້າໃຫ້ເຮົາ ຕາມ ຄວາມຮອບຮູ້ຂອງພຣະອົງ

ຄ່ານິຍົມຂອງໂລກ ສອນໃຫ້ເຮົາສວຍໂອກາດ ເພື່ອຈະຍາດເອົາທຸກ ສິ່ງທີ່ຈະຍາດໄດ້ ແຕ່ພຣະຄຳຂອງພຣະເຈົ້າສອນວ່າ ພຣະເຈົ້າບໍລິສຸດ ແລະຕ້ອງລົງໂທດແກ່ຄວາມບາບ

ຄ່ານິຍົມຂອງໂລກ ສອນໃຫ້ເຮົາເຊື່ອໝັ້ນໃນຕົວເອງ ແຕ່ພຣະຄຳພີ ສອນໃຫ້ເຮົາຮູ້ຈັກພຣະເຈົ້າກ່ອນ ເພື່ອເຮົາຈະພົບຄວາມໝັ້ນຄົງໃນ ພຣະອົງ

ບົດຮຽນມື້ນີ້ ຈະຊ່ວຍໃຫ້ເຮົາຮູ້ເຖິງແຜນການອັນດີເລີດຂອງພຣະເຈົ້າຕໍ່ມະນຸດ

**ຕົ້ນໄມ້ແຫ່ງຊີວິດ**

**ປະຖົມມະການ 2:8,9**

ໃນກາງສວນເອເດນນັ້ນ ພຣະເຈົ້າໄດ້ປູກຕົ້ນໄມ້ວິເສດໄວ້ຕົ້ນໜຶ່ງ ຄືຕົ້ນໄມ້ແຫ່ງຊີວິດ ຜູ້ໃດທີ່ກິນໝາກໄມ້ນັ້ນ ຈະມີຊີວິດນິລັນດອນ ພຣະເຈົ້າບໍ່ໄດ້ບັງຄັບມະນຸດໃຫ້ກິນໝາກຂອງຕົ້ນໄມ້ນັ້ນ ແຕ່ພຣະເຈົ້າຢາກໃຫ້ມະນຸດກິນ ແລະມີຊີວິດທີ່ເຕັມໄປດ້ວຍສັນຕິສຸກຕະຫລອດການ ພຣະເຈົ້າຢາກໃຫ້ມະນຸດເຂົ້າໃຈວ່າ ເຂົາຕ້ອງເພິ່ງພຣະເຈົ້າຢ່າງສິ້ນ

ເຊິ່ງພຣະເຈົ້າຢາກໃຫ້ອາດາມ ເວົ້າວ່າ "ພຣະເຈົ້າ ຂ້ານ້ອຍຕ້ອງເພິ່ງພຣະອົງທຸກສິ່ງ ຂ້ານ້ອຍຕ້ອງໄວ້ວາງໃຈໃນຄຳສັ່ງສອນຂອງພຣະອົງ ຖ້າປາດສະຈາກພຣະອົງ ຂ້ານ້ອຍຈະມີຊີວິດຢູ່ບໍ່ໄດ້"

**ຕົ້ນໄມ້ແຫ່ງຄວາມສຳນຶກໃນຄວາມດີແລະຄວາມຊົ່ວ**

**ປະຖົມມະການ 2:15-17**

ເມື່ອພຣະເຈົ້າໃຫ້ອາດາມ ຢູ່ໃນສວນເອເດນນັ້ນ ພຣະເຈົ້າບໍ່ໃຫ້ອາດາມ ຕັດສິນໃຈເອງວ່າ ແມ່ນຫຍັງດີ ແມ່ນຫຍັງຊົ່ວ ພຣະເຈົ້າສັ່ງສອນອາດາມ ໃນສິ່ງທີ່ຄວນເຮັດ ແລະບໍ່ຄວນເຮັດ

ໃນສະໄໝຂອງເຮົານີ້ ກໍ່ຍັງເປັນເຊັ່ນນັ້ນຢູ່ ພຣະເຈົ້າເປັນຜູ້ທີ່ຕັດສິນວ່າສິ່ງໃດດີ ແລະສິ່ງໃດຊົ່ວ ເຊິ່ງພຣະອົງໄດ້ຕັດສິນໄວ້ ແລະໄດ້ເປີດເຜີຍແກ່ເຮົາໃນພຣະຄຳພີ ຄຳສອນຂອງພຣະເຈົ້າເປັນຄວາມສະຫວ່າງສຳລັບເຮົາ





ມະນຸດເຂົ້າຢູ່ໃນຄອບຄົວຂອງພຣະອົງໄດ້

ເມື່ອພຣະເຢຊູເວົ້າເຖິງເລື່ອງນີ້ ນີໂກເດມແປກໃຈຫລາຍລາວເຂົ້າໃຈຜິດແລະຄິດວ່າ ພຣະເຢຊູເວົ້າເຖິງເລື່ອງຮ່າງກາຍທີ່ຕ້ອງກັບໄປເກີດອີກຄັ້ງໜຶ່ງ

ເມື່ອພຣະເຢຊູເວົ້າເຖິງນ້ຳໃນຂໍ້5 ພຣະອົງບໍ່ໄດ້ເວົ້າເຖິງນ້ຳທຳມະດາທີ່ມະນຸດໃຊ້ໃນການສຳລະ ຫລືນ້ຳທີ່ມະນຸດໃຊ້ໃນພິທີຕ່າງໆ ພຣະອົງຊົງຮູ້ວ່າ ມະນຸດຕ້ອງຟັງພຣະຄຳຂອງພຣະເຈົ້າ ຈຶ່ງຈະຮັບການປ່ຽນແປງແລະພຣະວິນຍານຈະເປັນຜູ້ເຮັດວຽກໃນໃຈຂອງຜູ້ຟັງ ເພື່ອໃຫ້ຊີວິດໃຫມ່ເກີດຂຶ້ນ ການທີ່ມະນຸດຟັງເຂົ້າໃຈ ແລະເຊື່ອພຣະຄຳນັ້ນ ເປັນພຣະວິນຍານເອງ ທີ່ເຮັດວຽກຢູ່ໂດຍສອນ ແລະເຮັດການປ່ຽນແປງຈິດໃຈຂອງຜູ້ນັ້ນ ໃຫ້ສາມາດເຊື່ອພຣະຄຳຂອງພຣະເຈົ້າໄດ້ ສະນັ້ນການບັງເກີດໃຫມ່ເປັນວຽກຂອງພຣະເຈົ້າຜູ້ເປັນພຣະວິນຍານ ແລະພຣະອົງຊົງໃຊ້ນ້ຳແຫ່ງພຣະຄຳ (ເບິ່ງ ເອເຟໂຊ 5:26; 1 ເປໂຕ 1:23 -25)

ໃນທຸກວັນນີ້ພຣະວິນຍານກຳລັງເຮັດວຽກຢູ່ ທຸກຄັ້ງທີ່ເຮົາໄດ້ຍິນພຣະຄຳຂອງພຣະເຈົ້າ ແລະຈົດຈຳໄວ້ໃນໃຈ ແລະເມື່ອເຮົາຕຶກຕອງເຖິງສິ່ງທີ່ເຮົາໄດ້ຍິນນັ້ນ ພຣະວິນຍານຈະເປັນຜູ້ທີ່ເຮັດໃຫ້ເຮົາເຂົ້າໃຈຄວາມຈິງ ເພື່ອເຮົາຈະເຫັນດ້ວຍກັບພຣະເຈົ້າ ແລະເຊື່ອພຣະຄຳນັ້ນ ສະນັ້ນການທີ່ຜູ້ໜຶ່ງຜູ້ໃດເຊື່ອພຣະຄຳ ແລະບັ ເກີດໃຫມ່ນັ້ນ ກໍ່ເປັນການທີ່ພຣະເຈົ້າປ່ຽນຜູ້ນັ້ນ ໃຫ້ລາວສາມາດຮູ້ຈັກທີ່ຈະຮັກ ແລະເຊື່ອພຣະເຈົ້າໄດ້

**ມີຜູ້ຊ່ວຍໃຫ້ລອດພຽງຜູ້ດຽວ**

**ໂຢຮັນ 3:6-15**

ພຣະເຢຊູບອກນີໂກເດມວ່າ ບໍ່ຕ້ອງປະຫລາດໃຈທີ່ທຸກຄົນຈຳເປັນຕ້ອງ



ເມື່ອພຣະເຈົ້າສ້າງອາດາມແລະເອວານັ້ນ ພວກເຂົາມີຄວາມສາມາດທີ່ຈະເຮັດຕາມນ້ຳພຣະໄທຂອງພຣະເຈົ້າໄດ້ທຸກສິ່ງ ແຕ່ເມື່ອພວກເຂົາຕົກຢູ່ໃນຄວາມບາບແລ້ວ ພວກເຂົາບໍ່ເປັນມິດກັບພຣະເຈົ້າອີກ ເພາະຖືກແຍກ ຈາກພຣະອົງແລ້ວ ແລະພວກເຂົາກໍ່ບໍ່ສາມາດຮັກຫລືເຊື່ອຟັງພຣະອົງເຫມືອນແຕ່ກ່ອນ ພວກເຂົາບໍ່ສາມາດເຮັດຕາມນຳພຣະໄທຂອງພຣະອົງໄດ້ຢ່າງຄົບຖ້ວນ ເພາະພວກເຂົາຕົກຢູ່ໃຕ້ອຳນາດຂອງຊາຕານແລ້ວ

ສະນັ້ນພຣະເຢຊູບອກນີໂກເດມວ່າ ມີທາງດຽວທີ່ມະນຸດຈະພົ້ນຈາກອຳນາດຂອງຊາຕານໄດ້ ແລະສາມາດທີ່ຈະຮັກ ແລະເຊື່ອຟັງພຣະເຈົ້າຄືມະນຸດຈະຕ້ອງບັງເກີດໃຫມ່

ນີ້ຫມາຍຄວາມວ່າມະນຸດຈະຕ້ອງໄດ້ຮັບ ການສ້າງໃຫມ່ ເພື່ອທີ່ຈະສາມາດຮັກ ແລະເຊື່ອຟັງພຣະອົງໄດ້ ບໍ່ມີໃຜທີ່ຈະສາມາດເຮັດໃຫ້ໂຕເອງເກີດໃຫມ່ໄດ້ ການດີຂອງມະນຸດບໍ່ພໍທີ່ຈະໃຫ້ພວກເຂົາພົ້ນຈາກການຄອບຄອງຂອງຊາຕານ

ເມື່ອເຮົາໄດ້ເກີດມາໃນໂລກນີ້ເຮົາຖືກແຍກຈາກພຣະເຈົ້າຢູ່ແລ້ວ ສຳລັບເຮົາເອງ ການຄືນດີກັບພຣະເຈົ້າເປັນສິ່ງທີ່ເປັນໄປບໍ່ໄດ້ ມີແຕ່ພຣະເຈົ້າອົງດຽວ ຜູ້ທີ່ສາມາດໃຫ້ມະນຸດບັງເກີດໃຫມ່ໄດ້ ເພື່ອໃຫ້





ໃນເວລານັ້ນ ພຣະເຈົ້າໄດ້ບອກແກ່ອາດາມວ່າ ເຂົາສາມາດກິນໝາກໄມ້ທຸກຕົ້ນໃນສວນໄດ້ ເວັ້ນແຕ່ໝາກໄມ້ແຕ່ຕົ້ນດຽວ ຄືຕົ້ນໄມ້ທີ່ໃຫ້ສຳນຶກໃນຄວາມດີ ແລະຄວາມຊົ່ວ

ຕັ້ງແຕ່ພຣະເຈົ້າໄດ້ສ້າງອາດາມມາ ອາດາມຮູ້ແຕ່ສິ່ງທີ່ດີທີ່ພຣະເຈົ້າສອນແກ່ລາວ ລາວບໍ່ຮູ້ເຖິງສິ່ງທີ່ຊົ່ວ ແຕ່ຖ້າລາວກິນໝາກໄມ້ທີ່ພຣະເຈົ້າຫ້າມບໍ່ໃຫ້ກິນນັ້ນ ກໍ່ສະແດງວ່າ ອາດາມບໍ່ຍອມເພິ່ງພຣະເຈົ້າຕໍ່ໄປ ລາວຈະຮູ້ທັງດີ ທັງຊົ່ວ ແລະຈະຕ້ອງຕັດສິນໃຈເອງວ່າ ແມ່ນຫຍັງທີ່ລາວຢາກເຮັດ ສະນັ້ນຖ້າລາວເລືອກກິນໝາກໄມ້ນັ້ນ ຜົນທີ່ຈະເກີດຂຶ້ນກໍຄືຄວາມຕາຍ ຄືຕ້ອງຖືກແຍກອອກຈາກພຣະເຈົ້າ

**ຜູ້ທີ່ຂັດຂືນຄຳສັ່ງຂອງພຣະເຈົ້າ ຈະມີໂທດຄືຄວາມຕາຍ**

ພຣະເຈົ້າເຕືອນອາດາມ ໃນເລື່ອງຕົ້ນໄມ້ທີ່ໃຫ້ສຳນຶກໃນຄວາມດີແລະຄວາມຊົ່ວນັ້ນວ່າ "ໃນວັນໃດທີ່ເຈົ້າກິນ ເຈົ້າຈະຕ້ອງຕາຍແນ່ນອນ" ເມື່ອພຣະເຈົ້າບອກອາດາມເຊັ່ນນັ້ນ ໝາຍຄວາມວ່າຢ່າງໃດ?

**ຄວາມຕາຍ ມີຄວາມໝາຍສາມປະການຄື**:

**1. ຖືກແຍກອອກຈາກພຣະເຈົ້າ**

ທ່ານຈື່ເລື່ອງຊາຕານ ໄດ້ບໍ່? ເມື່ອຊາຕານ ແລະລູກນ້ອງຂອງມັນ ເຮັດບາບ ມັນກໍ່ຖືກຕັດຂາດຈາກຄວາມຮັກ ແລະຄວາມສຳພັນກັບ ພຣະເຈົ້າ ເມື່ອມັນກະບົດຕໍ່ພຣະເຈົ້າ ມັນຈະເປັນມິດກັບພຣະເຈົ້າບໍ່ໄດ້ ຕ້ອງຖືກແຍກອອກຈາກພຣະເຈົ້າໄປ ແລະຈະມີຕຳແໜ່ງຕໍ່ໄປໃນສະຫວັນບໍ່ໄດ້ ຖ້າເຮົາແຕກແຍກກັບຄົນອື່ນ ເຮົາກໍບໍ່ຢາກຢູ່ນຳກັນແລ້ວ

ພຣະເຈົ້າໄດ້ເຕືອນອາດາມວ່າ ຖ້າລາວບໍ່ເຊື່ອຟັງຄຳສັ່ງຂອງ

ພຣະເຈົ້າແລ້ວ ກໍ່ຈະເປັນມິດກັບພຣະເຈົ້າຕໍ່ໄປບໍ່ໄດ້ ແລະຈິດວິນຍານຂອງລາວ ຈະຖືກແຍກອອກຈາກພຣະເຈົ້າໄປ

**2. ຈິດວິນຍານແຍກອອກຈາກຮ່າງກາຍ**

ເມື່ອພຣະເຈົ້າເວົ້າກ່ຽວກັບຄວາມຕາຍ ພຣະອົງບໍ່ໄດ້ໝາຍຄວາມວ່າ ຮ່າງກາຍຂອງອາດາມ ຈະຕາຍໃນວັນນັ້ນ ແຕ່ເພາະລາວຖືກຕັດຂາດຈາກພຣະເຈົ້າຜູ້ເປັນແຫລ່ງຊີວິດ ຮ່າງກາຍຈະຄ່ອຍໆ ຊຸດໂຊມໄປ ແລະທ້າຍທີ່ສຸດກໍ່ຈະຕ້ອງຕາຍ

ຖ້າເຮົາຕັດກິ່ງໄມ້ມາ ເຮົາກໍຈະເຫັນວ່າ ມັນບໍ່ໄດ້ຫ່ຽວແຫ້ງໄປທັນທີ ໃບຂອງມັນຍັງຂຽວໄດ້ຫລາຍມື້ ແຕ່ເພາະມັນຖືກຕັດຂາດຈາກຕົ້ນໄມ້ຂອງມັນ ຈຶ່ງເປັນກິ່ງທີ່ຕາຍແລ້ວ

ຄວາມຕາຍໝາຍຄວາມວ່າ ຈິດວິນຍານຈະຖືກແຍກອອກໄປຈາກຮ່າງກາຍ ຖ້າຮ່າງກາຍປາດສະຈາກວິນຍານແລ້ວ ມັນຈະເປື່ອຍເນົ່າໄປ

ອາດາມ ໄດ້ຮັບຊີວິດເມື່ອລົມປານຂອງພຣະເຈົ້າເຂົ້າດັງ ເຊິ່ງໝາຍເຖິງພຣະເຈົ້າລະບາຍວິນຍານເຂົ້າໄປ ແຕ່ເມື່ອວິນຍານນັ້ນອອກໄປຈາກຮ່າງກາຍແລ້ວ ລາວກໍຕ້ອງຕາຍ

ຮ່າງກາຍເປັນຄືເຮືອນທີ່ຈິດວິນຍານອາໄສຢູ່ ເຮົາບໍ່ມີວິນຍານຫລາຍໆ ດວງໃນຮ່າງກາຍຂອງເຮົາ ພຣະເຈົ້າເປັນຜູ້ໃຫ້ຈິດວິນຍານແກ່ເຮົາ ເພາະເຮົາເປັນເໝືອນອາດາມ ບັນພຣະບູລຸດຂອງເຮົາ

ພຣະເຈົ້າບອກອາດາມວ່າ ຖ້າລາວຫາກກິນໝາກໄມ້ທີ່ພຣະເຈົ້າຫ້າມນັ້ນ ຈະມີມື້ໜຶ່ງທີ່ວິນຍານຂອງລາວຈະຕ້ອງອອກຈາກຮ່າງກາຍ







## ບົດທີ 26
## ການບັງເກີດໃໝ່
## ໂຢຮັນ 3:1-20

**ນີໂກເດມມາຫາພຣະເຢຊູ**
**ໂຢຮັນ 3:1-2**

ນີໂກເດມ ໄດ້ຍິນເຖິງການອັດສະຈັນອັນຍິ່ງໃຫຍ່ ທີ່ພຣະເຢຊູໄດ້ກະທຳ ແລະລາວຮູ້ວ່າ ອຳນາດເຊັ່ນນັ້ນ ຕ້ອງເປັນອຳນາດຂອງພຣະເຈົ້າ ເຫດສະນັ້ນ ລາວແນ່ໃຈວ່າ ພຣະເຢຊູເປັນຜູ້ທີ່ພຣະເຈົ້າສົ່ງມາ ແຕ່ພວກຟາຊາຍອື່ນໆ ສ່ວນຫລາຍພວກເຂົາກຽດຊັງພຣະເຢຊູ ແລະຫາວ່າການອັດສະຈັນທີ່ພຣະເຢຊູເຮັດນັ້ນ ໄດ້ເຮັດໂດຍອຳນາດຂອງຊາຕານ ການທີ່ນີໂກເດມມາຫາພຣະເຢຊູ ໃນກາງຄືນນັ້ນ ອາດເປັນເພາະບໍ່ຢາກໃຫ້ພວກຜູ້ນຳອື່ນໆ ຂອງພວກຢິວເຫັນລາວ

**ມະນຸດຕ້ອງບັງເກີດໃໝ່ ຈຶ່ງຈະເຂົ້າໃນແຜ່ນດິນຂອງພຣະເຈົ້າໄດ້**
**ໂຢຮັນ 3:3-5**

ຊາວຢິວໂດຍສະເພາະພວກຟາລີຊາຍ ເປັນຄົນຈອງຫອງອວດຕົວ ເພາະຄິດວ່າ ພວກເຂົາເປັນເຊື້ອສາຍຂອງອັບຣາຮາມ ພວກເຂົາຄິດວ່າ ພຣະເຈົ້າຈະຍອມພວກເຂົາເນື່ອງຈາກບັນພຣະບູລຸດຂອງພວກເຂົາ ພວກຟາລີຊາຍບໍ່ລະນຶກວ່າ ມະນຸດທຸກຄົນໃນໂລກໄດ້ເກີດມາພາຍໃຕ້ການຄອບຄອງຂອງຊາຕານ ແລະຢູ່ໃນຄອບຄອງຂອງຊາຕານ

8. ພວກຜີຈົມນ້ຳຕາຍບໍ່?
9. ມີໃຜແດ່ທີ່ຊ່ວຍໃຫ້ເຮົາພົ້ນຈາກອຳນາດມານຊາຕານ ຄວາມບາບ ແລະຄວາມຕາຍ?

**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຢຊູຄຣິດເປັນມະນຸດແທ້
- ພຣະເຢຊູຄຣິດເປັນພຣະເຈົ້າແທ້
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ຊາຕານເປັນຜູ້ລໍ້ລວງ ແລະກຽດຊັງມະນຸດ
- ພຣະເຈົ້າຊົງລິດທານຸພາບ ເໜືອທຸກສິ່ງ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າ ແລະວາງໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທພຣະອົງ





ເຊິ່ງເຮົາເອີ້ນວ່າ ຄວາມຕາຍ

**3. ການແຍກຈາກພຣະເຈົ້າ ຊົ່ວນິລັນໃນບຶງໄຟ**

ຖ້າອາດາມຂັດຂືນຄຳສັ່ງຂອງພຣະເຈົ້າ ຄວາມຕາຍທີ່ຈະເກີດຂຶ້ນ ບໍ່ແມ່ນກ່ຽວກັບຮ່າງກາຍເທົ່ານັ້ນ ແຕ່ຄວາມຕາຍຈະມາເຖິງຈິດວິນຍານນຳ ລາວຈະຕ້ອງໄປຢູ່ໃນບຶງໄຟ ອັນໜ້າຢ້ານແລະທໍລະມານ ທີ່ພຣະເຈົ້າໄດ້ຕຽມໄວ້ສຳລັບຊາຕານ ແລະສະໝຸນຂອງມັນ ໂທດຂອງອາດາມ ຈະເປັນໂທດຊົ່ວນິລັນດອນ ຄວາມຕາຍຝ່າຍວິນຍານ ເປັນສິ່ງທີ່ໜ້າຢ້ານຫລາຍ

**ພຣະເຈົ້າສົມຄວນເປັນຜູ້ຄອບຄອງມະນຸດ**

ພຣະເຈົ້າມີສິດທີ່ຈະສັ່ງສອນອາດາມ ເພາະພຣະອົງເປັນຜູ້ສ້າງອາດາມ ຊີວິດອາດາມມາຈາກພຣະເຈົ້າ ອາດາມຈຶ່ງເປັນຂອງພຣະເຈົ້າ ຍິ່ງກວ່ານັ້ນ ພຣະເຈົ້າຊົງຮັກອາດາມ ແລະມີພຣະປະສົງທີ່ດີຕໍ່ອາດາມ ດັ່ງນັ້ນຈຶ່ງສົມຄວນທີ່ອາດາມ ຈະເຊື່ອຟັງພຣະອົງແລະຍອມຢູ່ໃນການເບິ່ງແຍງຂອງພຣະອົງ

ພຣະເຈົ້າຮັກອາດາມ ພຣະອົງມີພຣະປະສົງທີ່ຈະໃຫ້ອາດາມຮັກພຣະອົງ ແລະມີຄວາມສຳພັນກັບພຣະອົງນຳ ພຣະເຈົ້າມີສິດຄອບຄອງອາດາມ ເພາະພຣະອົງເປັນຜູ້ປົກຄອງ ແລະເບິ່ງແຍງລາວດ້ວຍຄວາມຮັກ ພຣະເຈົ້າຮູ້ຫລາຍກວ່າອາດາມ ພຣະອົງມີສະຕິປັນຍາຮອບຮູ້ທຸກສິ່ງ

ໃນສັງຄົມຂອງເຮົາ ຜູ້ທີ່ມີອາວຸໂສກ່ອນນັ້ນ ມີສິດສັ່ງສອນຄົນໜຸ່ມໆ ເພາະເຂົາມີປະສົບການ ແລະສະຕິປັນຍາຫລາຍກ່ວາ ຍິ່ງໄປກວ່ານັ້ນ ພຣະເຈົ້າເປັນຜູ້ບໍລິບູນດ້ວຍສະຕິປັນຍາ ແລະຄວາມຮອບຮູ້ ຈຶ່ງສົມຄວນທີ່ເຮົາຈະເຊື່ອຟັງພຣະອົງຫລາຍກວ່ານັ້ນເທົ່າໃດ

**ພຣະເຈົ້າສ້າງ ເອວາ ຈາກກະດູກຂ້າງຂອງອາດາມ**

**ປະຖົມມະການ 2:18-24**

ພຣະເຈົ້າຮູ້ວ່າ ອາດາມບໍ່ສົມຄວາມທີ່ຈະຢູ່ຄົນດຽວ ພຣະເຈົ້າເອງເປັນຜູ້ຕັດສິນໃຈທີ່ຈະສ້າງເມຍໃຫ້ແກ່ອາດາມ ແລະພຣະອົງຊົງເຫັນວ່າສັດຕ່າງໆ ຈະເປັນຄູ່ອຸປະຖໍາທີ່ສົມກັບອາດາມບໍ່ໄດ້ ສັດເຫລົ່ານັ້ນຈະຮັກພຣະເຈົ້າບໍ່ໄດ້ ມັນຈະເປັນຄູ່ສົນທະນາ ຫລືທີ່ປຶກສາກໍບໍ່ໄດ້

ເຫດສັນນັ້ນ ພຣະເຈົ້າຈຶ່ງສໍາແດງຄວາມຮັກຂອງພຣະອົງ ໂດຍເອົາກະດູກຂ້າງຈາກອາດາມ ແລະໃຫ້ເປັນຜູ້ຍິງ ມີແຕ່ພຣະເຈົ້າຜູ້ດຽວ ທີ່ຈະເຮັດທຸກຢ່າງນັ້ນໄດ້

ພຣະເຈົ້າຢາກຈະໃຫ້ອາດາມຄຸ້ມຄອງຮັກສາເມຍຂອງລາວເປັນຢ່າງດີ ເພາະເອວາເປັນຂອງຂວັນທີ່ປະເສີດ ຈາກພຣະເຈົ້າສໍາລັບລາວ ດັ່ງນັ້ນລາວຄວນຮັກ ແລະສອນສິ່ງທີ່ພຣະເຈົ້າໄດ້ສອນລາວ ໃຫ້ແກ່ເມຍ

**ທົບທວນ**

1. ພຣະເຈົ້າສ້າງໂລກສໍາລັບໃຜ?
2. ມະນຸດກັບສັດຕ່າງກັນແນວໃດ?
3. ການສ້າງ ແບບຕາມພຣະລັກສະນະຂອງພຣະເຈົ້າ ໝາຍຄວາມວ່າແນວໃດ?
4. ມະນຸດທຸກຊາດເປັນເຊື້ອສາຍຂອງໃຜ?
5. ພຣະເຈົ້າມອບຫຍັງໃຫ້ອາດາມຄອບຄອງ?
6. ເປັນຫຍັງ ຜີສາດບໍ່ມີສິດຄອບຄອງໂລກ ແລະສິ່ງຕ່າງໆ ໃນໂລກ?
7. ໃນຄັ້ງທໍາອິດ ທີ່ພຣະເຈົ້າຊົງສ້າງແລ້ວ ທຸກສິ່ງທີ່ພຣະເຈົ້າສ້າງເປັນແນວໃດ?





ຍັງມີຄົນເຊັ່ນນັ້ນຢູ່ອີກຫລາຍ ພວກເຂົາບໍ່ຍອມຮັບຄໍາຂອງພຣະເຈົ້າ ເພາະສົນໃຈແຕ່ສິ່ງຂອງໃນໂລກນີ້ ພວກເຂົາຄິດສັ້ນ ບໍ່ສົນໃຈອະນາຄົດຂອງຈິດວິນຍານຂອງໂຕພວກເຂົາເອງ ເຮົາເປັນຄືຄົນເຫລົ່ານັ້ນບໍ່?

ແທ້ຈິງສິ່ງຂອງໃນໂລກນີ້ ຍັງບໍ່ຍັ້ງຍືນຢູ່ໄດ້ບໍ່ດົນ ບໍ່ມີໃຜສາມາດເອົາຫຍັງຈາກໂລກນີ້ຕິດໂຕໄປໄດ້ ແຕ່ທາງຂອງພຣະເຈົ້າທີ່ຕຽມໄວ້ສໍາລັບເຮົາ ເຊິ່ງບອກໄວ້ໃນພຣະຄໍາພີນັ້ນ ຈະນໍາເຮົາໄປເຖິງຊີວິດນິລັນດອນ

ດຽວນີ້ຊີດຂອງຊາຍຄົນນີ້ມີຄ່າ ຈາກທີ່ເມື່ອກ່ອນຖືກຜີລັງຄວນ ບໍ່ມີທີ່ເພິ່ງສິ້ນຄວາມຫວັງ ແລະລໍຄວາມຕາຍ ແຕ່ດຽວນີ້ລາວມີຊີວິດຢູ່ ເພື່ອຈະສໍາແດງສິ່ງທີ່ຍິ່ງໃຫຍ່ ແລະຊົງຄຸນຄ່າເຊິ່ງ ພຣະເຈົ້າໄດ້ກະທໍາໃນຊີວິດຂອງລາວ

**ທົບທວນ**

1. ເປັນຫຍັງພຣະເຢຊູຮູ້ສຶກເມື່ອຍ ຫິວກະຫາຍ ແລະຕ້ອງການພັກຜ່ອນຄືເຮົາ?
2. ເປັນຫຍັງພຣະເຢຊູຈຶ່ງສັ່ງໃຫ້ລົມພາຍຸ ແລະທະເລສະຫງົບໄດ້?
3. ເປັນຫຍັງພຣະເຢຊູຕໍາໜິພວກສາວົກ?
4. ຊາຍຜູ້ທີ່ມີຜີສິງນັ້ນ ຊ່ວຍໂຕເອງໃຫ້ພົ້ນຈາກຜີໄດ້ບໍ່? ແລະຄົນອື່ນຊ່ວຍລາວໄດ້ບໍ່?
5. ເຮົາຊ່ວຍໂຕເອງໃຫ້ພົ້ນຈາກການລັງຄວນຂອງມານຊາຕານ ແລະຜີຕ່າງໆ ໄດ້ບໍ່?
6. ຈາກເລື່ອງພຣະຄໍາພີຕອນນີ້ ເຮົາຮູ້ໄດ້ຢ່າງໃດວ່າຊາຕານແລະວິນຍານຊົ່ວຊັງມະນຸດ?
7. ໃຜທີ່ເປັນໃຫຍ່ກວ່າຊາຕານ ແລະວິນຍານຊົ່ວຕ່າງໆ?

**ພຣະເຢຊູມີອຳນາດເໜືອຜີ ແລະວິນຍານທຸກຢ່າງ**

**ມາລະໂກ 5:6-20**

ຜີທີ່ສິງຢູ່ຊາຍຄົນນີ້ ຮູ້ວ່າພຣະເຢຊູເປັນຜູ້ສ້າງມັນ ຮູ້ວ່າພຣະອົງເປັນພຣະບຸດຂອງພຣະເຈົ້າຜູ້ສູງສຸດ ແລະຮູ້ວ່າ ມື້ໜຶ່ງມັນຈະຕ້ອງຖືກພິພາກສາລົງໂທດ ມັນຢ້ານພຣະເຢຊູລົງໂທດມັນກ່ອນ ເວລາມັນຈຶ່ງໄດ້ອ້ອນວອນພຣະເຢຊູ ຂໍອະນຸຍາດເຂົ້າໄປສິງໃນໝູ ມັນຮູ້ສະພາບທີ່ແທ້ຈິງຂອງມັນວ່າ ມັນບໍ່ມີອຳນາດເໜືອພຣະເຢຊູ

ແທ້ທີ່ຈິງແລ້ວ ຊາຕານແລະວິນຍານຊົ່ວຕ່າງໆ ຮູ້ວ່າເວລາຂອງມັນເຫລືອນ້ອຍລົງ ມັນພະຍາຍາມທຳລາຍມະນຸດ ແຕ່ເມື່ອພຣະເຢຊູມາເພື່ອຈະຊ່ວຍມະນຸດ ເຮົາເຫັນວ່າ ມັນຍອມຢູ່ໃຕ້ອຳນາດຂອງພຣະເຢຊູ

ຊາຍທີ່ຖືກຜີສິງຄົນນີ້ ລາວໄດ້ຮັບການປົດປ່ອຍໃຫ້ພົ້ນຈາກຜີໂດຍອຳນາດຂອງພຣະເຢຊູເຈົ້າ ລາວບໍ່ຈຳເປັນຕ້ອງເຮັດໃນສິ່ງທີ່ຜີບັງຄັບໃຫ້ທຳອີກຕໍ່ໄປ ເພາະໄດ້ຢູ່ໃນການຄຸ້ມຄອງຂອງພຣະເຈົ້າ

ແລ້ວເຮົາທຸກຄົນກໍ່ເຊັ່ນດຽວກັນ ເຮົາເກີດມາຢູ່ໃຕ້ອຳນາດຂອງຊາຕານແລະຜີຕ່າງໆ ແຕ່ດຽວນີ້ພຣະເຢຊູພ້ອມທີ່ຈະຊ່ວຍເຮົາ ເຮົາບໍ່ຈຳເປັນຕ້ອງຢູ່ໃຕ້ບັງຄັບຂອງຊາຕານອີກ ສົມຄວນບໍ່ ທີ່ເຮົາຈະຢູ່ໃຕ້ອຳນາດຂອງມັນຕໍ່ໄປ?

ຫລັງຈາກທີ່ຊາຍຄົນນີ້ໄດ້ຫາຍເປັນປົກກະຕິແລ້ວ ຊາວບ້ານແຖບນັ້ນໄດ້ມາອ້ອນວອນພຣະອົງ ໃຫ້ອອກໄປຈາກໝູ່ບ້ານຂອງພວກເຂົາ ນີ້ສະແດງໃຫ້ເຫັນວ່າ ພວກເຂົາເປັນຄົນຄິດສັ້ນ ພວກເຂົາສົນໃຈເລື່ອງໝູ່ເຊິ່ງເປັນເລື່ອງຊີວິດໃນມື້ນີ້ ຫລາຍກວ່າຄວາມຈິງທີ່ຈະຊ່ວຍພວກເຂົາໃຫ້ພົ້ນຈາກອຳນາດຊາຕານ ຄວາມບາບແລະຄວາມຕາຍຍ້ຳທຸກມື້ນີ້





8. ພຣະເຈົ້າສຳແດງຄວາມຮັກ ແກ່ມະນຸດຢ່າງໃດ?
9. ເປັນຫຍັງພຣະເຈົ້າຈຶ່ງພັກວຽກງານຂອງພຣະອົງໃນວັນທີເຈັດ?

**ຄວາມຈິງທີ່ຕ້ອງເນັ້ນ**

- ມະນຸດຕ້ອງການພຣະເຈົ້າເປັນທີ່ເພິ່ງ
- ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງຮອບຮູ້ທຸກສິ່ງ ແລະເຕັມໄປດ້ວຍຄວາມຮັກ



**ບົດທີ 7**
**ອາດາມແລະເອວາ**
**ບໍ່ເຊື່ອຟັງພຣະເຈົ້າ**
**ປະຖົມມະການ 3:1-13**

**ສ້າງຄວາມສົນໃຈ**

ເຮົາເຄີຍຮູ້ສຶກອາຍເມື່ອຢູ່ໃກ້ຄົນອື່ນທີ່ແຕ່ງໂຕດີໆ ໃນເມື່ອເຮົາແຕ່ງໂຕບໍ່ດີບໍ່ຮຽບຮ້ອຍບໍ? ເມື່ອເຮົາຮູ້ສຶກອາຍເຊັ່ນນັ້ນ ເຮົາກ້າເຂົ້າຮ່ວມກັບຄົນທີ່ແຕ່ງໂຕດີໆຢ່າງນັ້ນບໍ່? ບາງຄັ້ງເຮົາຈຳເປັນຈະຕ້ອງແຍກໂຕອອກຈາກຄົນອື່ນເພາະຄວາມອັບອາຍຂາຍໜ້າ ນີ້ເປັນເລື່ອງທຳມະດາຂອງມະນຸດ ແຕ່ຖ້າເຮົາຕ້ອງຖືກແຍກອອກຈາກພຣະເຈົ້າຕະຫລອດໄປ ຈະເປັນສິ່ງທີ່ເຈັບປວດຫລາຍ

ມື້ນີ້ເຮົາຈະມາຮຽນຮູ້ນຳກັນວ່າ ເປັນຫຍັງມະນຸດຈຶ່ງຖືກແຍກອອກໄປຈາກພຣະເຈົ້າ?

**ຊາຕານເຂົ້າສິງຢູ່ໃນງູ**
**ປະຖົມມະການ 3:1**

ເມື່ອພຣະເຈົ້າສ້າງອາດາມ ແລະເອວາແລ້ວ ສອງຄົນນັ້ນຢູ່ຢ່າງສຸກສະບາຍໃນສວນຂອງພຣະເຈົ້າ ພຣະເຈົ້າເປັນເພື່ອນກັບພວກເຂົາ ແລະສະແດງຄວາມຮັກຕໍ່ເຂົາຢູ່ສະເໝີ ແຕ່ສັດຕູໂຕການຂອງພຣະເຈົ້າຮູ້ວ່າພຣະເຈົ້າຮັກສອງຄົນນັ້ນ ແລະຮູ້ວ່າ ພຣະອົງຫ້າມບໍ່ໃຫ້ສອງຄົນນັ້ນກິນ







ທີ່ເກີດຂຶ້ນກັບເຮົາ

**ມະນຸດຖືກລັງຄວນ ບໍ່ມີທີ່ເພິ່ງ**
**ມາລະໂກ 5:1-5**

ຊາຍຜູ້ນີ້ ບໍ່ສາມາດໜີໃຫ້ພົ້ນຈາກອຳນາດການຜູກມັດ ຂອງວິນຍານຊົ່ວເຫລົ່ານີ້ໄດ້ ມີຫລາຍຄົນໄດ້ພະຍາຍາມຊ່ວຍລາວ ແລະລ່າມລາວດ້ວຍໂສ້ ເພື່ອບໍ່ໃຫ້ລາວໜີໄປ ແຕ່ວິນຍານຊົ່ວທີ່ສິງໃນລາວ ມີພະລັງຫລາຍ ໄດ້ຫັກໂສ້ນັ້ນ ແລະບັງຄັບໃຫ້ຢູ່ຕາມອຸໂມງຝັງສົບ ບໍ່ມີຄວາມຫວັງສຳລັບຊາຍຄົນນີ້ ເບິ່ງຄືບໍ່ມີໃຜສາມາດຊ່ວຍລາວໄດ້

ເຮົາອາດຮູ້ສຶກສົງສານຄົນເຊັ່ນນີ້ ແລະດີໃຈທີ່ເຮົາບໍ່ໄດ້ໂຊກຮ້າຍຄືລາວ ແຕ່ແທ້ຈິງແລ້ວ ເຮົາທຸກຄົນທີ່ເກີດມາໃນໂລກນີ້ ລ້ວນແຕ່ຢູ່ໃຕ້ການຄອບງຳຂອງຊາຕານ ແລະຢູ່ໃນສະພາບສິ້ນຫວັງ ຄືຊາຍຄົນນີ້ ເຮົາທຸກຄົນຖືກຊາຕານຜູກມັດໄວ້ ຈົນກ່ວາຈະມີຜູ້ທີ່ສາມາດຊ່ວຍປົດປ່ອຍເຮົາໃຫ້ພົ້ນຈາກອຳນາດຂອງມັນ

ວິນຍານຊົ່ວ ຫລືຜີກຽດຊັງມະນຸດ ດັ່ງທີ່ເຮົາໄດ້ເຫັນມັນເຮັດກັບຄົນນີ້ ມັນມີເປົ້າໝາຍເພື່ອຈະທຳລາຍມະນຸດ ແຕ່ແທ້ຈິງ ເປັນການຕົບຕາໂດຍມີເບື້ອງຫລັງຢາກໃຫ້ມະນຸດຕົກຢູ່ໃຕ້ອຳນາດຂອງມັນ ເພື່ອຈະບໍ່ໃຫ້ມະນຸດຮູ້ຈັກພຣະເຈົ້າ ແລະຈະໄດ້ທຳລາຍມະນຸດ

ແມ້ນວ່າພຣະອົງເປັນພຣະເຈົ້າ ແຕ່ພຣະອົງກໍ່ເປັນມະນຸດແທ້ ນຳຮ່າງກາຍຂອງພຣະອົງກໍ່ຕ້ອງການພັກຜ່ອນ ຄືກັບພວກເຮົາ

ຝ່າຍພວກສາວົກກໍ່ຢ້ານຫລາຍ ຈຶ່ງຮ້ອງປຸກພຣະອົງບອກວ່າ "ເຮົາທັງຫລາຍກຳລັງຈະຈົມຢູ່ແລ້ວ ທ່ານບໍ່ເປັນຫ່ວງເລີຍຫວາ" ຄວາມຈິງເຮົາບໍ່ໜ້າຈະຖາມເຊັ່ນນີ້ ພວກເຂົາຄວນຈະຮູ້ແລ້ວວ່າ ພຣະເຢຊູຊົງເປັນຫ່ວງພວກເຂົາທຸກເວລາ

ພຣະເຢຊູຈຶ່ງລຸກຂຶ້ນຫ້າມລົມພາຍຸ ແລະກັບທະເລວ່າ "ຈົ່ງສະຫງົບເສຍ" ທັນໃດນັ້ນເອງ ຄື້ນລົມພະຍຸກໍ່ສະຫງົບງຽບທັນທີ ພວກສາວົກກໍ່ຢ້ານ ແລະປະຫລາດໃຈຫລາຍ

ເປັນຫຍັງພຣະເຢຊູຈຶ່ງມີອຳນາດຫ້າມລົມທະເລ ເປັນຫຍັງມັນຈຶ່ງເຊື່ອຟັງພຣະອົງ ຄືຄົນຂັບລົດທີ່ກຳລັງຂັບລົດຢູ່ເທິງທ້ອງທະໜົນ ເຊື່ອຟັງຕຳຫລວດຜູ້ໃຫ້ສັນຍານຈາລະຈອນ? ເຮົາບໍ່ຄວນລືມວ່າ ພຣະອົງເປັນຜູ້ສ້າງສາລະພັດທຸກສິ່ງ ພຣະອົງເປັນເຈົ້າຂອງລົມ ແລະທະເລ

ເມື່ອເດີມພຣະອົງສັ່ງໃຫ້ທະເລຖອຍອອກຈາກບົກ ເພື່ອໃຫ້ມີດິນແຫ້ງເກີດຂຶ້ນ ຖ້າເຮົາເປັນຜູ້ສ້າງສິ່ງໃດ ສິ່ງນັ້ນກໍ່ເປັນຂອງເຮົາ ແລະເຮົາກໍ່ສາມາດໃຊ້ສິ່ງນັ້ນໆ ໄດ້ຕາມໃຈຂອງເຮົາ ເຊັ່ນດຽວກັນ ພຣະເຢຊູເປັນຜູ້ສ້າງທຸກສິ່ງ ພຣະອົງກໍ່ສາມາດໃຊ້ສິ່ງເຫລົ່ານັ້ນ ຕາມພະປະສົງຂອງພຣະອົງ ຫລັງຈາກນັ້ນ ພຣະອົງຈຶ່ງຕຳນິສາວົກວ່າ ເປັນຫຍັງພວກເຂົາຈຶ່ງຢ້ານ ເປັນຫຍັງພວກເຂົາບໍ່ວາງໃຈໃນພຣະອົງ ແລະໃນພຣະບິດາຂອງພຣະອົງ? ພວກສາວົກລືມໄປວ່າ ພຣະເຈົ້າຊົງຄຸ້ມຄອງຢູ່ຕະຫລອດເວລາ ພຣະອົງຊົງຮູ້ທຸກສິ່ງທີ່ເກີດຂຶ້ນ ພຣະອົງຊົງຮູ້ທຸກສະຖານະການບໍ່ວ່າຮ້າຍຫລືດີ ພຣະອົງຊົງຄວບຄຸມຢູ່ດັ່ງນັ້ນ ເຮົາບໍ່ຕ້ອງຢ້ານສິ່ງໃດໆ





ໝາກໄມ້ຂອງຕົ້ນໄມ້ທີ່ໃຫ້ສຳນຶກໃນຄວາມດີແລະຄວາມຊົ່ວ ເຫດສັນນັ້ນຊາຕານຈຶ່ງວາງແຜນການ ທີ່ຈະທຳລາຍຄົນທັງສອງ ຜູ້ເຊິ່ງພຣະເຈົ້າໄດ້ສ້າງນັ້ນ

ງູເຊິ່ງໃນສະໄໝນັ້ນ ເປັນສັດທີ່ສະຫລາດຫລາຍ ງູໂຕນີ້ບໍ່ແມ່ນງູທຳມະດາ ແຕ່ຊາຕານໄດ້ເຂົ້າສິງຢູ່ໃນງູເພື່ອບໍ່ໃຫ້ເອວາຮູ້ ໂຕຊາຕານຄ່ອຍແຝງໂຕຢູ່ແບບນີ້ຕະຫລອດເວລາ ຄຳເວົ້າທີ່ມາຈາກຊາຕານມ່ວນ ແລະໜ້າຟັງ ແຕ່ຜູ້ທີ່ຍອມເຊື່ອມັນຈະເສຍໃຈໃນພາຍຫລັງ ບັນພະບູລຸດຂອງເຮົາບໍ່ຮູ້ໂຕວ່າ ຊາຕານໄດ້ລໍ້ລວງເຂົາມາຕັ້ງແຕ່ບູຮານມາເພື່ອໃຫ້ເຂົາເຊື່ອສິ່ງທີ່ບໍ່ຈິງ

ບາງຄັ້ງຊາຕານຈຶ່ງໃຊ້ຄົນອື່ນມາລໍ້ລວງເຮົາ ມາບອກເຮົາວ່າ "ຄຳສອນຂອງຜູ້ປະກາດນັ້ນບໍ່ແມ່ນຄວາມຈິງ" ຫລືອາດຈະເວົ້າວ່າ "ຄຳສອນຢ່າງນັ້ນມາຈາກຕ່າງປະເທດ ເຮົາມີປະເພນີຂອງເຮົາເອງ ຢ່າຟັງພວກນັ້ນເລີຍ" ຜູ້ທີ່ເວົ້າຢ່າງນັ້ນ ຄົງບໍ່ຮູ້ວ່າຊາຕານກຳລັງໃຊ້ເຂົາ ບາງຄັ້ງວິນຍານຊົ່ວທີ່ເປັນລູກນ້ອງຂອງຊາຕານອາດເວົ້າໂດຍວິທີຕ່າງໆ ແລະພະຍາຍາມທີ່ຈະບໍ່ໃຫ້ເຂົາເຊື່ອຄວາມຈິງຂອງພຣະເຈົ້າຜູ້ສ້າງເຮົາ ຊາຕານບໍ່ຢາກໃຫ້ເຮົາເຊື່ອພຣະຄຳພີ ແລະມັນຢາກໃຫ້ເຮົາຢູ່ພາຍໃຕ້ອຳນາດຂອງມັນຕໍ່ໄປ ມັນບໍ່ຢາກໃຫ້ໃຜເຊື່ອຟັງພຣະເຈົ້າ ເຮົາຕ້ອງລະວັງການລໍ້ລວງຂອງມັນຕະຫລອດເວລາ

**ຊາຕານລໍ້ລວງເອວາ**

**ປະຖົມມະການ 3:4**

ຄຳຖາມຂອງຊາຕານໃນປະຖົມມະການ 3:1 ສະແດງເຖິງວິທີການອັນສະຫລາດຂອງມັນ ທີ່ຈະໃຫ້ເອວາສົງໄສໃນຄວາມຮັກຂອງພຣະເຈົ້າ ພຣະເຈົ້າໄດ້ບອກອາດາມ ເຖິງເລື່ອງໝາກໄມ້ທີ່ລາວບໍ່ຄວນກິນ ຄຳສັ່ງທີ່

ມາເຖິງອາດາມເປັນຄຳສັ່ງທີ່ມາເຖິງເອວານຳ ອາດາມຕ້ອງສອນຄວາມຈິງຂອງພຣະເຈົ້າແກ່ຄົນໃນຄອບຄົວນຳ

ຄວາມຈິງທີ່ຂຽນໄວ້ໃນພຣະຄຳພີ ເປັນຄຳທີ່ພຣະເຈົ້າບອກແກ່ຄົນໃນສະໄໝບູຮານ ແຕ່ຍັງເປັນຄວາມຈິງແກ່ເຮົາໃນທຸກວັນນີ້ ພຣະເຈົ້າຢາກໃຫ້ເຮົາບອກຕໍ່ໆ ກັນໄປ ເພື່ອທຸກຄົນຈະໄດ້ຮູ້ ແລະເຊື່ອຟັງພຣະອົງ ພຣະອົງເປັນຜູ້ສ້າງມະນຸດທຸກຊາດ ທຸກພາສາທົ່ວໂລກ ດັ່ງນັ້ນຄຳເວົ້າຂອງພຣະເຈົ້າຈຶ່ງເປັນຄວາມຈິງສຳລັບທຸກຄົນ

ຂະນະທີ່ຊາຕານລໍ້ລວງເອວານັ້ນ ມັນອ້າງວ່າພຣະເຈົ້າເປັນຜູ້ຫລອກລວງ ປະຖົມມະການ 3:4 ມັນບອກວ່າ “ເຈົ້າຈະບໍ່ຕາຍແທ້ດອກ” ແຕ່ພຣະເຈົ້າໄດ້ບອກວ່າ “ຈະຕາຍແນ່ນອນ” ໝາຍຄວາມວ່າ ຈະຖືກແຍກອອກຈາກພຣະເຈົ້າ ເຮົາຄິດວ່າໃຜເວົ້າຄວາມຈິງ ພຣະເຈົ້າຫລືຊາຕານ?

**ເອວາກິນໝາກໄມ້ ທີ່ພຣະເຈົ້າຫ້າມ ແລະສົ່ງໃຫ້ຜົວກິນນຳ**
**ປະຖົມມະການ 3:1-6**

ຊາຕານເຄີຍຄິດທີ່ຈະຍົກຕົວເອງເປັນໃຫຍ່ເທົ່າທຽມກັບພຣະເຈົ້າ ປະຖົມມະການ 3:1-5 ເຮົາເຫັນວ່າ ຊາຕານລໍ້ລວງໂດຍເຮັດໃຫ້ເອວາເຫັນວ່າ ການກິນໝາກໄມ້ນັ້ນຈະເຮັດເອວາເທົ່າທຽມກັບພຣະເຈົ້າໄດ້ ມັນພະຍາມລໍ້ລວງເອວາໃຫ້ເຮັດບາບຢ່າງດຽວກັບມັນ

ເມື່ອເອວາສັງເກດເຫັນວ່າ ໝາກໄມ້ນັ້ນໜ້າກິນ ແລະຈະເຮັດໃຫ້ເອວາມີປັນຍາ ເອວາຈຶ່ງເກັບກິນ ແລ້ວສົ່ງໃຫ້ຜົວກິນນຳ ເມື່ອເອວາຖືກລໍ້ລວງແລ້ວ ທຳອິດທີ່ເອວາຢາກເຮັດ ຄືໃຫ້ຜົວກິນນຳ

ລັກສະນະຂອງຄົນບາບ ຄືຢາກໃຫ້ຄົນອື່ນເຮັດຜິດຮ່ວມກັບຕົນ







**ບົດທີ 25**
**ພຣະເຢຊູມີອຳນາດ**
**ເໜືອທຳມະຊາດ ແລະເໜືອຜີ**
**ມາລະໂກ 4:35-41**
**ມາລະໂກ 5:1-20**

**ສ້າງຄວາມສົນໃຈ**

ສົມມຸດວ່າ ໃນປ່າແຫ່ງໜຶ່ງມີພວກໂຈນຜູ້ຮ້າຍຊຸມ ຖ້າເຮົາຍ່າງຄົນດຽວໃນປ່າແຫ່ງນັ້ນ ຄົງຈະຢ້ານຫລາຍ ແຕ່ຖ້າເຮົາເດີນທາງພ້ອມກັບທະຫານກ້າຫານກອງໜຶ່ງ ຜູ້ມີອາວຸດດີໆ ທີ່ຈະປ້ອງກັນເຮົາ ເຮົາກໍ່ຄົງບໍ່ຢ້ານເລີຍ ເພາະພວກໂຈນນັ້ນ ຄົງບໍ່ກ້າປົ້ນເຮົາແນ່ນອນ ນອກຈາກໂຈນຮ້າຍພວກເຮົາຍັງມີສິ່ງອື່ນທີ່ເຮົາຢ້ານບໍ່? ເຮົາຢ້ານຜີບໍ່? ຮູ້ບໍ່ເຮົາຈະເຊົາຢ້ານຜີໄດ້ຢ່າງໃດ? ໃຜເປັນຜູ້ປ້ອງກັນເຮົາໃຫ້ພົ້ນຜີ?

**ພຣະເຢຊູມີອຳນາດເໜືອລົມພະຍຸ ແລະທະເລ**
**ມາລະໂກ 4:35-41**

ຫລັງຈາກທີ່ພຣະເຢຊູໄດ້ສອນເປັນຄຳອຸປະມາແລ້ວ ພຣະອົງໄດ້ຊວນພວກສາວົກ ຂ້າມທະເລກາລີເລ ໄປອີກຟາກໜຶ່ງ ຂະນະທີ່ພວກເຂົາຢູ່ຖ່າມກາງທະເລນັ້ນ ມີພະຍຸໃຫຍ່ເກີດຂຶ້ນ ຄື້ນກໍ່ຊັດເຂົ້າໄປໃນເຮືອຈົນເຮືອເກືອບຈະຈົມຢູ່

ແລ້ວຝ່າຍພຣະເຢຊູຍັງຫລັບຢູ່ ເພາະເມື່ອຍມາຕະຫລອດໝົດມື້

1. ໃນຕອນທຳອິດພວກຜີເຄີຍເປັນຫຍັງ?
2. ເປັນຫຍັງພຣະເຢຊູມີອຳນາດເໜືອຜີປີສາດ ແລະໂລກທຸກສະນິດ?

**ຄວາມຈິ່ງທີ່ຕ້ອງເນັ້ນ**

- ຊາຕານຕໍ່ຕ້ານພຣະເຈົ້າ ແລະແຜນການຂອງພຣະອົງສະເຫມີ
- ພຣະເຢຊູຄຣິດເປັນມະນຸດແທ້
- ພຣະເຢຊູຄຣິດຊົງບໍລິສຸດ ແລະຊອບທຳ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າສື່ສານກັບມະນຸດ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າ ແລະວາງໃຈໃນພຣະອົງ ຈິ່ງຈະເປັນທີ່ພໍພຣະໄທຂອງພຣະອົງ





ອາດາມຮູ້ວ່າ ລາວບໍ່ຄວນກິນ ແຕ່ລາວບໍ່ຢາກເພິ່ງພຣະເຈົ້າຕໍ່ໄປ ຢາກຕັດສິນໃຈເອງວ່າ ແມ່ນຫຍັງດີແມ່ນຫຍັງຊົ່ວ ອາດາມບໍ່ໄດ້ຖືກລໍ້ລວງ ແຕ່ຕັ້ງໃຈເຮັດຜິດ ອາດາມບໍ່ໄດ້ຊ່ວຍເມຍ ແລະຍິ່ງໄປກວ່ານັ້ນ ລາວໄດ້ຕັດສິນໃຈເຮັດບາບເອງເສຍ

ພຣະເຈົ້າມີສິດທີ່ຈະຄອບຄອງຊີວິດຂອງອາດາມແລະເອວາເພາະພຣະອົງເປັນຜູ້ສ້າງເຂົາ ສະໄໝຂອງເຮົານີ້ພຣະເຈົ້າມີສິດທີ່ຈະຄອບຄອງຊີວິດເຮົາບໍ່? ທຸກສິ່ງມາຈາກພຣະເຈົ້າ ລວມທັງຊີວິດຂອງເຮົານຳ ເຫດສະນັ້ນພຣະເຈົ້າຈິ່ງສົມຄວນເປັນເຈົ້ານາຍຂອງເຮົາ

**ຜົນທີ່ເກີດຂຶ້ນຈາກຄວາມບາບຂອງ ອາດາມແລະເອວາ**

**ປະຖົມມະການ 3:7&8**

ພຣະເຈົ້າບອກວ່າ ຜູ້ທີ່ກິນໝາກໄມ້ທີ່ພຣະອົງຫ້າມນັ້ນ ຈະຕ້ອງຕາຍແນ່ນອນ ໃນປະຖົມມະການ 3:7 ເຮົາບໍ່ເຫັນວ່າ ສອງຄົນນັ້ນໄດ້ລົ້ມຕາຍທັນທີ ເຂົາໄດ້ໄປຫາໃບໄມ້ມາຫຍິບ ແລະນຸ່ງເພື່ອປົກປິດຮ່າງກາຍທີ່ເຂົາຮູ້ສຶກເປືອຍກາຍຢູ່ນັ້ນ ແຕ່ໃບໄມ້ນັ້ນບໍ່ສາມາດຊ່ວຍເຂົາໃຫ້ເຊົາຈາກຄວາມຮູ້ສຶກອາຍໄດ້

ເລື່ອງນີ້ຊີ້ໃຫ້ເຫັນວ່າ ມະນຸດພະຍາຍາມແກ້ໄຂຄວາມຜິດບາບຂອງຕົນເອງ ແຕ່ເຂົາບໍ່ສາມາດແກ້ໄຂຫຍັງໄດ້ ແມ່ນວ່າສອງຄົນນັ້ນບໍ່ຕາຍທັນທີ ແຕ່ສອງຄົນນັ້ນໄດ້ຕາຍຝ່າຍວິນຍານແລ້ວ ຄືຖືກແຍກອອກຈາກພຣະເຈົ້າໄປ ພຣະເຈົ້າເວົ້າຄວາມຈິງສະເໝີ ພຣະອົງຈະຕ້ອງລົງໂທດຕໍ່ຄວາມບາບແນ່ນອນ

ມະນຸດສອງຄົນນັ້ນ ໄດ້ປ່ຽນແປງໄປຈາກເດີມທັນທີ ຄືເຂົາຮູ້ສຶກອາຍຈາກທີ່ເຂົາບໍ່ເຄີຍຮູ້ສຶກອາຍມາກ່ອນ ແຕ່ເມື່ອເຂົາເຮັດຜິດແລ້ວ ເຂົາບໍ່

ຢາກໃຫ້ພຣະເຈົ້າເຫັນເຂົາ ນອກຈາກນັ້ນເຂົາພະຍາຍາມເຊື່ອງໂຕຈາກພຣະເຈົ້າ (3:8) ນີ້ສະແດງວ່າ ເຂົາຢາກມີຊີວິດໂດຍບໍ່ເພິ່ງພຣະເຈົ້າແລ້ວ ພຣະເຈົ້າຍັງຮັກອາດາມແລະເອວາຢູ່ ແຕ່ສອງຄົນນັ້ນເຂົາເຮັດຜິດແລ້ວຖ້າຖືກແຍກອອກຈາກພຣະເຈົ້າແລ້ວ ເຂົາບໍ່ຢາກສົນທະນາກັບພຣະເຈົ້າເໝືອນແຕ່ກ່ອນ ເຂົາບໍ່ເປັນມິດກັບພຣະເຈົ້າແລ້ວ ແຕ່ໄດ້ຕົກຢູ່ໃນອິດທິພົນຂອງຊາຕານ ເມື່ອເຂົາເຮັດຜິດແລ້ວ ເຂົາກໍ່ຢ້ານພຣະເຈົ້າ

ຄວາມຢ້ານໃນໂລກນີ້ເກີດຂຶ້ນ ເພາະຄວາມບາບ ກ່ອນເຮັດຜິດອາດາມແລະເອວາ ບໍ່ມີຄວາມຢ້ານເລີຍ ໃນສະໄໝນີ້ພວກເຮົາມີຄວາມຢ້ານອັນໃດແນ່ບໍ່?

ທ່ານຄິດວ່າ ພຣະເຈົ້າຈະລົງໂທດ ອາດາມແລະເອວາແທ້ບໍ່? ພຣະເຈົ້າເໝືອນບາງຄົນທີ່ຂູ່ລູກວ່າຈະຊ້ຽນຕີ ແຕ່ບໍ່ໄດ້ຕີແທ້ໆ ບໍ່? ເມື່ອລູຊິເຟີເຮັດຜິດ ພຣະເຈົ້າພຽງແຕ່ຂູ່ແຕ່ບໍ່ເຮັດຫຍັງແກ່ມັນຫລື? ບໍ່! ພຣະເຈົ້າບໍ່ເໝືອນມະນຸດ ພຣະອົງບໍ່ເຄີຍລືມສິ່ງທີ່ພຣະອົງໄດ້ບອກໄວ້ແລ້ວເມື່ອພຣະອົງບອກໄວ້ວ່າຈະລົງໂທດ ກໍຕ້ອງລົງໂທດແທ້ ເຫດສັນນັ້ນ ອາດາມແລະເອວາຈຶ່ງຈຳເປັນຕ້ອງຢ້ານພຣະເຈົ້າ ທຸກສິ່ງທີ່ອາດາມມີ ແມ່ນແຕ່ລົມຫາຍໃຈຂອງລາວ ກໍ່ມາຈາກພຣະເຈົ້າທັງສິ້ນ ເມື່ອອາດາມຕັ້ງໃຈຝ່າຝືນຄຳສັ່ງຂອງພຣະເຈົ້າ ພຣະອົງຈຳເປັນຕ້ອງລົງໂທດລາວ
ພຣະເຈົ້າຈຳເປັນຕ້ອງລົງໂທດແກ່ຜູ້ທີ່ຝ່າຝືນຄຳສັ່ງຂອງພຣະອົງສະເໝີ

ມະນຸດເຊື່ອງໂຕຈາກພຣະເຈົ້າໄດ້ບໍ່? ບໍ່ໄດ້! ເມື່ອອາດາມແລະເອວາພະຍາຍາມເຊື່ອງໂຕ ໃນຖ່າມກາງພຸ່ມໄມ້ນັ້ນ ພຣະເຈົ້າຍັງເຫັນເຂົາຢູ່ຕະຫລອດເວລາ ຖ້າເຊັ່ນນັ້ນ ເຮົາຈະໜີໄປຈາກພຣະເຈົ້າໄດ້ບໍ່? ເຮົາຈະໄປຢູ່ໃສທີ່ພຣະເຈົ້າບໍ່ຢູ່? ພຣະເຈົ້າຢູ່ທຸກຫົນທຸກແຫ່ງ ແລະເບິ່ງເຫັນທຸກເຫດການທີ່ເກີດຂຶ້ນ ສຳລັບພຣະເຈົ້າບໍ່ມີບ່ອນມືດ ທຸກບ່ອນກະຈ່າງແຈ້ງ





ຮູ້ວ່າ ຕໍ່ໄປພຣະອົງຈະຖິ້ມມັນລົງໃນບຶງໄຟ ພຣະເຢຊູບໍ່ຍອມໃຫ້ຜີເປັນຜູ້ປະກາດເລື່ອງຂອງພຣະອົງ ຈຶ່ງໄລ່ມັນອອກຈາກຜູ້ທີ່ມັນສິງຢູ່ ແລະຜີປີສາດນັ້ນ ກໍ່ຕ້ອງເຊື່ອຟັງພຣະເຢຊ

ພຣະເຢຊູມີຄວາມເມດຕາຕໍ່ຜູ້ທີ່ຖືກຜີສິງ ແລະຜູ້ທີ່ມີໂລກໄພໄຂ້ເຈັບດ້ວຍ ແມ້ນແຕຜູ້ທີ່ຕິດໂລກເຮື້ອນ ເຊິ່ງເປັນໂລກທີ່ທຸກຄົນລັງກຽດຫລາຍພຣະອົງກໍ່ຍອມເອົາມືແຕະຕ້ອງພວກເຂົາ ແລະໂລກນັ້ນກໍ່ໄດ້ຫາຍໂດຍປົກກະຕິແລ້ວ ຄົນທີ່ຕິດໂລກເຮື້ອນຢ່າງນັ້ນ ບໍ່ມີທາງທີ່ຈະຫາຍເລີຍແຕ່ບໍ່ມີຫຍັງທີ່ຍາກເກີນໄປສຳລັບພຣະເຢຊູ ເພາະພຣະອົງເປັນພຣະເຈົ້າແທ້

ເຊັ່ນດຽວກັນ ພວກເຮົາກໍ່ຕິດສິ່ງທີ່ພຣະເຈົ້າຊິງຊັງທີ່ສຸດ ຄືຄວາມບາບ ເຊິ່ງໂທດແຫ່ງຄວາມບາບນັ້ນ ຄືຄວາມຕາຍນິລັນດອນ ບໍ່ມີໃຜທີ່ຈະຊ່ວຍເຮົາໃຫ້ພົ້ນຈາກຄວາມບາບໄດ້ ນອກຈາກພຣະເຢຊູ ເຮົາຕ້ອງຮຽນຕໍ່ໄປເພື່ອຈະຮູ້ວ່າພຣະເຢຊູໄດ້ເຮັດຢ່າງໃດທີ່ຈະໃຫ້ເຮົາພົ້ນຈາກຊາຕານ, ຄວາມບາບ ແລະຄວາມຕາຍ

**ທົບທວນ**

1. ເປັນຫຍັງຊາຕານຈຶ່ງທົດລອງພຣະເຢຊູ?
2. ເມື່ອພຣະເຢຊູຫິວແຮງ ເປັນຫຍັງພຣະອົງບໍ່ເຮັດໃຫ້ກ້ອນຫີນກາຍເປັນຂະໜົມປັງ?
3. ຊາຕານຮູ້ພຣະຄຳພີບໍ່?
4. ຊາຕານບອກວ່າ ຈະມອບອຳນາດຄອບຄອງໂລກໃຫ້ແກ່ພຣະເຢຊູຖ້າພຣະເຢຊູຍອມເຮັດຫຍັງ?
5. ໃນອະນາຄົດພຣະເຢຊູຈະຈັດການກັບຊາຕານຢ່າງໃດ?
6. ພຣະເຢຊູບອກປະຊາຊົນວ່າ ພວກເຂົາຕ້ອງເຮັດສອງຢ່າງຄືຫຍັງ?



ຈະເຫັນກັບພຣະເຈົ້າແລ້ວ ແລະເຊື່ອຂ່າວປະເສີດຂອງພຣະອົງ ຂ່າວປະ ເສີດນີ້ມາເຖິງທຸກຄົນ ຖ້າເຮົາເຊື່ອແລະວາງໃຈໃນພຣະອົງ ເຮົາຈະພົ້ນຈາກຊາຕານ ແລະຈະໄດ້ເປັນມິດສະຫາຍກັບພຣະເຈົ້າ

**ພຣະເຢຊູເອີ້ນບາງຄົນໃຫ້ເຮັດວຽກຮ່ວມກັບພຣະອົງ**

**ມັດທາຍ 4:18-22**

ພຣະເຢຊູມີແຜນການທີ່ຈະໃຊ້ມະນຸດ ເພື່ອໃຫ້ພັນທະກິດຂອງພຣະອົງສຳເລັດ ເຫດສັນນັ້ນ ຈິ່ງເອີ້ນບາງຄົນໃຫ້ຕິດຕາມພຣະອົງ ເພື່ອພຣະອົງຈະໄດ້ສັ່ງສອນຄົນເຫລົ່ານັ້ນ ແລະສົ່ງພວກເຂົາອອກໄປປະກາດຂ່າວປະເສີດແກ່ຄົນອື່ນຕໍ່ໄປ

**ສິດທິອຳນາດຂອງພຣະເຢຊູ**

**ມັດທາຍ 4:23-25**

ສ່ວນພຣະເຢຊູ ພຣະອົງຮູ້ຄວາມຫມາຍຂອງພຣະຄຳພີທຸກພຣະຄຳເພາະເປັນຄຳຂອງພຣະອົງເອງ ແລະພຣະອົງສອນດ້ວຍລິດອຳນາດເພາະພຣະອົງຊົງເປັນພຣະເຈົ້າ

ນອກຈາກນັ້ນ ພຣະອົງມີອຳນາດເໜືອຜີປີສາດທຸກໂຕດ້ວຍ ທີ່ຈິງຜີເຫລົ່ານີ້ເປັນທູດສະຫວັນທີ່ໄດ້ກະບົດຕໍ່ພຣະເຈົ້າ ແລະຕິດຕາມຊາຕານມັນຮູ້ຈັກພຣະເຢຊູ ແລະຮູ້ວ່າພຣະອົງເປັນອົງບໍລິສຸດຂອງພຣະເຈົ້າ ມັນ





ສະເໝີ ບໍ່ມີໃຜສາມາດເຊື່ອງຫຍັງຈາກພຣະເຈົ້າໄດ້

ພຣະເຈົ້າເວົ້າຄວາມຈິງສະເໝີ ແຕ່ຊາຕານເປັນຜູ້ຫລອກລວງມະນຸດນອກຈາກນັ້ນ ມັນຍັງເປັນຜູ້ຂ້າຄົນ ເພາະສະນັ້ນ ເຮົາຕ້ອງລະວັງເພື່ອບໍ່ໃຫ້ຊາຕານລໍ້ລວງເຮົາໄດ້ ຊາຕານຢາກໃຫ້ເຮົາຖືກແຍກອອກຈາກພຣະເຈົ້າຊົ່ວນິລັນດອນ

**ພຣະເຈົ້າເອີ້ນອາດາມ**

**ປະຖົມມະການ 3:9**

ໃນປະຖົມມະການ 3:9 ເຮົາເຫັນວ່າ ເມື່ອອາດາມກັບເມຍ ບໍ່ອອກມາຕ້ອນຮັບພຣະເຈົ້າເຊັ່ນເຄີຍ ພຣະເຈົ້າຈິ່ງເອີ້ນອາດາມ ແລະຖາມວ່າ "ເຈົ້າຢູ່ໃສ?" ທີ່ຖາມເຊັ່ນນີ້ ບໍ່ແມ່ນວ່າພຣະເຈົ້າບໍ່ຮູ້ ແຕ່ພຣະອົງຍັງຮັກອາດາມແລະເອວາ ພຣະເຈົ້າຢາກຈະໃຫ້ເຂົາຍອມຮັບສະພາບຄວາມຜິດຂອງຕົນ

ພຣະອົງຍັງເອີ້ນມະນຸດໃນສະໄໝຂອງເຮົານຳ ພຣະອົງເອີ້ນເຮົາໂດຍທາງສິ່ງທີ່ພຣະອົງໄດ້ຊົງສ້າງຂຶ້ນ ສິ່ງເຫລົ່ານັ້ນ ສະແດງເຖິງຄວາມຍິ່ງໃຫຍ່ຂອງພຣະອົງ ເປັນເໝືອນສຽງຂອງພຣະເຈົ້າ ທີ່ເວົ້າກັບເຮົາວ່າ "ເຮົາເປັນຜູ້ສ້າງສິ່ງທັງປວງໄວ້ເພາະເຮົາຮັກເຈົ້າ ສິ່ງເຫລົ່ານີ້ສະແດງເຖິງລິດອຳນາດຂອງເຮົາ ຈົ່ງຟັງສຽງຂອງເຮົາແລະມາຫາເຮົາ"

ເມື່ອເຮົາເຫັນສິ່ງຕ່າງໆ ໃນທ້ອງຟ້າແລະໃນແຜ່ນດິນໂລກ ເຮົາໜ້າຈະລະນຶກວ່າ ພຣະເຈົ້າຜູ້ສ້າງສິ່ງທັງປວງ ກຳລັງເອີ້ນເຮົາໃຫ້ມາຟັງສຽງຂອງພຣະອົງ

ນອກຈາກການເວົ້າຜ່ານສິ່ງທີ່ພຣະອົງໄດ້ສ້າງໄວ້ນັ້ນ ພຣະເຈົ້າຍັງ

ເວົ້າກັບເຮົາຜ່ານທາງພຣະຄຳພີ ເຊິ່ງເປັນຄຳເວົ້າຂອງພຣະເຈົ້າ ທີ່ເວົ້າກັບເຮົາທຸກຄົນ ພຣະຄຳພີເປັນເລື່ອງສຳຄັນຢ່າງຍິ່ງ ທີ່ເຮົາຕ້ອງຟັງໃຫ້ເຂົ້າໃຈ ແລະເຊື່ອເພາະເປັນສິ່ງທີ່ມາຈາກພຣະເຈົ້າ ແລະເປັນຄຳຂອງພຣະເຈົ້າ

**ອາດາມ ແລະເອວາ ພະຍາຍາມໂຍນຄວາມຜິດໃຫ້ຜູ້ອື່ນ**

**ປະຖົມມະການ 3:9-13**

ເມື່ອອາດາມເຫັນວ່າ ພຣະເຈົ້າໄດ້ຮູ້ເຖິງຄວາມຜິດຂອງຕົນແລ້ວ ອາດາມພະຍາຍາມໂຍນຄວາມຜິດໃສ່ເມຍຂອງຕົນລວມທັງພະເຈົ້າດ້ວຍ ລາວບໍ່ຍອມສາລະພາບຄວາມຜິດບາບ ທີ່ຕົນເອງໄດ້ກະທຳໄປ ເອວາກໍ່ເຮັດເຊັ່ນດຽວກັນ ພະຍາຍາມໂຍນຄວາມຜິດໃສ່ງູ

ມີຂໍ້ໜ້າສັງເກດວ່າ ມະນຸດທີ່ຖືກຈັບເພາະເຮັດຜິດ ມັກພະຍາຍາມໂຍນຄວາມຜິດໃສ່ຄົນອື່ນສະເໝີ ບາງເທື່ອຜູ້ທີ່ບໍ່ມີຄວາມຜິດອາດໄດ້ຮັບໂທດ ເພາະຜູ້ທີ່ໄດ້ເຮັດຜິດແທ້ນັ້ນເປັນຄົນເວົ້າເກັ່ງ ຫລືເປັນຜູ້ທີ່ມີອິດທິພົນ ບາງເທື່ອມະນຸດອາດຈະເວົ້າຕົວະຄົນອື່ນ ໃນເລື່ອງທີ່ບໍ່ເປັນຄວາມຈິງໄດ້ ແຕ່ບໍ່ມີໃຜສາມາດຫລອກລວງພຣະເຈົ້າໄດ້ ບໍ່ມີໃຜຈະພົ້ນຈາກຄວາມບາບຂອງຕົນ ໂດຍການໂຍນຄວາມຜິດໃສ່ຄົນອື່ນ ກົງກັນຂ້າມເຂົາຈະຕ້ອງຮັບໂທດຫລາຍຂຶ້ນ ເມື່ອເຖິງຄາວພຣະເຈົ້າຊົງພິພາກສາ ພຣະເຈົ້າຈະລົງໂທດ ດ້ວຍຄວາມຍຸດຕິທຳໃນທຸກກໍລະນີ

**ທົບທວນ ບົດທີ 7**

1. ເມື່ອຊາຕານລໍ້ລວງມະນຸດ ມັນມາໃນຮູບແບບໃດເພື່ອບໍ່ໃຫ້ເອວາຮູ້ວ່າມັນເປັນໃຜ?
2. ພຣະເຈົ້າບອກວ່າ ຖ້າກິນໝາກໄມ້ທີ່ພຣະອົງຫ້າມນັ້ນຈະຕ້ອງຕາຍ





ເມື່ອຊາຕານບໍ່ສາມາດຊະນະ ພຣະເຢຊູໄດ້ ມັນຈຶ່ງປະພຣະອົງໄວ້ກ່ອນ ແຕ່ພາຍຫລັງມັນມາອີກ ແລະທົດລອງພຣະເຢຊູອີກຫລາຍຄັ້ງ ມີແຕ່ພຣະເຢຊູຄົນດຽວເທົ່ານັ້ນ ທີ່ບໍ່ເຄີຍແພ້ການທົດລອງຂອງຊາຕານ ແມ້ນແຕ່ຄັ້ງດຽວ

ພຣະອົງເປັນພຣະເຈົ້າ ແລະເປັນມະນຸດແທ້ ມີພຣະອົງຜູ້ດຽວເທົ່ານັ້ນ ທີ່ຈະຊ່ວຍເຮົາໃຫ້ພົ້ນຈາກອຳນາດຊາຕານ, ຄວາມບາບ ແລະຄວາມຕາຍໄດ້

**ພຣະເຢຊູເລີ່ມສັ່ງສອນ**

**ມັດທາຍ 4:17**

ບັດນີ້ເຖິງເວລາທີ່ພຣະເຢຊູສັ່ງສອນແລ້ວ ພຣະອົງມີອາຍຸ 30 ປີເຕັມ ພຣະອົງໄດ້ສັ່ງສອນປະຊາຊົນໃຫ້ປ່ຽນທ່າທີໃນໃຈ ໂດຍການເຫັນດ້ວຍກັບພຣະເຈົ້າໃນເລື່ອງທີ່ພວກເຂົາເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ແລະຕ້ອງເຊື່ອຂ່າວປະເສີດທີ່ພຣະເຢຊູໄດ້ສຳແດງ ແລະບອກໃຫ້ພວກເຂົາຮູ້ ຖ້າເຮົາບໍ່ເຊື່ອຄຳຂອງພຣະເຈົ້າເຮົາຈະເປັນທີ່ພໍພຣະໄທຂອງພຣະອົງບໍ່ໄດ້

ພຣະເຢຊູບອກປະຊາຊົນວ່າ ພວກເຂົາຕ້ອງເຊື່ອຂ່າວປະເສີດ ເພາະເວລາທີ່ພຣະເຈົ້າຈະມາຄອບຄອງມະນຸດໃກ້ຈະເຖິງແລ້ວ ໃນອາດີດອາດາມບໍ່ເຊື່ອຟັງພຣະເຈົ້າ ຈຶ່ງເຮັດໃຫ້ຊາຕານເປັນຜູ້ຄອບຄອງໂລກ ແຕ່ເພາະພຣະເຈົ້າມີຄວາມຮັກຄວາມເມດຕາຕໍ່ຄົນບາບ ພຣະອົງໄດ້ສົ່ງພຣະເຢຊູ ເຂົ້າມາໃນໂລກ ເພື່ອຈະທຳລາຍອຳນາດຊາຕານ ແລະຊ່ວຍໃຫ້ມະນຸດພົ້ນຈາກອຳນາດຂອງມັນ

ເຮົາທຸກຄົນເກີດມາໃນໂລກ ຕົກຢູ່ໃຕ້ອຳນາດຂອງມັນໄດ້ ນອກຈາກ

ໃຫ້ມະນຸດຫລົງໄປຈາກພຣະເຈົ້າ

ຊາຕານໃຊ້ຄຳເວົ້າຂອງພຣະເຈົ້າເພື່ອລໍ້ລວງນາງເອວາ ມັນບິດເບືອນຄວາມໝາຍຂອງສິ່ງທີ່ພຣະເຈົ້າເວົ້າໄວ້ໃຫ້ພົ້ງນໄປ ຊາຕານເປັນຜູ້ລໍ້ລວງມະນຸດ ແລະຢາກໃຫ້ພວກເຂົາສະແຫວງຫາການອັດສະຈັນ ແທນທີ່ຈະເຊື່ອພຣະຄຳຂອງພຣະເຈົ້າຢ່າງຖືກຕ້ອງ ແຕ່ພຣະເຢຊູບໍ່ຟັງຄຳຂອງຊາຕານ ພຣະເຢຊູໃຊ້ພຣະຄຳພີຢ່າງຖືກຕ້ອງ ພຣະອົງບໍ່ສົງໃສໃນຄວາມຈິ່ງຂອງພຣະເຈົ້າ ແລະບໍ່ຈຳເປັນຕ້ອງມີການສະແດງພິເສດແປກໆ ກອ່ນ

**4:8-11** ການທົດລອງປະການທີສາມ ຊາຕານທີ່ພະຍາຍາມໃຊ້ພຣະເຢຊູ ກາບລົງນະມັດສະການມັນ ຫລັງຈາກທີ່ອາດາມໄດ້ເຮັດຜິດແລ້ວ ອຳນາດຄອບຄອງມະນຸດໂລກຕົກຢູ່ໃນມືຂອງຊາຕານ ດັ່ງນັ້ນຊາຕານຈຶ່ງເປັນເຈົ້າແຫ່ງໂລກນີ້ ມັນມີອິດທິພົນເໜືອມະນຸດທຸກຊາດ ມັນບອກວ່າ ຈະໃຫ້ອຳນາດທັງໝົດແກ່ພຣະເຢຊູ ແຕ່ພຣະເຢຊູຕ້ອງກາບໄຫ້ວມັນກ່ອນ ຊາຕານຍາດຊີງຕຳແໜ່ງຂອງພຣະເຈົ້າຕັ້ງແຕ່ທຳອິດ ແລະໃນຄັ້ງນີ້ ຊາຕານຢາກໃຫ້ພຣະເຢຊູນະມັດສະການມັນແທນນະມັດສະການພຣະເຈົ້າ ພຣະເຢຊູ ຊະນະຊາຕານໂດຍການໃຊ້ພຣະຄຳຂອງພຣະເຈົ້າ ພຣະເຢຊູ ບໍ່ແພ້ຊາຕານຢ່າງທີ່ອາດາມໄດ້ແພ້ມັນ ໃນສວນເອເດນ ພຣະເຢຊູເຊື່ອຟັງພຣະບິດາສະເໝີ

ເຮົາບໍ່ຄວນລືມວ່າ ພຣະເຢຊູເປັນພຣະເຈົ້າທ່ຽງແທ້ ແລະມີອຳນາດເໜືອຊາຕານ ອຳນາດແຫ່ງຄວາມຊົ່ວ ອາດເບິ່ງຄືເປັນອຳນາດໃຫຍ່ແລະໜ້າຢ້ານ ແຕ່ທີ່ຈິ່ງແລ້ວ ບໍ່ສາມາດທຽບກັບອຳນາດຂອງພຣະເຈົ້າໄດ້ເລີຍ ຈະມີວັນໜຶ່ງ ທີ່ພຣະເຢຊູຄຣິດ ຈະໂຍນຊາຕານ ແລະສະໝຸນຂອງມັນເຂົ້າໄປໃນບຶງໄຟ ທີ່ພຣະເຈົ້າໄດ້ຕຽມໄວ້ແລ້ວ





ແຕ່ຊາຕານໄດ້ບອກວ່າຢ່າງໃດ?

3. ໃນສະໄໝຂອງເຮົານີ້ ຊາຕານໃຊ້ຫຍັງເພື່ອລໍ້ລວງມະນຸດ?
4. ເປັນຫຍັງຊາຕານຈຶ່ງບໍ່ຢາກໃຫ້ເຮົາເຊື່ອພຣະຄຳຂອງພຣະເຈົ້າ?
5. ອາດາມຢາກຕັດສິນໃຈເອງໃນເລື່ອງຫຍັງ?
6. ເມື່ອອາດາມແລະເອວາເຮັດຜິດແລ້ວ ເຂົາເຮັດຫຍັງຕໍ່?
7. ມະນຸດເຊື່ອງໂຕໃຫ້ພົ້ນຈາກພຣະເຈົ້າໄດ້ບໍ່?
8. ຖ້າພຣະເຈົ້າຮູ້ທີ່ຢູ່ຂອງອາດາມ ເປັນຫຍັງພຣະອົງຈິ່ງເອີ້ນລາວ?
9. ອາດາມພະຍາຍາມເຮັດຫຍັງເພື່ອຈະໃຫ້ພົ້ນຜິດ?

**ຄວາມຈິງທີ່ຕ້ອງເນັ້ນ**

- ຊາຕານຕໍ່ຕ້ານພຣະເຈົ້າ ແລະແຜນການຂອງພຣະອົງສະເໝີ
- ຊາຕານເປັນຜູ້ລໍ້ລວງ ແລະກຽດຊັງມະນຸດ
- ມະນຸດເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍ ເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ



## ບົດທີ 8
## ພຣະສັນຍາຂອງພຣະເຈົ້າ ແລະຄຳສາບແຊ່ງ
## ປະຖົມມະການ 3:14-24

ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ

**ສ້າງຄວາມສົນໃຈ**

ມີຄົນຂັບລົດເມຄົນໜຶ່ງໄດ້ຂຽນຄຳນີ້ໄວ້ຫລັງເບາະທີ່ນັ່ງຂອງລາວວ່າ "ມະນຸດພາດສະເໝີ ເທວະດາຕ້ອງໃຫ້ອະໄພ" ຕາມຄວາມຄິດຂອງຄົນຂັບລົດຜູ້ນີ້ ທຸກຄັ້ງທີ່ມະນຸດເຮັດຜິດ ຜູ້ຄອບຄອງຕ້ອງບໍ່ເອົາເລື່ອງ ມີຫລາຍຄົນຄິດຢ່າງນີ້

ມະນຸດສ່ວນຫລາຍບໍ່ເຂົ້າໃຈເຖິງຄວາມບໍລິສຸດຂອງພຣະເຈົ້າ ພຣະອົງບໍ່ສາມາດໃຫ້ຄວາມບາບຢູ່ກັບພຣະອົງເລີຍ ພຣະອົງຕ້ອງຈັດການກັບຄວາມບາບ ມອງຂ້າມບໍ່ໄດ້

**ພຣະເຈົ້າສາບແຊ່ງງູ ແຕ່ໃຫ້ພຣະສັນຍາ ກ່ຽວກັບພົງພັນຂອງຍິງ**
**ປະຖົມມະການ 3:14-15**

ໃນປະຖົມມະການ 3:14-15 ເຮົາພົບພຣະສັນຍາຂອງພຣະເຈົ້າ ທີ່ສຳຄັນຫລາຍ ພຣະເຈົ້າສາບແຊ່ງງູ ເຊິ່ງເຄີຍເປັນສັດສະຫລາດ ແລະມີຕີນເໝືອນສັດອື່ນໆ ຕັ້ງແຕ່ນັ້ນມາ ມັນຕ້ອງເລືອໄປດ້ວຍທ້ອງຂອງມັນ





ຊາຕານເຮັດແຕ່ສິ່ງທີ່ຊົ່ວ ມັນໄດ້ລໍ້ລວງ ອາດາມແລະເອວາ ໃຫ້ກະບົດຕໍ່ພຣະເຈົ້າ ແລະໃນເລື່ອງທີ່ເຮົາຈະຮຽນວັນນີ້ ມັນພະຍາຍາມທົດລອງພຣະເຢຊູດ້ວຍ ຊາຕານຢາກໃຫ້ພຣະເຢຊູຕົກຢູ່ໃຕ້ອຳນາດຂອງມັນ ເພື່ອພຣະອົງຈະບໍ່ສາມາດຊ່ວຍມະນຸດໃຫ້ພົ້ນຈາກຄວາມບາບ

**ມັດທາຍ 4:1** ໃນຂໍ້ນີ້ເຮົາເຫັນວ່າ ພຣະວິນຍານບໍລິສຸດ ໄດ້ນຳພຣະເຢຊູໄປ ເພື່ອມານຈະໄດ້ທົດລອງພຣະອົງ ພຣະເຈົ້າມີແຜນການທີ່ຈະສະແດງໃຫ້ພຣະອົງເຫັນວ່າ ພຣະເຢຊູເປັນຜູ້ບໍລິສຸດແທ້ໆ ຈຶ່ງໃຊ້ຊາຕານເປັນເຄື່ອງມືຂອງພຣະອົງ ເພື່ອເຮົາຈະເຫັນການພິສູດຂອງພຣະເຈົ້າຢ່າງຊັດເຈນ

**ພຣະເຢຊູຖືກທົດລອງ**
**ມັດທາຍ 4:2-11**

**4:2-4** ເຖິງແມ້ນວ່າ ພຣະເຢຊູຊົງເປັນພຣະເຈົ້າ ແຕ່ຢ່າລືມວ່າພຣະອົງກໍ່ເປັນມະນຸດແທ້ນຳ ພຣະອົງມີຄວາມຫິວເໝືອນເຮົາທັງຫລາຍ ຕອນນີ້ ພຣະອົງບໍ່ໄດ້ກິນອາຫານມາສີ່ສິບວັນສີ່ສິບຄືນແລ້ວ ມີຄວາມຫິວແລະຢາກກິນອາຫານຢ່າງແຮງ ຊາຕານຢາກໃຫ້ພຣະເຢຊູເຮັດການອັດສະຈັນເພື່ອພິສູດວ່າ ພຣະອົງເປັນພຣະບຸດຂອງພຣະເຈົ້າແທ້ ແຕ່ພຣະເຢຊູໄດ້ເຂົ້າມາໃນໂລກນີ້ເພື່ອເຮັດຕາມນ້ຳພຣະໄທຂອງພຣະບິດາ ພຣະອົງ ສາມາດເຮັດໃຫ້ກ້ອນຫີນເປັນຂະໜົມປັງໄດ້ ແຕ່ພຣະອົງບໍ່ຍອມເຮັດຫຍັງຕາມທີ່ຊາຕານແນະນຳໃຫ້ເຮັດ ພຣະອົງຮູ້ວ່າ ການເຮັດຕາມພຣະຄຳຂອງພຣະເຈົ້ານັ້ນ ສຳຄັນກ່ອນການກິນອາຫານສຳລັບຮ່າງກາຍ

**4:5-7** ຕໍ່ຈາກນັ້ນ ຊາຕານພະຍາຍາມໃຊ້ພຣະຄຳຂອງພຣະເຈົ້າທີ່ຈະເຮັດໃຫ້ມະນຸດເຮັດຜິດ ຊາຕານມັກຈະໃຊ້ພຣະຄຳພີຢ່າງຜິດໆ ເພື່ອ



**ບົດທີ 24**

**ພຣະເຢຊູເລີ່ມວຽກຂອງພຣະອົງ**

**ມັດທາຍ 4:1-11, ມາລະໂກ 1:4-28, 34-42**

**ສ້າງຄວາມສົນໃຈ**

ສະໄຫມກ່ອນ ມີກະສັດອົງໜຶ່ງທີ່ຢາກຈະຮູ້ຄວາມທຸກສຸກຂອງປະຊາກອນຂອງພຣະອົງ ຖ້າພຣະອົງຈະແຕ່ງໂຕໄປຢ້ຽມຢາມພວກເຂົາໂດຍແຕ່ງໂຕເຕັມຍົດ ອາດບໍ່ມີໃຜກ້າເວົ້າກັບທ່ານ ເຫດສະນັ້ນ ພຣະອົງທ່ານຈຶ່ງປອມຕົວເປັນເຫມືອນຄົນທຳມະດາ ສາມັນເດີນທາງຄົນດຽວ ເມື່ອປະຊາຊົນເຫັນຄົນແກ່ໃສ່ເສື້ອຜ້າເກົ່າໆ ພວກເຂົາບໍ່ຮູ້ວ່າເປັນກະສັດ ຈຶ່ງກ້າເວົ້າກັບທ່ານ ກະສັດອົງນັ້ນຈຶ່ງມີພຣະໄທເມດຕາສົງສານປະຊາ ກອນຂອງທ່ານ ເຊັ່ນດຽວກັນ ພຣະເຈົ້າເຄີຍສະເດັດມາຢ້ຽມມະນຸດໃນສະພາບທີ່ຕ່ຳຕ້ອຍ ໃນຄັ້ງທຳອິດນັ້ນ ມະນຸດຍັງບໍ່ຮູ້ວ່າພຣະອົງຊົງເປັນພຣະເຈົ້າ ເພາະວ່າພຣະອົງມາໃນລັກສະນະເປັນມະນຸດທຳມະດາ ຂໍໃຫ້ເຮົາຟັງຕໍ່ໄປ

**ຊາຕານບໍ່ຢາກໃຫ້ພຣະເຢຊູເປັນຜູ້ຊ່ວຍຂອງມະນຸດ**
**ມັດທາຍ 4:1**

ພຣະເຈົ້າສ້າງລູຊີເຟີ ເປັນທູດສະຫວັນທີ່ດີຮອບຄອບ ແຕ່ລູຊີເຟີທີ່ເຮົາເອີ້ນວ່າ "ຊາຕານ" ນັ້ນເລືອກທີ່ຈະກະບົດຕໍ່ພຣະເຈົ້າ ຕັ້ງແຕ່ນັ້ນມາ





ໂທດຂອງຊາຕານ ຜູ້ເຂົ້າສິງຢູ່ໃນງູ ຈະຍິ່ງໜັກກວ່ານັ້ນອີກ

ຊາຕານອາດຄິດວ່າ ມັນໄດ້ຊະນະພຣະເຈົ້າແລ້ວ ແຕ່ບໍ່ມີໃຜຊະນະພຣະເຈົ້າໄດ້ ແມ່ນວ່າອາດາມ ແລະເອວາຕົກຢູ່ໃຕ້ອຳນາດຂອງຊາຕານ ແລະຖືກແຍກອອກຈາກພຣະເຈົ້າ ເພາະຄວາມຜິດຂອງເຂົາ ແຕ່ພຣະເຈົ້າເປັນຜູ້ຍິ່ງໃຫຍ່ ແລະພຣະອົງມີແຜນການ ທີ່ຈະຊ່ວຍມະນຸດ

ພຣະອົງສັນຍາວ່າ ຈະສົ່ງຜູ້ຊ່ວຍໃຫ້ລອດມາເພື່ອຈະເອົາຊະນະຊາຕານ ແລະໃຫ້ມະນຸດພົ້ນຈາກອຳນາດຂອງມັນ ພຣະເຈົ້າບອກວ່າ ພຣະຜູ້ຊ່ວຍນັ້ນ ຈະເກີດຈາກຜູ້ຍິງທີ່ເປັນພົມມະຈາລີ ຊາຕານຈະຕໍ່ສູ້ກັບຜູ້ນັ້ນ ແລະເຮັດໃຫ້ຜູ້ນັ້ນເຈັບປວດ ແຕ່ສຸດທ້າຍຜູ້ນັ້ນ ຈະທຳລາຍຊາຕານ ແລະມະນຸດໄດ້ຄືນດີກັບພຣະເຈົ້າອີກ

ໃນບົດນີ້ເຮົາໄດ້ເຂົ້າໃຈສິ່ງໃໝ່ກ່ຽວກັບພຣະເຈົ້າຄື ພຣະອົງມີ<u>ພຣະຄຸນ</u>ຕໍ່ມະນຸດ <u>ພຣະຄຸນ</u>ຄືຫຍັງ?

ຄັ້ງໜຶ່ງມີຜູ້ຮັບໃຊ້ພຣະເຈົ້າເຮັດວຽກໃນໝູ່ບ້ານແຫ່ງໜຶ່ງ ມີຊາຍຜູ້ໜຶ່ງໃນບ້ານນັ້ນ ມີບາດແຜໃຫຍ່ທີ່ຕີນຂອງລາວ ຊາຍຜູ້ນັ້ນ ໄດ້ໄປຫາຜູ້ຮັບໃຊ້ພຣະເຈົ້າ ເພື່ອຂໍໃຫ້ລາວເຮັດແຜໃຫ້ ຜູ້ຮັບໃຊ້ພຣະເຈົ້າຄົນນັ້ນ ໄດ້ລ້າງແຜແລະໃສ່ຢາດີໆໃຫ້ ແລະພັນແຜດ້ວຍຜ້າຢ່າງດີນຳ ນອກຈາກນັ້ນຍັງເຊີນໃຫ້ຊາຍຄົນນັ້ນ ຮ່ວມຮັບປະທານອາຫານກັບລາວນຳ ເມື່ອຮັບປະທານອາຫານແລ້ວ ຊາຍຜູ້ນັ້ນກໍກັບບ້ານ ລາວຄິດວ່າບໍ່ມີໃຜເຫັນ ຈຶ່ງລັກເສື້ອຜືນໜຶ່ງຂອງຜູ້ຮັບໃຊ້ພຣະເຈົ້າ ໃສ່ໃນຍາມກ່ອນກັບບ້ານ ແຕ່ຜູ້ຮັບໃຊ້ພຣະເຈົ້າໄດ້ເຫັນສິ່ງທີ່ລາວເຮັດນັ້ນ ແຕ່ບໍ່ໄດ້ວ່າຫຍັງ ຮຸ່ງເຊົ້າຊາຍຄົນນັ້ນ ໄດ້ກັບມາເຮັດແຜອີກເທື່ອໜຶ່ງ ລາວສົມຄວນຈະໄດ້ຮັບການຊ່ວຍເຫລືອບໍ່? ບໍ່ສົມຄວນເລີຍ! ແຕ່ຜູ້ຮັບໃຊ້ພຣະເຈົ້າຄົນນັ້ນ ຍັງເຮັດ

ແຜໃຫ້ ໃສ່ຢາໃຫ້ ແລະລ້ຽງອາຫານຢ່າງດີ ນີ້ເຮົາເອີ້ນວ່າ "<u>ພຣະຄຸນ</u>"

ອາດາມແລະເອວາ ໄດ້ຮັບສິ່ງທີ່ດີຈາກພຣະເຈົ້າທຸກປະການ ພຣະອົງໄດ້ໃຫ້ທຸກຢ່າງແກ່ເຂົາ ເພາະພຣະອົງຮັກເຂົາຫລາຍ ແຕ່ອາດາມແລະເອວາກັບກະບົດຕໍ່ພຣະເຈົ້າ ເຂົາຈຶ່ງສົມຄວນຮັບໂທດອັນເນື່ອງຈາກພຣະພິໂລດ (ຄວາມໃຈຮ້າຍ) ຂອງພຣະເຈົ້າ ຕະຫລອດໄປເປັນນິດ ແຕ່ພຣະເຈົ້າ ບໍ່ໄດ້ສົ່ງເຂົາໄປຢູ່ໃນບຶງໄຟທັນທີ ພຣະເຈົ້າມີພຣະເມດຕາ ແລະພຣະຄຸນຕໍ່ມະນຸດ ສະນັ້ນ ພຣະເຈົ້າໄດ້ສັນຍາໄວ້ວ່າ ຈະສົ່ງຜູ້ຊ່ວຍໃຫ້ລອດມາ ຊ່ວຍເຂົາໃຫ້ພົ້ນຈາກໂທດ ທີ່ເຂົາສົມຄວນຈະໄດ້ຮັບນັ້ນ

**ຜູ້ຍິງຜູ້ຊາຍ ແລະໂລກຖືກສາບແຊ່ງ**

**ປະຖົມມະການ 3:16 -19**

ເຖິງແມ່ນວ່າ ພຣະເຈົ້າຈະປ່ຽມດ້ວຍຄວາມຮັກແລະພຣະຄຸນ ແຕ່ການທີ່ອາດາມແລະເອວາ ໄດ້ເຊື່ອຟັງຊາຕານນັ້ນ ກໍນຳຄວາມສາບແຊ່ງມາເໜືອໂລກ ແລະທຸກສິ່ງໃນໂລກ

ສຳລັບເອວາແລະຜູ້ຍິງທັງໝົດ ທີ່ຈະເກີດມາພາຍຫລັງ ພຣະເຈົ້າບອກວ່າ ຈະຕ້ອງມີຄວາມທຸກລຳບາກຫລາຍໃນການເກີດລູກ ແລະຈະຢູ່ໃຕ້ການປົກຄອງຂອງຜົວ

ສ່ວນຜູ້ຊາຍທັງຫລາຍ ກໍ່ມີຄວາມຍາກລຳບາກ ເພາະຄວາມຜິດຂອງອາດາມ ເຊິ່ງເປັນຜູ້ຊາຍຄົນທຳອິດນັ້ນ ຂົາຈະຕ້ອງເຮັດວຽກໜັກຈົນເຫື່ອອາບໂຕໄປຕະຫລອດຊີວິດ

ອາດາມແລະເອວາ ຈະຢູ່ໃນສວນທີ່ສວຍງາມຂອງພຣະເຈົ້າຕໍ່ໄປອີກບໍ່ໄດ້ ເພາະເຂົາເລືອກຊາຕານແທນພຣະເຈົ້າ ແລະໄດ້ຕົກຢູ່ໃຕ້





**ຄວາມຈິງທີ່ຕ້ອງເນັ້ນ**

- ມະນຸດເປັນຄົນບາບແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ມະນຸດຕ້ອງເຊື່ອພຣະຄຳພຣະເຈົ້າ ແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທພຣະອົງ
- ພຣະເຢຊູຄຣິດເປັນພຣະເຈົ້າແທ້
- ພຣະເຢຊູຄຣິດຊົງບໍລິສຸດ ແລະຊອບທຳ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ

ສິ່ງທີ່ພຣະບິດາໃຫ້ພຣະອົງເຮັດ ພຣະເຢຊູເປັນພຣະເຈົ້າ ແຕ່ເມື່ອພຣະອົງຖ່ອມພຣະອົງລົງເປັນມະນຸດ ພຣະອົງຍອມເພິ່ງລິດອຳນາດຂອງພຣະວິນຍານບໍລິສຸດ ໃນການເປັນຜູ້ຊ່ວຍໃຫ້ລອດຂອງມະນຸດທຸກປະການ

**(ມັດທາຍ 3:17)** ພຣະບິດາເອີ້ນພຣະເຢຊູວ່າ ເປັນພຣະບຸດຂອງພຣະອົງ ພຣະເຢຊູເປັນມະນຸດແທ້ ແຕ່ພຣະອົງກໍ່ເປັນພຣະເຈົ້າ ຜູ້ເປັນພຣະບຸດ ຜູ້ສະເດັດລົງມາຈາກສະຫວັນ ພຣະບິດາພໍພຣະໄທໃນພຣະເຢຊູທຸກປະການ ພຣະອົງບອກວ່າ "ເຮົາພໍໃຈທ່ານຫລາຍ" ໝາຍຄວາມວ່າ ພຣະເຢຊູເປັນພຽງຜູ້ດຽວເທົ່ານັ້ນ ເຊິ່ງເຮັດທຸກສິ່ງເຊິ່ງເປັນທີ່ພໍພຣະໄທພຣະເຈົ້າ ບໍ່ມີຄວາມບາບໃນພຣະອົງເລີຍ

**ທົບທວນ**

1. ໂຢຮັນສັ່ງໃຫ້ປະຊາຊົນເຮັດຫຍັງ?
2. ການກັບໃຈເສຍໃຫມ່ຄືຫຍັງ?
3. ໂຢຮັນພະຍາຍາມຕຽມປະຊາຊົນໃຫ້ຍອມຮັບຜູ້ໃດ?
4. ການທີ່ມະນຸດຮັບບັບຕິສະມາຈະຊ່ວຍໃຫ້ພວກເຂົາພົ້ນຈາກບາບໄດ້ບໍ່
5. ໃຜມາຢູ່ໃນພຣະເຢຊູ ເພື່ອໃຫ້ພຣະອົງເຮັດຕາມນ້ຳພຣະໄທຂອງພຣະບິດາທຸກປະການ?
6. ພຣະບິດາເວົ້າຫຍັງຕອນທີ່ ພຣະເຢຊູຮັບບັບຕິສະມາ?
7. ເປັນຫຍັງໂຢຮັນເອີ້ນພຣະເຢຊູວ່າ "ລູກແກະຂອງພຣະເຈົ້າ"?





ອຳນາດຂອງມັນ

ບໍ່ແມ່ນມະນຸດເທົ່ານັ້ນ ທີ່ປ່ຽນແປງໄປເມື່ອບາບເກີດຂຶ້ນ ແຕ່ທຸກສິ່ງທີ່ພຣະເຈົ້າໄດ້ສ້າງນັ້ນ ກໍ່ເສຍໄປດ້ວຍ ກ່ອນນັ້ນໄພທຳມະຊາດຕ່າງໆຍັງບໍ່ມີຕົ້ນໜາມຕົ້ນຫຍ້າກໍບໍ່ມີ ຈາກນັ້ນມາ ສິ່ງເຫລົ່ານີ້ກໍ່ເກີດຂຶ້ນ ສັດຮ້າຍກໍ່ເກີດຂຶ້ນ ແລະງູພິດຕ່າງໆ ກໍ່ເກີດຂຶ້ນ ແລະເປັນສັດຕູກັບມະນຸດ

ພຣະເຈົ້າຜູ້ບໍລິສຸດຈະຕ້ອງລົງໂທດບາບ ພຣະເຈົ້າກໍໄດ້ພິພາກສາອາດາມແລະເອວາ ເຊັ່ນດຽວກັບທີ່ໄດ້ພິພາກສາລົງໂທດຊາຕານ ແລະພັກພວກຂອງມັນ ທີ່ໄດ້ກະບົດຕໍ່ພຣະເຈົ້ານັ້ນ ຄວາມຕາຍທີ່ເກີດຂຶ້ນເນື່ອງຈາກຄວາມບາບຂອງມະນຸດນັ້ນ ບໍ່ໄດ້ຕາຍຝ່າຍຮ່າງກາຍພຽງຢ່າງດຽວ ແຕ່ຈິດວິນຍານໄດ້ຖືກແຍກອອກຈາກພຣະເຈົ້າ ທັງໃນໂລກນີ້ແລະຕະຫລອດໄປເປັນນິດ

**ອາດາມເປັນບັນພະບູລຸດ ຂອງຄົນທຸກຊາດທົ່ວໂລກ**

**ປະຖົມມະການ 3:20**

ມະນຸດທົ່ວໂລກສືບເຊື້ອສາຍມາຈາກ ອາດາມແລະເອວາ ເຖິງວ່າສີຜິວຈະເບິ່ງຕ່າງກັນແດ່ ແຕ່ພາຍໃນຂອງເຮົານັ້ນຄືກັນ ເມື່ອອາດາມເຮັດຜິດຕໍ່ພຣະເຈົ້າ ເຂົາຕ້ອງຖືກແຍກອອກຈາກພຣະເຈົ້າ ລູກຫລານທີ່ເກີດມາຈາກ ອາດາມແລະເອວາ ກໍຖືກແຍກອອກຈາກພຣະເຈົ້ານຳ ມີນິໄສຄື້ດຶງເໝືອນພໍ່ແມ່ເດີມນັ້ນທຸກຄົນ

**ພຣະເຈົ້າເຮັດເຄື່ອງນຸ່ງ ໃສ່ໃຫ້ອາດາມ ແລະເອວາ**

**ປະຖົມມະການ 3:21**

ເມື່ອອາດາມແລະເອວາເຮັດຜິດແລ້ວ ສິ່ງທຳອິດທີ່ເຂົາເຮັດຄື ເຮັດເຄື່ອງນຸ່ງດ້ວຍໃບໄມ້ ສິ່ງທີ່ເຂົາເຮັດນັ້ນບໍ່ເປັນທີ່ພໍພຣະໄທພຣະເຈົ້າ



ພຣະເຈົ້າຢາກສອນເຂົາໃຫ້ຮູ້ວ່າ ເຂົາຈະເຮັດໂຕໃຫ້ເປັນທີ່ພໍພຣະໄທພຣະເຈົ້າ ໂດຍການກະທຳຂອງຕົນເອງບໍ່ໄດ້ ສິ່ງທີ່ເຂົາພະຍາຍາມເຮັດເອງນັ້ນ ບໍ່ສາມາດລົບລ້າງຄວາມອາຍ ທີ່ເຂົາມີຕໍ່ພຣະເຈົ້ານັ້ນໄດ້ ຄົນບາບແມ່ນວ່າຈະແຕ່ງໂຕດ້ວຍເສື້ອຜ້າ ແລະເຄື່ອງປະດັບດີສໍ່າໃດກໍ່ຕາມ ກໍ່ຍັງເປັນຄົນບາບຢູ່ ແລະບໍ່ເປັນທີ່ພໍພຣະໄທພຣະເຈົ້າ

ຄວາມຕາຍເກີດຂຶ້ນໃນໂລກຄັ້ງທຳອິດ ເພາະບາບຂອງມະນຸດ ໂດຍທີ່ພຣະເຈົ້າໃຫ້ສັດຕາຍແທນມະນຸດ ພະອົງໃຫ້ເລືອດຂອງມັນໄຫຼອອກ ແລ້ວເອົາໜັງຂອງມັນເຮັດເປັນເຄື່ອງນຸ່ງສຳລັບ ອາດາມແລະເອວາ ພຣະເຈົ້າສະແດງໃຫ້ເຫັນວ່າ ຄວາມຜິດບາບຂອງເຂົາ ນຳຄວາມຕາຍເຂົ້າມາໃນໂລກ

ພຣະເຈົ້າເປັນຜູ້ສວມເຄື່ອງນຸ່ງໃຫ້ ອາດາມແລະເອວາ ການທີ່ພຣະອົງເຮັດເຊັ່ນນັ້ນ ເປັນການສະແດງຄວາມຮັກ ແລະພຣະຄຸນຕໍ່ເຂົາ ເຖິງແມ່ນວ່າ ເຂົາບໍ່ສົມຄວນທີ່ຈະຮັບພຣະຄຸນຈາກພະເຈົ້າ ພຣະເຈົ້າກໍ່ຍັງຮັກແລະເມດຕາເຂົາຢູ່





ເຮົາຄົງຈື່ໄດ້ເຖິງອາເບັນ, ອັບຣາຮາມ ແລະຊາວອິດສະລະເອນທັງຫລາຍ ຜູ້ເຄີຍເອົາລູກແກະທີ່ປາສະຈາກຕຳນິ ເມື່ອຊາວອິດສະລະເອນ ຍັງຢູ່ໃນປະເທດອີຢິບ ທຸກຄອບຄົວຕ້ອງເລືອກລູກແກະທີ່ດີ ແລະບໍ່ມີທີ່ຕິຂ້າ ແລະນຳເລືອດມາທາທີ່ວົງກົບປະຕູ ລູກຫົວປີຂອງພວກເຂົາຈຶ່ງຈະບໍ່ຕາຍ ຊາວຢິວເຂົ້າໃຈໄດ້ດີໃນຄວາມສຳຄັນຂອງລູກແກະນີ້

ຢ່າງໃດກໍ່ດີ ເລືອດສັດທີ່ຊາວອິດສະລະເອນຖະຫວາຍຢ່າງຕໍ່ເນື່ອງນັ້ນ ບໍ່ສາມາດລົບມົນທິນບາບຂອງມະນຸດຢ່າງຄົບຖ້ວນໄດ້ ສະນັ້ນ ພຣະເຈົ້າໄດ້ສົ່ງພຣະເຢຊູເຂົ້າມາໃນໂລກ ເພື່ອຈະຊົງລົບລ້າງຄວາມບາບໃຫ້ໝົດສິ້ນໄປ ແລະຈະຊົງຊ່ວຍທຸກຄົນທີ່ວາງໃຈໃນພຣະອົງ ໃຫ້ພົ້ນໂທດບາບທັງສິ້ນ ພຣະເຈົ້າປະທານແກະແກ່ອັບຣາຮາມ ເພື່ອຖະຫວາຍແທນອີຊາກ ຢ່າງໃດ ພຣະອົງກໍ່ປະທານພຣະບຸດຂອງພຣະອົງ ມາຮັບໂທດບາບຂອງຜູ້ທີ່ເຊື່ອໃນພຣະອົງຢ່າງນັ້ນດ້ວຍ

**(ໂຢຮັນ 1:32-34)** ເມື່ອໂຢຮັນເຫັນພຣະວິນຍານລົງມາເທິງພຣະເຢຊູ ລາວແນ່ໃຈວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ ຜູ້ຊົງຊ່ວຍມະນຸດໂລກ ໃຫ້ພົ້ນຈາກຄວາມບາບ ສະໄຫມນີ້ ສິ່ງທີ່ເຮັດໃຫ້ເຮົາແນ່ໃຈ ຄືພຣະຄຳພີ ເພາະເປັນພຣະຄຳພຣະເຈົ້າສຳລັບເຮົາ ພຣະເຈົ້າຢາກໃຫ້ເຮົາເຊື່ອໃນຄຳທີ່ຂຽນໄວ້ໃນພຣະຄຳພີນີ້ຢ່າງຈິງໃຈ ບໍ່ມີທາງອື່ນທີ່ເຮົາຈະເປັນທີ່ພໍພຣະໄທພຣະເຈົ້າໄດ້

ພຣະເຢຊູຮັບບັບຕິສະມາຈາກໂຢຮັນ ບໍ່ແມ່ນເພາະເປັນຄົນບາບທີ່ຕ້ອງກັບໃຈໃຫມ່ ແລະຕ້ອງການຜູ້ຊ່ວຍໃຫ້ລອດຄືຄົນອື່ນໆ ທີ່ມາຫາໂຢຮັນ ແຕ່ເພາະເປັນຄຳສັ່ງຈາກພຣະເຈົ້າ ພຣະເຢຊູເປັນຜູ້ທີ່ບໍ່ມີຄວາມບາບເລີຍ ພຣະເຢຊູຢາກເຊື່ອຟັງຄຳສັ່ງຂອງພຣະເຈົ້າທຸກປະການ ພຣະວິນຍານບໍລິສຸດຊົງຢູ່ໃນພຣະເຢຊູ ເພື່ອໃຫ້ພຣະອົງສາມາດເຮັດທຸກ

ປ່ຽນທ່າທີໃນໃຈ ໂຢຮັນຢາກໃຫ້ພວກເຂົາຮູ້ວ່າ ພຣະເຈົ້າເປັນພຣະເຈົ້າ ແຕ່ພຽງອົງດຽວ ມະນຸດຕ້ອງຮັກແລະນັບຖືພຣະອົງ ດ້ວຍຄວາມຈິງໃຈ ໂຢຮັນຢາກໃຫ້ຄົນເຫລົ່ານັ້ນ ຍອມຮັບວ່າພວກເຂົາໄດ້ລ່ວງລະເມີດ ພຣະບັນຍັດຂອງພຣະເຈົ້າ ແລະເປັນຄົນບາບທີ່ຊ່ວຍຕົນເອງບໍ່ໄດ້ ພວກເຂົາຕ້ອງເຂົ້າໃຈວ່າ ຄວາມບາບທຸກຢ່າງເປັນຄວາມຜິດຕໍ່ພຣະເຈົ້າ ເພາະພຣະເຈົ້າກຽດຊັງຄວາມບາບ ດັ່ງນັ້ນທຸກຄົນທີ່ເຮັດບາບຈະຕ້ອງຖືກແຍກຈາກພຣະເຈົ້າຕະຫລອດໄປເປັນນິດ

ຄວາມເຂົ້າໃຈເຊັ່ນນີ້ ເປັນການຕຽມເຊິ່ງພຣະເຈົ້າຢາກໃຫ້ເກີດຂຶ້ນໃນໃຈຂອງເຮົາ ຜູ້ຟັງພຣະຄຳພີທຸກຄົນລວມທັງພວກເຮົາໃນທຸກມື້ນີ້ພ້ອມ ພຣະອົງຈະພິພາກສາໂດຍແຍກມະນຸດອອກເປັນສອງພວກ ຄືຊາວ ນາທີ່ແຍກເຂົ້າເປືອກອອກຈາກຟາງ ແລະຈະໃຫ້ຜູ້ທີ່ວາງໃຈໃນພຣະອົງຮັບພຣະວິນຍານບໍລິສຸດ ສ່ວນຜູ້ທີ່ບໍ່ຍອມເຊື່ອນັ້ນ ຈະຮັບໂທດໃນບຶງໄຟນາລົກ

**ພຣະເຢຊູຮັບບັບຕິສະມາຈາກໂຢຮັນ**

**(ໂຢຮັນ 1:24-28)** ໂຢຮັນເປັນຜູ້ເຊິ່ງພຣະເຈົ້າເລືອກໃຫ້ເປັນຜູ້ທຳນວາຍ ເພື່ອຕຽມໃຈຂອງຊາວອິດສະລະເອນ ໃຫ້ພ້ອມທີ່ຈະຮັບຜູ້ຊ່ວຍໃຫ້ລອດ ໃນສະໄຫມຂອງໂຢຮັນ ຜູ້ທີ່ເປັນເຈົ້ານາຍຈະມີພວກທາດ ທີ່ເຮັດທຸກສິ່ງເພື່ອພວກເຂົາ ແມ້ນແຕ່ການປົດເກີບ ພວກເຈົ້ານາຍຈະໃຫ້ທາດປົດເກີບໃຫ້ພວກເຂົາ ໂຢຮັນບອກພວກເຂົາເອງວ່າ ບໍ່ຄູ່ຄວນແມ້ນແຕ່ຈະເປັນທາດທີ່ຈະປົດເກີບໃຫ້ຜູ້ຊ່ວຍໃຫ້ລອດນັ້ນ ເພາະພຣະອົງເປັນພຣະເຈົ້າຜູ້ສ້າງໂລກ ແລະເປັນຜູ້ໃຫ້ຊີວິດແກ່ໂຢຮັນ

**(ໂຢຮັນ 1:29-31)** ມື້ໜຶ່ງເມື່ອໂຢຮັນເຫັນພຣະເຢຊູຍ່າງມາ ໂຢຮັນບອກວ່າ, "ພຣະເຢຊູເປັນລູກແກະຂອງພຣະເຈົ້າ"







**ພຣະເຈົ້າຊົງຂັບໄລ່ອາດາມແລະເອວາອອກຈາກສວນເອເດນ**

**ປະຖົມມະການ 3:22 - 24**

ເຮົາເຫັນວ່າ ພຣະບິດາ ພຣະບຸດ ແລະພຣະວິນຍານ ໄດ້ເວົ້າເຖິງມະນຸດໃນຂໍ້ 22 ນີ້ ມະນຸດບໍ່ເໝືອນເດີມແລ້ວ ເພາະເຂົາຮູ້ທັງດີແລະຊົ່ວ ສະນັ້ນ ພຣະເຈົ້າຈະໃຫ້ເຂົາຢູ່ໃນສວນເອເດນຕໍ່ໄປອີກບໍ່ໄດ້

ເຮົາຈື່ຕົ້ນໄມ້ພິເສດທີ່ຢູ່ກາງສວນເອເດນໄດ້ບໍ່? ຕົ້ນໄມ້ນັ້ນເປັນຕົ້ນໄມ້ແຫ່ງຊີວິດແລະພຣະເຈົ້າມີຄວາມປະສົງ ທີ່ຈະໃຫ້ມະນຸດກິນໝາກຈາກຕົ້ນໄມ້ນັ້ນ ແລະມີຊີວິດຕະຫລອດໄປ ແຕ່ເມື່ອມະນຸດທໍລະຍົດຕໍ່ພຣະເຈົ້າ ຄວາມຕາຍຈຶ່ງມາເຖິງມະນຸດ ມະນຸດໄດ້ແຍກອອກຈາກພຣະເຈົ້າແລ້ວ ແລະຮ່າງກາຍຂອງເຂົາຕ້ອງຕາຍດ້ວຍ ພຣະເຈົ້າຈະບໍ່ຍອມໃຫ້ເຂົາກິນໝາກຈາກຕົ້ນໄມ້ແຫ່ງຊີວິດ ແລະບໍ່ຍອມໃຫ້ເຂົາຢູ່ສຸກສະບາຍໃນສວນເອເດນຕໍ່ໄປ

ເມື່ອຊາຕານເຮັດບາບ ພຣະເຈົ້າໄດ້ຂັບໄລ່ມັນອອກຈາກຖານະອັນສູງສົ່ງໃນສະຫວັນ ເຊັ່ນດຽວກັນ ເມື່ອອາດາມແລະເອວາເຮັດບາບ ພຣະເຈົ້າກໍ່ໄດ້ຂັບໄລ່ເຂົາອອກຈາກສວນຂອງພຣະອົງ

ພຣະອົງໃຫ້ທູດສະຫວັນ ທີ່ມີລິດອຳນາດປ້ອງກັນສວນນັ້ນໄວ້ ທູດສະຫວັນເຫຼົ່ານີ້ ມີຊື່ເອີ້ນອີກຢ່າງໜຶ່ງວ່າເຄຣູບ ຍິ່ງກວ່ານັ້ນ ພຣະເຈົ້າຍັງ

ຕັ້ງດາບໄຟວິເສດໄວ້ ບໍ່ໃຫ້ ອາດາມແລະເອວາ ກັບເຂົ້າໄປໃນສວນອີກ

ເຮົາຄິດວ່າ ສອງຄົນນັ້ນຈະສາມາດເຂົ້າໄປໃນສວນ ແລະກິນໝາກໄມ້ແຫ່ງຊີວິດໄດ້ບໍ່?

**ທົບທວນ**

1. ຄຳສາບແຊ່ງທີ່ມາເຖິງງູເປັນຢ່າງໃດ?
2. ພຣະສັນຍາທີ່ພຣະເຈົ້າໃຫ້ໃນປະຖົມມະການ ບົດທີ3 ຂໍ້ທີ15 ຄືຫຍັງ?
3. ເປັນຫຍັງພຣະເຈົ້າສັນຍາວ່າຈະສົ່ງຜູ້ຊ່ວຍໃຫ້ລອດແກ່ມະນຸດ?
4. ອາດາມແລະເອວາ ສົມຄວນທີ່ຈະຮັບພຣະຄຸນ ແລະຄວາມຊ່ວຍເຫຼືອຈາກພຣະເຈົ້າບໍ່?
5. ຜົນຮ້າຍທີ່ເກີດຂຶ້ນຈາກການຜິດຂອງ ອາດາມແລະເອວາຄືຫຍັງ?
6. ເປັນຫຍັງ ມະນຸດຈິ່ງຕ້ອງຕາຍທຸກຄົນ?
7. ເປັນຫຍັງ ພຣະເຈົ້າບໍ່ພໍໃຈກັບເສື້ອຜ້າໃບໄມ້ ທີ່ອາດາມແລະເອວາເຮັດ?
8. ມະນຸດເຮົາຈະເຮັດໃຫ້ຕົນເປັນທີ່ພໍໃຈພຣະເຈົ້າ ໂດຍການແຕ່ງໂຕຫລືການທຳດີໄດ້ບໍ່?
9. ເປັນຫຍັງ ພຣະເຈົ້າຈິ່ງຂ້າສັດເພື່ອເຮັດເສື້ອຜ້າໃຫ້ ອາດາມແລະເອວາ?
10. ພຣະເຈົ້າສຳແດງຄວາມຮັກຕໍ່ມະນຸດແນວໃດ?
11. ເປັນຫຍັງ ພຣະເຈົ້າຈິ່ງຂັບໄລ່ ອາດາມແລະເອວາ ອອກຈາກສວນຂອງພຣະອົງ?







**ບົດທີ 23**

**ພຣະເຢຊູຮັບບັບຕິສະມາ**

**ມັດທາຍ 3:1-17**

**ໂຢຮັນ 1:24-34**

**ສ້າງຄວາມສົນໃຈ**

ສັງຄົມໃນປະຈຸບັນນີ້ ມະນຸດມັກເຮັດຫຍັງຕາມໃຈຂອງຕົນເອງ ພວກເຂົາມັກຈະຄິດວ່າເລື່ອງພຣະເຈົ້າເປັນເລື່ອງໂບຮານ ທີ່ບໍ່ກ່ຽວຂ້ອງກັບໂຕພວກເຂົາ ຄວາມຖ່ອມຕົວເປັນນິໄສທີ່ບໍ່ຄ່ອຍປະກົດເລີຍ

ເຮົາບໍ່ຄ່ອຍໄດ້ຍິນໃຜເວົ້າວ່າ, "ເປັນຄວາມຈິງທີ່ພຣະເຈົ້າສອນໃຫ້ເຮົາຮູ້ວ່າ ເຮົາເປັນຄົນບາບ" ແຕ່ຄຳເຫລົ່ານັ້ນ ເປັນຄຳທີ່ສຳຄັນທີ່ສຸດທີ່ມະນຸດສົມຄວນຈະເວົ້າ

ໃນບົດຮຽນໃນມື້ນີ້ເຮົາເຫັນວ່າພຣະເຈົ້າຢາກໃຫ້ມະນຸດກັບໃຈເສຍໃຫມ່ ມະນຸດຄວນຈະຖ່ອມຕົວລົງ ຍອມຮັບວ່າພວກເຂົາເປັນຄົນບາບ ທີ່ຊ່ວຍຕົນເອງບໍ່ໄດ້ ທ່າທີໃນຈິດໃຈຕໍ່ພຣະເຈົ້າເປັນສິ່ງທີ່ສຳຄັນທີ່ສຸດ

**ໂຢຮັນເປັນຜູ້ສື່ສານຂອງພຣະເຈົ້າທີ່ມາເຖິງຊາວອິດສະລະເອນ**

**ມັດທາຍ 3:1-6**

ໂຢຮັນເປັນຜູ້ເຊິ່ງພຣະເຈົ້າເລືອກໃຫ້ເປັນຜູ້ທຳນວາຍ ເພື່ອຕຽມໃຈຂອງຊາວອິດສະລະເອນ ໃຫ້ພ້ອມທີ່ຈະຮັບຜູ້ຊ່ວຍໃຫ້ລອດ ໂຢຮັນເລີ່ມເຕືອນປະຊາຊົນ ໃຫ້ກັບໃຈເສຍໃຫມ່ ໝາຍຄວາມວ່າ ພວກເຂົາຕ້ອງ

**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າຊົງສັດຊື່ ແລະບໍ່ຍອມປ່ຽນແປງ
- ພຣະເຢຊູຄຣິດເປັນຜູ້ຊ່ວຍໃຫ້ລອດພຽງແຕ່ຜູ້ດຽວ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ
- ພຣະເຈົ້າສື່ສານກັບມະນຸດ
- ພຣະເຢຊູຄຣິດເປັນພຣະເຈົ້າແທ້
- ຊາຕານຕໍ່ຕ້ານພຣະເຈົ້າ ແລະແຜນການຂອງພຣະອົງສະເໝີ





**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາແລະພຣະຄຸນ
- ມະນຸດເປັນຄົນບາບແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງບໍລິສຸດແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະອົງປ້ອງກັນສວນນັ້ນແນວໃດ?



## ບົດທີ 9
## ອາເບັນເຊື່ອຟັງພຣະເຈົ້າ
## ແຕ່ກາອີນເອົາໃຈຕົວເອງ
**ປະຖົມມະການ 4:1-26**
**5:1-24**

### ສ້າງຄວາມສົນໃຈ

ເຮົາເຄີຍເຫັນເດັກນ້ອຍໆ ຫລິ້ນນຳກັນ ເດັກນ້ອຍທົ່ວໆ ໄປມັກເອົາໃຈຕົວເອງ ຖ້າຄົນ ອື່ນຂັດຂວາງຕົນ ຕົນກໍຈະໃຈ ຮ້າຍຫລາຍ ບາງເທື່ອກໍຮ້ອງ ໄຫ້ ບາງເທື່ອກໍທຳລາຍສິ່ງ ຕ່າງໆ ດ້ວຍອາລົມທີ່ຮຸນແຮງ ຕົບຕີຄົນອື່ນແດ່ ເພາະຢາກຈະເຮັດທຸກຢ່າງຕາມໃຈຕົວເອງ ຜູ້ໃຫຍ່ບາງຄົນກໍ່ຮຸນແຮງບໍ່ແພ້ເດັກນ້ອຍ ມະນຸດເຮົາມັກຈະເຫັນແກ່ຕົວ ພຣະເຈົ້າພໍພຣະໄທໃນການກະທຳເຊັ່ນນີ້ບໍ? ມື້ນີ້ເຮົາຈະຮຽນເຖິງສິ່ງໜຶ່ງທີ່ເຮັດໃຫ້ພຣະເຈົ້າພໍພຣະໄທ

### ກາອີນ ແລະອາເບັນ ເກີດນອກສວນຂອງພຣະເຈົ້າ
**ປະຖົມມະການ 4:1&2**

ພຣະເຈົ້າລະນຶກເຖິງສອງຄົນທີ່ເຮັດຜິດນັ້ນ ແລະໃຫ້ເຂົາມີລູກ ລູກຄົນທຳອິດທີ່ເກີດມານັ້ນເປັນຜູ້ຊາຍ ມີຊື່ວ່າ ກາອີນ ເມື່ອເອວາຈະເກີດລູກນັ້ນ ລາວກໍ່ຕ້ອງຮັບຄວາມເຈັບປວດເປັນທີ່ສຸດ ລາວຄົງລະນຶກເຖິງບາບທີ່ເຄີຍເຮັດມານັ້ນ ແຕ່ໃນຂະນະດຽວກັນ ລາວຄົງຄິດເຖິງພຣະສັນຍາຂອງພຣະເຈົ້າ ແລະເຊື່ອວ່າມື້ໜຶ່ງ ຈະມີຜູ້ໜຶ່ງທີ່ຈະເກີດມາ ເພື່ອຊ່ວຍ





### ໂຢເຊັບ, ມາລີ ແລະ ພຣະເຢຊູ ກັບສູ່ເມືອງນາຊາເລັດ
**ມັດທາຍ 2:19-23**

ເມື່ອກະສັດເຮໂລດສິ້ນຊີວິດແລ້ວ ພຣະເຈົ້າສົ່ງທູດອົງໜຶ່ງຂອງພຣະອົງໄປຫາໂຢເຊັບ ເພື່ອສັ່ງໃຫ້ລາວກັບໄປຢູ່ໃນແຜ່ນດິນອິດສະລະເອນອີກ ໂຢເຊັບຈຶ່ງພາມາລີ ແລະພຣະເຢຊູກັບໄປ ແລະໄດ້ອາໄສຢູ່ໃນເມືອງນາຊາເລັດ ເຊິ່ງເປັນບ້ານເດີມທີ່ໂຢເຊັບເຄີຍຢູ່

### ທົບທວນ

1. ໂຢເຊັບແລະມາລີ ເປັນເຊື້ອສາຍຂອງບຸກຄົນສຳຄັນໃນອາດີດຄືໃຜແດ່?
2. ຄຳວ່າ "ເອມານູເອນ" ແປວ່າຫຍັງ?
3. ພຣະເຢຊູເກີດເມືອງຫຍັງ?
4. ການທີ່ພວກໂຫລາຈານກາບນະມັດສະການພຣະກຸມມານເຢຊູ ເປັນສິ່ງທີ່ສົມຄວນຫລືບໍ່?
5. ເມື່ອກະສັດເຮໂລດຢາກຈະຂ້າພຣະເຢຊູ ພຣະເຈົ້າໃຫ້ໂຢເຊັບພາຄອບຄົວໜີໄປປະເທດໃດ?
6. ເມື່ອໂຢເຊັບກັບມາເຖິງແຜ່ນດິນອິດສະລະເອນແລ້ວ ລາວພາຄອບຄົວໄປຢູ່ເມືອງໃດ?
7. ເປັນຫຍັງພຣະເຢຊູເກີດເປັນມະນຸດໃນໂລກ?

**(2:13)** ພຣະເຈົ້າຮູ້ຄວາມຄິດຂອງກະສັດເຮໂລດທຸກຢ່າງ ແລະພຣະອົງຈະບໍ່ຍອມໃຫ້ໃຜຂັດຂວາງແຜນການຂອງພຣະອົງໄດ້ ພຣະອົງໄດ້ສັນຍາວ່າ ຈະຊ່ວຍຄົນບາບໃຫ້ພົ້ນອຳນາດຂອງຊາຕານ ເຫດສັນນັ້ນພຣະອົງບອກ ໂຢເຊັບ ໃຫ້ພາພຣະອົງໄປປະເທດອີຢີບ ເຊິ່ງເປັນໄປຕາມຜູ້ທຳນວາຍໄດ້ທຳນວາຍໄວ້ກ່ອນແລ້ວ (ໂຮເຊອາ 11:1)

**(2:16-18)** ເມື່ອພວກໂຫລາຈານອອກໄປແລ້ວ ກະສັດເຮໂລດໄດ້ສະແດງອອກເຖິງຈິດໃຈອັນໂຫດຫ້ຽມຂອງຕົນ ເຮໂລດມີຈິດໃຈເຫມືອນກະສັດຟາໂລຂອງອີຢີບ ຜູ້ເຊິ່ງບໍ່ຢາກໃຫ້ໃຜເປັນໃຫຍ່ກ່ອນຕົນ ເຮໂລດຢ້ານວ່າ ຖ້າພຣະກຸມມານເຢຊູເຕີບໂຕເປັນຜູ້ໃຫຍ່ແລ້ວ ຄອບຄົວຂອງເຮໂລດຈະບໍ່ໄດ້ເປັນກະສັດຕໍ່ໄປ ເຮໂລດວາງແຜນການທີ່ຈະຂ້າພຣະເຢຊູເມື່ອຍັງນ້ອຍຢູ່

ພຣະເຈົ້າເຄີຍປົກປ້ອງ ໂມເຊ ເມື່ອຕອນຍັງເປັນເດັກນ້ອຍໆ ຢູ່ເຊັ່ນໃດ ພຣະອົງກໍ່ປົກປ້ອງພຣະກຸມມານເຢຊູເຊັ່ນນັ້ນດ້ວຍ ຊາຕານບໍ່ຢາກໃຫ້ໂມເຊຊ່ວຍຊາວອິດສະລະເອນໃຫ້ພົ້ນຈາກການເປັນທາດ ເພາະຢາກໃຫ້ພວກເຂົາທັງຫລາຍຕາຍໝົດ ຈຶ່ງຊັກນຳຟາໂລໃຫ້ທຳການຮ້າຍຕໍ່ຊາວອິດສະລະເອນ ເຊັ່ນດຽວກັນ ຊາຕານກໍ່ຊັກນຳກະສັດເຮໂລດໃຫ້ພະຍາຍາມຂ້າພຣະເຢຊູ ເພາະພຣະເຢຊູເປັນຜູ້ຊ່ວຍໃຫ້ລອດ ແລະມັນບໍ່ຢາກໃຫ້ມະນຸດລອດຈາກຄວາມບາບ ຊາຕານບໍ່ປ່ຽນນິໄສຂອງມັນ ເຖິງແມ້ນວ່າ ມັນບໍ່ສາມາດຂ້າຜູ້ຊ່ວຍໃຫ້ລອດເມື່ອພຣະອົງຍັງເປັນເດັກຢູ່ ແຕ່ມັນກໍ່ພະຍາຍາມຕໍ່ສູ້ພຣະເຈົ້າ ແລະຄວາມຈິງຂອງພຣະອົງຕະຫລອດເວລາ ແມ້ນໃນປະຈຸບັນນີ້ ຊາຕານກໍ່ພະຍາຍາມຂັດຂວາງບໍ່ໃຫ້ເຮົາເຊື່ອພຣະຄຳຂອງພຣະເຈົ້າ ເພາະມັນຢາກໃຫ້ເຮົາຮັບໂທດແຫ່ງຄວາມບາບພ້ອມກັບມັນໃນບຶງໄຟຕະຫລອດໄປເປັນນິດ





ມະນຸດໃຫ້ລຸດພົ້ນຈາກບາບ

ການເວລາຜ່ານໄປ ພຣະເຈົ້າກໍໄດ້ໃຫ້ລູກຊາຍເກີດນຳເອວາອີກຄົນໜຶ່ງຊື່ ອາເບັນ ເດັກທັງສອງຄົນນີ້ໄດ້ເກີດນອກສວນຂອງພຣະເຈົ້າ ເຂົາບໍ່ມີສິດກິນຜົນຂອງຕົ້ນໄມ້ແຫ່ງຊີວິດ ເຂົາຖືກແຍກອອກຈາກພຣະເຈົ້າເພາະພໍ່ແມ່ໄດ້ເຮັດຜິດ ເຂົາກໍ່ເປັນສັດຕູຂອງພຣະເຈົ້າເຊັ່ນດຽວກັນເຮົາທຸກຄົນເປັນເຊື້ອສາຍຂອງ ອາດາມແລະເອວາ ແລະເກີດມາໃນສະພາບທີ່ຖືກແຍກອອກຈາກພຣະເຈົ້າ ສະນັ້ນເຮົາຈຶ່ງເປັນຄົນບາບທຸກຄົນ

**ການຖວາຍດ້ວຍເລືອດ ເປັນສັນຍາລັກຂອງຄວາມເຊື່ອ**
**ປະຖົມມະການ 4:3-5**

ເມື່ອເດັກທັງສອງເຕີບໃຫຍ່ຂຶ້ນ ອາດາມແລະເອວາ ໄດ້ສອນລູກຂອງເຂົາວ່າ ພຣະເຈົ້າຢາກໃຫ້ທຸກຄົນເຊື່ອໃນຄຳສັນຍາຂອງພະອົງ ຄືຄຳສັນຍາທີ່ວ່າ ພຣະເຈົ້າຈະສົ່ງຜູ້ຊ່ວຍໃຫ້ລອດມາ ແຕ່ກ່ອນທີ່ຜູ້ຊ່ວຍໃຫ້ລອດຈະມານັ້ນ ມະນຸດຈະຕ້ອງຖວາຍເຄື່ອງບູຊາແດ່ພຣະເຈົ້າ ເພື່ອລະນຶກເຖິງຄຳສັນຍາຂອງພຣະອົງ ແລະເພື່ອສະແດງວ່າ ເຂົາເຊື່ອພຣະສັນຍານັ້ນ

ພຣະເຈົ້າເປັນຜູ້ກຳນົດໄວ້ວ່າ ເຄື່ອງບູຊານັ້ນຕ້ອງໃຊ້ສັດທີ່ພຣະເຈົ້າພໍພະໄທເທົ່ານັ້ນ ຈະໃຊ້ສັດຢ່າງອື່ນບໍ່ໄດ້ ເພາະວ່າເຄື່ອງບູຊານັ້ນເປັນສັນຍາລັກທີ່ເລັງເຖິງຜູ້ຊ່ວຍໃຫ້ລອດ ທີ່ພຣະເຈົ້າສັນຍາວ່າຈະມານັ້

ແຜນການຂອງພຣະເຈົ້ານັ້ນສະແດງວ່າ ພຣະເຈົ້າຍັງຮັກມະນຸດຢູ່ແລະຢາກໃຫ້ມະນຸດມາຫາພຣະອົງ ແຕ່ມະນຸດຈະມາຕາມ ທາງທີ່ຕົນເອງຄິດຂຶ້ນບໍ່ໄດ້ ບໍ່ມີໃຜສາມາດສ້າງທາງທີ່ພຣະເຈົ້າຈະພໍພະໄທ ສະນັ້ນຕ້ອງເປັນພຣະເຈົ້າເອງທີ່ບອກເຖິງທາງ ທີ່ຖືກຕ້ອງສຳລັບຜູ້ທີ່ຈະມາຫາ



ພຣະອົງ

ເມື່ອເດັກທັງສອງໃຫຍ່ຂຶ້ນ ກາອິນເປັນຄົນເຮັດໄຮ່ເຮັດສວນ ສ່ວນ ອາເບັນເປັນຄົນລ້ຽງສັດ ມື້ໜຶ່ງເຂົາທັງສອງ ໄດ້ນຳເຄື່ອງບູຊາມາຖວາຍແດ່ພຣະເຈົ້າ ອາເບັນໄດ້ນຳເອົາລູກແກະມາຖວາຍ ສ່ວນກາອິນກໍ່ນຳເອົາພືດຜົນຈາກໄຮ່ສວນມາຖວາຍເຊັ່ນດຽວກັນ

ອາເບັນຍອມຮັບວ່າ ລາວເປັນຄົນບາບ ຖືກແຍກຈາກພຣະເຈົ້າ ລາວຖວາຍໂດຍຄວາມເຊື່ອໃນພຣະຄຳສັນຍາຂອງພຣະເຈົ້າ ພຣະເຈົ້າຈຶ່ງຍອມຮັບຂອງຖວາຍຂອງອາເບັນ ເພາະລາວຖວາຍຕາມທີ່ພຣະເຈົ້າໄດ້ສັ່ງໄວ້

ສ່ວນເຄື່ອງບູຊາຂອງກາອິນນັ້ນ ພຣະເຈົ້າບໍ່ຍອມຮັບ ເພາະລາວບໍ່ໄດ້ເຮັດຕາມຄຳສັ່ງຂອງພຣະເຈົ້າ ທັງສອງຄົນນີ້ເຊື່ອວ່າມີພຣະເຈົ້າ ແຕ່ທ່າທີໃນໃຈຕ່າງກັນຫລາຍ

ເຮົາຕ້ອງເຂົ້າໃຈວ່າ ພຣະເຈົ້າບໍ່ໄດ້ຢາກກິນຊີ້ນ ຫຼືເລືອດສັດທີ່ອາເບັນນຳມາຖວາຍ ແຕ່ການທີ່ພຣະເຈົ້າພໍພຣະໄທນັ້ນ ເພາະອາເບັນເຫັນດ້ວຍກັບພຣະອົງໃນເລື່ອງຄວາມບາບ ແລະເຊື່ອໃນຄຳສັນຍາຂອງພຣະອົງກ່ຽວກັບຜູ້ຊ່ວຍໃຫ້ລອດ ອາເບັນວາງໃຈໃນພຣະເຈົ້າ ພຣະເຈົ້າຈຶ່ງ







**ພຣະເຢຊູເກີດທີ່ເບັດເລເຮັມ**

**ລູກາ 2:1-20 ມັດທາຍ 2:1**

ເມື່ອເຖິງເວລາແລ້ວ ພຣະເຢຊູໄດ້ເກີດທີ່ເມືອງເບັດເລເຮັມ ຕາມຂໍ້ຄວາມທີ່ຜູ້ທຳນວາຍໄດ້ທຳນວາຍໄວ້ ເມື່ອຫລາຍຮ້ອຍປີກ່ອນ ພຣະອົງໄດ້ມາເພື່ອຊ່ວຍຄົນບາບ ໃຫ້ພົ້ນຈາກຊາຕານ ແລະອຳນາດຂອງຄວາມບາບ ແລະຄວາມຕາຍ **(ມີກາ 5:2)**

ພຣະເຈົ້າໄດ້ສົ່ງທູດສະຫວັນມາບອກເຖິງເລື່ອງການເກີດຂອງຜູ້ຊ່ວຍໃຫ້ລອດ ພຣະອົງເປັນພຣະຄຣິດເຈົ້າ ມະນຸດມີຄວາມຊື່ນຊົມຍິນດີ ແຕ່ທຸກຄົນຍິນດີບໍ່? ໃຫ້ເຮົາມາເບິ່ງຕໍ່ໄປ

**ພວກໂຫລາຈານມາຫາກຸມມານ**

**ມັດທາຍ 2:1-18**

**(2:1-8)** ພວກໂຫລາຈານຄົງຄິດວ່າ ຜູ້ທີ່ເກີດມາເປັນກະສັດຈະຢູ່ທີ່ລາດສະວັງກະສັດ ແຕ່ບໍ່ເປັນເຊັ່ນນັ້ນ

**(2:9-12)** ຝ່າຍພວກໂຫລາຈານໄດ້ໄປທີ່ເບັດເລເຮັມ ແລະກາບນະມັດສະການພຣະກຸມມານນັ້ນ ເພາະເຢຊູກໍ່ເປັນພຣະເຈົ້າ ແລະການທີ່ໂຫລາຈານ ນະມັດສະການພຣະອົງເປັນການຖືກຕ້ອງ ແລະສົມຄວນ

ກຸມມານເຢຊູ ມີຄອບຄົວໃນໂລກທີ່ມີທັງພໍ່ແລະແມ່ດ້ວຍ ເຫດສັນນັ້ນພຣະອົງສົ່ງທູດສະຫວັນມາບອກໂຢເຊັບ ໃຫ້ລາວຮູ້ວ່າຈະເຮັດຢ່າງໃດ

ຜູ້ທຳນວາຍເອຊາຢາ ໄດທຳນາວຍວ່າ ຜູ້ຊ່ວຍໃຫ້ລອດຈະເກີດຈາກສາວພົມມະຈາລີ ແລະເຮົາໄດ້ເຫັນວ່າພຣະເຈົ້າໄດ້ເຮັດຕາມຄຳສັນຍາຂອງພຣະອົງແທ້ ຜູ້ຊ່ວຍໃຫ້ລອດນັ້ນເກີດມາຕາມຄຳສັນຍານັ້ນແທ້ **(ເອຊາຢາ 7:14)**

ບັນດາຜູ້ທຳນວາຍໄດ້ບອກວ່າ ພຣະຜູ້ຊ່ວຍນັ້ນ ຈະຊ່ວຍໃຫ້ມະນຸດພົ້ນຈາກໂທດບາບ ຜູ້ໃດທີ່ເຫັນນຳກັບເລື່ອງຄວາມບາບຂອງຕົນ ແລະຍອມກັບໃຈມາເພິ່ງພຣະອົງ ຈະພົ້ນຈາກບາບຂອງຕົນ

ພຣະເຢຊູເປັນພຣະເຈົ້າ ແລະເປັນມະນຸດດ້ວຍ ເຫດສັນນັ້ນພຣະອົງຈຶ່ງມີຫລາຍຊື່ເພື່ອໃຫ້ເຮົາຮູ້ລັກສະນະຂອງພຣະອົງ ຜູ້ທຳນວາຍເອຊາຢາໄດ້ບອກວ່າ ຊຶ່ງຊື່ໜຶ່ງຂອງພຣະອົງຄື "ເອມານູເອນ" ແປວ່າ ພຣະເຈົ້າຊົງຢູ່ກັບເຮົາ ພຣະອົງຊົງເປັນພຣະເຈົ້າຜູ້ລົງມາເກີດເປັນມະນຸດ ເລີ່ມຕັ້ງແຕ່ເດັກນ້ອຍຈົນເຕີບໂຕເປັນຜູ້ໃຫຍ່ ແລະມີຊີວິດທ່າມກາງມະນຸດໂລກ

ໂຢເຊັບຕື່ນຂຶ້ນ ລາວໄດ້ເຮັດທຸກສິ່ງຕາມຄຳເວົ້າຂອງທູດສະຫວັນ ການຕອບສະໜອງຂອງໂຢເຊັບເປັນການສະແດງອອກເຖິງຄວາມເຊື່ອທີ່ແທ້ຈິງ





ຕ້ອນຮັບລາວໄວ້

**ພຣະເຈົ້າບໍ່ຍອມຮັບຂອງຖວາຍຂອງກາອິນ**
**ປະຖົມມະການ 4:6&7**

ເຮົາຕ້ອງເຂົ້າໃຈວ່າ ເຫດທີ່ພຣະເຈົ້າບໍ່ຮັບຂອງຖວາຍຂອງ ກາອິນນັ້ນ ບໍ່ແມ່ນເພາະຜັກແລະໝາກໄມ້ເປັນສິ່ງບໍ່ດີ ພຣະເຈົ້າປະຕິເສດຂອງຖວາຍຂອງກາອິນ ເພາະກາອິນບໍ່ຍອມຮັບວ່າ ຕົນເອງເປັນຄົນບາບທີ່ຕ້ອງມາຫາພຣະເຈົ້າຕາມທາງທີ່ພຣະອົງກຳນົດໄວ້ ກາອິນພະຍາ ຍາມເຮັດຕົວໃຫ້ເປັນທີ່ພໍພຣະໄທພຣະເຈົ້າ ໂດຍວິທີການຂອງຕົນເອງແທນທີ່ຈະເພິ່ງວິທີການຂອງພຣະເຈົ້າ ກາອິນບໍ່ມີຄວາມເຊື່ອແທ້ ເພາະລາວບໍ່ວາງໃຈໃນພຣະເຈົ້າ

ຂໍໃຫ້ເຮົາລະນຶກເຖິງການທີ່ພຣະເຈົ້າໄດ້ປະຕິເສດ ເສື້ອຜ້າທີ່ອາດາມແລະເອວາໄດ້ເຮັດດ້ວຍຕົນເອງ ແລະພຣະອົງໄດ້ເຮັດເສື້ອຜ້າໃຫ້ພວກເຂົາດ້ວຍໜັງສັດ ນີ້ສະແດງໃຫ້ເຫັນເຖິງ ທາງຂອງພຣະເຈົ້າສຳລັບເຂົາຄືຕ້ອງມີສັດຕາຍແລະເລືອດໄຫຼ ຈຶ່ງຈະມີເສື້ອຜ້າທີ່ໃຊ້ໄດ້ ກາອິນແລະອາເບັນ ກໍ່ຕ້ອງມາຕາມທາງທີ່ພຣະເຈົ້າໄດ້ກຳນົດໄວ້ ພຣະເຈົ້າບໍ່ປ່ຽນແປງໃນສະໄໝຂອງເຮົານີ້ ພຣະເຈົ້າບໍ່ໄດ້ໃຫ້ເຮົາເອົາແກະມາຖວາຍ ແຕ່ພຣະອົງຍັງກຳນົດທາງທີ່ມະນຸດຕ້ອງມາຫາພຣະອົງຢູ່

**ກາອິນຂ້ານ້ອງຊາຍ ແລະຕ້ອງຮັບໂທດຈາກພຣະເຈົ້າ**
**ປະຖົມມະການ 4:8-16**

ກາອິນຄຽດແຄ້ນທີ່ພຣະເຈົ້າບໍ່ຍອມຮັບຂອງຖວາຍຂອງລາວ ແຕ່ຍອມຮັບຂອງຖວາຍຂອງນ້ອງຊາຍ ພຣະເຈົ້າບໍ່ຢາກໃຫ້ກາອິນຕ້ອງຖືກລົງໂທດກັບຊາຕານ ພຣະອົງໄດ້ເຕືອນລາວ ແລະໃຫ້ໂອກາດລາວກັບໃຈ ແຕ່ກາອິນບໍ່ຍອມຮັບຄຳຕັກເຕືອນຂອງພຣະເຈົ້າ ເໝືອນກັບທີ່ລາວບໍ່



ຍອມຮັບຄຳສອນຂອງພໍ່ແມ່ທີ່ສອນທາງຂອງພຣະເຈົ້າແກ່ລາວ

ກາອີນເກີດຄວາມອິດສາອາເບັນ ແລະມື້ໜຶ່ງກາອີນກໍ່ໄດ້ຊວນອາເບັນໄປທີ່ທົ່ງນາ ກາອີນໄດ້ຂ້າອາເບັນຕາຍ ນີ້ເປັນການຂ້າຄັ້ງທຳອິດ ເຮົາຄິດວ່າໃຜເປັນຜູ້ສອນໃຫ້ກາອີນຂ້າຄົນ? ພຣະເຈົ້າ ຫຼືຊາຕານ? ແນ່ນອນຕ້ອງເປັນຊາຕານເພາະພຣະເຈົ້າບໍ່ເຄີຍສອນໃຫ້ເຮົາເຮັດຜິດເຊັ່ນນັ້ນເລີຍ ເຮົາຈະເຫັນໄດ້ແຈ້ງວ່າ ບາບນັ້ນເຮົາໄດ້ຮັບສືບທອດມາຈາກພໍ່ແມ່ ກາອີນກໍໄດ້ຮັບບາບມາຈາກພໍ່ແມ່ ແລະຕັດສິນໃຈທີ່ຈະບໍ່ເຊື່ອຟັງພຣະເຈົ້າດ້ວຍ

ພຣະເຈົ້າເຫັນສິ່ງທີ່ກາອີນເຮັດຕໍ່ອາເບັນ ເພາະວ່າພຣະເຈົ້າເຫັນທຸກຢ່າງທີ່ເຮົາເຮັດ ຂໍໃຫ້ເຮົາລະນຶກວ່າ ເມື່ອອາດາມເຮັດບາບນັ້ນ ພຣະເຈົ້າໄດ້ຖາມອາດາມວ່າ, “ເຈົ້າຢູ່ໃສ?”

ເຊັ່ນດຽວກັນເມື່ອກາອີນຂ້າອາເບັນນັ້ນ ພຣະເຈົ້າກໍ່ຖາມລາວວ່າ, “ກາອີນ ນ້ອງຂອງເຈົ້າຢູ່ໃສ?” ກາອີນກໍ່ຕອບວ່າ, “ຂ້ານ້ອຍເປັນຜູ້ດູແລນ້ອງຂອງຂ້ານ້ອຍຊັ້ນບໍ?” ແຕ່ພຣະເຈົ້າກໍ່ຮູ້ວ່າກາອີນໄດ້ຂ້ານ້ອງຂອງຕົນ ເພາະພຣະເຈົ້າຮູ້ທຸກສິ່ງ ບໍ່ມີໃຜທີ່ຈະປິດບັງສິ່ງໜຶ່ງສິ່ງໃດຈາກພຣະເຈົ້າໄດ





ຄວາມບາບທີ່ມາຈາກ ອາດາມ

**ພຣະເຢຊູເກີດຈາກເຊື້ອສາຍຂອງອັບຣາຮາມ, ອີຊາກ, ຢາໂຄບ ແລະດາວິດ ມັທາຍ 1:1-2**

ມາລີ ແລະໂຢເຊັບ ເປັນຊົນຊາດຢິວ ທັງສອງເປັນເຊື້ອສາຍຂອງອັບຣາຮາມ, ອີຊາກ, ຢາໂຄບ ແລະດາວິດ ພຣະເຈົ້າໄດ້ສັນຍາໄວ້ວ່າຜູ້ຊ່ວຍໃຫ້ລອດຈະຕ້ອງເກີດມາໃນເຊື້ອວົງຂອງຄົນເຫລົ່ານີ້ **(ເອຊະຢາ 9:7)**

ບໍ່ມີຜູ້ໃດທີ່ໄດ້ຮັບການຮັບຮອງໂດຍຄຳສັນຍາຂອງພຣະເຈົ້າ ໃຫ້ເປັນພຣະຄຣິດ ນອກຈາກພຣະເຢຊູ ເຫດສັນນັ້ນຈຶ່ງບໍ່ມີໃຜມີສິດຮັບຕຳແໜ່ງນີ້ ເພາະພຣະເຈົ້າກຳນົດໄດ້ແລ້ວວ່າ ພຣະເຢຊູແຕ່ພຽງຜູ້ດຽວເທົ່ານັ້ນ ທີ່ເປັນຜູ້ຊ່ວຍໃຫ້ລອດຂອງມະນຸດ ແລະພຣະເຈົ້າຊົງຮັກສາຄຳສັນຍາຂອງພຣະອົງສະເຫມີ

**ພຣະເຈົ້າໃຫ້ໂຢເຊັບ ຮູ້ເຖິງແຜນການຂອງພຣະອົງ ມັດທາຍ 1:18-25**

ເມື່ອທູດຂອງພຣະເຈົ້າເວົ້າກັບມາລີ ແລ້ວນາງກໍ່ຕັ້ງທ້ອງແທ້ ໂຢເຊັບຜູ້ເປັນຄູ່ຫມັ້ນຂອງລາວ ຈຶ່ງຄິດທີ່ຈະຖອນຫມັ້ນເສຍ ເພາະເຂົ້າໃຈວ່າມາລີໄດ້ລ່ວງປະເວນີ ແຕ່ກ່ອນທີ່ລາວຈະຖອນຫມັ້ນນັ້ນ ທູດສະຫວັນໄດ້ມາປະກົດແກ່ໂຢເຊັບວ່າ ການທີ່ມາລີຕັ້ງທ້ອງນັ້ນ ບໍ່ແມ່ນວ່ານາງລ່ວງປະເວນີ ແຕ່ຕັ້ງທ້ອງໂດຍລິດເດດຂອງພຣະວິນຍານບໍລິສຸດ ແລະເມື່ອລູກເກີດມາແລ້ວ ໃຫ້ຊື່ລູກຜູ້ນັ້ນວ່າ “ເຢຊູ” ໝາຍຄວາມວ່າ ຜູ້ຊ່ວຍໃຫ້ລອດ ພຣະເຈົ້າບໍ່ຍອມໃຫ້ໂຢເຊັບຖິ້ມມາລີ ໂຢເຊັບເປັນຜູ້ທີ່ວາງໃຈໃນພຣະເຈົ້າ ທັງໂຢເຊັບແລະມາລີເປັນຄົນບາບ ແຕ່ທັງສອງມາເຖິງພຣະເຈົ້າຕາມທາງຂອງພຣະອົງ ພຣະເຈົ້າຮັກພວກເຂົາ ແລະຢາກໃຫ້

ທູດຂອງພຣະເຈົ້າກໍ່ໄດ້ມາປະກົດແກ່ມາລີ ແລະໄດ້ບອກນາງວ່າ ເຖິງແມ້ນວ່າ ນາງຈະຍັງບໍ່ໄດ້ສົມສູ່ກັບຊາຍ ນາງກໍ່ຈະຕັ້ງທ້ອງ ແລະມີລູກເປັນຜູ້ຊາຍ ແລະທູດອົງນັ້ນ ໄດ້ບອກນາງວ່າ ໃຫ້ຕັ້ງຊື່ບຸດນັ້ນວ່າ "ເຢຊູ" ຄຳວ່າ "ເຢຊູ" ຫມາຍຄວາມວ່າ ຜູ້ຊ່ວຍໃຫ້ລອດ ເຖິງເວລາແລ້ວທີ່ພຣະເຈົ້າຈະເຮັດຕາມພຣະສັນຍາຂອງພຣະອົງ ພຣະອົງຊົງຮັກມະນຸດໂລກ ແລະຢາກໃຫ້ພວກເຂົາພົ້ນຈາໂທດແຫ່ງຄວາມບາບ

ທູດອົງນັ້ນ ໄດ້ບອກມາລີວ່າ ນາງຈະເປັນແມ່ຂອງຜູ້ຊ່ວຍໃຫ້ລອດ ແຕ່ຜູ້ທີ່ຈະເກີດນັ້ນ ຈະບໍ່ແມ່ນເປັນພຽງລູກຂອງມາລີເທົ່ານັ້ນ ຜູ້ນັ້ນຈະເປັນລູກຂອງພຣະເຈົ້າດ້ວຍ

ເລື່ອງນີ້ຈະເປັນໄປໄດ້ຢ່າງໃດ? ເມື່ອເຮົາເລີ່ມຮຽນຮູ້ພຣະຄຳພີດ້ວຍກັນ ເຮົາໄດ້ຮຽນຮູ້ວ່າ ມີພຣະເຈົ້າອົງດຽວ ແຕ່ພຣະອົງສຳແດງພຣະອົງເປັນສາມພຣະພາກ ເຮົາເອີ້ນວ່າພຣະເຈົ້າຜູ້ເປັນພຣະບິດາ ພຣະເຈົ້າຜູ້ເປັນພຣະບຸດ ແລະພຣະເຈົ້າຜູ້ເປັນພຣະວິນຍານບໍລິສຸດ ພຣະເຈົ້າບໍ່ມີຮ່າງກາຍເຫມືອນຮ່າງກາຍມະນຸດເຮົາ ແຕ່ຜູ້ຊ່ວຍໃຫ້ລອດຈະຕ້ອງມີຮ່າງກາຍເປັນມະນຸດແທ້ໃນທຸກດ້ານ ເວັ້ນແຕ່ ພຣະອົງບໍ່ມີບາບເລີຍ ພຣະເຈົ້າຜູ້ເປັນພຣະບຸດຕ້ອງເກີດເປັນມະນຸດ ຈຶ່ງຈະເຮັດໃຫ້ແຜນການຂອງພຣະອົງສຳເລັດ

ສະນັ້ນພຣະເຈົ້າໄດ້ເລືອກມາລີ ໃຫ້ເປັນແມ່ຂອງຜູ້ຊ່ວຍໃຫ້ລອດ ພຣະບຸດອົງນັ້ນ ຕ້ອງລົງມາຈາກສະຫວັນ ພຣະອົງຈຶ່ງເປັນທັງບຸດພຣະເຈົ້າ ແລະບຸດຂອງມະນຸດຄືມາລີດ້ວຍ ຜູ້ທີ່ເຮັດໃຫ້ການອັດສະຈັນນີ້ເກີດຂຶ້ນຄືພຣະວິນຍານຂອງພຣະເຈົ້າ ພຣະບຸດຂອງພຣະເຈົ້າຈຶ່ງບໍ່ໄດ້ເກີດຈາກການສົມສູ່ກັນລະຫວ່າງຊາຍແລະຍິງ ພຣະອົງບໍ່ໄດ້ເກີດຕາມທຳມະຊາດຂອງມະນຸດ ພຣະອົງເປັນຜູ້ປາສະຈາກຄວາມບາບ ເພາະບໍ່ຕິດ





ພຣະເຈົ້າເປັນຜູ້ສ້າງມະນຸດທຸກຄົນ ພຣະອົງໃຫ້ຊີວິດແກ່ອາດາມແລະເປັນຜູ້ໃຫ້ຊີວິດແກ່ເຮົາທຸກຄົນດ້ວຍ ເຖິງແມ່ນວ່າ ຊາຕານໄດ້ຍາດແຍ່ງມະນຸດໄປຈາກພຣະເຈົ້າ ແຕ່ຄວາມຈິງແລ້ວ ເຮົາຍັງເປັນຂອງພຣະເຈົ້າຢູ່ ສະນັ້ນ ເມື່ອກາອິນໄດ້ຂ້ານ້ອງຊາຍຂອງຕົນ ພຣະອົງຖືວ່າເປັນຄວາມຜິດຕໍ່ພຣະອົງດ້ວຍ ບາງເທື່ອພຣະເຈົ້າບໍ່ໄດ້ລົງໂທດທັນທີ ແຕ່ການທີ່ມະນຸດທຳຮ້າຍກັນແລະກັນນັ້ນ ເປັນຄວາມບາບທີ່ຈະຕ້ອງຮັບໂທດບໍ່ຊ້າກໍ່ໄວ ສຳລັບກາອິນນັ້ນ ລາວຕ້ອງແຍກອອກຈາກຄອບຄົວ ແລະຕ້ອງພະເນຈອນໄປທົ່ວໂລກ ສຸດທ້າຍກາອິນແລະເຊື້ອສາຍຂອງລາວ ໄດ້ອອກຫ່າງໄກໄປຈາກພຣະເຈົ້າ ແລະຈະຕ້ອງໄປຢູ່ກັບຊາຕານໃນບຶງໄຟ

**ເຊື້ອສາຍຂອງເຊດ ບາງຄົນສະແຫວງຫາພຣະເຈົ້າ**
**ປະຖົມມະການ 4:25&26**

ອາດາມແລະເອວາ ມີບຸດຊາຍແລະບຸດຍິງຫລາຍຄົນນຳກັນ ຄົນທີ່ເກີດຫຼັງຈາກທີ່ອາເບັນຕາຍໄປແລ້ວມີຊື່ວ່າ ເຊດ ເປັນລູກທີ່ພຣະເຈົ້າໃຫ້ແທນອາເບັນ ພຣະເຈົ້າຕັ້ງພຣະໄທທີ່ຈະໃຫ້ຜູ້ຊ່ວຍໃຫ້ລອດເກີດມາໃນເຊື້ອສາຍຂອງເຊດ ເຊດເປັນຜູ້ທີ່ມີຄວາມເຊື່ອເໝືອນອາເບັນ ແລະລູກຂອງເຊດບາງຄົນກໍ່ເປັນຜູ້ທີ່ນະມັດສະການພຣະເຈົ້າ

ໃນເຊື້ອສາຍຂອງເຊດ ມີຄົນໜຶ່ງຊື່ ເອນົກ ເອນົກກໍ່ເປັນຄົນບາບ ແຕ່ເອນົກກໍ່ເຊື່ອໃນຄຳສັນຍາຂອງພຣະເຈົ້າ ແລະມາຫາພຣະເຈົ້າຕາມທາງທີ່ພຣະອົງຊົງກຳນົດໄວ້ ພຣະຄຳພີບອກວ່າ ເອນົກດຳເນີນໄປກັບພຣະເຈົ້າ ເອນົກເຫັນວ່າການສະໜິດສະໜົມກັບພຣະເຈົ້າດີກວ່າສິ່ງອື່ນທັງໝົດໃນໂລກ ພຣະເຈົ້າຮັກເອນົກ ແລະຕັດສິນໃຈຮັບເອົາເອນົກອອກຈາກໂລກ ໃຫ້ລາວຢູ່ກັບພຣະອົງໃນສະຫວັນ ເອນົກບໍ່ຕ້ອງຕາຍ ແຕ່ພຣະເຈົ້າຊົງຮັບລາວຂຶ້ນໄປໃນສະຖານທີ່ທີ່ງົດງາມ ຊຶ່ງບໍ່ມີຄວາມທຸກຄວາມເຈັບໄຂ້ ຫຼືຄວາມຕາຍອີກຕໍ່ໄປ ເມືອງສະຫວັນນັ້ນ ເປັນເມືອງທີ່

ໜ້າຢູ່ທີ່ສຸດ ພຣະເຈົ້າເປັນເຈົ້າຊີວິດຂອງເອນົກ ສະນັ້ນພຣະອົງມີສິດທີ່ຈະໃຫ້ເອນົກຢູ່ໃນສະຖານທີ ທີ່ພຣະອົງເຫັນຊອບ

### ທົບທວນ

1. ເປັນຫຍັງກາອິນ ແລະອາເບັນຈິ່ງເກີດມາເປັນຄົນບາບ ແລະຕ້ອງຖືກແຍກຈາກພຣະເຈົ້າ?
2. ເປັນຫຍັງເຮົາທັງຫລາຍຈິ່ງເປັນຄົນບາບ ແລະຕ້ອງຖືກແຍກຈາກພຣະເຈົ້າ?
3. ໃຜແດ່ເປັນຜູ້ທີ່ເຫັນດ້ວຍກັບພຣະເຈົ້າໃນເລື່ອງຄວາມບາບ ແລະຮູ້ວ່າຕົນຕ້ອງເພິ່ງພຣະເຈົ້າ ເພື່ອຈະພົ້ນຈາກໂທດຂອງຄວາມບາບນັ້ນ?
4. ຄົນທີ່ບໍ່ໄດ້ຖວາຍເຄື່ອງບູຊາຕາມທີ່ພຣະເຈົ້າກຳນົດໄວ້ຄືໃຜ?
5. ໃຜແດ່ທີ່ເປັນຄົນບາບແລະຊ່ວຍຕົນເອງບໍ່ໄດ້?
6. ເປັນຫຍັງພຣະເຈົ້າເຕືອນກາອິນເມື່ອກາອິນຄຽດ?
7. ຖ້າມະນຸດທຳຮ້າຍຄົນອື່ນພຣະເຈົ້າຈະລົງໂທດເຂົາບໍ່?
8. ເມື່ອກາອິນຂ້ານ້ອງຊາຍ ກາອິນໄດ້ຮັບໂທດແນວໃດ?
9. ເຊື້ອສາຍຂອງກາອິນຈະເລີນບໍ່?
10. ລູກທີ່ພຣະເຈົ້າໃຫ້ແກ່ອາດາມແລະເອວາແທນອາເບັນມີຊື່ວ່າແນວໃດ?
11. ຜູ້ທີ່ມີຄວາມເຊື່ອແທ້ເໝືອນອາເບັນ ຕ້ອງມີຄວາມຄິດແນວໃດໃນເລື່ອງຂອງຄວາມບາບ?







## ບົດທີ 22
## ພຣະເຈົ້າ ສົ່ງພຣະບຸດພຣະອົງເຂົ້າມາໃນໂລກ
**ລູກາ 1:26-38; 2:1-7**
**ມັດທາຍ ບົດທີ່ 1 & 2**

### ສ້າງຄວາມສົນໃຈ

ທູດສະຫວັນມີບົດບາດຫລາຍໃນພຣະຄຳພີ ເມື່ອພຣະເຈົ້າສ້າງໂລກ ພວກທູດສະຫວັນໄດ້ສັນເສີນພຣະເຈົ້າດ້ວຍຄວາມຍິນດີ

ທູດສະຫວັນເຄີຍປະກົດແກ່ຫລາຍຄົນ ທີ່ພຣະເຈົ້າເອີ້ນໃຫ້ຮັບໃຊ້ພຣະອົງເຊັ່ນອັບຣາຮາມ, ດາວິດ ແລະຄົນອື່ນໆ ອີກຫລາຍຄົນ ເລື່ອງທີ່ເຮົາຮຽນດ້ວຍກັນໃນວັນນີ້ເຮົາຈະໄດ້ເຫັນວ່າ ທູດສະຫວັນໄດ້ມາເວົ້າກັບມະນຸດອີກ ເພາະສິ່ງທີ່ເກີດຂຶ້ນເປັນເລື່ອງທີ່ຍິ່ງໃຫຍ່ ນອກ ຈາກນັ້ນ ທູດສະຫວັນຈະຮ້ອງເພັງສັນເສີນພຣະເຈົ້າ ແລະມະນຸດບາງຄົນໄດ້ຍິນເພັງຂອງລາວດ້ວຍ ທູດສະຫວັນເປັນຜູ້ຮັບໃຊ້ຂອງພຣະເຈົ້າ ແລະພຣະເຈົ້າເຄີຍໃຊ້ລາວໃນການສື່ສານກັບມະນຸດເປັນບາງຄັ້ງ ສ່ວນລາຍລະອຽດນັ້ນໃຫ້ຮຽນຮູ້ນຳກັນໃນມື້ນີ້

### ມາລີຮູ້ວ່າຈະມີລູກຊາຍ ເຊິ່ງເປັນຜູ້ຊ່ວຍໃຫ້ລອດ
**ລູກາ 1:26-38**

ໃນເມືອງນາຊາເລັດ ມີຍິງພົມມະຈາລີຄົນໜຶ່ງ ຊື່ ມາລີ ເຊິ່ງໄດ້ໝັ້ນກັນກັບ ໂຢເຊັບ ທັງມາລີແລະໂຢເຊັບ ເປັນເຊື້ອວົງຂອງດາວິດ

5. ໜັງສືທີ່ພວກຜູ້ທຳນວາຍໄດ້ຂຽນເລື່ອງຜູ້ຊ່ວຍໃຫ້ລອດນັ້ນ ຄືໜັງສືຫຍັງ?
6. ພວກອິດສະລະເອນສ່ວນຫລາຍມີທ່າຢ່າງໃດຕໍ່ຜູ້ທຳນວາຍເຫລົ່ານັ້ນ?
7. ການທີ່ມະນຸດນັບຖືພຣະເຈົ້າດ້ວຍວິທີພາຍນອກຢ່າງດຽວ ເປັນທີ່ພໍພຣະໄທພຣະເຈົ້າບໍ່?
8. ເປັນຫຍັງເຮົາຕົວະພຣະເຈົ້າບໍ່ໄດ້?
9. ຄົນສ່ວນໜ້ອຍໃນພວກອິດສະລະເອນໄດ້ຖ່ອມຕົວລົງ ພວກເຂົາເຫລົ່ານັ້ນກຳລັງລໍຖ້າໃຜ?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທຂອງພຣະອົງ





## ຄວາມຈິງທີ່ຕ້ອງເນັ້ນ

- ມະນຸດເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ມະນຸດຈະມາເຖິງພຣະເຈົ້າໄດ້ ຕ້ອງມາຕາມທາງທີ່ພຣະເຈົ້າໄດ້ກຳນົດໄວ້
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ທີ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າສື່ສານກັບມະນຸດ
- ຊາຕານຕໍ່ຕ້ານພຣະເຈົ້າ ແລະແຜນການຂອງພຣະອົງສະເໝີ



## ບົດທີ 10
## ເລື່ອງນ້ຳຖ້ວມໂລກ

**ປະຖົມມະການ ບົດທີ 6&7; 8:1-8, 20-22; 9:8-17**

**ສ້າງຄວາມສົນໃຈ**

ຄົນບູຮານທົ່ວໄປ ເຄີຍເລົ່າເລື່ອງນ້ຳຖ້ວມໂລກ ໃຫ້ລູກຫລານຟັງ ນີ້ເປັນເຫດຜົນໜຶ່ງທີ່ຊີ້ໃຫ້ເຮົາເຫັນວ່າ ນ້ຳເຄີຍຖ້ວມໂລກແທ້ ແຕ່ເລື່ອງເຫຼົ່ານັ້ນເປັນເລື່ອງທີ່ໄດ້ເລົ່າສືບຕໍ່ກັນມາເປັນເວລາຫຼາຍຊົ່ວອາຍຸຄົນ ການເລົ່າຂອງແຕ່ລະຄົນນັ້ນເຮັດໃຫ້ເນື້ອເລື່ອງເກີນຈາກຄວາມເປັນຈິງແດ່ ຂາດຫາຍແດ່ ຫລືປ່ຽນເລື່ອງແດ່ ນອກຈາກນັ້ນ ຊາຕານເປັນຜູ້ຢາກໃຫ້ມະນຸດເຊື່ອເລື່ອງຂີ້ຕົວະ ແລະລໍ້ລວງມະນຸດສະເໝີ ສະນັ້ນເລື່ອງນ້ຳຖ້ວມໂລກທີ່ມະນຸດເລົ່າກັນໄປນັ້ນ ໄດ້ປ່ຽນເປັນຄວາມຈິງແດ່ ຄວາມບໍ່ຈິງແດ່

ພຣະເຈົ້າເປັນຜູ້ເຫັນທຸກສິ່ງທີ່ເກີດຂຶ້ນ ແລະພຣະອົງສາມາດບອກໃຫ້ເຮົາຮູ້ແທ້ເຖິງເຫດການທີ່ເກີດຂຶ້ນ ເຮົາຄວນດີໃຈທີ່ເຮົາມີພຣະຄຳພີ ຊຶ່ງເຮັດໃຫ້ເຮົາຮູ້ເລື່ອງຕາມຄວາມເປັນຈິງ ເຮົາບໍ່ຕ້ອງເພິ່ງເລື່ອງເລົ່າ ເຊິ່ງບໍ່ມີຫລັກຖານອີກແລ້ວ ເພາະເຮົາມີພຣະຄຳພີ ເຊິ່ງເປັນມາດຕະຖານສຳລັບຄວາມເຊື່ອຂອງເຮົາ





ປະເທດອິດສະລະເອນໃນເວລານັ້ນ ແມ້ນແຕ່ປະໂລຫິດ ແລະຜູ້ນຳປະເທດ ກໍ່ເປັນຄົນຊົ່ວໂດຍສ່ວນຫລາຍ ພວກເຂົາບໍ່ຍອມເຊື່ອຄຳສອນຂອງພຣະອົງ

ຢ່າງໃດກໍ່ຕາມ ຍັງມີຄົນເປັນຈຳນວນສ່ວນໜ້ອຍ ທີ່ເຊື່ອຄຳເຊິ່ງຜູ້ທຳນວາຍໄດ້ສອນໄວ້ ຄົນເຫລົ່ານັ້ນວາງໃຈໃນພຣະເຈົ້າ ແລະພະຍາຍາມເດີນໃນທາງຂອງພຣະອົງ ພວກເຂົາເປັນເໝືອນອາເບັນ, ໂນອາ, ອັບຣາຮາມ ແລະຄົນອື່ນໆ ຜູ້ເຊິ່ງລະນຶກວ່າ ຕົນເອງເປັນຄົນບາບທີ່ຕ້ອງເພິ່ງພຣະເມດຕາຄຸນຂອງພຣະເຈົ້າ ຄົນເຫລົ່ານັ້ນ ກຳລັງລໍຜູ້ຊ່ວຍໃຫ້ລອດເຊິ່ງພຣະເຈົ້າສັນຍາວ່າ ຈະສົ່ງມະນຸດມາຊ່ວຍໃຫ້ພົ້ນຈາກອຳນາດຊາຕານ ແລະໂທດບາບທີ່ສົມຄວນຈະຕົກແກ່ພວກເຂົາ

ທຸກວັນນີ້ພວກເຮົາເປັນຄືໃຜ? ເຮົາເປັນຄືຄົນສ່ວນຫລາຍໃນອິດສະລະເອນ ເຊິ່ງບໍ່ຍອມຖ່ອມຕົວລົງ ເພື່ອຮັບພຣະຄຳຂອງພຣະເຈົ້າ ຫລືເປັນເຫມືອນຄົນສ່ວນໜ້ອຍ ທີ່ຍອມຟັງຄຳເວົ້າຂອງຜູ້ທຳນວາຍ?

**ທົບທວນ**

1. ຈຸດປະສົງສອງປະການທີ່ພຣະເຈົ້າໄດ້ໃຊ້ຜູ້ທຳນວາຍເວົ້າກັບມະນຸດມີຫຍັງແດ່?
2. ຖ້າຊາວອິດສະລະເອນບໍ່ຍອມກັບໃຈ ພຣະເຈົ້າຈະຕ້ອງເຮັດຫຍັງກັບພວກເຂົາ?
3. ເມື່ອເວລາຜ່ານໄປຫລາຍພັນປີ ພຣະເຈົ້າລືມຄຳສັນຍາທີ່ກ່ຽວກັບຜູ້ຊ່ວຍໃຫ້ລອດບໍ່?
4. ພຣະເຈົ້າໃຫ້ໃຜຮູ້ຄວາມຈິງລ່ວງໜ້າກ່ຽວກັບຜູ້ຊ່ວຍໃຫ້ລອດ ກ່ອນທີ່ພຣະອົງຈະສະເດັດເຂົ້າມາໃນໂລກ?

ເອຊາຢາເປັນຜູ້ທຳນວາຍ ຜູ້ເຊິ່ງໄດ້ຍິນພຣະຄຳຂອງພຣະເຈົ້າທີ່ກ່ຽວກັບຜູ້ຊ່ວຍໃຫ້ລອດຫລາຍໆ ຂໍ້ ລາວໄດ້ຂຽນເລື່ອງນັ້ນໄວ້ ເຊັ່ນພຣະເຈົ້າໃຫ້ລາວຮູ້ວ່າ ຜູ້ຊ່ວຍໃຫ້ລອດຈະເປັນກະສັດຄອບຄອງມະນຸດແທນກະສັດດາວິດ ແລະໃຫ້ລາວຮູ້ວ່າ ຜູ້ຊ່ວຍອົງນັ້ນ ຈະບໍ່ມີພໍ່ເປັນມະນຸດ ແຕ່ຈະເກີດຈາກສາວພົມມະຈາລີ **(ເອຊາຢາ 9:7 & 7:14)**

ຜູ້ທຳນວາຍອີກຄົນໜຶ່ງໄດ້ກ່າວວ່າ ຜູ້ຊ່ວຍໃຫ້ລອດຈະເກີດໃນຫມູ່ບ້ານເບັດເລເຮັມ ເຊິ່ງເປັນບ້ານເກີດຂອງກະສັດດາວິດ **(ມີກາ 5:2)**

ທຸກສິ່ງທີ່ເຮົາໄດ້ຂຽນໄວ້ໃນຕາຕະລາງນີ້ ແລະສິ່ງອື່ນໆ ອີກຫລາຍປະການ ທີ່ພຣະເຈົ້າໄດ້ບອກໄວ້ຈຳເປັນຕ້ອງເກີດຂຶ້ນກັບຊີວິດຂອງຜູ້ຊ່ວຍໃຫ້ລອດ ເພາະພຣະເຈົ້າໄດ້ທຳນວາຍສິ່ງນີ້ໄວ້ກ່ອນ ມີແຕ່ພຣະເຈົ້າອົງດຽວເທົ່ານັ້ນ ທີ່ຮູ້ລ່ວງໜ້າເຖິງສິ່ງທີ່ຈະເກີດຂຶ້ນທັງໝົດ

**ມີຄົນສ່ວນໜ້ອຍໃນອິດສະລະເອນທີ່ຍອມເຊື່ອພຣະເຈົ້າ**

ເມື່ອມີຜູ້ທຳນວາຍມາສັ່ງສອນຊາວອິດສະລະເອນຢ່າງນັ້ນ ທ່ານຄິດວ່າຊາວອິດສະລະເອນ ເຊື່ອຄຳເວົ້າຂອງຄົນເຫລົ່ານັ້ນບໍ່? ໜ້າເສຍດາຍ ຄົນສ່ວນຫລາຍບໍ່ສົນໃຈຄຳເວົ້າທີ່ມາຈາກພຣະເຈົ້າເລີຍ ຄົນສ່ວນຫລາຍດຳເນີນວິຖີຊີວິດຂອງຄົນຕ່າງຊາດ ແລະບໍ່ສັດຊື່ຕໍ່ອົງພຣະເຈົ້າທ່ຽງແທ້ ຫລາຍຄົນນັບຖືພຣະເຈົ້າພຽງພິທີພາຍນອກ ແຕ່ພວກເຂົາບໍ່ຍອມເຊື່ອພຣະອົງຍິ່ງໄປກ່ວານັ້ນ ພວກເຂົາຂົ່ມເຫັງຜູ້ທຳນວາຍຂອງພຣະເຈົ້າທີ່ມາເຕືອນພວກເຂົາ ພວກເຂົາຂຽນຕີ ຂ້າລາວ ແລະບໍ່ຍອມຖິ້ມການບາບ ແລະຮູບເຄົາລົບຂອງພວກເຂົາທັງຫລາຍ

ພວກເຂົາຈະຕົວະພຣະເຈົ້າບໍ່ໄດ້ ເພາະພຣະອົງຮູ້ຈິດໃຈ ແລະຄວາມຄິດຂອງພວກເຂົາທັງໝົດ ພຣະອົງຮູ້ວ່າເຮົາທັງຫລາຍເປັນຄົນບາບ ໃນ





**ພຣະວິນຍານຊົງເຕືອນຄົນບາບ**

**ປະຖົມມະການ 6:1-3**

ຈາກ ປະຖົມມະການ 6:1-3 ເຮົາເຫັນວ່າ ມະນຸດເພີ່ມທະວີຫຼາຍຂຶ້ນໃນໂລກ ເມື່ອເວລາຜ່ານໄປຫຼາຍຮ້ອຍປີ ຄົນສ່ວນຫຼາຍຄິດເຖິງແຕ່ຄວາມສະນຸກສະໜານ ແລະມົວເມົາຢູ່ກັບແຕ່ເລື່ອງລາຄະ ແຕ່ບໍ່ຍອມໃຫ້ພຣະເຈົ້າມີສ່ວນໃນການຕັ້ງຄອບຄົວ ພຣະເຈົ້າໄດ້ເຫັນຄວາມບາບອັນໜ້າກຽດຂອງຄົນເຫຼົ່ານີ້ ແຕ່ພຣະເຈົ້າຍັງຮັກເຂົາ ແລະຢາກໃຫ້ເຂົາກັບໃຈຍອມຮັບວ່າເຂົາເປັນຄົນບາບ ແລະເຊື່ອເລື່ອງພຣະຄຳຂອງພຣະອົງ ພຣະວິນຍານຂອງພຣະເຈົ້າ ໄດ້ເຕືອນເຂົາເຖິງຄວາມບາບຊົ່ວຂອງເຂົາ ແທ້ຈິງມະນຸດທຸກຄົນຮູ້ແລ້ວວ່າແມ່ນຫຍັງດີ ແມ່ນຫຍັງຊົ່ວ ແຕ່ມະນຸດມັກຄວາມຊົ່ວຫຼາຍກວ່າຄວາມດີ

ພຣະເຈົ້າໄດ້ເຕືອນມະນຸດວ່າ ວັນເວລາຂອງເຂົາຈະຢູ່ອີກບໍ່ດົນພຣະວິນຍານຈະທຳງານທ່າມກາງເຂົາອີກ120 ປີເທົ່ານັ້ນ ຖ້າເຂົາບໍ່ກັບໃຈ ພຣະເຈົ້າຈະຕ້ອງລົງໂທດເຂົາແທ້ (6:3)

ໃນສະໄໝນີ້ ພຣະວິນຍານຂອງພຣະເຈົ້າກໍ່ຍັງເຕືອນເຮົາດ້ວຍ ພຣະອົງເວົ້າໃນໃຈເຮົາແລະບອກວ່າ, “ຈົ່ງຟັງສຽງຂອງພຣະເຈົ້າ ແລະວາງໃຈໃນພຣະອົງ“ ແຕ່ບາງເທື່ອກໍ່ມີສຽງຂອງຊາຕານ ແລະສະໝຸນຂອງມັນມາເຖິງເຮົານຳບອກວ່າ, “ຢ່າຟັງຂ່າວສານຂອງພຣະເຈົ້າ ຢ່າປະຖິ້ມທາງຂອງປູ່ຍ່າຕາຍາຍເປັນອັນຂາດ“ ໃນສອງຢ່າງນີ້ເຮົາຈະຟັງສຽງຂອງໃຜ? ຖ້າເຮົາບໍ່ຟັງສຽງພຣະເຈົ້າ ມື້ໜຶ່ງພຣະວິນຍານອາດຈະບໍ່ເຕືອນເຮົາແລ້ວ ແລະເຮົາຈະພາດໂອກາດທີ່ຈະວາງໃຈໃນພຣະເຈົ້າ (6:3)

**ຄວາມບາບຂອງມະນຸດທະວີຫຼາຍຂຶ້ນ**

**ປະຖົມມະການ 6:5-7**

ພຣະເຈົ້າຊົງເຫັນວ່າ ມະນຸດສ່ວນຫຼາຍໄດ້ເດີນຕາມທາງຊົ່ວຂອງກາອີນ ແລະຍິ່ງຮ້າຍຂຶ້ນທຸກຂະໜາດ ມະນຸດບໍ່ຟັງຄຳເຕືອນຂອງພຣະເຈົ້າ ເຂົາເກີດມາເປັນຄົນບາບ ເພາະເຂົາເປັນເຊື້ອສາຍຂອງອາດາມແຕ່ຍິ່ງກວ່ານັ້ນ ເຂົາເລືອກເຮັດຄວາມບາບ ເຂົາບໍ່ເຫັນດີກັບພຣະເຈົ້າ ແລະເຂົາບໍ່ສົນໃຈໃນພຣະສັນຍາຂອງພຣະອົງ

ພຣະເຈົ້າຊົງເຫັນວ່າ ຄົນເຫຼົ່ານັ້ນເຕັມໄປດ້ວຍຄວາມໂລບ ການອິດສາຕາຮ້ອນ ການຜິດຖຽງກັນ ເຂົາເປັນຄົນໂຫດຮ້າຍ ຂີ້ຕົວະກັນແລະກັນ ນິນທາໃສ່ຮ້າຍປ້າຍສີກັນ ແລະຂ້າກັນແລະກັນ ສິ່ງໂຫດຮ້າຍແບບນີ້ ກຳລັງເກີດຂຶ້ນໃນໝູ່ບ້ານຂອງເຮົາບໍ່?

ເມື່ອພຣະເຈົ້າເຫັນວ່າ ມະນຸດບໍ່ຍອມຟັງສຽງພຣະອົງ ພຣະອົງຮູ້ສຶກເສຍພຣະໄທ ເສຍໃຈຫຼາຍ ພຣະອົງຊົງເຫັນທຸກສິ່ງທີ່ມະນຸດເຮັດ ແມ່ນແຕ່ສິ່ງທີ່ເຂົາເຮັດໃນທີ່ມືດ ກໍ່ບໍ່ພົ້ນຈາກສາຍຕາຂອງພຣະເຈົ້າເລີຍ ພຣະອົງຈຶ່ງຕັດສິນໃຈວ່າ ຈະທຳລາຍມະນຸດແລະສິ່ງອື່ນໆ ທີ່ພຣະອົງຊົງສ້າງນັ້ນ (6:6-7)

ເຮົາຄິດວ່າພຣະເຈົ້າຈະທຳລາຍແທ້ບໍ່? ເຮົາຍັງຈື່ເລື້ອງ ອາດາມແລະເອວາໄດ້ບໍ່? ເມື່ອເຂົາບໍ່ເຊື່ອຟັງພຣະເຈົ້າ ເຂົາຖືກໄລ່ອອກຈາກສວນຂອງພຣະເຈົ້າແທ້ບໍ່? ເຂົາຕ້ອງຕາຍບໍ່? ແນ່ນອນ ພຣະເຈົ້າບໍ່ລືມສິ່ງທີ່ພຣະອົງໄດ້ບອກໄວ້





ຕາຕະລາງນີ້ ຄວນຕິດໄວ້ໃນທີ່ຮຽນຂອງເຮົາ ແລະທຸກຄັ້ງເມື່ອເຮົາມາເຖິງເຫດການທີ່ສຳເລັດໃນພຣະຄຳພີໃຫມ່ ເຮົາຈະຊີ້ເຖິງຄຳສັນຍາໃນພຣະຄຳພີເດີມທີ່ສຳເລັດ

**ສິ່ງທີ່ພຣະເຈົ້າບອກວ່າຈະເກີດຂຶ້ນກັບຜູ້ຊ່ວຍໃຫ້ລອດ**

| | |
|---|---|
| ເອຊາຢາ 9:7 | ຈະປົກຄອງເໜືອພຣະທີ່ນັ່ງຂອງດາວິດ |
| ເອຊາຢາ 7:14 | ຈະເກີດຈາກຍິງພົມມະຈາລີ |
| ມີກາ 5:2 | ຈະເກີດທີ່ບ້ານເບັດເລເຮັມແຂວງຢູດາ |
| ໂຮເຊອາ 11:1 | ຈະອອກມາຈາກປະເທດອີຢິບ |
| ເອຊາຢາ 11:2 | ພຣະລັກສະນະບາງຢ່າງຂອງພຣະອົງ |
| ເອຊາຢາ 53:4-5 | ຈະໄດ້ທົນທຸກເພື່ອຜູ້ອື່ນ |
| ເພງສັນລະເສີນ 41:9 | ຈະຖືກມິດສະຫາຍທໍລະຍົດ |
| ເສກາລີຢາ 11:12-13 | ຖືກຂາຍດ້ວຍເງິນ 30 ຫລຽນ |
| ເພງສັນລະເສີນ 27:12 | ຖືກພະຍານປອມໃສ່ຮ້າຍ |
| ເອຊາຢາ 50:6 | ຖືກຕີແລະຖືກຖົ່ມນ້ຳລາຍໃສ່ |
| ເອຊາຢາ 53:7 | ເມື່ອຖືກໃສ່ຮ້າຍກໍ່ບໍ່ໄດ້ຕອບໂຕ້ |
| ເອຊາຢາ 53:3 | ຖືກພວກອິດສະລະເອນທອດຖິ້ມ |
| ເພງສັນລະເສີນ 69:4 | ຖືກຄົນອື່ນກຽດຊັງໂດຍໄຮ້ເຫດຜົນ |
| ເພງສັນລະເສີນ 22:16 | ມືແລະຕີນຖືກແທງ |
| ເພງສັນລະເສີນ 22:18 | ພວກເຂົາເອົາເສື້ອຂອງພຣະອົງຈັບສະຫຼາກກັນ |
| ເອຊາຢາ 53:12 | ຖືກນັບເຂົ້າກັບຄົນທໍລະຍົດ |
| ເພງສັນລະເສີນ 22:6-8 | ຖືກດູມິ່ນ ເຢາະເຢີ້ຍ |
| ເອຊາຢາ 53:9 | ຖືກຝັງໄວ້ກັບຄົນມັ່ງມີ |
| ເພງສັນລະເສີນ 16:10 | ພຣະອົງຟື້ນຂຶ້ນມາຈາກຄວາມຕາຍ |
| ເພງສັນລະເສີນ 68:18 | ພຣະອົງສະເດັດຂຶ້ນສູ່ສະຫວັນ |



ສ່ອງແສງເຫມືອນຕາເວັນ ຄວາມສະງ່າຣາສີຂອງພຣະຜູ້ເປັນເຈົ້າຈະສ່ອງແສງໃນເຈົ້າ ຄວາມມືດຈະປົກຄຸມຊົນຊາດອື່ນ ແຕ່ແສງສະຫວ່າງຂອງພຣະຜູ້ເປັນເຈົ້າຈະສ່ອງແສງໃນເຈົ້າ ຄວາມສະງ່າຣາສີຂອງພຣະຜູ້ເປັນເຈົ້າ ຈະຢູ່ນຳເຈົ້າຊົນຊາດທັງຫລາຍ ຈະຖືກນຳມາຍັງແສງສະຫວ່າງຂອງເຈົ້າແລະກະສັດທັງຫລາຍຈະຖືກນຳມາຍັງຄວາມແຈ້ງໃນວັນໃຫມ່ຂອງເຈົ້າ”

ພຣະເຈົ້າໄດ້ເວົ້າເຖິງຜູ້ຊ່ວຍໃຫ້ລອດຫລາຍຄັ້ງ ໂດຍບອກແກ່ຜູ້ທຳນວາຍຂອງພຣະອົງ ຄົນເຫລົ່ານັ້ນໄດ້ບັນທຶກສິ່ງທີ່ພຣະເຈົ້າໄດ້ບອກໃຫ້ພວກເຂົາຮູ້ໄວ້ໃນພຣະຄຳພີ ເຖິງວ່າຊາວອິດສະລະເອນສ່ວນຫລາຍບໍ່ສົນໃຈໃນນ້ຳພຣະໄທຫລືພຣະສັນຍາຂອງພຣະເຈົ້າ ແຕ່ພຣະເຈົ້າບໍ່ລະເລີຍຕໍ່ແຜນການຂອງພຣະອົງ ໃນການທີ່ຈະສົ່ງຜູ້ຊ່ວຍໃຫ້ລອດມາປົດປ່ອຍມະນຸດໃຫ້ພົ້ນຈາກອຳນາດຊາຕານ ພຣະເຈົ້າຮັກມະນຸດແລະບໍ່ຢາກໃຫ້ມະນຸດຕ້ອງພິນາດ

ໃຫ້ເຮົາມາສັງເກດເບິ່ງບາງສິ່ງທີ່ພຣະເຈົ້າໄດ້ບອກແກ່ບັນດາຜູ້ທຳນວາຍກ່ຽວກັບຜູ້ຊ່ວຍໃຫ້ລອດທີ່ຈະມານັ້ນ ຕອນນີ້ເຮົາຄວນຊີ້ເຖິງພຣະສັນຍາໃນພຣະຄຳພີເດີມເທົ່ານັ້ນ ເພື່ອໃຫ້ເຫັນວ່າພຣະເຈົ້າສາມາດຮູ້ລ່ວງໜ້າເຖິງສິ່ງທີ່ຈະເກີດກັບຜູ້ຊ່ວຍໃຫ້ລອດ ເມື່ອມາເຖິງພຣະຄຳພີໃຫມ່ແລ້ວເຮົາຈະໃສ່ຂໍ້ພຣະຄຳພີໃນຊ່ອງທີ່ກ່ຽວກັບຄວາມສຳເລັດໃນເຫດການນັ້ນ





**ໂນອາເຊື່ອພຣະຄຳຂອງພຣະເຈົ້າ**

**ປະຖົມມະການ 6:8-21**

(6:8-12) ໃນເຊື້ອສາຍຂອງເຊດ ຍັງມີຄອບຄົວໜຶ່ງເຊິ່ງເປັນທີ່ພໍພຣະໄທພຣະເຈົ້າ ຫົວໜ້າຄອບຄົວນັ້ນຊື່ໂນອາ ໂນອາມີບຸດຊາຍສາມຄົນຄື ເຊມ ຮາມ ແລະຢາເຟດ ໂນອາເຊື່ອວ່າມື້ໜຶ່ງພຣະເຈົ້າຈະສົ່ງຜູ້ຊ່ວຍໃຫ້ລອດ ມາຕາມພຣະສັນຍາຂອງພຣະອົງ ລາວເຊື່ອໃນຄຳສັນຍານີ້ ພຣະເຈົ້າກໍ່ນັບວ່າລາວເປັນຄົນຂອງພຣະອົງ ແຕ່ຄົນອື່ນທົ່ວໄປເປັນຄົນຂອງຊາຕານ ເພາະເຂົາເຮັດຕາມໃຈຕົວເອງ ແລະເຮັດຕາມທີ່ຊາຕານຢາກໃຫ້ເຂົາເຮັດ ເຂົາຄິດແຕ່ຈະກິນຈະດື່ມ ແລະຄິດເຖິງແຕ່ໃນໂລກນີ້ເທົ່ານັ້ນ

ສິ່ງທີ່ພຣະເຈົ້າຢາກໃຫ້ເຂົາເຮັດນັ້ນຂົາບໍ່ສົນໃຈ ແລະບໍ່ຄິດເຖິງເລີຍສ່ວນໂນອາ ລາວເຫັນດ້ວຍກັບພຣະເຈົ້າ ລາວຮູ້ວ່າລາວຕ້ອງເພິ່ງພາພຣະເຈົ້າ ແທນທີ່ຈະເພິ່ງພາຕົນເອງ

(6:13-18) ມື້ໜຶ່ງພຣະເຈົ້າເວົ້າກັບໂນອາວ່າ ພຣະອົງຈະໃຫ້ນ້ຳຖ້ວມໂລກ ພຣະເຈົ້າຢາກໃຫ້ໂນອາສ້າງເຮືອໃຫຍ່ລຳໜຶ່ງ ພຣະອົງໄດ້ບອກຂະໜາດ ແລະຮູບແບບຂອງເຮືອນັ້ນໃຫ້ໂນອາຢ່າງລະອຽດ ແລະພຣະອົງບອກໂນອາວ່າ ຄອບຄົວຂອງລາວຈະລອດຈາກນ້ຳຖ້ວມໄດ້ໂດຍເຮືອລຳນີ້

ໂນອາຮູ້ວ່າ ລາວຕ້ອງສ້າງເຮືອຕາມແບບທີ່ພຣະເຈົ້າໄດ້ຊົງກຳນົດໄວ້ທຸກປະການ ການຖວາຍຂອງອາເບັນຕ້ອງເປັນໄປຕາມທີ່ພຣະເຈົ້າໄດ້ຊົງກຳນົດໄວ້ແນວໃດ ເຮືອຂອງໂນອາກໍ່ຕ້ອງສ້າງຕາມຮູບແບບ ທີ່ພຣະເຈົ້າໄດ້ຊົງກຳນົດໄວ້ເຊັ່ນກັນ

(6:16) ພຣະເຈົ້າບອກໂນອາວ່າ ໃຫ້ເຮັດປະຕູພຽງປະຕູດຽວ ທີ່ດ້ານຂ້າງຂອງເຮືອ ມີທາງດຽວທີ່ຈະເຂົ້າໃນເຮືອນັ້ນໄດ້ ມະນຸດທຸກຄົນແລະສັດທຸກໂຕຈະຕ້ອງເຂົ້າທາງປະຕູນັ້ນ ທຸກສິ່ງຈະລອດຈາກນໍ້າຖ້ວມຄັ້ງໃຫຍ່ນີ້ໄດ້ ຈະຕ້ອງເຂົ້າມາທາງປະຕູດຽວ ມີເຮືອລຳດຽວ ແລະມີປະຕູດຽວເທົ່ານັ້ນສຳລັບຄວາມລອດ

**ໂນອາ ແລະຄອບຄົວລອດຕາຍ ແຕ່ຄົນອື່ນຖືກນໍ້າຖ້ວມຕາຍໝົດ**

**ປະຖົມມະການ 6:22-7:24**

(6:22) ໂນອາເຊື່ອຄຳຂອງພຣະເຈົ້າ ເຖິງວ່າຍັງບໍ່ເຄີຍມີຝົນຕົກເລີຍ ໂນອາໄດ້ຕຽມທຸກຢ່າງຕາມທີ່ພຣະເຈົ້າສັ່ງ ເພາະລາວຮູ້ວ່າ ພຣະເຈົ້າເວົ້າຄວາມຈິງສະເໝີ ພຣະຄຳພີບອກວ່າ ໂນອາໄດ້ປະກາດຄວາມຈິງຂອງພຣະເຈົ້າແກ່ຊາວບ້ານຊາວເມືອງຂອງລາວດ້ວຍ ແຕ່ຄົນເຫຼົ່ານັ້ນ ດື້ດຶງບໍ່ຍອມຟັງ ຖ້າຄົນໃນສະໄໝເຮົານີ້ດື້ດຶງ ເຂົາຈະພົ້ນໂທດໄດ້ບໍ່? ແລະຕົວເອງຈະພົ້ນໂທດໄດ້ບໍ່?

ເມື່ອພຣະເຈົ້າບອກວ່າ ພຣະອົງຈະລົງໂທດຄົນບາບ ເຮົາຄິດວ່າພຣະເຈົ້າຈະລືມບໍ? ພຣະເຈົ້າເປັນເໝືອນພໍ່ແມ່ທີ່ຂູ່ລູກດ້ວຍຄວາມໃຈຮ້າຍໃນມື້ນີ້ ແລະມື້ອື່ນກໍ່ລືມໄປແມ່ນບໍ່? ພຣະເຈົ້າບໍ່ເຄີຍມອງຂ້າມຄວາມບາບ ພຣະເຈົ້າໃຫ້ໂອກາດແກ່ຄົນບາບສະໄໝນັ້ນ120ປີ ແຕ່ເຂົາບໍ່ເຊື່ອຄຳຂອງພຣະອົງ ແລະບໍ່ຍອມວາງໃຈໃນພຣະອົງ

(7:1-9) ເມື່ອເຖິງເວລາແລ້ວ ພຣະເຈົ້າໄດ້ໃຫ້ສັດປ່າ ແລະສັດລ້ຽງມາຫາໂນອາເປັນຄູ່ໆ ແລະສັດລ້ຽງເຫຼົ່ານັ້ນໄດ້ເຂົ້າໄປໃນເຮືອທາງປະຕູນັ້ນ ເຊັ່ນດຽວກັບໂນອາແລະຄອບຄົວ

(7:13-16) ເມື່ອເຂົ້າໄປໃນເຮືອແລ້ວ ພຣະເຈົ້າໄດ້ປິດປະຕູ ການທີ່





ປະຊາຊົນຈະກັບໃຈເສຍໃໝ່ ພຣະເຈົ້າກໍ່ຈະບໍ່ລົງໂທດພວກເຂົາ ແຕ່ຖ້າພວກເຂົາຍັງດື້ດ້ານຕໍ່ພຣະຄຳຂອງພຣະອົງພວກເຂົາຈະຕ້ອງຮັບໂທດແນ່ນອນ ໂທດທີ່ພຣະເຈົ້າໄດ້ກຳນົດໄວ້ຄືຄວາມຕາຍ

ນອກຈາກສອງຄົນນີ້ແລ້ວ ຍັງມີຜູ້ທຳນວາຍອີກຫລາຍຄົນ ທີ່ໃຊ້ເຕືອນມະນຸດເຖິງສິ່ງທີ່ຈະເກີດຂຶ້ນ ຄຳເວົ້າຂອງພວກເຂົາເຫລົ່ານັ້ນຂຽນໄວ້ໃນພຣະຄຳພີຫລາຍຕອນ ພຣະເຈົ້າບໍ່ປ່ຽນແປງ ພຣະອົງມີຄວາມຮັກຕໍ່ມະນຸດສະເຫມີ ແລະຢາກໃຫ້ມະນຸດພົ້ນຈາກໂທດແຫ່ງຄວາມບາບ

**ພຣະເຈົ້າບໍ່ລືມຄຳສັນຍາຜູ້ຊ່ວຍໃຫ້ລອດ**

**ເອຊາຢາ 59:20 - 60:3**

ນັບຕັ້ງແຕ່ທີ່ພຣະເຈົ້າໄດ້ໃຫ້ຄຳສັນຍາກ່ຽວກັບຜູ້ຊ່ວຍໃຫ້ລອດແກ່ ອາດາມແລະເອວາ ເຖິງເວລາຜ່ານມາຫລາຍພັນປີ ພຣະອົງກໍ່ບໍ່ໄດ້ລະເລຍຕໍ່ພຣະສັນຍານັ້ນ ພຣະເຈົ້າໄດ້ໃຫ້ພຣະສັນຍາກ່ຽວກັບຜູ້ຊ່ວຍໃຫ້ລອດແກ່ອັບຣາຮາມ, ອີຊາກ, ຢາໂຄບ ແລະໄດ້ບອກກະສັດດາວິດວ່າ ພຣະຜູ້ຊ່ວຍນັ້ນ ຈະເກີດມາໃນເຊື້ອສາຍຂອງລາວ ພຣະຜູ້ຊ່ວຍທີ່ພຣະເຈົ້າຈະສົ່ງມານັ້ນ ຈະທຳລາຍອຳນາດຊາຕານ ແລະຈະໃຫ້ມະນຸດກັບຄືນດີກັບພຣະເຈົ້າ

**(ເອຊາຢາ 59:20-60:3)** ພຣະຜູ້ເປັນເຈົ້າກ່າວວ່າ “ແລະພຣະອົງຈະສະເດັດມາຍັງຊີໂອນ ເປັນພຣະຜູ້ໄຖ່ ມາຍັງບັນດາຜູ້ຢູ່ໃນຢາໂຄບຜູ້ຫັນຈາກການທໍຣະຍົດ” ພຣະຜູ້ເປັນເຈົ້າກ່າວວ່າ, “ຝ່າຍເຮົາ ນີ້ເປັນຄຳຫມັ້ນສັນຍາຂອງເຮົາກັບເຂົາທັງຫລາຍ ຄືວິນຍານຂອງເຮົາຊຶ່ງຢູ່ເຫນືອເຈົ້າ ແລະຄຳຂອງເຮົາຊຶ່ງເຮົາໃສ່ໄວ້ໃນປາກຂອງເຈົ້າ ຈະບໍ່ພາກໄປຈາກປາກຂອງເຈົ້າ ຫລືຈາກປາກລູກຂອງເຈົ້າ ຫລືຈາກປາກຂອງລູກຂອງລູກຂອງເຈົ້າຕັ້ງແຕ່ເວລານີ້ໄປຈົນກາລະນິຣັນ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ “ຈົ່ງລຸກຂຶ້ນ



**ພຣະເຈົ້າບອກລ່ວງໜ້າເຖິງ**
**ເລື່ອງຜູ້ຊ່ວຍໃຫ້ລອດ**
**ເອຊາຢາ 59:20 - 60:3**

**ສ້າງຄວາມສົນໃຈ**

ເຄີຍຢາກໃຫ້ຜູ້ມີກຳລັງຫລາຍ ມາຊ່ວຍໃຫ້ພົ້ນຄວາມທຸກບໍ່? ເລື່ອງທີ່ເຮົາຈະຮຽນວັນນີ້ເຮົາຈະໄດ້ຍິນເຖິງຜູ້ໜຶ່ງທີ່ຈະຊ່ວຍເຮົາໄດ້

**ຜູ້ທຳນວາຍຫລາຍຄົນ ເວົ້າແທນພຣະເຈົ້າ**

**ເຢເລມີຢາ 44:4-5**

ຕັ້ງແຕ່ເລີ່ມສ້າງໂລກພຣະເຈົ້າເວົ້າກັບມະນຸດ ເພື່ອມະນຸດຈະຮູ້ເຖິງນ້ຳພຣະໄທຂອງພຣະອົງ ເຮົາໄດ້ຮຽນເຖິງການທີ່ພຣະອົງໄດ້ໃຫ້ພຣະບັນຍັດຂອງພຣະອົງແກ່ຊາວອິດສະລະເອນແລ້ວ ເມື່ອເວລາຜ່ານໄປຫລາຍຮ້ອຍປີ ຫລາຍຄົນໄດ້ລະເລີຍພຣະຄຳຂອງພຣະເຈົ້າ ເຫດສະນັ້ນ ພຣະເຈົ້າສົ່ງຜູ້ຮັບໃຊ້ຂອງພຣະອົງຫລາຍຄົນທີ່ເອີ້ນວ່າ ຜູ້ທຳນວາຍ ໄປເຕືອນຜູ້ທີ່ກະທຳຜິດ ໃນເວລານັ້ນປະຊາຊົນບາງຄົນໄດ້ປະສົມປະສານການນັບຖືພຣະເຈົ້າ ກັບການໄຫ້ວຮູບເຄົາລົບ ຜູ້ທຳນວາຍເຫລົ່ານີ້ ໄດ້ໄປເຕືອນຊາວອິດສະລະເອນໃຫ້ກັບໃຈເສຍໃຫມ່ ບໍ່ສະນັ້ນພຣະເຈົ້າຈະລົງໂທດ

ເອຊາຢາ ແລະເຢເລມີຢາ ສອງຜູ້ທຳນວາຍໄດ້ເຕືອນປະຊາຊົນເຖິງສິ່ງທີ່ກຳລັງຈະເກີດຂຶ້ນ ເພາະບາບຂອງພວກເຂົາທີ່ໄດ້ກະທຳ ຖ້າ







ພຣະເຈົ້າປິດປະຕູນັ້ນສະແດງວ່າ ໝົດໂອກາດແລ້ວ ແມ່ນວ່າຄົນທີ່ຢູ່ພາຍນອກເຮືອນັ້ນ ຈະຂໍຫລືຮ້ອງໄຫ້ອ້ອນວອນເທົ່າໃດເຂົາກໍ່ບໍ່ມີໂອ ກາດທີ່ຈະລອດຈາກນ້ຳຖ້ວມ

ສະໄໝຂອງອາດາມກໍ່ເປັນເຊັ່ນນັ້ນ ເມື່ອພຣະເຈົ້າໃຫ້ອາດາມອອກຈາກສວນເອເດນແລ້ວ ກໍ່ບໍ່ມີວັນ ທີ່ເຂົາຈະຂໍກັບໄປຢູ່ໄດ້ອີກ ເພາະພຣະເຈົ້າປິດປະຕູແລ້ວ

(7:10) ຫຼັງຈາກທີ່ພຣະເຈົ້າປິດປະຕູໄດ້ເຈັດວັນ ພຣະອົງໄດ້ຊົງໃຫ້ນ້ຳຖ້ວມໂລກແທ້ໆ ຝົນຕົກຢ່າງໜັກ40 ມື້ ແລະ40 ຄືນ ແລະນ້ຳບາດານກໍ່ທະລຸອອກມາດ້ວຍ ຜູ້ທີ່ບໍ່ເຂົ້າໄປໃນເຮືອທັງຄົນແລະສັດ ຈິ່ງຕາຍໝົດ ມີແຕ່ໂນອາແລະຄອບຄົວເທົ່ານັ້ນທີ່ລອດ ເພາະເຂົາເຊື່ອພຣະຄຳຂອງພຣະເຈົ້າ (7:17-24)

ມະນຸດສ່ວນຫຼາຍຢາກເຊື່ອຟັງຊາຕານແທນທີ່ຈະເຊື່ອຟັງພຣະເຈົ້າເຂົາຕາມສັງຄົມເພາະຢາກຈະເຮັດໃຫ້ເພື່ອນຝູງພໍໃຈ ເຂົາຮັກຄວາມບາບຂອງຕົນ ແລະບໍ່ຍອມເຫັນດ້ວຍກັບພຣະເຈົ້າໃນເລື່ອງຄວາມຜິດບາບຖ້າເຮົາຕາມມະນຸດກໍ່ຈະຕາຍໃນວັນທີ່ພຣະເຈົ້າຈະພິພາກມະນຸດ ເໝືອນ



ຄືນໃນສະໄໝໂນອາ ແຕ່ຖ້າເຮົາເຊື່ອພຣະຄຳຂອງພຣະເຈົ້າເໝືອນໂນອາ ພຣະເຈົ້າມີທາງທີ່ຈະຊ່ວຍໃຫ້ເຮົາພົ້ນໂທດໄດ້

**ພຣະເຈົ້າຊົງລະນຶກເຖິງຄອບຄົວຂອງໂນອາທີ່ຢູ່ໃນເຮືອນັ້ນ**
**ປະຖົມມະການ 8, 9**

(8:1-12) ພຣະເຈົ້າຊົງລະນຶກເຖິງຄຳສັນຍາຂອງພຣະອົງທີ່ມີແກ່ ໂນອາ ພຣະອົງໄດ້ໃຫ້ຝົນຢຸດແລະໃຫ້ນ້ຳລົດລົງ ດິນແຫ້ງກໍ່ປາກົດອອກມາ ພຣະເຈົ້າຊົງເປັນຜູ້ຄອບຄອງຝົນ ແລະດິນຟ້າອາກາດທົ່ວໄປ

(8:13-20) ເມື່ອໂນອາອອກຈາກເຮືອແລ້ວ ລາວໄດ້ຖວາຍເຄື່ອງບູຊາຕາມແບບການຖວາຍຂອງອາເບັນ

(8:21-22) ພຣະເຈົ້າຕ້ອນຮັບໂນອາ ແລະຄອບຄົວຂອງລາວເພາະເຂົາດຳເນີນໃນທາງຂອງພຣະເຈົ້າ ແລະວາງໃຈໃນພຣະອົງ ແທ້ຈິງເລືອດສັດທີ່ເຂົາຖວາຍນັ້ນ ບໍ່ສາມາດໄຖ່ໃຫ້ເຂົາພົ້ນບາບ ແຕ່ເປັນການລະນຶກເຖິງຄວາມຈິງຂອງພຣະເຈົ້າກ່ຽວກັບຄວາມບາບ ພຣະເຈົ້າຮັບເຂົາໂດຍພຣະຄຸນຂອງພຣະອົງ

(9:1-7) ພຣະເຈົ້າເວົ້າກັບຄອບຄົວຂອງໂນອາ ແລະອະນຸຍາດໃຫ້





**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທຂອງພຣະອົງ

ວ່າຕາຂອງເຂົາຖືກປິດ ແລະບໍ່ຮູ້ຄວາມຈິງ ຜູ້ເຮັດຮູບເຄົາຣົບ ກໍບໍ່ມີປັນຍາພໍທີ່ຈະສຳນຶກວ່າ "ຂ້ອຍໄດ້ເອົາໄມ້ສ່ວນນຶ່ງດັງໄຟເພື່ອອົບເຂົ້າຫນົມ ແລະປີ້ງຊີ້ນກິນ ທີ່ເຫລືອນັ້ນ ຂ້ອຍເອົາເຮັດຮູບເຄົາຣົບ ແລ້ວຂ້ອຍກໍກົ້ມລົງຂາບໄຫວ້ທ່ອນໄມ້ນັ້ນ ຄວາມຈິງແລ້ວແມ່ນເຂົາກິນຂີ້ເຖົ່າ ຄວາມຄິດແບບໂງ່ໆ ໄດ້ນຳເຂົາໃຫ້ຫລົງຜິດ ແລະເຂົາບໍ່ຮູ້ເມື່ອວ່າ ຮູບເຄົາຣົບໃນມືນັ້ນ ບໍ່ແມ່ນສິ່ງວິເສດເລີຍ ແມ່ນແຕ່ຂອງຫລອກລວງ

**ພຣະເຈົ້າລົງໂທດ**

**ເອຊາຢາ 2:14,15**

ພຣະເຈົ້າລົງໂທດແກ່ຊາວອິດສະລະເອນ ເພາະພວກເຂົາລະຖິ້ມພຣະອົງ ແລະຫລົງໄປນັບຖືຮູບເຄົາລົບ ພຣະເຈົ້າໄດ້ເຕືອນພວກເຂົາໄວ້ແລ້ວວ່າ ຖ້າເຮົາບໍ່ເຊື່ອຟັງພຣະອົງ ຄວາມຍາກລຳບາກຈະເກີດຂຶ້ນ ແຕ່ພວກເຂົາບໍ່ຟັງຄຳເຕືອນຂອງພຣະເຈົ້າ ແລະລືມສິ່ງທີ່ພຣະອົງເຕືອນໄວ້ນັ້ນເສີຍ ຄຳເວົ້າຂອງພຣະເຈົ້າເປັນສິ່ງທີ່ຫມັ້ນຄົງແນ່ນອນ ພຣະອົງຊົງຮັກສາຄຳເວົ້າຂອງພຣະອົງສະເຫມີ

**ທົບທວນ**

1. ຫລັງຈາກໂຢຊວຍຕາຍໄປແລ້ວ ຊາວອິດສະລະເອນປະພຶດຕົວຢ່າງໃດ?
2. ໃຜເປັນຜູ້ລໍ້ລວງໃຫ້ຊາວອິດສະລະເອນໃຫ້ນັບຖືພຣະບາອານ ແລະເຈົ້າແມ່ອັດຊະຕາກ?
3. ພຣະເຈົ້າໃຫ້ຊາວອິດສະລະເອນຮັບໂທດຢ່າງໃດ ເມື່ອພວກເຂົາທັງຫລາຍລະຖິ້ມພຣະອົງ?
4. ພຣະສັນຍາທີ່ສຳຄັນທີ່ພຣະເຈົ້າໃຫ້ແກ່ດາວິດນັ້ນກ່ຽວກັບໃຜ?





ມະນຸດກິນຊີ້ນສັດຕ່າງໆ ສັດທັງຫຼາຍຈະຢ້ານມະນຸດ ຜູ້ມີອຳນາດເໜືອມັນ ນອກຈາກນັ້ນພຣະເຈົ້າໃຫ້ມະນຸດລົງໂທດຜູ້ທີ່ຂ້າຄົນອື່ນ ພຣະເຈົ້າຢາກໃຫ້ມະນຸດຮັກສາຄວາມຍຸດຕິທຳ

(9:8-17) ພຣະເຈົ້າໃຫ້ສັນຍາຂອງພຣະອົງແກ່ມະນຸດອີກຄັ້ງໜຶ່ງ ພຣະອົງສັນຍາວ່າຈະບໍ່ໃຫ້ນ້ຳຖ້ວມໂລກອີກ ພຣະອົງໃຫ້ເຄື່ອງໝາຍແຫ່ງສັນຍານັ້ນໃນທ້ອງຟ້າຄືຮຸ້ງກິນນ້ຳ ເມື່ອເຫັນຮຸ້ງນັ້ນ ເຮົາກໍ່ຮູ້ວ່າພຣະເຈົ້າບໍ່ໃຫ້ນ້ຳຖ້ວມໂລກອີກ ພະເຈົ້າຊື່ສັດ ເຮົາໄວ້ໃຈໃນພຣະສັນຍາຂອງພຣະອົງໄດ້ ມະນຸດທົ່ວໂລກມາຈາກເຊື້ອສາຍຂອງຄອບຄົວຂອງໂນອານີ້ ທຸກຄົນບັນພະບຸລຸດຂອງເຮົາ ກໍ່ເກີດມາຈາກ ເຊມ ຮາມ ຫຼືຢາເຟດດ້ວຍ

**ທົບທວນ**

1. ໃນສະໄໝຂອງໂນອາ ຄົນສ່ວນຫລາຍມີຄວາມຄິດແລະທ່າທີຢ່າງໃດ?
2. ໃຜເປັນຜູ້ເຕືອນໃນຈິດໃຈຂອງມະນຸດເຖິງເລື່ອງຄວາມບາບຊົ່ວທີ່ເຂົາກຳລັງເຮັດ?
3. ໂນອາເປັນຄົນດີພ້ອມທຸກເວລາ ຈຶ່ງບໍ່ສົມຄວນຮັບໂທດເຖິງຕາຍແມ່ນບໍ່?
4. ໂນອາຕ່າງຈາກຄົນບາບຄົນອື່ນຢ່າງໃດ?
5. ໂນອາຕ້ອງສ້າງເຮືອຢ່າງໃດ?
6. ເມື່ອໂນອາປະກາດຄວາມຈິງຂອງພຣະເຈົ້າແກ່ຊາວບ້ານ ເຂົາເຫລົ່ານັ້ນມີທ່າທີຢ່າງໃດ?
7. ຫລັງຈາກບອກເລື່ອງທີ່ນ້ຳຈະຖ້ວມໂລກແກ່ໂນອາ ພຣະເຈົ້າຖ້າອີກຈັກປີກ່ອນຈະໃຫ້ນ້ຳຖ້ວມແທ້?

8. ເປັນຫຍັງພຣະເຈົ້າປິດປະຕູເຮືອ?
9. ເມື່ອໂນອາຖວາຍເຄື່ອງບູຊາ ລາວຖະຫວາຍຕາມແບບຂອງໃຜ?
10. ເປັນຫຍັງພຣະເຈົ້າພໍພຣະໄທ(ພໍໃຈ)ຮັບເຄື່ອງບູຊາຂອງໂນອາ ?
11. ເມື່ອພຣະເຈົ້າໃຫ້ພຣະສັນຍາແກ່ຄອບຄົວໂນອາ ເຄື່ອງໝາຍແຫ່ງພຣະສັນຍານັ້ນແມ່ນຫຍັງ?

## ຄວາມຈິງທີ່ຕ້ອງເນັ້ນ

- ມະນຸດເປັນຄົນບາບແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າ ແລະວາງໃຈໃນພຣະອົງຈິ່ງຈະເປັນທີ່ພໍພຣະໄທພຣະອົງ
- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ





## ການໄຫວ້ຮູບເຄົາຣົບ

**ເອຊາຢາ 44:9-20**

ຄົນທັງປວງທີ່ທຳຮູບເຄົາຣົບກໍບໍ່ຄຸນຄ່າຫຍັງ ພວກເຂົາພາກພູມໃຈໃນຮູບທີ່ບໍ່ມີປໂຍດນັ້ນທີ່ສຸດ ຜູ້ທີ່ໄຫວ້ຮູບເຄົາຣົບກໍເປັນຄືຄົນຫູຫນວກ ຕາບອດ ແລະຈະໄດ້ຮັບຄວາມອັບອາຍຂາຍຫນ້າ ການຫລໍ່ຮູບພຣະສຳລັບຂາບໄຫວ້ນີ້ ກໍບໍ່ເປັນປະໂຫຍດເລີຍ ທຸກໆ ຄົນທີ່ຂາບໄຫວ້ຮູບ ຈະເສຍປຽບລຽບຫນ້າ ພວກຜູ້ເຮັດຮູບເຄົາຣົບ ກໍເປັນພຽງມະນຸດ ຊຶ່ງບໍ່ມີຫຍັງດີວິເສດໃຫ້ເອົາພວກເຂົາມາໂຮມກັນເບິ່ງດູ ແລ້ວພວກເຂົາຈະຢ້ານສັ່ນແລະອັບອາຍຂາຍຫນ້າ

ຊ່າງເຫລັກກໍຈັບບາຍເຫລັກ ແລະຕີເຫລັກນັ້ນຢູ່ໃນເຕົາໄຟ ແຂນອັນແຂງແຮງຂອງເຂົາໄດ້ຕີເຫລັກເປັນຮູບຮ່າງຕາມຄວາມຕ້ອງການ ເຂົາຫິວເຂົ້າຫິວນ້ຳ ແລະອິດເມື່ອຍຫລາຍ

ຊ່າງໄມ້ກໍຂີດແທກໄມ້ ແລະເຊາະກົບໃຫ້ກ້ຽງດີ ເຂົາເອົາໄມ້ນັ້ນເຮັດເປັນຮູບຄົນທີ່ມີຮູບຮ່າງງາມ ແລ້ວເອົາໄປຕັ້ງໄວ້ໃນວິຫານ ເຂົາເລືອກເອົາໄມ້ສົນ ໄມ້ກໍ່ຈາກປ່າມາໃຊ້ພ້ອມທັງປູກກົກແປກໄວ້ ຖ້າຟ້າຝົນຕົກລົງມາຫົດມັນຈຶ່ງໃຫຍ່ຂຶ້ນ ມະນຸດໄດ້ໃຊ້ກົກໄມ້ນັ້ນ ເຮັດຟືນແດ່ ເຮັດຮູບເຄົາຣົບແດ່ ເອົາດັງໄຟຜີງ ແລະອົບເຂົ້າຫນົມແດ່ ອີກສ່ວນນຶ່ງ ເອົາເຮັດຮູບພຣະສຳລັບຂາບໄຫວ້ ເຄິ່ງນຶ່ງຂອງໄມ້ ແຕ່ລະລຳເຂົາເອົາດັງໄຟແລະປີ້ງຊີ້ນກິນຢ່າງອີ່ມຫນຳສຳຣານ ເວລາຜີງໄຟອົບອຸ່ນນັ້ນ ເຂົາເວົ້າວ່າ "ໄຟນີ້ດັກຫລາຍ ອຸ່ນເຫລືອທີ່ສຸດ" ໄມ້ທີ່ເຫລືອ ເຂົາເອົາເຮັດຮູບເຄົາຣົບ ແລ້ວກໍຂາບໄຫວ້ແລະອ້ອນວອນວ່າ, "ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍ ໂຜດຊ່ອຍຮັກສາຂ້ານ້ອຍທ້ອນ"

ຄົນໂງ່ງ່າວເຫມືອນຄົນເຊັ່ນນີ້ ເຂົາບໍ່ຮູ້ວ່າຕົນກຳລັງເຮັດຫຍັງ ເພາະ

ພຣະເຈົ້າ ພຣະທີ່ເປັນຄົນຕ່າງຊາດ ຄືພຣະບາອານ ແລະແມ່ເຈົ້າອັດຊະຕາກາ ຄົນທີ່ນັບຖືພຣະເຫລົ່ານີ້ຄິດວ່າພຣະແທ້ ແຕ່ຄວາມຈິງ ພວກເຂົາຖືກລໍ້ລວງໂດຍມານຊາຕານ ຄົນເຫລົ່ານີ້ ກໍາລັງປະນິບັດຊາຕານ ແລະສະໜຸນຂອງມັນໂດຍບໍ່ຮູ້ໂຕ

ໃນທຸກຍຸກທຸກສະໄໝ ຊາຕານໄດ້ແຝງໂຕແລະລໍ້ລວງໂດຍໃຊ້ຮູບເຄົາລົບທີ່ສວຍງາມ ໃຊ້ວິນຍານບັນພຣະບູລຸດ ໝໍດູ ຫລືມະນຸດທີ່ເວົ້າເກັ່ງ ເໝືອນທີ່ໄດ້ເຄີຍໃຊ້ງູມາລໍ້ລວງນາງເອວາ ຊາຕານກຽດຊັງພຣະເຈົ້າ ແລະພະຍາຍາມຂັດຂວາງມະນຸດສະເໝີ ບໍ່ຢາກໃຫ້ໃຜນະມັດສະການພຣະເຈົ້າ ມັນບໍ່ຢາກໃຫ້ໃຜພົ້ນຄວາມຕາຍນິລັນ

**ພຣະຜູ້ເປັນເຈົ້າຊົງເຕືອນ**

**ເອຊາຢາ 8:11-13,19-20**

**(8:11-13)** ພຣະຜູ້ເປັນເຈົ້າຊົງເຕືອນ ດ້ວຍຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງວ່າ ບໍ່ໃຫ້ທໍາຕາມທາງທີ່ຊົນຊາດທໍາກັນ ພຣະອົງຊົງບອກວ່າ, "ຢ່າຮ່ວມແຜນການກະບົດນໍາປະຊາຊົນນີ້ ແລະຢ່າຢ້ານສິ່ງທີ່ເຂົາຢ້ານ ຈົ່ງລະນຶກວ່າ ເຮົາພຣະຜູ້ເປັນເຈົ້ແຫ່ງຈັກກະວານຊົງບໍຣິສຸດ ເຮົາຜູ້ດຽວທີ່ເຈົ້າຈະຕ້ອງຢ້ານ

**(8:19,20)** ປະຊາຊົນຈະບອກໃຫ້ພວກທ່ານ ຖາມເອົາຄວາມຈາກພວກໝໍດູ ແລະໝໍຜີ ຊຶ່ງເວົ້າອອດໆ ແອດໆ ຢູ່ໃນລໍາຄໍ ພວກເຂົາຈະບອກວ່າ, "ກ່ອນອື່ນໝົດ ປະຊາຊົນຄວນຈະຖາມເອົາຄວາມນໍາຜີ ແລະປຶກສານໍາຄົນຕາຍແທນຄົນເປັນ"

ພວກທ່ານຈົ່ງຕອບເຂົາວ່າ, "ຈົ່ງຟັງພຣະທັມທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ຢ່າຟັງຄວາມຜີ ເພາະວ່າສິ່ງທີ່ເຂົາບອກໃຫ້ເຈົ້າທໍານັ້ນມັນບໍ່ດີ"







**ບົດທີ 11**

**ພຣະເຈົ້າເຮັດພັນທະສັນຍາ**
**ກັບອັບຣາຮາມ**

**ປະຖົມມະການ 11:26-32, 12:1-5, 13:5-18, 15:1-7, 17:1-8;15-17**

**ສ້າງຄວາມສົນໃຈ**

ມື້ນີ້ເຮົາຈະມາຮຽນເຖິງບຸກຄົນໜຶ່ງ ເຊິ່ງເປັນວິລະບູລຸດທີ່ເຮົາຄວນນັບຖື ແລະເຮັດຕາມແບບຢ່າງຂອງລາວ ຜູ້ນັ້ນຄື ອັບຣາຮັມ "ບິດາແຫ່ງຄວາມເຊື່ອ" ລາວກ້າເຮັດສິ່ງທີ່ຄົນອື່ນຈະບໍ່ຍອມເຮັດ ເພາະລາວເຊື່ອ ພຣະເຈົ້າດ້ວຍຄວາມຈິງໃຈ ແມ່ນຢູ່ລາວເຄີຍຜິດພາດແດ່ ເໝືອນມະນຸດທົ່ວໄປ ແຕ່ລາວກໍ່ລຸກຂຶ້ນແລະເລີ່ມຕົ້ນໃຫມ່ກັບພຣະເຈົ້າ ສະນັ້ນພຣະເຈົ້າຈຶ່ງເອີ້ນລາວວ່າ ເປັນສະຫາຍຂອງພຣະເຈົ້າ

**ພຣະເຈົ້າຊົງເອີ້ນອັບຣາມໃຫ້ອອກຈາກບ້ານເດີມ**

**ປະຖົມມະການ 11:26-32**

ຫລັງຈາກທີ່ສະໄໝມະນຸດແຍກກັນໄປຫລາຍຮ້ອຍປີ ມີຄົນໜຶ່ງໃນເຊື້ອສາຍຂອງເຊມ ຊື່ ເຕລາ ລາວຢູ່ໃນເມືອງ ທີ່ຈະເລີນ ຊື່ເມືອງນັ້ນຄື ເມືອງອູເລ ຊາວເມືອງອູເລນັ້ນ ນັບຖືຮູບເຄົາລົບຫລາຍ ແຕ່ລູກຊາຍຂອງເຕລາ ຄົນໜຶ່ງຈື່ຈໍາເລື່ອງຂອງພຣະເຈົ້າ ແລະນັບຖືພຣະເຈົ້າອົງທ່ຽງແທ້ ຊາຍຄົນນັ້ນຊື່ ອັບຣາມ ພຣະເຈົ້າເວົ້າກັບອັບຣາມ ຂະນະເມື່ອ

ລາວຍັງຢູ່ໃນເມືອງອູເລ ເພາະພຣະອົງບໍ່ຢາກໃຫ້ລາວຢູ່ໃນເມືອງອູເລຕໍ່ໄປ ເມື່ອພຣະເຈົ້າຊົງເອີ້ນລາວເຊັ່ນນັ້ນ ອັບຣາມຈຶ່ງອອກໄປພ້ອມກັບເມຍ ລວມທັງຄອບຄົວຂອງພໍ່ ແຕ່ໄປເຖິງແຕ່ເມືອງຮາລານ ພໍ່ຂອງອັບຣາມໄດ້ເສຍຊີວິດລົງທີ່ນັ້ນ

(12:1) ຫລັງຈາກນັ້ນ ພຣະເຈົ້າເອີ້ນອັບຣາມ ໃຫ້ອອກຈາກພີ່ນ້ອງຂອງຕົນ ເພື່ອຈະໄປຢູ່ໃນເມືອງ ການາອານ ພຣະເຈົ້າເວົ້າກັບ ອັບຣາມໂດຍກົງ ເພາະໃນສະໄໝນັ້ນ ຍັງບໍ່ມີພຣະຄຳພີ

ໃນສະໄໝນີ້ ພຣະເຈົ້າບອກກັບເຮົາ ໂດຍຜ່ານທາງພຣະຄຳພີ ແທ້ຈິງ ອັບຣາມກໍເປັນຄົນບາບ ເພາະເປັນເຊື້ອສາຍຂອງອາດາມ ເໝືອນຄົນອື່ນໆ ແຕ່ອັບຣາມມາຫາພຣະເຈົ້າຕາມທາງທີ່ພຣະເຈົ້າສຳແດງແກ່ມະນຸດ ອັບຣາມຮູ້ວ່າ ລາວຊ່ວຍຕົນເອງບໍ່ໄດ້ ແຕ່ຕ້ອງເພິ່ງພຣະເຈົ້າ

ພຣະເຈົ້າໄດ້ສັນຍາແກ່ອາດາມແລະເອວາວ່າ ຈະສົ່ງຜູ້ຊ່ວຍໃຫ້ລອດມາ ເພື່ອຊ່ວຍມະນຸດໃຫ້ພົ້ນອຳນາດຂອງຊາຕານ ພຣະເຈົ້າບໍ່ລືມພຣະສັນຍານັ້ນ

ພຣະເຈົ້າຢາກຈະໃຫ້ອັບຣາມ ມີສ່ວນໃນແຜນການຂອງພຣະອົງ ແຕ່ເມື່ອອັບຣາມຍັງຢູ່ກັບຍາດພີ່ນ້ອງທີ່ນັບຖືຮູບເຄົາລົບນັ້ນ ສິ່ງທີ່ພຣະເຈົ້າຢາກເຮັດຈະສຳເລັດບໍ່ໄດ້ ເຫດສະນັ້ນພຣະເຈົ້າຈຶ່ງສັ່ງໃຫ້ອັບຣາມເດີນທາງອອກໄປ

**ພຣະເຈົ້າໃຫ້ພຣະສັນຍາແກ່ອັບຣາມ**

**ປະຖົມມະການ 12:2-5**

ອັບຣາມເຊື່ອພຣະຄຳຂອງພຣະເຈົ້າ ແລະເດີນທາງອອກໄປພ້ອມກັບ







**ບົດທີ 20**

**ສ້າງຄວາມສົນໃຈ**

ເມື່ອມີສົງຄາມໃນປະເທດອີລັກ ນັກບິນບາງຄົນຖືກຝ່າຍສັດຕູຍິງເຄື່ອງບິນຂອງລາວ ລາວຈຶ່ງຕ້ອງໂດດຈ້ອງລົງມາ ເມື່ອລາວລົງມາເຖິງພື້ນດິນແລ້ວ ລາວຖືກພວກສັດຕູຈັບໄວ້ ສິ່ງທີ່ລາວຕ້ອງການຫລາຍທີ່ສຸດໃນເວລານັ້ນຄືຫຍັງ?

ແນ່ນອນ ລາວຢາກໃຫ້ທະຫານຂອງປະເທດຂອງລາວເອງ ມາຊ່ວຍລາວໃຫ້ພົ້ນຈາກມືຂອງສັດຕູ ເພື່ອລາວຈະໄດ້ກັບບ້ານ ເຊັ່ນດຽວກັນ ພວກເຮົາເຊິ່ງຕົກຢູ່ໃນເມືອງຂອງຊາຕານ ຖ້າພຣະເຈົ້າບໍ່ສົ່ງຜູ້ຊ່ວຍມາຊ່ວຍເຮົາ ເຮົາກໍ່ຈະຕ້ອງຕົກຢູ່ໃຕ້ອຳນາດຂອງມັນຕະຫລອດໄປ ວັນນີ້ເຮົາຈະເຂົ້າໃຈກ່ຽວກັບຜູ້ຊ່ວຍອົງນັ້ນ

**ຊາວອິດສະລະເອນລຸ້ນໃໝ່ບໍ່ຮູ້ຈັກພຣະເຈົ້າ**

**ຜູ້ປົກຄອງ 2:10-15**

**(2:10)** ເມື່ອໂຢຊວຍຍັງມີຊີວິດຢູ່ນັ້ນ ຊາວອິດສະລະເອນຍັງສະໜິດກັບພຣະເຈົ້າ ແຕ່ເມື່ອຄົນລຸ້ນນັ້ນຕາຍໄປໝົດແລ້ວ ຄົນລຸ້ນໃໝ່ທີ່ບໍ່ໄດ້ເຫັນການອັດສະຈັນຂອງພຣະເຈົ້າກໍ່ພາກັນລະເລີຍພຣະເຈົ້າໄປ ພວກເຂົາດຳເນີນຊີວິດຕາມວິຖີຂອງຄົນຕ່າງຊາດ ຜູ້ເຊິ່ງບໍ່ຮູ້ຈັກພຣະເຈົ້າທ່ຽງແທ້

**(2:11-13)** ພວກເຂົາສ້າງຮູບເຄົາລົບ ແລະກາບໄຫວ້ຮູບນັ້ນ ແທນ

8. ພຣະເຈົ້າໃຫ້ໂມເຊເຮັດຫຍັງ ເພື່ອຈະຊ່ວຍໃຫ້ຊາວອິດສະລະເອນໃຫ້ມີຊີວິດຢູ່?
9. ຜູ້ທີ່ຖືກງູກັດຈະຕ້ອງເຮັດຢ່າງໃດເຖິງຈະຫາຍ?
10. ງູທອງສຳລິດມີຄວາມສາມາດໃນຕົວມັນເອງບໍ່?
11. ເປັນຫຍັງພຣະເຈົ້າຈຶ່ງຮັກສາປະຊາຊົນທຸກຄົນທີ່ມາເບິ່ງງູທອງສຳລິດນັ້ນ?

### ຄວາມຈິງທີ່ຕ້ອງເນັ້ນ

- ມະນຸດເປັນຄົນບາບ ແລະຊ່ວຍໂຕເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າ ແລະວາງໃຈໃນພຣະອົງຈຶ່ງຈະເປັນທີ່ພໍພຣະອົງ
- ພຣະເຈົ້າຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງສັດຊື່ ແລະບໍ່ຍອມປ່ຽນແປງ
- ພຣະເຈົ້າສື່ສານກັບມະນຸດ





ນາງຊາລາຍ ຜູ້ເປັນເມຍ ແລະໂລດ ເຊິ່ງເປັນລູກຂອງນ້ອງຊາຍ ອັບຣາມດ້ວຍ ເມື່ອໄປນັ້ນ ອັບຣາມມີອາຍຸ75ປີ ແລະລາວຍັງບໍ່ມີລູກ ແຕ່ພຣະເຈົ້າສັນຍາໄວ້ວ່າ ຈະໃຫ້ອັບຣາມເປັນບິດາຂອງຊົນຊາດໃຫຍ່ ແລະຈະປ້ອງກັນຮັກສາອັບຣາມໄວ້ພ້ອມທັງໃຫ້ພຣະພອນ ແລະຄວາມຈະເລີນແກ່ລາວທີ່ສຳຄັນທີ່ສຸດ

ພຣະເຈົ້າສັນຍາວ່າ ຈະໃຫ້ຄົນທຸກຊາດຮັບພຣະພອນຈາກເຊື້ອສາຍຂອງອັບຣາມ ເຊິ່ງໝາຍຄວາມວ່າ ຜູ້ຊ່ວຍໃຫ້ລອດຂອງມະນຸດ ຈະເກີດມາໃນເຊື້ອສາຍຂອງອັບຣາມ ແມ່ນວ່າມະນຸດມັກຈະລືມພຣະເຈົ້າ ແຕ່ພຣະເຈົ້າຍັງຮັກມະນຸດ ແລະຢາກສຳແດງພຣະຄຸນຂອງພຣະອົງຜ່ານທາງຄອບຄົວຂອງອັບຣາມ ເພື່ອໃຫ້ຄົນທຸກຊາດໄດ້ພົ້ນຈາກອຳນາດຂອງຊາຕານ

### ພຣະເຈົ້າຊົງຢ້ຳພຣະສັນຍາເພື່ອໃຫ້ອັບຣາມແນ່ໃຈຍິ່ງຂຶ້ນ

(13:5-13) ອັບຣາມມີສັດລ້ຽງຫລາຍ ເພາະໄດ້ຮັບພຣະພອນຈາກພຣະເຈົ້າ ສັດລ້ຽງຂອງ ໂລດ ກໍ່ຫລາຍເໝືອນກັນ ວັນໜຶ່ງຄົນລ້ຽງສັດຂອງ ໂລດ ຖຽງກັບຄົນລ້ຽງສັດຂອງອັບຣາມ ອັບຣາມບໍ່ຢາກໃຫ້ມີການຖົກຖຽງກັນເກີດຂຶ້ນ ຈຶ່ງຂໍແຍກຈາກຫລານຊາຍ

ໂລດເຊື່ອພຣະເຈົ້າ ແຕ່ລາວຍັງຢາກຢູ່ສະບາຍ ສະນັ້ນລາວຈຶ່ງເລືອກຢູ່ໃນບ່ອນພຽງ ເຊິ່ງມີເມືອງໃຫຍ່ ສ່ວນອັບຣາມ ຍັງຢູ່ໃນພູເຂົາເຊິ່ງບໍ່ຄ່ອຍຈະເລີນ

(13:14-18) ຫລັງຈາກແຍກຈາກໂລດໄປແລ້ວ ພຣະເຈົ້າເວົ້າກັບອັບຣາມອີກ ແລະສັນຍາວ່າຈະໃຫ້ເມືອງ ການາອານ ທັງໝົດແກ່ເຊື້ອສາຍຂອງລາວ ເຖິງແມ່ນວ່າອັບຣາມ ຍັງບໍ່ມີລູກ ແຕ່ລາວກໍ່ເຊື່ອພຣະ



ສັນຍາຂອງພຣະເຈົ້າ ແລະຮູ້ວ່າພຣະເຈົ້າເວົ້າຄວາມຈິງສະເໝີ

ອັບຣາຮາມ ເປັນຜູ້ທີ່ມາຫາພຣະເຈົ້າ ໂດຍການອະທິຖານເລື້ອຍໆ ແລະເຮົາເຄີຍເຫັນວ່າອັບຣາຮາມເຄີຍສ້າງແທ່ນບູຊາ ແລະຖວາຍແກະ ເປັນເຄື່ອງເຜົາບູຊາແກ່ພຣະເຈົ້າ ແທ່ນບູຊານັ້ນເປັນແບບດຽວກັນກັບທີ່ ອາເບັນ ເຊດ ໂນອາ ແລະຄົນອື່ນໆ ໄດ້ໃຊ້ຕອນທີ່ເຂົາມາຫາພຣະເຈົ້າ ເມື່ອເຂົາຖວາຍຄື່ອງບູຊານັ້ນ ກໍ່ເທົ່າກັບເປັນການສາລະພາບວ່າເຂົາເປັນຄົນບາບ ຜູ້ຂໍກັບມາຫາພຣະເຈົ້າຕາມທາງທີ່ພຣະເຈົ້າໄດ້ກຳນົດໄວ້ ອັບຣາຮາມຮູ້ວ່າລາວຕ້ອງເພິ່ງພຣະເຈົ້າ ແລະສະແດງຄວາມໄວ້ວາງໃຈ ດ້ວຍການຖວາຍເຄື່ອງບູຊາ

(15:1-7) ຄືນໜຶ່ງພຣະເຈົ້ານຳອັບຣາມ ອອກມາກາງແຈ້ງໃຫ້ລາວເບິ່ງທ້ອງຟ້າ ແລະຖາມອັບຣາມວ່າ "ອັບຣາມ ເຈົ້ານັບດວງດາວທັງໝົດໄດ້ບໍ່?" ອັບຣາມຕອບວ່າ "ບໍ່ໄດ້ ພຣະເຈົ້າ"
ພຣະເຈົ້າໄດ້ບອກວ່າ "ພົງພັນຂອງເຈົ້າຈະຫລາຍເຊັ່ນນັ້ນ"
ອັບຣາມບໍ່ໄດ້ສົງໄສໃນຄຳເວົ້າຂອງພຣະເຈົ້າ ແມ່ນວ່າແຕ່ງງານຫລາຍປີແລ້ວ ແລະຍັງບໍ່ມີລູກ ອັບຣາມຍັງເຊື່ອ ແລະວາງໃຈໃນສັນຍາຂອງພຣະເຈົ້າ ພຣະເຈົ້າຈຶ່ງນັບວ່າອັບຣາມ ເປັນຜູ້ຊອບທຳ ຄືຜູ້ທີ່ພຣະເຈົ້າຊົງພໍພຣະໄທ(ພໍໃຈ)





ເອົາໄວ້ເທິງກົກເສົາ ເມື່ອຜູ້ທີ່ຖືກງູຕອດຫລຽວເບິ່ງງູທອງນັ້ນ ກໍຈະບໍ່ຕາຍ ພວກເຂົາບໍ່ຕ້ອງອອກໄປຫາສະໝຸນໄພ ຫລືເຮັດວິທີຕ່າງໆ ເພື່ອຈະຫາຍ ພຽງແຕ່ເບິ່ງງູທອງສຳລິດເທົ່ານັ້ນ ກໍ່ຫາຍຈາກງູພິດຮ້າຍ ບໍ່ແມ່ນວ່າ ຮູບງູນັ້ນຈະມີລິດອຳນາດໃນຕົວມັນເອງ ແຕສິ່ງທີ່ເຮັດໃຫ້ຊາວອິດສະລະເອນຫາຍ ຄືລິດອຳນາດຂອງພຣະເຈົ້າ

ຊາວອິດສະລະເອນຕ້ອງວາງໃຈໃນພຣະເຈົ້າ ແລະເບິ່ງງູທອງສຳລິດຕາມຄຳສັ່ງພຣະເຈົ້າ ພວກເຂົາຈະໃຊ້ວິທີອື່ນບໍ່ໄດ້ ເຮົາຄິດວ່າ ມີຄົນທີ່ມາເບິ່ງງູທອງສຳລິດແລ້ວແຕ່ບໍ່ເຊົາມີບໍ່? ບໍ່ມີແນ່ນອນ! ເຮົາວາງໃຈໃນພຣະສັນຍາຂອງພຣະເຈົ້າໄດ້ ພຣະອົງຊົງເຮັດຕາມພຣະສັນຍາຂອງພຣະອົງສະເໝີ

**ທົບທວນ**

1. ໂມເຊໄດ້ຊຽນພຣະຄຳພີຈັກເຫລັ້ມ?
2. ເປັນຫຍັງຊາວອິດສະລະເອນບໍ່ຫລົງທາງໃນຖິ່ນທຸລະກັນດານ?
3. ເປັນຫຍັງຜູ້ສອດແນມສິບຄົນຄິດວ່າ ຊາວອິດສະລະເອນຈຶ່ງຕີເມືອງການາອານບໍ່ໄດ້?
4. ໃຜທີ່ເຊື່ອພຣະສັນຍາຂອງພຣະເຈົ້າ?
5. ພຣະເຈົ້າລົງໂທດຢ່າງໃດແກ່ຊາວອິດສະລະເອນຜູ້ທີ່ບໍ່ເຊື່ອພຣະສັນຍານັ້ນ?
6. ໃຜແດ່ທີ່ຈະໄດ້ເຂົ້າເມືອງການາອານ?
7. ເມື່ອຊາວອິດສະລະເອນຈົ່ມຕໍ່ພຣະເຈົ້າ ແລະໂມເຊ ເພາະເບື່ອອາຫານທີ່ພຣະເຈົ້າຊົງປະທານໃຫ້ ພຣະເຈົ້າລົງໂທດແກ່ພວກເຂົາຢ່າງໃດ?

**(21:6)** ເວລານັ້ນ ພຣະເຈົ້າໃຫ້ງູພິດຫລວງຫລາຍອອກມາກັດຄົນຕາຍເປັນຈຳນວນຫລວງຫລາຍ ນີ້ເປັນການລົງໂທດຂອງພຣະເຈົ້າຕໍ່ຜູ້ທີ່ເຮັດບາບຕໍ່ພຣະອົງ

ເລື່ອງນີ້ເຮົາອາດໃຊ້ເປັນຄຳປຽບທຽບໄດ້ຊາວອິດສະລະເອນຖືກງູກັດໂດຍຊາຕານ ແລະອຳນາດຂອງຄວາມບາບຢ່າງນັ້ນ ຄວາມຕາຍມາເຖິງອາດາມແລະເອວາ ເພາະຄວາມບາບ ພວກເຂົາທັງສອງຖືກຕັດຂາດຈາກພຣະເຈົ້າ ແລະສິ່ງຜົນມາເຖິງເຮົາທັງຫລາຍ ຜູ້ເປັນເຊື້ອສາຍຂອງພວກເຂົາ ພວກເຮົາກໍ່ຕ້ອງຖືກຕັດຂາດຈາກພຣະເຈົ້າ ດ້ວຍເຊັ່ນກັນ ພຣະຄຳພີບອກພວກເຂົາໃຫ້ຮູ້ວ່າ ໃນສາຍພຣະເນດຂອງພຣະເຈົ້າເຮົາທຸກຄົນເປັນຄົນທີ່ຕາຍແລ້ວ ເນື່ອງຈາກຄວາມບາບນັ້ນ

**(21:7)** ໃນເວລານັ້ນ ຊາວອິດສະລະເອນບໍ່ສາມາດໜີໄປຈາກງູເຫລົ່ານັ້ນໄດ້ ເພາະມີງູຢູ່ທົ່ວໄປ ສະນັ້ນເຮົາເຫັນວ່າ ເມື່ອພຣະເຈົ້າຕັ້ງໃຈຈະລົງໂທດ ຄົນບາບບໍ່ມີທີ່ທີ່ພວກເຂົາຈະໜີໄປໃຫ້ພົ້ນໄດ້ ຢ່າງໃດກໍ່ຕາມພວກເຂົາໄດ້ກະທຳສິ່ງທີ່ຖືກຕ້ອງ ໂດຍກັບໃຈຈາກຄວາມຄິດທີ່ຜິດຂອງພວກເຂົາ ແລະນຶກຢູ່ສະເໝີວ່າ ມີແຕ່ພຣະເຈົ້າຜູ້ດຽວທີ່ສາມາດຊ່ວຍພວກເຂົາໄດ້

ພວກເຂົາຂໍໃຫ້ໂມເຊອະທິຖານເພື່ອພວກເຂົາ ພຣະເຈົ້າຜູ້ຊົງປ່ຽມລົ້ນດ້ວຍຄວາມເມດຕາ ເຖິງວ່າຊາວອິດສະລະເອນບໍ່ສົມຄວນໄດ້ຮັບຄວາມຊ່ວຍເຫລືອຈາກພຣະອົງ ແຕ່ພຣະອົງຊົງຊ່ວຍກູ້ພວກເຂົາ ໂດຍບອກໂມເຊໃຫ້ຮູ້ວິທີທີ່ຈະຊ່ວຍຊາວອິດສະລະເອນໃຫ້ພົ້ນຈາກຄວາມຕາຍ

ພຣະຜູ້ເປັນເຈົ້າຈຶ່ງຊົງບອກໂມເຊໃຫ້ເອົາທອງມາເຮັດເປັນຮູບງູແລ້ວເອົາໄປໄວ້ເທິງກົກເສົາ ເພື່ອວ່າເມື່ອມີຄົນໃດຖືກງູຕອດກໍຈະໄດ້ຫລຽວເບິ່ງຮູບງູນັ້ນ ແລະກໍຈະບໍ່ຕາຍ ໂມເຊກໍໄດ້ທຳຮູບງູທອງ ແລະ





**ພຣະເຈົ້າເວົ້າເຖິງສິ່ງທີ່ຈະເກີດຂຶ້ນໃນອະນາຄົດ**

(17:1-8) ເມື່ອອັບຣາມມີອາຍຸໄດ້99ປີ ພຣະເຈົ້າເວົ້າກັບລາວອີກ ພຣະເຈົ້າປ່ຽນຊື່ຂອງອັບຣາມ ແລະໃຫ້ຊື່ໃໝ່ວ່າ ອັບຣາຮາມ ແປວ່າ "ບິດາຂອງມວນຊົນ"

(17:15-16) ຊື່ຂອງຊາຣາຍ ກໍ່ປ່ຽນດ້ວຍ ຊື່ໃໝ່ຄື ຊາຣາ ແປວ່າ "ເຈົ້າຟ້າຍິງ"

(17:17) ພຣະເຈົ້າບອກວ່າ "ປີໜ້າ ຊາຣາຈະມີລູກ" ເລື່ອງນີ້ເບິ່ງຄືວ່າ ເປັນໄປບໍ່ໄດ້ ເພາະອັບຣາຮາມ ມີອາຍຸ99ປີແລ້ວ ແຕ່ບໍ່ມີຫຍັງຍາກເກີນໄປສຳລັບພຣະເຈົ້າ ອັບຣາຮາມແລະຊາຣາ ລໍຖ້າພຣະສັນຍາຂອງພຣະເຈົ້າ

**ທົບທວນ**

1. ຊາວເມືອງໃນບ້ານເກີດຂອງອັບຣາຮາມ ນັບຖືຫຍັງ?
2. ເມື່ອພຣະເຈົ້າເອີ້ນອັບຣາຮາມ ພຣະອົງຢາກໃຫ້ລາວເຮັດຫຍັງ?
3. ພຣະເຈົ້າສັນຍາວ່າຈະເຮັດສີ່ຢ່າງໃນຊີວິດຂອງອັບຣາຮາມ ຄືຫຍັງ? (ປຖກ 12:3; 13:14,15; 15:5; 17:19)
4. ເມື່ອອັບຣາຮາມ ມາຫາພຣະເຈົ້າ ລາວໃຊ້ແທ່ນບູຊາແບບດຽວກັນກັບໃຜ?
5. ເມື່ອອັບຣາຮາມ ວາງໃຈໃນພຣະສັນຍາຂອງພຣະເຈົ້າ ພຣະເຈົ້ານັບວ່າລາວເປັນຄົນແນວໃດ?
6. ເປັນຫຍັງ ໂລດເລືອກຢູ່ໃນທີ່ຮາບພຽງ?
7. ພຣະເຈົ້າບອກວ່າ ຈະໃຫ້ເມືອງການາອານ ທັງໝົດແກ່ເຊື້ອສາຍຂອງໃຜ?

8. ຊື່ຂອງອັບຣາຮາມແລະຊາຣາ ໝາຍຄວາມວ່າຢ່າງໃດ?
9. ພຣະເຈົ້າເລືອກຄອບຄົວຂອງອັບຣາຮາມ ເປັນພິເສດເພື່ອຫຍັງ?
10. ພຣະເຈົ້າເຄີຍລືມພຣະສັນຍາຂອງພຣະອົງເອງບໍ່?

**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ພຣະເຈົ້າຊື່ສານກັບມະນຸດ
- ມະນຸດເປັນຄົນບາບແລະຊ່ວຍໂຕເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທ(ພໍໃຈ)ພຣະອົງ
- ພຣະເຈົ້າຊົງລິດທະນຸພາບເໜືອທຸກສິ່ງ







ຈະມີສິດເຂົ້າໄປໃນແຜ່ນດິນການາອານໄດ້ ແລະພຣະອົງຈະນຳລູກຫລານຂອງຜູ້ທີ່ກະບົດເຫລົ່ານັ້ນ ໃຫ້ເຂົ້າໄປພ້ອມໂຢຊວຍແລະກາເຫລັບ ເຫດສະນັ້ນຊາວອິດສະລະເອນຈະຕ້ອງເລ່ລ້ອນໄປໃນຖິ່ນທຸລະກັນດານເຖິງ40 ປີ ຈົນກະທັ່ງຄົນທີ່ເປັນຜູ້ໃຫຍ່ຈະຕາຍໝົດ ຫລັງຈາກນັ້ນ ພຣະເຈົ້າຈຶ່ງຈະໃຫ້ຄົນອິດສະລະເອນເຂົ້າໄປໃນແຜ່ນດິນການາອານ

ການທີ່ມະນຸດບໍ່ເຊື່ອພຣະຄຳຂອງພຣະເຈົ້າເປັນບາບທີ່ຮ້າຍແຮງຫລາຍ ໃນທຸກຍຸກທຸກສະໄຫມຕັ້ງແຕ່ອາດາມ ເອວາ ກາອິນ ຄົນບາບໃນສະໄຫມໂນອາ ຟາໂລ ແລະຊາວອີຢິບ ຫລືຄົນອື່ນໆ ທີ່ບໍ່ເຊື່ອພວກເຂົາຕ້ອງໄດ້ຮັບໂທດ ແລະປະສົບຄວາມຫຍຸ້ງຍາກລຳບາກ ເນື່ອງຈາກການບໍ່ເຊື່ອຟັງພຣະຄຳຂອງພຣະເຈົ້າ ພຣະເຈົ້າຈະລົງໂທດແກ່ທຸກຄົນທີ່ບໍ່ຍອມເຊື່ອຟັງພຣະອົງ ພຣະອົງເວົ້າຄວາມຈິງສະເໝີ ແລະຜູ້ທີ່ມິ່ນປະໝາດຄຳເວົ້າຂອງພຣະອົງຈະຕ້ອງໄດ້ຮັບໂທດ

**ງູທອງສຳລິດ**

**ຈົດເຊັ່ນບັນຊີ 21:4-9**

**(21:4,5)** ພຣະເຈົ້າລ້ຽງດູຊາວອິດສະລະເອນຢ່າງດີຕະຫລອດມາ ແຕ່ພວກເຂົາຍັງຈົ່ມຕໍ່ວ່າພຣະເຈົ້າ ພວກເຂົາດູຖູກອາຫານທີ່ພຣະເຈົ້າປະທານໃຫ້ເພາະຮູ້ສຶກເບື່ອໜ່າຍ

ພຣະເຈົ້າໄດ້ເຄີຍກະທຳເພື່ອຊ່ວຍກູ້ພວກເຂົາແລ້ວ ພວກເຂົາບໍ່ໄດ້ລະນຶກເຖິງການທີ່ພຣະເຈົ້າເຮັດທຸກສິ່ງໄດ້ ພວກເຂົາບໍ່ເຊື່ອວ່າ ພຣະເຈົ້າມີລິດອຳນາດພຽງພໍທີ່ຈະຊະນະຊາວຄານາອັນໄດ້ ແລະຈະມອບແຜ່ນດິນໃຫ້ແກ່ພວກເຂົາ

**(13:30 & 14:6-9))** ຢ່າງໃດກໍ່ຕາມ ມີຜູ້ສອດແນມສອງຄົນທີ່ເຊື່ອໝັ້ນວ່າ ພຣະເຈົ້າຈະສາມາດໃຫ້ແຜ່ນດິນນັ້ນແກ່ພວກເຂົາ ສອງຄົນນັ້ນຊື່ ກາເຫລັບ ແລະໂຢຊວຍ ທັງສອງໄດ້ເຫັນກຳແພງເມືອງທີ່ສູງໃຫຍ່ ແລະໄດ້ເຫັນມະນຸດຍັກເຫລົ່ານັ້ນ ດ້ວຍເຊັ່ນດຽວກັບສິບຄົນທຳອິດ ແຕ່ພວກເຂົາບໍ່ລືມຄວາມຍິ່ງໃຫຍ່ຂອງພຣະເຈົ້າ ພວກເຂົາລະລຶກເຖິງການອັດສະຈັນອັນຍິ່ງໃຫຍ່ ທີ່ພຣະອົງໄດ້ເຮັດໃນອີຢິບ ຕະຫລອດການເດີນທາງທີ່ຜ່ານມາຕັ້ງແຕ່ອອກຈາກອີຢິບ ແລະພວກເຂົາເຊື່ອວ່າ ພຣະເຈົ້າຈະເຮັດຕາມພຣະສັນຍາ ແລະຂັບໄລ່ຊາວການາອານອອກໄປ ເພື່ອໃຫ້ຊາວອິດສະລະເອນອາໄສຢູ່ໃນແຜ່ນດິນນັ້ນ

**(13:31-33)** ຊາວອິດສະລະເອນໜ້າຈະເຫັນນຳກັບສອງຄົນທີ່ມີຄວາມເຊື່ອ ແທນທີ່ຈະຕາມສິບຄົນທີ່ສົງໄສໃນພຣະສັນຍາຂອງພຣະເຈົ້າ ແມ່ນບໍ່? **(14:1-4)** ແຕ່ພວກເຂົາບໍ່ເຊື່ອພຣະຄຳຂອງພຣະເຈົ້າ ພວກເຂົາຈົ່ມຕໍ່ໂມເຊ ແລະຈົ່ມຢາກກັບໄປປະເທດອີຢິບ ນີ້ເປັນການກະບົດຕໍ່ພຣະເຈົ້າ ແລະຕໍ່ໂມເຊ ດ້ວຍເປັນການບາບເທົ່າກັບການບອກວ່າ ພຣະເຈົ້າເປັນຜູ້ຕົວະພວກເຂົາ

**(14:26-38)** ພຣະເຈົ້າຈຶ່ງໃຈຮ້າຍຕໍ່ຊາວອິດສະລະເອນ ແລະບອກພວກເຂົາທັງຫລາຍວ່າ ພວກເຂົາຈະຕ້ອງຕາຍໃນຖິ່ນທຸລະກັນດານ ເພາະພວກເຂົາບໍ່ເຊື່ອພຣະຄຳຂອງພຣະອົງ ໃນຄົນລຸ້ນນັ້ນ ມີພຽງ ກາເຫລັບ ແລະ ໂຢຊວຍ ຜູ້ເຊິ່ງເຊື່ອໃນພຣະສັນຍາຂອງພຣະເຈົ້ານັ້ນ ທີ່







**ບົດທີ 12**

**ອີຊາກ ບຸດຕາມພຣະສັນຍາ**

**ປະຖົມມະການ 21:1-6**

**22:1-19**

**ພຣະເຈົ້າໃຫ້ບຸດແກ່ອັບຣາຮາມ ຕາມພຣະສັນຍາ**

**ປະຖົມມະການ 21: 1-6**

ເຖິງແມ່ນເວລາຜ່ານໄປຫລາຍປີຈາກທີ່ພຣະເຈົ້າໄດ້ໃຫ້ຄຳສັນຍາໄວ້ແກ່ອັບຣາຮາມ ແຕ່ພຣະເຈົ້າບໍ່ເຄີຍລືມພຣະສັນຍາຂອງພຣະອົງ ແລະບໍ່ປ່ຽນໃຈດ້ວຍ

ຕາມຄວາມຄິດຂອງມະນຸດແລ້ວ ຜູ້ຊາຍທີ່ມີອາຍຸ100ປີ ແລະຜູ້ຍິງທີ່ມີອາຍຸ90ປີ ຈະມີລູກນຳກັນນັ້ນເປັນໄປບໍ່ໄດ້ ແຕ່ບໍ່ມີຫຍັງທີ່ຍາກເກີນໄປສຳລັບພຣະເຈົ້າ ພຣະເຈົ້າສາມາດໃຫ້ບຸດຊາຍແກ່ອັບຣາຮາມ ແລະຊາຣາ ເພາະພຣະອົງເປັນຜູ້ສ້າງທຸກສິ່ງ ພຣະເຈົ້າ ເປັນແຫລ່ງຊີວິດຂອງທຸກຄົນ ບັນພະບູລຸດຂອງເຮົາໄດ້ຊີວິດຈາກພຣະເຈົ້າ ເຮົາເອງແລະລູກຫລານຂອງເຮົາ ກໍ່ໄດ້ຊີວິດຈາກພຣະເຈົ້າເຊັ່ນກັນ ວິນຍານຊົ່ວບໍ່ສາມາດໃຫ້ຊີວິດແກ່ໃຜໄດ້

**ພຣະເຈົ້າສັ່ງໃຫ້ອັບຣາຮາມຖວາຍອີຊາກ ເປັນເຄື່ອງບູຊາ**

**ປະຖົມມະການ 22:1-2**

ເວລາຜ່ານໄປອີກຫລາຍປີ ອີຊາກຜູ້ເປັນບຸດທີ່ຮັກຂອງອັບຣາຮາມ ກໍ່

ໃຫຍ່ເປັນໄວລຸ້ນແລ້ວ ພໍ່ແລະແມ່ພໍໃຈໃນໂຕລາວຫລາຍ ອັບຣາຮາມ ເຊື່ອໃນພຣະສັນຍາຂອງພຣະເຈົ້າທຸກຂໍ້ ລາວເຊື່ອວ່າຜູ້ຊ່ວຍໃຫ້ລອດຈະ ເກີດຈາກເຊື້ອສາຍຂອງອີຊາກ ເພາະພຣະເຈົ້າໄດ້ບອກໄວ້ເຊັ່ນນັ້ນ

ວັນໜຶ່ງພຣະເຈົ້າໄດ້ສັ່ງໃຫ້ອັບຣາຮາມ ເຮັດສິ່ງທີ່ແປກຫລາຍ ຄືສັ່ງ ໃຫ້ລາວນຳອີຊາກ ໄປຫາພູເຂົາແຫ່ງໜຶ່ງທີ່ພຣະອົງກຳນົດໄວ້ ແລະໃຫ້ ຖວາຍລູກທີ່ນັ້ນເປັນເຄື່ອງບູຊາແດ່ພຣະເຈົ້າ ພູເຂົາໜ່ວຍນັ້ນຊື່ ໂມລິຢາ

ພຣະເຈົ້າກຳລັງລອງໃຈອັບຣາຮາມ ເພື່ອໃຫ້ລາວມີໂອກາດທີ່ຈະສະ ແດງວ່າ ລາວຮັກພຣະອົງຫລາຍກ່ວາອີຊາກ ເປັນຫຍັງພຣະເຈົ້າມີສິດສັ່ງ ໃຫ້ອັບຣາຮາມ ຖວາຍລູກເປັນເຄື່ອງບູຊາ? ກໍ່ເພາະວ່າ ພຣະເຈົ້າເປັນ ເຈົ້າຂອງຊີວິດ ແລະເປັນຜູ້ປະທານອີຊາກແກ່ອັບຣາຮາມ ອີຊາກຈຶ່ງເປັນ ຂອງພຣະອົງ ພຣະເຈົ້າມີສິດເໜືອທຸກສິ່ງທີ່ພຣະອົງຊົງສ້າງ ອັບຣາຮາມ ເຂົ້າໃຈເລື່ອງນີ້ດີ

**ອັບຣາຮາມເຊື່ອພຣະສັນຍາຂອງພຣະເຈົ້າ**

**ປະຖົມມະການ 22:3-5**

ມະນຸດໂລກບໍ່ມີໃຜທີ່ຖືກການທົດສອບ ຍາກເທົ່າກັບອັບຣາຮາມ ອັບຣາຮາມຮັກລູກຫລາຍ ແຕ່ຮັກພຣະເຈົ້າຫລາຍດ້ວຍ ຖ້າອັບຣາຮາມ ຖວາຍອີຊາກເທິງແທ່ນບູຊາແທ້ ຄຳສັນຍາຂອງພຣະເຈົ້າກ່ຽວກັບເຊື້ອ ສາຍຂອງອີຊາກ ຈະສຳເລັດໄດ້ຢ່າງໃດ? ພຣະເຈົ້າປ່ຽນຄວາມຄິດ ຂອງພຣະອົງຫລື?

ອັບຣາຮາມຄົງຄິດຫລາຍໃນເລື່ອງນີ້ ແຕ່ທ້າຍທີ່ສຸດ ລາວເຊື່ອວ່າ ພຣະສັນຍາຂອງພຣະເຈົ້າຈະຕ້ອງສຳເລັດແນ່ນອນ ພຣະເຈົ້າບໍ່ເຄີຍເວົ້າ ຕົວະໃຜເລີຍ ອັບຣາຮາມເຊື່ອວ່າ ຖ້າລາວຖວາຍອີຊາກ ເທິງແທ່ນບູຊາ





ພຣະເຈົ້າໄດ້ນຳທາງຊາວອິດສະລະເອນໂດຍເສົາເມກນຳໜ້າພວກ ເຂົາ ເພາະພວກເຂົາບໍ່ເຄີຍໄປທາງນັ້ນເລີຍ ຍິ່ງກວ່ານັ້ນ ທີ່ນັ້ນເປັນທະ ເລຊາຍ ບໍ່ມີຖະໜົນຫົນທາງທີ່ຈະເບິ່ງເຫັນໄດ້ ຫລືມີເຄື່ອງໝາຍທີ່ຈະ ບອກທາງໃຫ້ ພຣະເຈົ້າບອກໃຫ້ເຂົາຮູ້ວ່າ ເວລາໃດຄວນຢຸດພັກຫລືເດີນ ຕໍ່ໄປໂດຍໃຊ້ເສົາເມກນັ້ນ ເຖິງແມ່ນວ່າຊາວອິດສະລະເອນເຄີຍຜິດພາດ ຫລາຍຄັ້ງ ແຕ່ພຣະເຈົ້າກໍ່ບໍ່ລະຖິ້ມພວກເຂົາ

ສາເຫດອີກປະການໜຶ່ງ ທີ່ພຣະເຈົ້າຍົກແຜ່ນດິນແກ່ຊາວອິດສະລະ ເອນ ເພາະຊາວກຄານາອານ ເປັນຄົນທີ່ຊົ່ວຊ້າລາມົກຫລາຍ ພຣະເຈົ້າ ຈຶ່ງເຫັນວ່າ ພວກເຂົາຈຳເປັນຈະຕ້ອງຖືກທຳລາຍ ພຣະອົງຈະໃຫ້ແຜ່ນດິ ນແກ່ພວກເຂົາແກ່ຊາວອິດສະລະເອນຕາມທີ່ພຣະອົງໄດ້ສັນຍາໄວ້ກັບ ອັບຣາຮາມ ອີຊາກ ແລະຢາໂຄບ

**ຜູ້ສອດແນມສິບສອງຄົນ**

**ຈົດເຊັ່ນບັນຊີ 13:26-33**

**(13:1-3)** ເສົາເມກນັ້ນ ໄດ້ນຳຊາວອິດສະລະເອນເລື້ອຍມາ ແລະ ພວກເຂົາໄດ້ມາເຖິງເຂດແດນການາອານ ພຣະເຈົ້າສັ່ງໂມເຊໃຫ້ເລືອກ ຊາຍຊາວອິດສະລະເອນ ຈາກ12 ເຜົ່າ ເຜົ່າລະໜຶ່ງຄົນ ເຂົ້າໄປສອດ ແນມເພື່ອຈະເບິ່ງສະພາບແຜ່ນດິນການາອານ ຕະຫລອດຈົນເຖິງຄົນທີ່ຢູ່ ໃນນັ້ນ ໂມເຊເຊື່ອຟັງພຣະເຈົ້າ ແລະສົ່ງສິບສອງຄົນເຂົ້າໄປເບິ່ງທົ່ວແຜ່ນ ດິນການາອານ

**(13:26-29)** ເມື່ອພວກເຂົາກັບມາຫາປະຊາຊົນແລ້ວ ຜູ້ສອດແນມ ເລົ່າເລື່ອງສິ່ງທີ່ພວກເຂົາໄດ້ເຫັນໃຫ້ປະຊາຊົນຟັງ ສິ່ງທີ່ພວກເຂົາເວົ້າ ເປັນຄວາມຈິງ ແຕ່ສິບຄົນໃນພວກນີ້ໄດ້ລືມການອັດສະຈັນອັນຍິ່ງໃຫຍ່ທີ່



**ບົດທີ 19**
**ຜູ້ສອດແນມ ແລະງູທອງສຳລິດ**
**ຈົດເຊັນບັນຊີ 13 & 21**

**ສ້າງຄວາມສົນໃຈ**

ເຮົາເຄີຍໄດ້ຍິນຄົນທີ່ສັນຍາຫຍັງໄວ້ ແລະບໍ່ເຮັດແທ້ຕາມທີ່ສັນຍາບໍ່? ຄັ້ງໜຶ່ງທີ່ປະເທດອາເມຣິກາມີວັນແຕ່ງງານ ເຈົ້າສາວແຕ່ງໂຕຮຽບຮ້ອຍ ແລະມາໂບດເພື່ອຈະເຂົ້າພິທີແຕ່ງງານ ແຂກທີ່ຮັບເຊີນກໍ່ພາກັນພ້ອມໜ້າ ແຕ່ເຈົ້າບ່າວບໍ່ມາ ລາວປ່ຽນໃຈໜີໄປບ່ອນອື່ນ ເຈົ້າສາວຮູ້ສຶກອາຍຫລາຍ ທຸກຄົນທີ່ມາໃນງານນັ້ນຮູ້ສຶກເສຍໃຈທີ່ຜູ້ຊາຍນັ້ນບໍ່ຮັກສາຄຳສັນຍາ ຄຳສັນຍາຂອງມະນຸດນັ້ນບໍ່ແນ່ນອນ ອາດປ່ຽນໄດ້ ແຕ່ຜູ້ທີ່ບໍ່ເຄີຍປ່ຽນຄຳສັນຍາເລີຍ ມີແຕ່ຜູ້ດຽວຄືພຣະເຈົ້າ ມື້ນີ້ເຈົ້າຢາກຟັງເລື່ອງທີ່ພຣະເຈົ້າຮັກສາຄຳສັນຍາ

**ພຣະເຈົ້ານຳທາງສຳລັບຊາວອິດສະລະເອນ**

**ອົບພະຍົບ 40:34-38**

ໃນຊ່ວງເວລາທີ່ຊາວອິດສະລະເອນເດີນທາງຈາກປະເທດອີຢິບໄປປະເທດການາອານນັ້ນ ໂມເຊເປັນຜູ້ທີ່ພຣະເຈົ້າເລືອກໃຫ້ເປັນຜູ້ນຳປະຊາຊົນ ລາວເປັນຜູ້ທຳນວາຍຂອງພຣະເຈົ້າ ເປັນຜູ້ທີ່ເວົ້າແທນພຣະອົງ ລາວໄດ້ຂຽນພຣະຄຳພີຫ້າເຫລັ້ມ ຕາມທີ່ພຣະເຈົ້າບອກແກ່ລາວ ຄື ປະຖົມມະການ ຮອດ ພະບັນຍັດສອງ





ແລ້ວ ພຣະເຈົ້າຈະໃຫ້ອີຊາກ ເປັນຄືນມາຈາກຄວາມຕາຍ ອັບຣາຮາມວາງໃຈໃນພຣະເຈົ້າ ຜູ້ຊົງເຮັດໃນສິ່ງທີ່ມະນຸດເຮັດບໍ່ໄດ້

ອັບຣາຮາມລຸກ ຂຶ້ນແຕ່ເຊົ້າ ອອກເດີນທາງພ້ອມກັບອີຊາກ ແລະຄົນໃຊ້ໄປສູ່ພູເຂົາໂມລິຢາ

**ອັບຣາຮາມ ຍອມເຊື່ອຟັງພຣະເຈົ້າ**

**ປະຖົມມະການ 22:6-10**

ອີຊາກເຄີຍໄປກັບພໍ່ ເມື່ອອັບຣາຮາມໄປຖວາຍເຄື່ອງບູຊາບ່ອນອື່ນໆ ເຫດສະນັ້ນ ອີຊາກຖາມພໍ່ວ່າ, "ລູກແກະສຳລັບເຄື່ອງເຜົາບູຊາຢູ່ໃສ?" ອັບຣາຮາມຕອບວ່າ "ລູກເອີຍ ພຣະເຈົ້າຈະຊົງຈັດຫາລູກແກະສຳລັບພຣະອົງເອງ"

ອັບຣາຮາມຍັງວາງໃຈໃນພຣະເຈົ້າຢູ່ ການທີ່ມະນຸດເຮົາຈະວາງໃຈໃນພຣະເຈົ້າແທ້ໆ ກໍ່ບໍ່ແມ່ນງ່າຍ ແຕ່ກໍ່ບໍ່ມີສິ່ງໃດສຳຄັນກ່ວາການວາງໃຈໃນຄຳສັນຍາຂອງພຣະເຈົ້າ ຖ້າອັບຣາຮາມພຽງແຕ່ຟັງສຽງພຣະເຈົ້າ ແຕ່ບໍ່ຍອມເຮັດຕາມພຣະເຈົ້າ ຈະພໍພຣະໄທລາວບໍ່? ບໍ່ພໍພຣະໄທແນ່ນອນ ໃນທຳນອງດຽວກັນ ເມື່ອເຮົາຟັງສຽງຂອງພຣະເຈົ້າ ຖ້າເຮົາບໍ່ເຊື່ອ ແລະວາງໃຈໃນພຣະອົງ ພຣະເຈົ້າຈະບໍ່ພໍພຣະໄທເຮົາເຊັ່ນກັນ

ພຣະເຈົ້າບໍ່ໄດ້ໃຫ້ເຮົາຖວາຍລູກຂອງເຮົາເປັນເຄື່ອງບູຊາ ແຕ່ການເຊື່ອຟັງພຣະເຈົ້າກໍ່ບໍ່ແມ່ນສິ່ງທີ່ງ່າຍສຳລັບເຮົາ ເຮົາຈະຮັກພຣະເຈົ້າເໝືອນຢ່າງທີ່ອັບຣາຮາມໄດ້ຮັກພຣະອົງບໍ່?

ອັບຣາຮາມມັດລູກຂອງລາວເໝືອນຢ່າງທີ່ເຄີຍມັດລູກແກະສຳລັບການເຜົາບູຊາ ອີຊາກບໍ່ສາມາດໜີໄດ້ເລີຍ

ອັບຣາຮາມໄດ້ຈັບມີດເພື່ອຈະຂ້າລູກ ເບິ່ງຄືວ່າອີຊາກບໍ່ມີທາງທີ່ຈະພົ້ນຈາກຄວາມຕາຍ ແຕ່ພຣະເຈົ້າເຄີຍຊ່ວຍຄອບຄົວຂອງໂນອາ ໃຫ້ພົ້ນນໍ້າຖ້ວມ ບັດນີ້ອີຊາກເຊິ່ງຊ່ວຍໂຕເອງໃຫ້ພົ້ນບໍ່ໄດ້ ເຮົາຄິດວ່າພຣະເຈົ້າຈະປ່ອຍໃຫ້ອີຊາກຕາຍບໍ່?

**ພຣະເຈົ້າຈັດຕຽມແກະທີ່ຈະຕາຍແທນອີຊາກ**

**ປະຖົມມະການ 22:11-19**

ເມື່ອພຣະເຈົ້າເຫັນການທີ່ອັບຣາຮາມ ແລະອີຊາກ ພ້ອມທີ່ຈະເຊື່ອຟັງພຣະອົງແລ້ວ ພຣະອົງຈຶ່ງໃຫ້ທູດສະຫວັນມາບອກກັບອັບຣາຮາມວ່າ "ຢ່າແຕະຕ້ອງເດັກນັ້ນ ຫລືກະທຳຫຍັງລາວເລີຍ"

ພຣະເຈົ້າພໍພຣະໄທກັບການກະທຳຂອງອັບຣາຮາມ ແລະພຣະອົງໄດ້ຕຽມແກະໄວ້ໃຫ້ເປັນເຄື່ອງບູຊາທີ່ຈະຕາຍແທນອີຊາກ ແກະໂຕນັ້ນເຂົາຂອງມັນຕິດຢູ່ໃນພຸ່ມໄມ້ຫີບ ແຕ່ໂຕຂອງມັນບໍ່ມີແຜຫລືຕຳນິເລີຍ ເຫດນັ້ນແກະຜູ້ໂຕນັ້ນ ຈຶ່ງເປັນເຄື່ອງບູຊາຕາຍແທນອີຊາກໄດ້

ອັບຣາຮາມບໍ່ມີແກະທີ່ຈະໃຊ້ໃນການບູຊາ ແຕ່ພຣະເຈົ້າໄດ້ຈັດຕຽມໄວ້ ໂດຍພຣະຄຸນຂອງພຣະອົງ ແລະອັບຣາຮາມກໍ່ໄດ້ຂ້າແກະນັ້ນ ແລະເຜົາມັນເປັນເຄື່ອງບູຊາທີ່ພຣະເຈົ້າພໍພຣະໄທ ອັບຣາຮາມເອີ້ນສະຖານທີທີ່ລາວຂ້າແກະນັ້ນວ່າ "ເຢໂຮວາຈິເລ" ໝາຍຄວາມວ່າ
"ພຣະເຈົ້າຊົງຈັດຫາໄວ້ໃຫ້ "





6. ພຣະເຈົ້າໄດ້ກຳນົດຫຍັງເປັນໂທດຂອງຄວາມບາບ?

**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ
- ມະນຸດຈະມາເຖິງພຣະເຈົ້າໄດ້ ຕ້ອງມາຕາມທາງທີ່ພຣະເຈົ້າໄດ້ກຳນົດໄວ້
- ມະນຸດເປັນຄົນບາບ ແລະຊ່ວຍໂຕເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ

ສຳລັບຫ້ອງທີ່ບໍລິສຸດທີ່ສຸດນັ້ນ ອາໂລນຈະເຂົ້າໄປ ພຽງປີລະຄັ້ງເທົ່ານັ້ນ ວັນທີ່ພຣະເຈົ້າໄດ້ກຳນົດໃຫ້ເຂົ້າໄປນັ້ນຮຽກວ່າ ວັນລົບບາບ ວັນນັ້ນພວກເຂົາຈະຕ້ອງນຳເລືອດສັດເຂົ້າໄປ ແລະພົມເລືອດນັ້ນ ເທິງພະທີ່ນັ່ງກະລຸນາ ຊຶ່ງຢູ່ຂ້າງຫຼັງມ່ານ

ພຣະເຈົ້າສັນຍາວ່າ ຖ້າປະໂລຫິດເຮັດທຸກສິ່ງຕາມແບບທີ່ພຣະອົງໄດ້ບອກໄວ້ກັບໂມເຊ ພຣະອົງຈະອະໄພໂທດບາບ ຂອງຊາວອິດສະລະເອນທີ່ໄດ້ກະທຳໃນປີທີ່ຜ່ານມາ ແທ້ຈິງຄວາມຕາຍຂອງສັດເຫຼົ່ານັ້ນ ບໍ່ພໍທີ່ຈະຊົດໃຊ້ຄວາມບາບຜິດຂອງຊາວອິດສະລະເອນ ເພາະພຣະເຈົ້າໄດ້ກຳນົດຄວາມຕາຍເປັນໂທດຂອງຄວາມບາບ ນັ້ນໝາຍເຖິງ ຜູ້ທີ່ທຳບາບຈະຖືກຕັດຂາດຈາກພຣະເຈົ້າຕະຫຼອດໄປ ຢ່າງໃດກໍ່ຕາມ ພຣະເຈົ້າໄດ້ສັນ ຍາວ່າຖ້າຊາວອິດສະລະເອນຈະມາເຖິງພຣະເຈົ້າທາງທໍເຕັນ ຊຶ່ງເປັນທາງທີ່ພຣະອົງເອງ ຈັດຕຽມໃຫ້ພວກເຂົາ ພຣະອົງຈະພັກໂທດໄວ້ກ່ອນ ແລະຍັງບໍ່ລົງໂທດຕາມຜູ້ເຮັດບາບຄວນຈະໄດ້ຮັບ ດັ່ງນັ້ນເຮົາເຫັນວ່າພຣະເຈົ້າຈະບໍ່ຍອມຮັບຜູ້ທີ່ບໍ່ຍອມມາເຖິງພຣະອົງ ຕາມທາງທີ່ພຣະອົງໄດ້ກຳນົດໄວ້

## ທົບທວນ

1. ພຣະເຈົ້າໄດ້ສັ່ງໃຫ້ໂມເຊ ແລະຊາວອິດສະລະເອນສ້າງຫຍັງ?
2. ຊາວອິດສະລະເອນສ້າງຕາມອຳເພີໃຈໂຕເອງໄດ້ບໍ່?
3. ໃຜເປັນຜູ້ທີ່ມີສິດທິແຕ່ພຽງຜູ້ດຽວທີ່ຈະເຂົ້າໄປໃນຫ້ອງຂ້າງໃນນັ້ນ?
4. ມະຫາປະໂລຫິດຕ້ອງເຮັດຫຍັງກັບເລືອດທີ່ເອົາເຂົ້າໄປໃນຫ້ອງໃນນັ້ນ?
5. ເລືອດສັດຕ່າງໆ ພຽງພໍທີ່ຈະຊົດໃຊ້ໜີ້ບາບຂອງມະນຸດແທ້ໆ ບໍ່?





## ທົບທວນ

1. ການທີ່ພຣະເຈົ້າໄດ້ລອງໃຈອັບຣາຮາມ ນັ້ນເພື່ອຈະໃຫ້ລາວມີໂອກາດຈະສະແດງເຖິງຫຍັງ?
2. ເປັນຫຍັງພຣະເຈົ້າຈຶ່ງມີສິດສັ່ງອັບຣາຮາມ ໃຫ້ຖະຫວາຍລູກເພື່ອເປັນເຄື່ອງບູຊາ?
3. ອັບຣາຮາມຄິດວ່າພຣະເຈົ້າປ່ຽນພຣະໄທກ່ຽວກັບ ອີຊາກແລະຜູ້ຊ່ອຍໃຫ້ລອດທີ່ຈະເກີດມາໃນເຊື້ອສາຍຂອງອີຊາກຫລື?
4. ເມື່ອອີຊາກຖືກມັດເທິງແທ່ນບູຊານັ້ນເຂົາສາມາດຊ່ອຍໂຕເອງໄດ້ບໍ່?
5. ເມື່ອມະນຸດເປັນຄົນບາບເຊິ່ງຈະຕ້ອງຕາຍ ມະນຸດສາມາດຊ່ອຍໂຕເອງໃຫ້ພົ້ນໂທດຂອງບາບນັ້ນໄດບໍ່?
6. ໃຜໄດ້ຕຽມແກະໄວ້ໃຫ້ເປັນເຄື່ອງບູຊາທີ່ຈະຕາຍແທນອີຊາກ?
7. ຖ້າແກະນັ້ນມີແຜຫລືຕຳນິ ຈະໃຊ້ເປັນເຄື່ອງບູຊາໄດ້ບໍ່?
8. ພູເຂົາທີ່ພຣະເຈົ້າສັ່ງໃຫ້ອັບຣາຮາມ ຖະຫວາຍເຄື່ອງບູຊານັ້ນ ຊື່ວ່າພູຫຍັງ?
9. ສະຖານທີ່ເຊິ່ງຖະຫວາຍແກະນັ້ນອັບຣາຮາມ ເອີ້ນວ່າຫຍັງ?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າຊົງອະນຸພາບເໜືອທຸກສິ່ງ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າ ແລະວາງໃຈໃນພຣະອົງຈຶ່ງຈະເປັນທີ່ພໍພຣະໄທ(ພໍໃຈ)ແກ່ພຣະອົງ
- ພຣະເຈົ້າຊົງບໍລິສຸດແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາແລະພຣະຄຸນ



**ບົດທີ 13**
**ພຣະເຈົ້າຊົງເລືອກໂມເຊ**
**ໃຫ້ເປັນຜູ້ຊ່ວຍກູ້ອິດສະລະເອນ**
**ອົບພະຍົບ 1:1 - 2:10**

**ຊາຕານຕໍ່ຕ້ານແຜນການຂອງພຣະເຈົ້າ**
**ອົບພະຍົບ 1:1-7**

ພວກອິດສະລະເອນ ເຊິ່ງເປັນເຊື້ອສາຍຂອງອັບຣາຮາມ. ອັບຣາຮາມເປັນພໍ່ທ້າວອີຊາກ. ອີຊາກເປັນພໍ່ທ້າວຢາໂຄບ. ຢາໂຄບມີລູກຊາຍ 12ຄົນ ລູກຊາຍທີ11 ຊື່ໂຢເຊັບ. ໂຢເຊັບໄປຢູ່ປະເທດອີຢິບ ແລະລາວໃຫ້ອ້າຍໆ ກັບພໍ່ລວງທັງຄອບຄົວຂອງພວກເຂົາມາອາໄສຢູ່ໃນປະເທດອີຢິບ.

(1:8-14) ພວກອິດສະລະເອນ ເຊິ່ງເປັນເຊື້ອສາຍຂອງ ອັບຣາຮາມກໍ່ໄດ້ເພີ່ມຂຶ້ນຫລາຍໃນປະເທດ ອີຢິບ. ມີກະສັດອົງໜຶ່ງຂຶ້ນປົກຄອງປະເທດ. ຄົນນີ້ບໍ່ມັກພວກອິດສະລະເອນເລີຍ. ລາວຢ້ານຄົນອິດສະລະເອນ ຈະມີກຳລັງຫລາຍກ່ອນຄົນອີຢິບ ແລະຈະຕໍ່ສູ້ເຮັດໃຫ້ຄົນອີຢິບພ່າຍແພ້ໄດ້. ສະນັ້ນລາວຈຶ່ງວາງແຜນກຳຈັດຄົນອິດສະລະເອນ ໂດຍບັງຄັບໃຫ້ຄົນ ອິດສະລະເອນ ເຮັດວຽກໜັກ ກົດຂີ່ຂົ່ມເຫງຊາວອິດສະລະເອນຢ່າງໄຮ້. ຄວາມປານີໃຫ້ຊາວອິດສະລະເອນເປັນທາດ ແລະບັງຄັບໃຫ້ທຸກຄົນເຊື່ອຟັງຄຳສັ່ງຂອງລາວ. ແຕ່ວ່າວຽກໜັກນັ້ນ ບໍ່ໄດເຮັດພວກເຂົາຕາຍໄປ. ຄົນອິດສະລະເອນຍິ່ງເພີ່ມຫລາຍຂຶ້ນ ແລະມີກຳລັງຫລາຍຂຶ້ນ







ໜຶ່ງຕົກແຕ່ງດ້ວຍລາຍປັກ ແລະແຂນຜ້າມ່ານນັ້ນກັ້ນໄວ້ລະຫວ່າງຫ້ອງທັງສອງໃນຫໍເຕັນ ມ່ານນັ້ນເປັນສິ່ງທີ່ເຕືອນໃຈຊາວອິດສະລະເອນ ໃຫ້ເຂົາສຳນຶກວ່າ ເຂົາເປັນຄົນບາບ ແລະຖືກແຍກຈາກພຣະເຈົ້າ

**(27:1-2)** ລາວຕ້ອງຕັ້ງແທ່ນບູຊາ ແທ່ນໜຶ່ງໄວ້ ແທ່ນບູຊານັ້ນເຮັດດ້ວຍໄມ້ ແລະຫຸ້ມດ້ວຍທອງສຳລິດ

ຖ້າຜູ້ໃດຈະນຳເຄື່ອງບູຊາຖະຫວາຍແກ່ພຣະເຈົ້າ ພວກເຂົາຕ້ອງນຳມາເຖິງແທ່ນບູຊານີ້ ແລະພວກເຂົາຕ້ອງວາງມືຂອງຕົນລົງເທິງຫົວສັດທີ່ເຂົານຳມາຖະຫວາຍ ແລ້ວຂ້າມັນ ນີ້ເປັນການສະແດງເຖິງການຍອມຮັບວ່າ ເຂົາເປັນຄົນບາບ ແລະສົມຄວນຕ້ອງຕາຍ ແຕ່ຂໍພຣະເຈົ້າເມດຕາພວກເຂົາໂດຍຮັບຄວາມຕາຍນັ້ນແທນ

**ອາໂລນແລະລູກໆ ເປັນປະໂລຫິດ**
**ລະບຽບພວກເລວີ 1:1-5, 16: 2-3**

ພຣະເຈົ້າແຕ່ງຕັ້ງໃຫ້ອາໂລນ ອ້າຍຂອງໂມເຊ ເປັນມະຫາປະໂລຫິດ ແລະໃຫ້ລູກໆ ຂອງອາໂລນເປັນປະໂລຫິດຊ່ວຍພໍ່ດ້ວຍ ນອກຈາກອາໂລນ ຜູ້ເປັນມະຫາປະໂລຫິດແລ້ວ ຜູ້ອື່ນບໍ່ມີສິດເຂົ້າໄປໃນອະຖິສຸດທິສະຖານໄດ້ ຜູ້ທີ່ລະເມີດຈະຕ້ອງຕາຍ



ທີ່ພວກເຂົາຈະເດີນໄປ

**ຫໍເຕັນຕ້ອງສ້າງຕາມແບບແປ້ນຂອງພຣະເຈົ້າ**

**ອົບພະຍົບ 25:8,9**

ເມື່ອຊາວອິດສະລະເອນສ້າງຫໍເຕັນ ພວກເຂົາຕ້ອງເຮັດທຸກສິ່ງຕາມທີ່ພຣະເຈົ້າບອກແກ່ໂມເຊຢູ່ເທິງພູເຂົາ ພຣະເຈົ້າບໍ່ຍອມໃຫ້ປະຊາຊົນເຮັດຕາມຄວາມຄິດຂອງຕົນເອງ ເໝືອນກາອິນທີ່ຢາກນະມັດສະການພຣະເຈົ້າຕາມວິທີການທີ່ລາວກຳນົດຂື້ນເອງ ພວກເຮົາຈື່ເຮືອທີ່ໂນອາສ້າງຂື້ນໄດ້ ລາວຕ້ອງເຮັດທຸກຢ່າງຕາມແບບທີ່ພຣະເຈົ້າບອກ ແລະກຳ ນົດໄວ້ ແບບອື່ນໆນັ້ນ ໃຊ້ບໍ່ໄດ້

ມະນຸດຈະມາເຖິງພຣະເຈົ້າໄດ້ຕ້ອງມາຕາມທາງ ແລະຮູບແບບທີ່ພຣະເຈົ້າກຳນົດໄວ້ ທາງນັ້ນແມ່ນປະກົດໃນພະຄຳພີເທົ່ານັ້ນ ພຣະເຈົາຮູ້ວ່າ ຊາວອິດສະລະເອນຕ້ອງເດີນທາງໄກກວ່າຈະເຖິງແຜ່ນດິນທີ່ໄດ້ຊົງສັນຍາໄວ້ ເຫດສະນັ້ນ ເຮົາຈະໃຊ້ຂອງທີ່ໜັກໆ ຄືທີ່ໃຊ້ສ້າງບ້ານຂອງເຮົາບໍ່ໄດ້ ພຣະເຈົ້າຈິ່ງໃຫ້ພວກເຂົາໃຊ້ໜັງສັດ ຫຼືຜ້າໃຫຍ່ໆ ເຮັດຫໍເຕັນສ່ວນຊາວອິດສະລະເອນເອງ ກໍ່ໃຊ້ຫໍເຕັນນັ້ນເປັນທີ່ພັກພາອາໃສໃນລະຫວ່າງການເດີນທາງທຸກໆ ຄືເຮືອນດ້ວຍ

**ຜ້າມ່ານ ແລະແທ່ນບູຊາ**

**ອົບພະຍົບ 26:31-33**

ພຣະເຈົ້າໄດ້ສັ່ງໂມເຊ ໃຫ້ຊາວອິດສະລະເອນທໍຜ້າທີ່ສວຍງາມຜືນ





ເຮົາຄິດວ່າໃຜທີ່ເຮັດໃຫ້ກະສັດມີຄວາມຄິດເຊັ່ນນີ້? ແນ່ນອນຄືຊາຕານ ເພາະວ່າຊາຕານເປັນຕົ້ນເຫດຂອງຄວາມຊົ່ວທັງປວງ ຊາຕານເອງຮູ້ວ່າພຣະເຈົ້າບໍ່ເຄີຍລືມສັນຍາຕໍ່ອັບຣາຮາມ ອີຊາກ ແລະຢາໂຄບ. ສະນັ້ນ ພວກຊາຕານຢາກໃຫ້ພວກ ອິດສະລະເອນ ຕາຍໝົດເພື່ອວ່າພຣະຜູ້ຊ່ວຍໃຫ້ລອດ ເຊິ່ງວ່າພຣະເຈົ້າໄດ້ສັນຍາວ່າຈະໃຫ້ເກີດຈາກພົງພັນຂອງ ອິດສະລະເອນນັ້ນ ຈະບໍ່ໄດ້ເກີດມາ. ຊາຕານຢາກຈະບັງຄັບມະນຸດໃຫ້ຢູ່ໃຕ້ອຳນາດຂອງມັນ ແລະຢາກຈະທຳລາຍມະນຸດເສຍ.

**ພຣະເຈົ້າເລືອກໂມເຊ ແລະປົກປ້ອງຊີວິດຂອງເຂົາ**

**ອົບພະຍົບ 1:15-22**

ພຣະເຈົ້າຊົງຟັງຄຳອ້ອນວອນຂອງຊາວອິດສະລະເອນ ແລະເມື່ອເຖິງເວລາຂອງພຣະອົງ ພຣະເຈົ້າໄດ້ຊົງເລືອກຊາຍຜູ້ໜຶ່ງທີ່ຈະເປັນຜູ້ນຳຂອງພວກເຂົາ.

(2:1-10) ມີເດັກເກີດໃນເຊື້ອສາຍຂອງ ຢາໂຄບ ຄົນໜຶ່ງ. ພໍ່ແມ່ຂອງເດັກນັ້ນ ວາງໃຈໃນພຣະເຈົ້າ ແລະບໍ່ຍອມຖິ້ມລູກຂອງເຂົາລົງໃນແມ່ນ້ຳ ຕາມກົດໝາຍຂອງ ຟາໂຣ. ພຣະເຈົ້າໃຫ້ທິດາຂອງກະສັດ ຟາໂຣ ເກັບເດັກນັ້ນ ອອກຈາກກະຕ່າທີ່ລອຍເທິງນ້ຳ. ທິດາຂອງຟາໂຣຕັ້ງຊື່ຂອງເດັກນັ້ນວ່າ ໂມເຊ ແປວ່າ "ສຸດຂຶ້ນມາ" ເພາະໄດ້ສຸດຂຶ້ນຈາກແມ່ນ້ຳ. ພຣະເຈົ້າມີແຜນການທີ່ຈະໃຊ້ ໂມເຊ ໃນການຊ່ວຍຊົນຊາດອິດສະລະເອນໃຫ້ພົ້ນຈາກການເປັນທາດ ແລະພຣະອົງຮູ້ວ່າ ສະຖານທີ່ທີ່ດີທີ່ສຸດສຳລັບລ້ຽງດູ ໂມເຊ ແລະຕຽມລາວໄວ້ສຳລັບການງານທີ່ຈະເຮັດ ຄືຣາດສະວັງກະສັດ ຟາໂຣ. ສິ່ງທີ່ລາວຈະຮຽນຮູ້ທີ່ນັ້ນ ເປັນສິ່ງທີ່ລາວຈະຕ້ອງໃຊ້ເມື່ອລາວຈະນຳຊົນຊາດ ອິດສະລະເອນອອກຈາກ ອີຢິບ

ພຣະເຈົ້າມີລິດອຳນາດຫລາຍກ່ວາຊາຕານ ບໍ່ມີໃຜສາມາດຂັດຂວາງແຜນການຂອງພຣະເຈົ້າໄດ້. ພຣະອົງມີສະຕິປັນຍາຄົບບໍລິບູນ ເຫດສະນັ້ນ ເຮົາຈິ່ງວາງໃຈໃນພຣະອົງໄດ້ ເພາະແມ້ນແຕ່ທີດາຂອງ ຟາໂຣ ພຣະເຈົ້າ ຍັງສາມາດໃຊ້ໃນການເຮັດໃຫ້ແຜນການຂອງພຣະອົງສຳເລັດ. ບໍ່ມີໃຜທີ່ໃຫຍ່ກ່ວາພຣະເຈົ້າ. ຖ້າພຣະເຈົ້າດູແລຜູ້ທີ່ເຊື່ອພຣະອົງໃນສະໄໝຂອງໂມເຊ ພຣະອົງຈະດູແລເຮົາໃນສະໄໝນີ້ດ້ວຍ. ພຣະອົງເປັນຫ່ວງຊີວິດເຮົາທຸກຄົນ. ເຮົາຕ້ອງຟັງພຣະຄຳຂອງພຣະອົງ ຈິ່ງຈະພົ້ນຈາກອຳນາດຂອງຊາຕານ ແລະກັບມາຫາພຣະເຈົ້າໄດ້.

**ພຣະເຈົ້າສຳແດງພຣະອົງແກ່ໂມເຊ**

**ອົບພະຍົບ 2:11-15**

ເມື່ອໂມເຊ ໃຫຍ່ແລ້ວ ລາວຄິດວ່າລາວສາມາດຊ່ວຍຊົນຊາດຂອງລາວ ດ້ວຍຄວາມສາມາດຕົນເອງ. ແຕ່ລາວເຮັດບໍ່ໄດ້. ລາວຈຶ່ງຕ້ອງໜີໄປທີ່ເມືອງມີດີອານ. ເມືອງມີດີອານນັ້ນຢູ່ໃນທະເລຊາຍ. ໂມເຊໄດ້ເມັຍທີ່ນັ້ນ ແລະໄດ້ລູກຊາຍສອງຄົນ. ເວລາຜ່ານໄປຫລາຍປີ ແຕ່ພຣະເຈົ້າບໍ່ລືມພຣະສັນຍາຂອງພຣະອົງ.

**ອົບພະຍົບ 2:23 – 3:12**

ວັນໜຶ່ງໂມເຊກຳລັງລ້ຽງແກະຂອງພໍ່ເຖົ້າ ຢູ່ໃນທະເລຊາຍ. ໂມເຊໄດ້ເຫັນພຸ່ມໄມ້ຕົ້ນໜຶ່ງ ເຊິ່ງມີໄຟລຸກໄຊນຢູ່. ໄຟນັ້ນບໍ່ແມ່ນໄຟທຳມະດາແຕ່ເປັນການສຳແດງຂອງພຣະເຈົ້າ. ຊາວອິດສະລະເອນກຳລັງຕົກຢູ່ໃນສະພາບທີ່ເດືອດຮ້ອນ ແຕ່ພຣະເຈົ້າປົກປ້ອງ ບໍ່ໃຫ້ຖືກທຳລາຍໝົດໄປເໝືອນພຸ່ມໄມ້ນັ້ນ ທີ່ຢູ່ໃນໄຟແຕ່ບໍ່ໄດໄໝ້ອອດໄປ.

ຕອນນັ້ນ ພຣະເຈົ້າເວົ້າອອກຈາກແປວໄຟ. ພຣະເຈົ້າຮູ້ພາສາຂອງໂມເຊ ແລະໂມເຊເຂົ້າໃຈຄຳເວົ້າຂອງພຣະເຈົ້າ. ພຣະເຈົ້າຮູ້ທຸກພາສາ





ເອນແລ້ວ ແລະພຣະອົງໄດ້ຕັ້ງພັນທະສັນຍາກັບອິດສະລະເອນວ່າ ຖ້າເຂົາຮັກສາບັນຍັດຂອງພຣະອົງໄດ້ ພຣະອົງຈະປົກປ້ອງຮັກສາເຂົາໄວ້ ແລະຈະໃຫ້ພຣະພອນແກ່ເຂົາທຸກປະການ

ແຕ່ຫາກເຂົາທັງຫລາຍລະເມີດບັນຍັດຂອງພຣະອົງໂທດທີ່ພວກເຂົາຕ້ອງຮັບຄືຄວາມຕາຍ ຝ່າຍພຣະເຈົ້ານັ້ນ ພຣະອົງຊົງຮູ້ວ່າ ຊາວອິດສະລະເອນຈະບໍ່ສາມາດຮັກສາບັນຍັດນັ້ນສະເໝີໄປ ແລະພຣະອົງຈຳເປັນຈະຕ້ອງລົງໂທດ ແລະທຳລາຍພວກເຂົາຫາກພຣະອົງບໍ່ໄດ້ຕຽມທາງໄວ້ທີ່ຈະຊ່ວຍພວກເຂົາໃຫ້ພົ້ນໂທດ

ຢ່າງໃດກໍ່ຕາມ ພຣະເຈົ້າຊົງຮັກຊາວອິດສະລະເອນ ແລະບໍ່ຢາກທຳຮ້າຍພວກເຂົາ ເຫດສະນັ້ນ ພຣະອົງໃຫ້ຊາວອິດສະລະເອນສ້າງຫໍເຕັນເພື່ອເປັນທີ່ປະທັບຂອງພຣະອົງທ່າມກາງພວກເຂົາ ໃນຫໍເຕັນນັ້ນເຂົາທັງຫລາຍຈະມາເຖິງພຣະເຈົ້າໄດ້ ແລະຈະໄດ້ຮັບການອະໄພໂທດທີ່ພວກເຂົາສົມຄວນຈະໄດ້ຮັບ ເພາະການລ່ວງລະເມີດຕໍ່ບັນຍັດຂອງພຣະອົງ

**(25:1-8)** ພຣະເຈົ້າໃຫ້ໂມເຊເກັບລວບລວມສິ່ງຕ່າງໆ ທີ່ຊາວອິດສະລະເອນຖະຫວາຍ ເພື່ອຈະສ້າງຫໍເຕັນ ເຊິ່ງຈະເປັນທີ່ປະທັບສຳລັບພຣະເຈົ້າ ໃນທີ່ນັ້ນພຣະເຈົ້າຈະຮັບເຄື່ອງບູຊາຂອງປະຊາຊົນ ແລະພວກເຂົາຈະມານະມັດສການພຣະອົງໄດ້

ການທີ່ພຣະເຈົ້າໃຫ້ຊາວອິດສະລະເອນສ້າງຫໍເຕັນນັ້ນ ບໍ່ໄດ້ໝາຍຄວາມວ່າ ພຣະອົງຕ້ອງການທີ່ຢູ່ອາໃສ ພຣະເຈົ້າບໍ່ມີຮ່າງກາຍເໝືອນເຮົາ ທີ່ຕ້ອງມີບ້ານພັກໃຫ້ຊົ້ນແດດຊົ້ນຝົນ ພຣະອົງຢູ່ໄດ້ທຸກທີ່ ເພາະເປັນວິນຍານ ແຕ່ພຣະເຈົ້າຢາກສຳແດງພຣະອົງເອງຕໍ່ຊາວອິດສະລະເອນໃນຫໍເຕັນ ເພື່ອພວກເຂົາຈະເຫັນພຣະສີລິຂອງພຣະອົງຕະຫຼອດທາງ



**ບົດທີ 18**
**ຫໍເຕັນຂອງພຣະເຈົ້າ**
**ອົບພະຍົບ**

**ສ້າງຄວາມສົນໃຈ**

ເມື່ອມີຜູ້ຮ້າຍຖືກຈັບແລະຖືກຕັດສິນປະຫານຊີວິດ ລາວຈະຮູ້ສຶກຢ່າງໃດ? ຫາກຜູ້ໜຶ່ງຍອມຮັບໂທດແທນລາວ ລາວຍັງຕ້ອງຮັບໂທດເພາະຄວາມຜິດຂອງລາວບໍ່? ຫລືຖ້າກະສັດອະໄພໂທດໃຫ້ແກ່ນັກໂທດຄົນນັ້ນ ລາວຈະສຳນຶກເຖິງບຸນຄຸນຂອງທ່ານແທ້ໆ ບໍ?

ພວກເຮົາເຄີຍເຮັດຜິດຕໍ່ພຣະບັນຍັດບໍລິສຸດຂອງພຣະເຈົ້າບໍ່? ເລື່ອງທີ່ເຮົາຈະຮຽນດ້ວຍກັນໃນວັນນີ້ກ່ຽວກັບເລື່ອງການທີ່ພຣະເຈົ້າໃຫ້ມີຜູ້ຮັບໂທດແທນຄົນຜິດ ພຣະເຈົ້າຈະເຮັດຢ່າງໃດ?

**ພຣະເຈົ້າສັ່ງໃຫ້ໂມເຊສ້າງຫໍເຕັນສັກສິດ**
**ອົບພະຍົບ 24:15-18**

ເມື່ອໂມເຊໄດ້ຂຶ້ນໄປເຖິງທີ່ ທີ່ມີເມກໜາທຶບເທິງພູເຂົານັ້ນ ພຣະເຈົ້າເວົ້າໂມເຊຢ່າງໃກ້ຊິດສະໜິດສະໜົມໂດຍບໍ່ປິດບັງ ລາວຢູ່ກັບພຣະເຈົ້າ 40ວັນ 40ຄືນ ໃນເວລານັ້ນ ພຣະເຈົ້າສັ່ງໃຫ້ຊາວອິດສະລະເອນເຮັດສິ່ງໜຶ່ງທີ່ສຳຄັນຄືຫໍເຕັນ (ເຕັ້ນໃຫຍ່)

ເຮົາຄົງຈື່ໄດ້ວ່າພຣະເຈົ້າໄດ້ໃຫ້ບັນຍັດສິບປະການແກ່ຊາວອິດສະລະ





ແລະໄດ້ຍິນທຸກຄຳທີ່ມະນຸດເວົ້າ ແມ້ນແຕ່ສຽງກະຊິບທີ່ແຜ່ວເບົາ ພຣະເຈົ້າບອກໃຫ້ ໂມເຊ ຖອດເກີບອອກ ເພາະເມື່ອພຣະເຈົ້າສຳແດງພຣະອົງເປັນພິເສດ. ມະນຸດສົມຄວນສະແດງຄວາມເຄົາລົບນັບຖື ຕໍ່ພຣະເຈົ້າຜູ້ຊົງບໍລິສຸດ ແລະຊົງຍິ່ງໃຫຍ່. ເຮົາສົມຄວນທີ່ຈະໃຫ້ກຽດສູງສຸດຕໍ່ພຣະອົງ.

ພຣະເຈົ້າບອກໂມເຊວ່າ ພຣະອົງໄດ້ຊົງເລືອກໃຫ້ ໂມເຊເປັນຜູ້ນຳຊາວອິດສະລະເອນ ອອກຈາກການເປັນທາດໃນປະເທດ ອີຢິບ ແລະນຳເຂົາທັງຫລາຍໄປຢູ່ໃນແຜ່ນດິນແຫ່ງພຣະສັນຍາ. ເມື່ອໂມເຊໄດ້ຍິນຄຳເວົ້າຂອງພຣະເຈົ້າ ລາວບໍ່ຢາກເປັນຜູ້ນຳ. ລາວຮູ້ວ່າລາວເຄີຍຜິດພາດມາກ່ອນ ແລະລາວເອງບໍ່ສາມາດເຮັດສິ່ງໃຫຍ່ຢ່າງນັ້ນ. ແຕ່ພຣະເຈົ້າໄດ້ບອກໃຫ້ໂມເຊຮູ້ວ່າ ພຣະອົງຈະໄປກັບລາວ ແລະຈະຊ່ວຍໃຫ້ໂມເຊ ໂດຍອຳນາດອັນຍິ່ງໃຫຍ່ຂອງພຣະອົງ.

**ທົບທວນ**

1. ເປັນຫຍັງພຣະເຈົ້າຈຶ່ງຢາກໃຫ້ຊາວອິດສະລະເອນພົ້ນຈາກການເປັນທາດ?
2. ເປັນຫຍັງຊາຕານຢາກທຳລາຍຊາວອິດສະລະເອນທັງໝົດ?
3. ພຣະເຈົ້າໃຊ້ໃຜໃຫ້ຊ່ວຍເດັກຊາຍໂມເຊເມື່ອຖືກລອຍຢູ່ໃນນໍ້າ?
4. ນອກຈາກພຣະເຈົ້າມີຄົນອື່ນທີ່ສາມາດຊ່ວຍຊາວອິດສະລະເອນພົ້ນຈາກການເປັນທາດບໍ່?
5. ໃຜເປັນຫ່ວງຊີວິດຂອງເຮົາ ແລະຢາກໃຫ້ເຮົາພົ້ນຈາກການເປັນທາດຂອງຊາຕານ?
6. ພຣະເຈົ້າສຳແດງພຣະອົງແກ່ໂມເຊຢ່າງໃດ?
7. ເປັນຫຍັງໂມເຊຈຶ່ງບໍ່ຢາກກັບໄປເປັນຜູ້ນຳຂອງຊາວອິດສະລະເອນ?

### ຄວາມຈິງທີ່ຕ້ອງເນັ້ນ

- ຊາຕານຕໍ່ຕ້ານພຣະເຈົ້າ ແລະແຜນການຂອງພຣະອົງສະເໝີ
- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງປະກອບດ້ວຍຄວາມຮັກ ຄວາມເມດຕາ ແລະພຣະຄຸນ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ
- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ





### ທົບທວນ

1. ຂະນະເມື່ອໂມເຊຢູ່ກັບພຣະເຈົ້າເທິງພູເຂົາ ຊາວອິດສະລະເອນພາກັນເຮັດຫຍັງ?
2. ໂມເຊຮູ້ໄດ້ຢ່າງໃດວ່າ ຊາວອິດສະລະເອນໄດ້ທຳສິ່ງເຫລົ່ານັ້ນ?
3. ເປັນຫຍັງພຣະເຈົ້າບໍ່ທຳລາຍຊາວອິດສະລະເອນເມື່ອພວກເຂົາຫລົງໄປນະມັດສະການຮູບເຄົາລົບ?

### ຄວາມຈິງທີ່ຕ້ອງນັ້ນ

- ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ ແລະຊົງຮອບຮູ້ທຸກສິ່ງ
- ມະນຸດເປັນຄົນບາບ ແລະຊ່ວຍຕົວເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງບໍລິສຸດແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ມະນຸດຕ້ອງເຊື່ອພຣະຄຳຂອງພຣະເຈົ້າ ແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທຂອງພຣະອົງ

ໂມເຊໄດ້ຖືແຜ່ນຫີນພຣະໂອວາດມາສອງແຜ່ນ ໃນແຜ່ນຫີນນັ້ນໄດ້ຈາລຶກຂໍ້ຄໍາສັ່ງຂອງພຣະອົງ ໂດຍພຣະອົງເອງນີ້ນ ຍື່ນໃຫ້ໂມເຊ

ເມື່ອໂມເຊເຂົ້າມາໃກ້ຄ້າຍ ກໍເຫັນຮູບງົວນ້ອຍແລະເຫັນປະຊາຊົນກໍາລັງເຕັ້ນລໍາກັນຢູ່ ທ່ານຈຶ່ງຮ້າຍຢ່າງຮຸນແຮງ ໂດຍໄດ້ໂຍນແຜ່ນຫີນທີ່ຖືມານັ້ນຖິ້ມຈົນແຕກເສັຍຫາຍຢູ່ທີ່ຕີນພູ

ແລ້ວໂມເຊທໍາລາຍຮູບເຄົາລົບນັ້ນ ໃນວັນນັ້ນມີຈໍານວນສາມພັນຄົນທີ່ຕາຍເພາະບາບນັ້ນ ແຕ່ຊາວອິດສະລະເອນສ່ວນຫລາຍຍັງມີຊີວິດຢູ່ຫລັງຈາກນັ້ນ

ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງຕັດຫີນສອງແຜ່ນໃຫ້ເຫມືອນແຜ່ນເກົ່າ ແລ້ວເຮົາຈະຈາຮຶກຖ້ອຍຄໍາ ຊຶ່ງຢູ່ໃນແຜ່ນເດີມທີ່ເຈົ້າໄດ້ທໍາແຕກນັ້ນ ໃຫ້ດັ່ງນັ້ນໂມເຊຈຶ່ງຕັດເອົາຫີນສອງແຜ່ນເຫມືອນສອງແຜ່ນທໍາອິດ ແລ້ວມື້ອື່ນຕອນເຊົ້າມືດ ທ່ານກໍຖືຫີນນັ້ນ ຂຶ້ນໄປເທິງພູຊີນາອີຕາມພຣະຜູ້ເປັນເຈົ້າຊົງສັ່ງ

ພຣະຜູ້ເປັນເຈົ້າໄດ້ສະເດັດມາດ້ວຍເມກ ຊົງຢືນຢູ່ກັບໂມເຊທີ່ນັ້ແລະໂມເຊໄດ້ຮ້ອງອອກພຣະນາມຂອງພຣະຜູ້ເປັນເຈົ້າ ແລ້ວພຣະຜູ້ເປັນເຈົ້າໄດ້ສະເດັດຜ່ານຫນ້າໂມເຊໄປ ແລະຊົງກ່າວວ່າ, "ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາກະຣຸນາ ຜູ້ບໍ່ໂກດງ່າຍ ຜູ້ສະແດງຄວາມຮັກຫມັ້ນຄົງ ແລະຄວາມສັດຊື່ ຜູ້ມີຄວາມຮັກຫມັ້ນຄົງຫລາຍຊົ່ວອາຍຸພັນຄົນ ຜູ້ໂຜດໃຫ້ອະພັຍຄວາມບໍ່ຍຸດຕິທັມຄວາມຊົ່ວຊ້າ ແລະຄວາມບາບ ແຕ່ຈະລົງໂທດລູກຫລານເຫລັນເຖິງສາມສີ່ຊົ່ວອາຍຸຄົນ ຍ້ອນຄວາມບາບທີ່ບິດາມານດາຂອງເຂົາໄດ້ກະທໍາ"







**ບົດທີ 14**

**ພຣະເຈົ້າຊົງຊ່ວຍອິດສະລະເອນ**

**ໃຫ້ພົ້ນຈາກການເປັນທາດ**

**ອົບພະຍົບ ບົດທີ່ 4, 5, 7, 12**

### ສ້າງຄວາມສົນໃຈ

ໃນສະໄໝລາດສະການທີ 5 ຫລາຍຄົນໃນປະເທດໄທຍັງເປັນທາດຢູ່ ເມື່ອເຈົ້າຊີວິດໄທໃນລາດສະການທີ 5 ໄດ້ຊົງປະກາດ ໃຫ້ມີການເລີກທາດປ່ອຍເຂົາເປັນອິດສະຫລະ ເຂົາກໍ່ດີໃຈຫລາຍ

ສະໄໝນີ້ບາງຄົນເປັນທາດຢາເສບຕິດຕ່າງໆ ບາງຄົນເປັນທາດເຫລົ້າ ທາດການພະນັນ ຫລືທາດສິ່ງອື່ນໆ ອີກຫລາຍຢ່າງ ຊາຕານຢາກຈະໃຫ້ມະນຸດເປັນທາດຕໍ່ໄປ ແຕ່ ພຣະເຈົ້າມີທາງລອດສໍາລັບມະນຸດຜູ້ເຊິ່ງຊ່ວຍຕົນເອງບໍ່ໄດ້ ເລື່ອງທີ່ເຮົາຈະຮຽນດ້ວຍກັນໃນວັນນີ້ເຮົາຈະເຫັນທາງລອດຂອງພຣະເຈົ້າສໍາລັບ ຊາວອິດສະລະເອນ

### ໂມເຊ ກັບໄປເຖິງອີຢີບ

**ອົບພະຍົບ 4:19-23**

ພຣະເຈົ້າຮູ້ລ່ວງໜ້າເຖິງສິ່ງທີ່ຟາໂຣຈະກະທໍາ ແລະພຣະອົງບອກໃຫ້ໂມເຊຮູ້ເຖິງການອັດສະຈັນຕ່າງໆ ທີ່ພຣະອົງຈະເຮັດດ້ວຍ ເພື່ອຈະບັງຄັບໃຫ້ຟາໂຣປ່ອຍໃຫ້ຊາວອິດສະລະເອນອອກໄປ. ພຣະເຈົ້າບອກວ່າ "ຄົນອິດສະລະເອນເປັນບຸດຫົວປີຂອງເຮົາ" ຖ້າຟາໂຣບໍ່ຍອມປ່ອຍຊາວ

ອິດສະລະເອນໄປ ພຣະເຈົ້າຈະປະຫານຊີວິດບຸດຫົວປີຂອງຟາໂຣເສຍ. ເມື່ອໂມເຊແລະອາໂຣນ ໄປເຖິງອີຢີບແລ້ວ ປະຊາຊົນດີໃຈຫລາຍ ທີ່ພຣະເຈົ້າຍັງລະນຶກເຖິງພວກເຂົາ ຜູ້ເປັນລູກຫລານຂອງອິດສະລະເອນ.

**ຟາໂຣບໍ່ຍອມເຊື່ອພຣະບັນຍັດຂອງພຣະເຈົ້າ**

**ອົບພະຍົບ. 5:1-11**

ພຣະເຈົ້າໃຊ້ໂມເຊແລະອາໂຣນ ທີ່ຈະເວົ້າກັບຟາໂຣ ແຕ່ກະສັດຍັງບໍ່ຍອມຟັງພະຄຳຂອງພຣະເຈົ້າ ຟາໂຣບອກວ່າ ລາວບໍ່ຮູ້ຈັກພຣະເຈົ້າ ແລະລາວຈະບໍ່ປ່ອຍໃຫ້ຊາວອິດສະລະເອນໄປນະມັດສະການພຣະເຈົ້າເປັນອັນຂາດ

ຟາໂຣນັບຖືພຣະຕ່າງໆ ຫລາຍອົງ ເຊັ່ນພຣະແມ່ນ້ຳ ພຣະອາທິດ ພຣະຈັນ ພຣະນົກ ພຣະງົວ ຫລືອື່ນໆ ແລະຊາວອີຢີບຖືວ່າຟາໂຣເປັນພຣະເຈົ້າອົງໜຶ່ງຂອງເຂົາດ້ວຍ

ໃນໂລກນີ້ຄົນສ່ວນຫລາຍໄດ້ລະທິ້ງພຣະເຈົ້າທ່ຽງແທ້ ແລະຄິດຕາມສິ່ງຕ່າງໆ ທີ່ບໍ່ແມ່ນພຣະເຈົ້າ ແທ້ບັນພຣະບູລຸດຂອງເຮົາທັງຫລາຍກໍ່ຢູ່ໃນຈຳພວກຜູ້ທີ່ລະທິ້ງພຣະເຈົ້າ ແລະເກີດມີໃຈມືດມົວ ຊາຕານຈຶ່ງສາມາດລໍ້ລວງເຂົາໃຫ້ເຊື່ອຄວາມເທັດຫລາຍຢ່າງ ພຣະເຈົ້າຢາກໃຫ້ຟາໂຣມາເຊື່ອພຣະອົງຜູ້ເປັນພຣະເຈົ້າທ່ຽງແທ້ແຕ່ຟາໂຣບໍ່ຍອມ ຂ້າພະເຈົ້າຫວັງວ່າ ເຮົາຜູ້ຟັງບໍ່ມີໃຜທີ່ຈະເໝືອນຟາໂຣຜູ້ມີໃຈແຂງກະດ້າງນັ້ນ

**ອົບພະຍົບ. 7:1-7**

ເມື່ອຟາໂຣບໍ່ຟັງຄຳເຕືອນຂອງພຣະເຈົ້າພຣະອົງໄດ້ທຳການອັດສະຈັນ ຕໍ່ໜ້າຕໍ່ຕາຟາໂຣ ໄມ້ເທົ້າຂອງອາໂລນກາຍເປັນງູ ນ້ຳທົ່ວອີຢີບກາຍເປັນເລືອດ ກົບອອກມາເຕັມບ້ານເຕັມເມືອງຝູງລິ້ນ ແລະຝູງເຫືອກມາ





ເອຢີບ”

ເມື່ອພຣະເຈົ້າເບິ່ງເຫັນຄວາມຜິດບາບຂອງຊາວອິດສະລະເອນນັ້ນ ເປັນຫຍັງພຣະເຈົ້າບໍ່ຂ້າພວກອິດສະລະເອນທັນທີ? ຄົງເປັນເພາະພຣະເຈົ້າຍອມໃຫ້ໂມເຊມີໂອກາດອອ້ນວອນເພື່ອຜູ້ທີ່ເຮັດຜິດນັ້ນ

**ໂມເຊອະທິຖານຂໍພຣະເຈົ້າລະເວັ້ນການລົງໂທດຂອງຊາວອິດສະລະເອນ**

**ອົບພະຍົບ 32:11-14**

ເມື່ອໂມເຊໄດຍິນເລື່ອງນັ້ນ ລາວກໍ່ອະທິຖານຂໍພຣະເຈົ້າເວັ້ນໂທດແກ່ຊົນຊາດຂອງລາວ ເພາະລາວບໍ່ຢາກໃຫ້ຊາວອີຢີບດູມິ່ນພຣະເຈົ້າ ໂດຍຫາວ່າພຣະອົງນຳຊາວອິດສະລະເອນອອກຈາກອີຢີບເພື່ອທຳລາຍພວກເຂົາທີ່ຖິ່ນທຸລະກັນດານ ນອກຈາກນັ້ນໂມເຊໃຫ້ພຣະເຈົ້າລະລຶກເຖິງພຣະສັນຍາທີ່ພຣະອົງໄດ້ໃຫ້ແກ່ອັບຣາຮາມ ອີຊາກ ແລະຢາໂຄບ ໂມເຊຮູ້ວ່າພຣະເຈົ້າຈະຮັກສາພຣະສັນຍາຂອງພຣະອົງສະເໝີ

ພຣະຜູ້ເປັນເຈົ້າຊົງຕອບໂມເຊວ່າ, “ຜູ້ໃດທຳບາບຕໍ່ສູ້ເຮົາ ເຮົາຈະລຶບຊື່ຜູ້ນັ້ນອອກຈາກປຶ້ມຂອງເຮົາ ບັດນີ້ ຈົ່ງໄປເສຍໃຫ້ພາປະຊາຊົນໄປຍັງບ່ອນທີ່ເຮົາບອກໃຫ້ໄປນັ້ນ ຈົ່ງຈື່ໄວ້ວ່າ ເທວະດາຂອງເຮົາຈະນຳໜ້າເຈົ້າໄປ ແຕ່ເມື່ອເຮົາມາພິພາກສາ ພວກເຂົາຈະຖືກລົງໂທດຍ້ອນບາບຂອງເຂົາເອງ”

**ຫີນສອງແຜ່ນເໝືອນສອງແຜ່ນທຳອິດ**

**ອົບພະຍົບ 34:1-9**

ໂມເຊແລະໂຢຊວຍ ລົງຈາກພູເຂົາຊີນາຍມາຫາປະຊາຊົນ ເມື່ອພວກເຂົາເຫັນປະຊາຊົນກຳລັງລ່າເລີງຍິນດີກັນກັບຮູບເຄົາລົບນັ້ນ ໂມເຊຄຽດຫລາຍ ເພາະຊາວອິດສະລະເອນໄດ້ຜິດບັນຍັດຂອງພຣະເຈົ້າ

ເມື່ອປະຊາຊົນເຫັນໂມເຊພັກຢູ່ເທິງພູເທິງນານ ບໍ່ລົງມາຈັກເທື່ອ ພວກເຂົາກໍພາກັນມາຫຸ້ມລ້ອມອາໂຣນເວົ້າວ່າ, "ຈົ່ງສ້າງຮູບພຣະສຳລັບນຳໜ້າພວກເຮົາໄປເທາະ ດ້ວຍວ່າໂມເຊຄົນທີ່ນຳພວກເຮົາອອກຈາກປະເທດເອຢິບນັ້ນ ພວກເຮົາບໍ່ຮູ້ວ່າທ່ານເປັນຫຍັງໄປເສຍແລ້ວ?"

ອາໂຣນໄດ້ຕອບພວກເຂົາວ່າ, "ຈົ່ງຖອດຕຸ້ມຫູທອງຄຳອອກຈາກຫູແລ້ວໃຫ້ເອົາມັນມາໃຫ້ເຮົາ" ອາໂຣນກໍຮັບເອົາຕຸ້ມຫູນັ້ນ ແລ້ວໃຊ້ເຄື່ອງມືຫລໍ່ເປັນຮູບງົວນ້ອຍ ປະຊາຊົນໄດ້ເວົ້າວ່າ, "ອິສຣາເອນເອີຍ, ອັນນີ້ແມ່ນພຣະຂອງພວກເຮົາ ຊຶ່ງໄດ້ນຳພວກເຮົາອອກຈາກປະເທດເອຢິບ" ແລ້ວພວກເຂົາໄດ້ກາບໄຫ້ວຮູບນັ້ນ ແລະຈັດການລ້ຽງສະຫລອງອີກດ້ວຍ ສິ່ງທີ່ພວກເຂົາເຮັດນີ້ເປັນການລ່ວງລະເມີດຕໍ່ບັນຍັດຂອງພຣະເຈົ້າ

ໂມເຊບໍ່ສາມາດເບິ່ງເຫັນສິ່ງທີ່ຊາວອິດສະລະເອນເຮັດຢູ່ ແຕ່ພຣະເຈົ້າຊົງເຫັນແລະຊົງຮູ້ທຸກສິ່ງ ແມ້ນແຕ່ຜູ້ທີ່ພະຍາຍາມເຊື່ອງຕົວຈາກຜູ້ອື່ນ ແຕ່ພວກເຂົາບໍ່ສາມາດເຊື່ອງຫຍັງຈາກພຣະເຈົ້າໄດ້ເລີຍ ໃນອະດີດພຣະເຈົ້າໄດ້ເຫັນຄວາມຜິດຂອງອາດາມແລະເອວາ ໄດ້ເບິ່ງເຫັນເຖິງການກະທຳອັນໂຫດຮ້າຍຂອງກາອິນ ແລະຄວາມຊົ່ວຮ້າຍຂອງຊາວໂລກສະໄຫມຂອງໂນອາ ບໍ່ມີສິ່ງໃດທີ່ປິດບັງຈາກພຣະເຈົ້າໄດ້

**(32:7-10)** ເມື່ອພຣະອົງເບິ່ງເຫັນຄວາມບາບທີ່ຊາວອິດສະລະເອນເຮັດ ພຣະອົງກໍ່ຊົງພິພາກສາຕໍ່ພວກເຂົາ ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ, "ຈົ່ງລົງໄປດຽວນີ້ ດ້ວຍວ່າປະຊາຊົນຂອງເຈົ້າ ຊຶ່ງເຈົ້າໄດ້ນຳພາອອກມາຈາກປະເທດເອຢິບນັ້ນໄດ້ທຳຜິດເສຍແລ້ວ ພວກເຂົາໄດ້ປະຖິ້ມທາງປະພຶດທີ່ເຮົາສັ່ງໃຫ້ທຳ ຄືເຂົາໄດ້ຟ້າວຫລໍ່ຮູບງົວນ້ອຍດ້ວຍຄຳຮູບນຶ່ງສຳລັບຂາບໄຫວ້ ແລະຖວາຍບູຊາ ພວກເຂົາເວົ້າວ່າ ອິສຣາເອນເອີຍ, ອັນນີ້ແມ່ນພຣະຂອງພວກເຮົາ ຊຶ່ງໄດ້ນຳພາພວກເຮົາອອກຈາກ





ຕອມ ແລະກັດຄົນທົ່ວໄປແຕ່ຟາໂຣຍັງດື້ຢູ່ບໍ່ຍອມເຊື່ອພຣະຄຳຂອງພຣະເຈົ້າ ບໍ່ຍອມປ່ອຍຄົນອິດສະລະເອນອອກໄປ

**ໄພພິບັດສຸດທ້າຍທີ່ພຣະເຈົ້າສົ່ງແກ່ຊາວອີຢິບ**
**ອົບພະຍົບ 12:1-13**

ພຣະອົງຢາກຈະສອນພວກເຂົາໃຫ້ຮູ້ເຖິງຄວາມຮ້າຍແຮງຂອງຄວາມບາບ ພຣະເຈົ້າຕັດສິນໃຈໃນການທີ່ຈະລົງໂທດແກ່ຊາວອີຢິບເພາະຄວາມບາບຂອງພວກເຂົາ

ສຳລັບຊາວອິດສະລະເອນ ພຣະເຈົ້າໃຫ້ເຂົາເລືອກລູກແກະທີ່ປາສະຈາກຕຳນິໄວ້ ຄອບຄົວລະໜຶ່ງຕົວ ພຣະເຈົ້າຈະບໍ່ຮັບແກະທີ່ປ່ວຍຫລືພິການເມື່ອເລືອກໄວ້ ສີ່ວັນແລ້ວຄືໃນວັນທີ່ 14 ຂອງເດືອນນັ້ນ ຫົວໜ້າທຸກຄອບຄົວຕ້ອງຂ້າລູກແກະນັ້ນ ແລະທາເລືອດຂອງມັນ ທີ່ວົງກົບປະຕູບ້ານຂອງຕົນ ໂດຍວິທີນີ້ພຣະເຈົ້າຈະໃຫ້ລູກຫົວປີຂອງຊາວອິດສະລະເອນ ພົ້ນຈາກຄວາມຕາຍຄືນນັ້ນ ແຕ່ທຸກຄອບຄົວທີ່ຍັງບໍ່ມີເລືອດທາທີ່ວົງກົບປະຕູນັ້ນ ລູກຫົວປີຈະຕ້ອງຕາຍ

ພຣະເຈົ້າບອກໃຫ້ໂມເຊຮູ້ລະບຽບແຫ່ງການປະຕິບັດສຳລັບຄົນອິດສະລະເອນ ພວກເຂົາຕ້ອງທຳຕາມຄຳບັນຊາຂອງພຣະເຈົ້າໃນທຸກສິ່ງ ທຸກຄົນຕ້ອງຢູ່ໃນບ້ານໃນຄືນນັ້ນ ຊາວອິດສະລະເອນຕ້ອງເຮັດທຸກສິ່ງທີ່ພຣະເຈົ້າບັນຊາໄວ້

ເຮົາຈະເປັນທີ່ພໍພຣະໄທພຣະເຈົ້າ ກໍ່ໂດຍທາງທີ່ພຣະເຈົ້າໄດ້ຊົງກຳນົດໄວ້ເທົ່ານັ້ນ ເຮົາຍັງຈື່ໄດ້ບໍ່ ໃນອະດີດພຣະເຈົ້າບໍ່ເຄີຍຍອມຮັບເສື້ອຜ້າທີ່ອາດາມແລະເອວາ ໄດ້ເຮັດຂຶ້ນເອງ ບໍ່ໄດ້ຍອມຮັບຂອງຖະຫວາຍເຊິ່ງກາອິນໄດ້ຖະຫວາຍຕາມໃຈຂອງລາວ ຕໍ່ມາພຣະອົງສັ່ງໃຫ້ໂນອາຕໍ່



ເຮືອຕາມແບບທີ່ພຣະອົງກຳນົດ
ໄວ້ທຸກປະການ ພຣະເຈົ້າບໍ່ເຄີຍ
ປ່ຽນແປງສະນັ້ນຊາວອິດສະລະ
ເອນກໍ່ຕ້ອງເຮັດທຸກສິ່ງຕາມ
ທີ່ພຣະອົງກຳນົດໄວ້

ພຣະເຈົ້າໄດ້ໃຫ້ສັນຍາກັບ
ຄົນອິດສະລະເອນວ່າ ເມື່ອພຣະ
ອົງເຫັນເລືອດແກະທີ່ປະຕູບ້ານ
ຂອງພວກເຂົາ ພຣະອົງຈະບໍ່
ທຳລາຍບຸດຫົວປີຂອງພວກເຂົາ
ຊາວອິດສະລະເອນຕ້ອງເຊື່ອຄຳ
ຂອງພຣະເຈົ້ ແລະທຳຕາມຄຳ
ສັ່ງຂອງພຣະອົງ

ແຕ່ສົມມຸດວ່າ ມີຊາວອິດສະລະເອນຄົນໜຶ່ງ ທີ່ເສຍດາຍແກະດີໆ ຂອງຕົນ ແລະໃຊ້ແກະທີ່ປ່ວຍແທນ ເຮົາຄິດວ່າພຣະເຈົ້າຈະຮັບເລືອດນັ້ນບໍ່? ຫລືຖ້າອີກຄົນໜຶ່ງ ບໍ່ຢາກຈະຂ້າແກະ ພຽງມັດມັນໄວ້ທີ່ປະຕູເພື່ອໃຫ້ພຣະເຈົ້າເຫັນ ພຣະເຈົ້າຈະຜ່ານເວັ້ນບ້ານນັ້ນບໍ່ໃຫ້ລູກຫົວປີຕາຍຫລື? ບໍ່ຜ່ານແນ່ນອນ ແກະນັ້ນຕ້ອງຕາຍ ແລະລາວຕ້ອງເຮັດທຸກສິ່ງຕາມທີ່ພຣະເຈົ້າກຳນົດໄວ້ ຊາວອິດສະລະເອນຕ້ອງຈື່ໄວ້ວ່າ ໂທດຂອງຄວາມບາບຄືຄວາມຕາຍ

**ລູກຫົວປີຂອງຊາວອີຢີບຕາຍທຸກຄົນ**
**ອົບພະຍົບ 12:21-30**

ໃນເວລາທ່ຽງຄືນນັ້ນ ພຣະເຈົ້າຜ່ານໄປທົ່ວອີຢີບແລະຕາມທີ່ພຣະອົງ







**ບົດທີ 17**
**ແຜ່ນຫີນພຣະໂອວາດສອງແຜ່ນ**
**ຮູບງົວທອງຄຳ**
**ອົບພະຍົບ 32:1-20; 34:1-9**

**ສ້າງຄວາມສົນໃຈ**

ສົມມຸດວ່າມີພໍ່ຄົນໜຶ່ງຕັ້ງໃຈວ່າຈະໃຫ້ຂອງດີໆ ແກ່ລູກໆ ແຕ່ລູກຄົນໜຶ່ງດື້ ແລະເຮັດໂຕເປັນອັດຕະພານ ບໍ່ເຊື່ອຟັງພໍ່ແມ່ເລີຍ ນຳຄວາມອັບ ອາຍມາສູ່ພໍ່ແມ່ຫລາຍ ທ່ານຄິດວ່າ ພໍ່ຂອງຄົນນັ້ນອາດປ່ຽນໃຈບໍ່ໃຫ້ແທ້ບໍ່? ບາງທີ່ອາດຈະໃຫ້ແກ່ລູກທີ່ເອົາໃຈພໍ່ຫລາຍກ່ອນແມ່ນບໍ່?

ມື້ນີ້ໃຫ້ເຮົາຮຽນນຳກັນວ່າການບໍ່ເຊື່ອຟັງນັ້ນມີຜົນຢ່າງໃດ

**ພວກອິດສະລະເອນເຮັດຮູບງົວທອງຄຳເພື່ອຈະກາບໄຫ້ວ**
**ອົບພະຍົບ 32:1-6**

ເມື່ອໂມເຊຍັງຢູ່ເທິງພູເຂົາເພື່ອຖ້າຮັບຄຳສັ່ງຈາກພຣະເຈົ້າ ພວກອິດສະລະເອນກໍ່ຖ້າຢູ່ທີ່ເທິງເຂົານັ້ນ ແມ້ນວ່າຊາວອິດສະລະເອນໄດ້ເຫັນການອັດສະຈັນຂອງພຣະເຈົ້າ ແລ້ວຫລາຍເທື່ອໃນການຊ່ວຍພວກເຂົາອອກຈາກອີຢີບ ແລະລ້ຽງດູພວກເຂົາຕະຫລອດເວລາທີ່ຜ່ານມາ ລວມທັງໄດ້ຍິນສຽງຂອງພຣະອົງອອກຈາກພູເຂົານັ້ນຢ່າງຊັດເຈນ ພວກເຂົາຍັງຝ່າຝືນຕໍ່ບັນຍັດຂອງພຣະອົງ

9. ພຣະເຈົ້າຄິດຢ່າງໃດກັບການລ່ວງປະເວນີ?
10. ຖ້າເຮົາອິດສາຄົນອື່ນ ແລະໂລບຂອງທີ່ເຮົາມີຢູ່ ພຣະເຈົ້າຖືວ່າເປັນບາບຫລືບໍ່?

## ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າສື່ສານກັບມະນຸດ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດໂທດຂອງຄວາມຕາຍເປັນໂທດຂອງຄວາມບາບ
- ມະນຸດເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ





ບອກໄວ້ ລູກຫົວປີຂອງຊາວອີຢິບຕາຍທຸກຄົນ ຕັ້ງແຕ່ລູກຂອງຟາໂລຈົນເຖິງລູກຂອງຄົນຂໍທານ ພຣະເຈົ້າເຮັດຕາມທີ່ພຣະອົງບອກໄວ້ສະເໝີ ບໍ່ແມ່ນພຽງການຂູ່ແລະບໍ່ເຮັດ ພຣະອົງບອກວ່າຈະລົງໂທດແກ່ຊາວອີຢິບ ພຣະອົງກໍ່ເຮັດແທ້ ພຣະອົງບອກວ່າ ຈະຍົກເວັ້ນບ້ານທີ່ມີເລືອດທີ່ປະຕູ ແລະພຣະອົງກໍ່ຍົກເວັ້ນແທ້ ເຮົາວາງໃຈໃນພຣະອົງໄດ້

**ອົບພະຍົບ 12:31-36**

ໃນກາງຄືນນັ້ນຟາໂລເອີ້ນໃຫ້ໂມເຊມາເຝົ້າ ແລະບອກໃຫ້ເຂົານຳຊາວອິດສະລະເອນອອກຈາກປະເທດອີຢິບທັນທີ ຟາໂລເຄີຍຄິດວ່າ ເຂົາຈະຊະນະພຣະເຈົ້າໄດ້ ແຕ່ໃນທີ່ສຸດ ເຂົາຕ້ອງຍອມຈຳນົນຕໍ່ພຣະເຈົ້າ ບໍ່ມີໃຜທີ່ຊະນະພຣະເຈົ້າໄດ້ ຜູ້ທີ່ຕໍ່ສູ້ພຣະອົງຈະມີໂທດ ແຕ່ຜູ້ທີ່ວາງໃຈໃນພຣະອົງຈະຮັບພຣະເມດຕາແລະສັນຕິສຸກ

## ທົບທວນ

1. ເມື່ອໂມເຊຂໍໃຫ້ຟາໂລປ່ອຍຊາວອິດສະລະເອນອອກໄປນະມັດສະການພຣະເຈົ້າ ຟາໂລເວົ້າວ່າຢ່າງໃດ?
2. ພຣະເຈົ້າສຳແດງລິດອຳນາດຂອງພຣະອົງໃນປະເທດອີຢິບຢ່າງໃດ?
3. ເປັນຫຍັງໄພພິບັດຢ່າງນັ້ນ ຈຶ່ງບໍ່ໄດ້ຕົກແກ່ຊາວອິດສະລະເອນ?
4. ຊາວອິດສະລະເອນເປັນຄົນດີມີບຸນວາດສະໜາ ພໍທີ່ພຣະເຈົ້າຈະປົກປ້ອງເຂົາໃຫ້ພົ້ນໄພພິບັດຢ່າງນັ້ນຫລື?
5. ເມື່ອຟາໂລເຮັດໃຫ້ໃຈຂອງຕົນແຂງກະດ້າງຕໍ່ໄປ ພຣະເຈົ້າແປກໃຈບໍ່?
6. ໄພພິບັດສຸດທ້າຍທີ່ພຣະເຈົ້າສົ່ງມາເໜືອຊາວອີຢິບຄືຫຍັງ?
7. ພຣະເຈົ້າໃຫ້ຊາວອິດສະລະເອນເຮັດຫຍັງແດ່ເພື່ອລູກຫົວປີຈະບໍ່ຕາຍ?

8. ເປັນຫຍັງລູກຫົວປີຂອງຊາວອິດສະລະເອນບໍ່ຕາຍໃນຄືນນັ້ນ?
9. ພຣະເຈົ້າເຮັດທຸກສິ່ງຕາມທີ່ພຣະອົງບອກໄວ້ບໍ່?
10. ເມື່ອລູກຫົວປີຂອງຊາວອີຢິບຕາຍແລ້ວຟາໂລເວົ້າກັບໂມເຊຢ່າງໃດ?

### ຄວາມຈິງທີ່ຕ້ອງເນັ້ນ

- ພຣະເຈົ້າສື່ສານກັບມະນຸດ
- ມະນຸດເປັນຄົນບາບຊ່ວຍໂຕເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ມະນຸດຈະມາເຖິງພຣະເຈົ້າໄດ້ ຕ້ອງມາຕາມທາງທີ່ພຣະເຈົ້າໄດ້ກຳນົດໄວ້
- ມະນຸດຕ້ອງເຊື່ອພຣະວະຈະນະຂອງພຣະເຈົ້າ ແລະວາງໃຈໃນພຣະອົງ ຈຶ່ງຈະເປັນທີ່ພໍພຣະໄທພຣະອົງ





ພຣະເຈົ້າໃຫ້ພຣະບັນຍັດ 10 ປະການນີ້ແກ່ຊາວອິດສະລະເອນກ່ອນ ແຕ່ພຣະອົງມີພຣະປະສົງໃຫ້ຄົນທົ່ວໂລກຮັກສາຂໍ້ເຫຼົ່ານີ້ດ້ວຍ ເຫດສະນັ້ນຂໍ້ເຫລົ່ານີ້ມາເຖິງພວກເຮົາດ້ວຍ ເຖິງວ່າເຮົາອາດຈະເສຍຄ່າປັບຕໍ່ເຈົ້າໜ້າທີ່ເພາະຄວາມຜິດຂອງເຮົາ ຫລືເຮັດບຸນໃຫ້ທານເພື່ອເປັນການຊົດເຊຍ ຫລືລົບລ້າງຄວາມຜິດ ແຕ່ໃນສາຍຕາຂອງພຣະເຈົ້າຄວາມຜິດບາບນັ້ນກໍ່ຍັງຢູ່ ຄ່າໄຖ່ແຫ່ງຄວາມບາບຄືຄວາມຕາຍ ເຊິ່ງໝາຍເຖິງການແຍກອອກຈາກພຣະເຈົ້າ ແລະຕ້ອງໄປຢູ່ໃນທີ່ ທີ່ພຣະອົງໄດ້ຕຽມໄວ້ສຳລັບຊາຕານແລະມຸນມອງຂອງມັນ ພຣະອົງຈະລົງໂທດຕໍ່ຄວາມບາບທຸກປະການ ແລະເຮົາຈະໜີໄປບໍ່ໄດ້ເລີຍ

### ທົບທວນ

1. ຖ້າຜູໃດລະເມີດພຣະບັນຍັດຂໍ້ໃດຂໍ້ໜຶ່ງຂອງພຣະເຈົ້າ ເຂົາຈະຕ້ອງຮັບໂທດຫຍັງ?
2. ເປັນຫຍັງຈຶ່ງເປັນໄປບໍ່ໄດ້ທີ່ມະນຸດຈະຮັກສາພະບັນຍັດຂອງພຣະເຈົ້າຢ່າງຄົບຖ້ວນທຸກປະການ?
3. ຖ້າຢ່າງນັ້ນເປັນຫຍັງພຣະເຈົ້າໃຫ້ພຣະບັນຍັດແກ່ມະນຸດ?
4. ເປັນຫຍັງພຣະເຈົ້າບໍ່ຢາກໃຫ້ເຮົາຂາບໄຫ້ວ ແລະນະມັດສະການຜູ້ອື່ນຫລືສິ່ງອື່ນນອກເໜືອຈາກພຣະອົງ?
5. ການສ້າງຮູບເຄົາລົບເປັນສິ່ງທີ່ຜິດຕໍ່ພຣະເຈົ້າບໍ່?
6. ເປັນຫຍັງພຣະເຈົ້າສັ່ງໃຫ້ຊາວອິດສະລະເອນພັກວຽກໄວ້ໃນວັນທີ່ເຈັດ?
7. ຖ້າລູກບໍ່ໃຫ້ກຽດແລະບໍ່ເຊື່ອຟັງພໍ່ແມ່ຂອງຕົນ ໃນສາຍຕາຂອງພຣະເຈົ້າເປັນຢ່າງໃດ?
8. ເປັນຫຍັງພຣະເຈົ້າຈະລົງໂທດຕໍ່ຄາດຕະກອນທັງຫລາຍ?

ພຣະເຈົ້າຈະບໍ່ເບິ່ງຂ້າມບາບຂອງມະນຸດ ບາບທຸກຊະນິດຕ້ອງມີໂທດ

**ອົບພະຍົບ 20:16 - ພຣະບັນຍັດຂໍ້ທີ 9**

ພຣະເຈົ້າບອກວ່າ ມະນຸດຕ້ອງເວົ້າຄວາມຈິງໃນທຸກເລື່ອງ ຊາຕານເປັນເຈົ້າແຫ່ງການຕົວະ ມັນໄດ້ລໍ້ລວງອາດາມແລະເອວາໃນສວນເອເດນ ແລະໄດ້ລໍ້ລ່ວງບັນພະບູລຸດຂອງເຮົາໃຫ້ເຊື່ອໃນສິ່ງທີ່ບໍ່ຈິງ ທຸກວັນນີ້ມັນຍັງລໍ້ລ່ວງຄົນທົ່ວໂລກຊາຕານຈຶ່ງເປັນພໍ່ຂອງຜູ້ທີ່ມັກເວົ້າບໍ່ຈິງ

ມີບາງຄົນທີ່ໃສ່ຮ້າຍ ແລະຟ້ອງຜູ້ອື່ນເພາະອິດສາ ແລະຢາກທຳລາຍພວກເຂົາ ບາງທີຜົວເວົ້າໃສ່ຮ້າຍເມຍ ຫລືເມຍໃສ່ຮ້າຍຜົວຂອງຕົນ ບາງທີເພື່ອນບ້ານໃສ່ຮ້າຍກັນແລະກັນ ບາງຄົນເລົ່າເລື່ອງທີ່ບໍ່ມີຫລັກຖານ ແລະເວົ້າເກີນຄວາມຈິງ ສິ່ງທັງໝົດເຫລົ່ານີ້ເປັນຄວາມບາບຕໍ່ພຣະເຈົ້າທັງສິ້ນ ບາງຄົນອ້າງວ່າເຂົາໄດ້ຮັບຂໍ້ມູນຕ່າງໆ ຈາກວິນຍານ ແລະລໍ້ລ່ວງຄົນອື່ນເພື່ອໃຫ້ຕົນເອງໄດ້ຮັບປະໂຫຍດ ບາງຄົນເປັນຜູ້ຮ້າຍ ແລະເວົ້າຕົວະເພື່ອປິດບັງຄວາມຜິດຂອງຕົນ ແມ້ຂະນະຂຶ້ນສານແລະສາບານໂຕ ພວກເຂົາຍັງບໍ່ຍອມເວົ້າຄວາມຈິງ ຄົນເຫລົ່ານີ້ອາດປິດບັງຄວາມຈິງຈາກມະນຸດຊົ່ວຂະນະໜຶ່ງໄດ້ ແຕ່ບໍ່ມີໃຜສາມາດປິດບັງຄວາມຈິງຈາກພຣະເຈົ້າໄດ້ ພຣະເຈົ້າເວົ້າຄວາມຈິງສະເໝີ ແລະຊັງການເວົ້າຕົວະ ພຣະອົງຈະໃຫ້ຜູ້ທີ່ເວົ້າບໍ່ຈິງຮັບໂທດທຸກຄົນ

**ອົບພະຍົບ 20:17 - ພຣະບັນຍັດຂໍ້ທີ 10**

ພຣະເຈົ້າບອກວ່າ ມະນຸດບໍ່ຄວນຢາກໄດ້ຫຍັງທີ່ມັນເປັນກຳມະສິດຂອງຜູ້ອື່ນ ຊາຕານເປັນຜູ້ທຳອິດທີ່ເຮັດຜິດບາບຢ່າງນີ້ ຊາຕານຢາກໄດ້ຕຳແໜ່ງຂອງພຣະເຈົ້າ ທຸກວັນນີ້ມະນຸດເຕັມໄປດ້ວຍຄວາມໂລບແລະອິດສາຄົນອື່ນ ເຂົາອິດສາຜູ້ທີ່ມີສິ່ງຂອງຫລາຍກ່ອນຕົນ ແລະບໍ່ພໍໃຈໃນສິ່ງທີ່ເຂົາມີຢູ່ ຄວາມຢາກໄດ້ແລະການອິດສາຕາຮ້ອນຢ່າງນັ້ນ ເປັນບາບຕໍ່ພຣະເຈົ້າ ພຣະອົງຈະຕ້ອງລົງໂທດຜູ້ທີ່ມີໃຈໂລບ







## ບົດທີ
## ພຣະເຈົ້າຊົງຕຽມຊົນຊາດອິດສະລະເອນເພື່ອຈະຮັບທຳບັນຍັດ
## ອົບພະຍົບ 19:1-25

ໃນພຣະຄຳພີເລື່ອງນີ້ ເຮົາເຫັນຄວາມຊອບທຳ ແລະຄວາມບໍລິສຸດຂອງພຣະເຈົ້າຢ່າງຊັດເຈນ ສຳແດງອອກມາເປັນພຣະພິໂລດອັນແຮງກ້າ ແລະການທີ່ພຣະອົງພິພາກສາລົງໂທດບາບທຸກປະການ

ການທີ່ເຂົາຕ້ອງກຳນົດເຂດສຳລັບມະນຸດແລະຝູງສັດ ຮອບພູເຂົາຊີນາຍນັ້ນ ເປັນພາບເນັ້ນເຖິງຄວາມບໍລິສຸດຂອງພຣະເຈົ້າ ແລະຄວາມບາບຂອງມະນຸດ ຕະຫລອດການທີ່ຄົນບາບບໍ່ສາມາດມາເຖິງພຣະເຈົ້າ

ພາບນີ້ໄດ້ຊີ້ຊັດໃຫ້ເຫັນວ່າ ຜູ້ທີ່ບັງອາດເຂົ້າມາໃກ້ພຣະເຈົ້າທັງທີ່ຍັງຢູ່ໃນຄວາມບາບຂອງຕົນ ຈະຕ້ອງຖືກການພິພາກສາແນ່ນອນ

**ພຣະເຈົ້ານຳຊາວອິດສະລະເອນມາເຖິງພູຊີນາຍ**

**ອົບພະຍົບ 19:1,2**

ຊາວອິດສະລະເອນບໍ່ຕ້ອງເລືອກທາງຂອງຕົນເອງ ແຕ່ພຣະເຈົ້າເປັນຜູ້ຕັດສິນໃຈເພື່ອພວກເຂົາໃນທຸກໆຢ່າງ ພຣະອົງຢາກໃຫ້ພວກເຂົາຍອມຮັບພຣະອົງເປັນຜູ້ຄອບຄອງຜູ້ປົກປ້ອງ ແລະລ້ຽງດູເຂົາຕະຫລອດທາງ ພຣະອົງນຳຊາວອິດສະລະເອນມາເຖິງພູເຂົາລູກດຽວກັບທີ່ໄດ້ເຄີຍ

ສຳແດງພຣະອົງເອງແກ່ໂມເຊເປັນແປວ ໄຟທີ່ພຸ້ມໄມ້ເຊິ່ງພຣະອົງໄດ້ສັນຍາໄວ້ວ່າ ພຣະອົງຈະນຳໂມເຊແລະຊາວອິດສະລະເອນ ໃຫ້ມານະມັດສະການທີ່ພູເຂົາແຫ່ງນັ້ນ (ອົບພະຍົບ3:12) ພຣະເຈົ້າສັດຊື່ພຣະອົງໄດ້ປົກປ້ອງໂມເຊ ແລະໄດ້ຊ່ວຍຊາວອິດສະລະເອນທັງປວງໃຫ້ພວກເຂົາມາເຖິງພູເຂົານັ້ນຕາມສັນຍາເຮົາໄວ້ວາງໃຈໃນພຣະເຈົ້າໄດ້ເພາະພຣະອົງຮັກສາພຣະສັນຍາຂອງພຣະອົງທຸກປະການແທ້ໆ

**ພຣະເຈົ້າຕັ້ງພັນທະສັນຍາໄວ້ກັບຊາວອິດສະລະເອນ**

**ອົບພະຍົບ 19:3-**

ໂມເຊໄດ້ເຜີຍຄຳເວົ້າຂອງພຣະເຈົ້າແກ່ຊາວອິດສະລະເອນ ຄືພຣະເຈົ້າຈະຕັ້ງພັນທະສັນຍາກັບຊາວອິດສະລະເອນ ຖ້າພວກເຂົາຈະເຊື່ອຟັງພຣະອົງຢ່າງຄົບຖ້ວນ ພຣະອົງຈະໃຫ້ພຣະພອນຍິ່ງໃຫຍ່ແກ່ພວກເຂົາພຣະອົງຈະຮັບຊົນຊາດຂອງພວກເຂົາ ໃຫ້ເປັນຊົນຊາດພິເສດຂອງພຣະອົງ ແລະຈະໃຫ້ຂອງດີແກ່ເຂົາທຸກປະການ

ພຣະອົງຈະຍອມຮັບສະເພາະຜູ້ທີ່ສາມາດເຊື່ອຟັງພຣະອົງເທົ່ານັ້ນພຣະເຈົ້າໄດ້ສັນຍາວ່າ ຈະໃຫ້ພຣະພອນແກ່ຊາວອິດສະລະເອນ ຖ້າເຂົາຈະເຊື່ອຟັງຄຳບັນຍັດ ຫາກເຂົາຈະຮັກສາພັນທະສັນຍາຂອງພຣະເຈົ້າໄດ້ທຸກຂໍ້ ເຂົາກໍ່ຈະເປັນສິດທິພິເສດຂອງພຣະອົງ ແລະຈະເປັນອານາຈັກປະໂລຫິດບໍລິສຸດຂອງພຣະອົງ ຖ້າຊາວອິດສະລະເອນສາມາດເຊື່ອຟັງພວກເຂົາຈະຮັບພຣະພອນ ແຕ່ຖ້າເຂົາຜິດພາດຈາກທຳບັນຍັດໃນຄວາມຄິດຫລືການກະທຳ ພວກເຂົາຈະຖືກສາບແຊ່ງ

ເປົ້າໝາຍຂອງເຮົາໃນການເນັ້ນເລື້ອງນີ້ຄື ພວກເຮົາຮູ້ແນ່ນອນວ່າພວກເຮົາບໍ່ສາມາດໃຫ້ ພຣະເຈົ້າພໍພຣະໄທໃນພວກເຂົາ ຫລືອວຍພອນແກ່ພວກເຮົາໂດຍອ້າງທຳບັນຍັດ





**ອົບພະຍົບ 20:12 - ພຣະບັນຍັດຂໍ້ທີ 5**

ພຣະເຈົ້າເວົ້າວາ ຜູ້ທີ່ເປັນລູກຕ້ອງນັບຖືພໍ່ແມ່ຂອງຕົນເອງ ຕ້ອງເຊື່ອຟັງແລະໃຫ້ກຽດດ້ວຍ ບໍ່ສະນັ້ນ ຈະຖືວ່າໄດ້ເຮັດບາບຕໍ່ພຣະເຈົ້າຜູ້ສ້າງແຜນການຂອງພຣະເຈົ້າສຳລັບຄອບຄົວ ຄືການທີ່ພໍ່ແມ່ຈະດູແລຮັກສາລູກຂອງຕົນດ້ວຍ ແລະຄົງຈະບໍ່ມີຜູ້ໃດທີ່ຈະເຊື່ອຟັງພໍ່ແມ່ເປັນຢ່າງດີຕະຫລອດເວລາໄດ້ ເມື່ອເຮົາຜິດພະບັນຍັດຂອງພຣະເຈົ້າແມ້ນແຕ່ຂໍ້ດຽວເຮົາກໍ່ຈະຕ້ອງຮັບໂທດບາບຂອງເຮົາ ແລະຕ້ອງຖືກແຍກຈາກພຣະເຈົ້າ

**ອົບພະຍົບ 20:13 - ພະບັນຍັດຂໍ້ທີ 6**

ພຣະເຈົ້າໃຫ້ຊາວອິດສະລະເອນຮູ້ວ່າ ຖ້າຜູ້ໃດຂ້າຄົນໂດຍເຈດຕະນາເປັນການບາບຕໍ່ພຣະເຈົ້າ ເພາະພຣະເຈົ້າສ້າງມະນຸດໃຫ້ມີຊີວິດ ບໍ່ມີໃຜມີສິດຂ້າຄົນອື່ນນອກຈາກການທີ່ພຣະເຈົ້າໄດ້ໃຫ້ອະນຸດຍາດໄວ້ໃນພຣະຄຳພີ

**ອົບພະຍົບ 20:14 - ພະບັນຍັດຂໍ້ທີ່ 7**

ພຣະເຈົ້າໃຫ້ມະນຸດຮູ້ວ່າ ການມີເພດສຳພັນກັບຜູອື່ນ ນອກຈາກຜົວຫລືເມຍຂອງຕົນເອງ ເປັນບາບຢ່ງຮ້າຍແຮງຕໍ່ພຣະເຈົ້າ ເມື່ອພຣະເຈົ້າສ້າງອາດາມ ແລ້ວພຣະອົງໄດ້ສ້າງເອວາມາໃຫ້ເປັນເມບ ເວລານັ້ນພຣະເຈົ້າບອກວ່າທັງສອງຄົນໄດ້ເປັນອັນໜຶ່ງອັນດຽວກັນແລ້ວ ຜູ້ເປັນຜົວເມຍກັນນັ້ນຕ້ອງຮັກສາຄວາມເປັນອັນໜຶ່ງອັນດຽວກັນ ແລະຕ້ອງບໍ່ຫຍຸ້ງກ່ຽວກັບຜູ້ອື່ນໃນເລື່ອງນີ້ເລີຍ

**ອົບພະຍົບ 20:15 - ພຣະບັນຍັດຂໍ້ທີ 8**

ໝາຍຄວາມວ່າ ມະນຸດຕ້ອງເວັ້ນເສຍຈາກການລັກຂະໂມຍທຸກປະການ ພຣະເຈົ້າໃຫ້ມະນຸດມີກຳມະສິດໃນຊັບສິນຂອງຕົນ ຖ້າໃຜແຍ່ງຊີງເອົາຊັບສິນນັ້ນໄປ ກໍ່ເປັນການບາບຕໍ່ພຣະເຈົ້າແລະຕໍ່ມະນຸດດ້ວຍ

ມະນຸດໃຊ້ຄວາມຄິດແບບນັ້ນ ແລະສ້າງຮູບຕ່າງໆ ເພື່ອຈະບູຊາ ພວກເຂົາກໍ່ໄດ້ເຮັດຜິດຕໍ່ພະຄໍາຂອງພຣະເຈົ້າ ແລະແນ່ນອນພວກເຂົ້າຈະຕ້ອງໄດ້ຮັບໂທດ

**ອົບພະຍົບ 20:7 - ພະບັນຍັດຂໍ້ທີ 3**

ພະບັນຍັດຂໍ້ທີ3 ສອນວ່າມະນຸດຕ້ອງຮັບໃຊ້ພຣະເຈົ້າສະເໝີ ແລະບໍ່ຄວນໃຊ້ພຣະນາມພຣະອົງຢ່າງບໍ່ສົມຄວນ ແບບບໍ່ໃຫ້ກຽດຢຽດຢາມ, ດູຖູກຫລືລໍ້ຫລິ້ນ ເພາະພຣະອົງເປັນຜູ້ສ້າງທຸກສິ່ງ ແລະສົມຄວນຮັບກຽດສູງສຸດ ເປັນຜູ້ຄອບຄອງເໜືອທຸກສິ່ງ ມະນຸດຄວນຈະຢໍາເກງພຣະອົງ ແລະລະນຶກເຖິງພຣະອົງມີສິດອໍານາດເໜືອຊີ ວິດພວກເຂົາໃນການທີ່ຈະໃຫ້ມີຊີວິດຢູ່ຫລືຕາຍ ລວມທັງການພິພາກສາລົງໂທດດ້ວຍ ເຮົາຮູ້ວ່າການດູໝິ່ນປະໝາດຄົນອື່ນເປັນສິ່ງທີ່ບໍ່ດີຢູ່ແລ້ວ ຖ້າເຊັ່ນນັ້ນການເວົ້າໝິ່ນປະໝາດພຣະເຈົ້າຜູ້ຊົງພຣະຊົນຢູ່ ຈະເປັນການຜິດໃຫຍ່ຫລວງກ່ວານັ້ນເທົ່າໃດ ແລະພວກເຂົາຈະຕ້ອງໄດ້ຮັບໂທດແນ່ນອນ

**ອົບພະຍົບ 20:8-11 - ພະບັນຍັດຂໍ້ທີ່ 4**

ພຣະເຈົ້າສັ່ງໃຫ້ຊາວອິດສະລະເອນຮັກສາໃນວັນທີ່ເຈັດຂອງອາທິດເປັນວັນແຫ່ງການຢຸດພັກການງານທັງສິ້ນ ເພື່ອຖະຫວາຍກຽດພຣະອົງເພາະພຣະອົງໄດ້ສ້າງທຸກສິ່ງໃນຫົກວັນ ແລະຢຸດໃນວັນທີ່ເຈັດ ເມື່ອຊາວອິດສະລະເອນຢຸດພັກໃນວັນທີ່ເຈັດນັ້ນ ເຂົາຄວນລະນຶກເຖິງພຣະເຈົ້າຜູ້ສ້າງສິ່ງສາລະພັດ ແລະເປັນຜູ້ມີສິດໃນການຄອບຄອງພຽງແຕ່ຜູ້ດຽວເຖິງແມ້ນວ່າຊາຕານແລະສະໝຸນຂອງມັນໄດ້ຍາດຊີງຕ່າງໆໃນໂລກ ແຕ່ມັນບໍ່ແມ່ນຂອງພຣະເຈົ້າທີ່ແທ້ຈິງ ພຣະເຈົ້າເປັນແຫ່ລງຊີວິດຂອງທຸກສິ່ງເປັນຜູ້ໃຫ້ແດດໃຫ້ຝົນເພື່ອລໍລ້ຽງທຸກສິ່ງ ແມ້ນວ່າຊາຕານລໍ້ລວງມະນຸດໃຫ້ນັບຖືມັນ ແຕ່ແທ້ຈິງໂລກນີ້ຍັງເປັນຂອງພຣະເຈົ້າຢູ່





**ຊາວອິດສະລະເອນຮັບວ່າ ພວກເຂົາຈະເຊື່ອຟັງພຣະເຈົ້າ**

**ອົບພຣະຍົບ 19:7,8**

ເມື່ອຊາວອິດສະລະເອນໄດ້ຍິນຄໍາເວົ້າຂອງພຣະເຈົ້າ ພວກເຂົາບອກທັນທີວ່າ ພວກເຂົາຈະເຊື່ອຟັງພຣະຄໍາຂອງພຣະເຈົ້າທຸກປະການ ຄົນເຫລົ່ານີ້ຄົງລືມການທີ່ເຂົາເຄີຍສົງໃສພຣະເຈົ້າທີ່ທະເລແດງ ແລະທີ່ພວກເຂົາເຄີຍຈົ່ມເມື່ອເຂົາຂາດອາຫານແລະນໍ້າດື່ມ ພວກເຂົາກໍາລັງເພິ່ງຕົວເອງ ພວກເຂົາມີໃຈເໝືອນກາອິນ ທີ່ຄິດວ່າພຣະເຈົ້າພໍພຣະໄທໃນສິ່ງທີ່ພວກເຂົານໍາມາຖະຫວາຍແດ່ພຣະອົງ

ຊາວອິດສະລະເອນຍັງບໍ່ຕະໜັກວ່າ ຕາມພັນທະສັນຍາທີ່ໄດ້ຕັ້ງຂຶ້ນມານີ້ ເຂົາບໍ່ສາມາດທີ່ຈະຮັບພຣະພອນຈາກພຣະເຈົ້າໄດ້ ເພາະການທີ່ຈະຮັບພຣະພອນໄດ້ນັ້ນ ພວກເຂົາຈໍາເປັນຕ້ອງເຊື່ອຟັງພຣະເຈົ້າໃນທຸກປະການ ແລະຖ້າພວກເຂົາບໍ່ສາມາດເຊື່ອຟັງ ພວກເຂົາຈະຮັບການສາບແຊ່ງແລະລົງໂທດຈາກພຣະເຈົ້າແທນ ພຣະເຈົ້າຮູ້ວ່າ ບໍ່ດົນຊົນຊາດອິດສະລະເອນຈະລະເມີດຕໍ່ພຣະອົງແລະຕາມພຣະສັນຍານັ້ນ ພວກເຂົາຈະຕ້ອງໄດ້ຮັບການລົງໂທດ

ຖ້າຢ່າງນັ້ນ ເປັນຫຍັງພຣະເຈົ້າຈຶ່ງເຮັດພັນທະສັນຍາກັບຊາວອິດສະລະເອນທັງໆ ທີ່ພວກເຂົາຮູ້ວ່າ ພວກເຂົາບໍ່ສາມາດຈະເຮັດຕາມສິ່ງກີ່ເຂົາສັນຍາໄວ້ ເຫດທີ່ພຣະອົງໄດ້ເຮັດຢ່າງນັ້ນ ເພາະຢາກຈະພິສູດໃຫ້ພວກເຂົາເຫັນວ່າ ເຂົາເປັນຄົນບາບທີ່ບໍ່ສາມາດເຮັດສິ່ງທີ່ພໍພຣະໄທພຣະອົງໄດ້ ພຣະເຈົ້າຢາກສອນໃຫ້ພວກເຂົາຮູ້ວ່າ ເຈົ້າຈະເປັນທີ່ພໍພຣະໄທແລະຮັບສິ່ງດີໆ ຈາກພຣະອົງໂດຍການກະທໍາຂອງຕົນເອງບໍ່ໄດ້

ມີຕົວຢ່າງທີ່ຈະເຮັດໃຫ້ເຮົາເຂົ້າໃຈເລື່ອງນີ້ດີຂຶ້ນດັ່ງນີ້ ມີຊາຍຄົນໜຶ່ງລອຍຂ້າມແມ່ນໍ້າທີ່ກໍາລັງໄຫລ ເມື່ອລາວເມື່ອຍແລະລອຍຕໍ່ໄປບໍ່ໄຫວ

ໃນຂະນະທີ່ກຳລັງຈະຈົມນັ້ນ ມີອີກຄົນໜຶ່ງທີ່ລອຍນ້ຳເກັ່ງຢືນຢູ່ເທິງຝັ່ງ ຫລາຍຄົນຮຽກຮ້ອງໃຫ້ລົງໄປຊ່ວຍຊາຍທີ່ກຳລັງຈະຈົມ ແຕ່ເຂົາຍັງເສີຍ ແລະຖ້າຢູ່ເທິງຝັ່ງ ໃນຂະນະທີ່ຊາຍຄົນນັ້ນອ່ອນແຮງລົງເລື້ອຍໆ ຈົນວ່າ ໃນທີ່ສຸດເຫັນຊາຍຄົນນັ້ນໝົດແຮງ ແລະບໍ່ໄດ້ດີ້ນຕະກຽດຕະກາຍຕໍ່ໄປ ເຂົາຈຶ່ງໂດດລົງໄປຊ່ວຍຊາຍຄົນນັ້ນຂຶ້ນມາ ຄົນເຫລົ່ານັ້ນຕຳນິວ່າ ລາວຖ້າດົນເກີນໄປກ່ອນຈະລົງໄປຊ່ວຍຄົນນັ້ນ ລາວຈຶ່ງອະທິບາຍວ່າ "ຖ້າລົງໄປຊ່ວຍຄົນນັ້ນໃນຂະນະທີ່ຊາຍຄົນນັ້ນຍັງຕະກຽດຕະກາຍຢູ່ ເຮົາຈະຊ່ວຍເຂົາບໍ່ໄດ້ ແຕ່ເມື່ອປ່ອຍໃຫ້ເຂົາໝົດແຮງບໍ່ດີ້ນຕໍ່ໄປ ເຮົາຈຶ່ງສາມາດຊ່ວຍເຂົາໄດ້"

ພຣະເຈົ້າໄດ້ໃຫ້ທຳບັນຍັດແກ່ຊາວອິດສະລະເອນ ເພື່ອໃຫ້ພວກເຂົາສຳນຶກວ່າ ພວກເຂົາບໍ່ສາມາດເຮັດຕົນໃຫ້ເປັນທີ່ພໍພຣະໄທພຣະເຈົ້າໄດ້ ການກະທຳທີ່ດີຂອງພວກເຂົາບໍ່ພຽງພໍທີ່ພຣະອົງຈະຍອມຮັບພວກເຂົາໄວ້ ແຕ່ເປັນການທີ່ເຂົາຍອມຈຳນົນແລະວາງໃຈໃນພຣະອົງ ທີ່ເຮັດໃຫ້ພຣະອົງຍອມຮັບແລະຊ່ວຍພວກເຂົາໃຫ້ພົ້ນຈາກໂທດນິລັນ ນີ້ເປັນທາງທີ່ພຣະເຈົ້າກຳນົດໄວ້ສຳລັບຊົນຊາດ ຜູ້ທີ່ຈະໄດ້ຮັບການຊ່ວຍເຫລືອ ຄືຜູ້ທີ່ເຫັນດ້ວຍກັບພຣະອົງໃນເລື່ອງທີ່ມະນຸດທຸກຄົນເປັນຄົນບາບ ແລະຍອມຮັບວ່າ ເຂົາທຸກຄົນເປັນຄົນບາບທີ່ຢູ່ໃຕ້ອຳນາດຂອງຄວາມບາບແລະຄວາມຕາຍ

ພຣະເຈົ້າຢາກໃຫ້ຮຽນຮູ້ເຖິງສະພາບເຮົາເອງ ເຮົາເປັນຄົນບາບທີ່ຊ່ວຍຕົນເອງບໍ່ໄດ້ ເຮົາບໍ່ສາມາດຊ່ວຍຕົນເອງໃຫ້ລອດພົ້ນຈາກຄວາມບາບ ຫລືຄວາມຕາຍໄດ້ ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຈະຊ່ວຍເຮົາໄດ້





ເຮົາບໍ່ສົມຄວນກາບໄຫ້ວນະມັດສະການຜູ້ອື່ນຫລືສິ່ງອື່ນ ພຣະເຈົ້າຕ້ອງເປັນຜູ້ຍິ່ງໃຫຍ່ສູງສຸດໃນຄວາມຄິດຂອງເຮົາ ແລະເຮົາຕ້ອງສັນເສີນຂອບຄຸນພຣະອົງສຳລັບທຸກສິ່ງ ຖ້າຜູ້ໃດຍົກຜູ້ອື່ນຫລືສິ່ງອື່ນແທນພຣະເຈົ້າ ຜູ້ນັ້ນເປັນຜູ້ກະບົດ ແລະເຮັດບາບຕໍ່ພຣະອົງ ເຖິງວ່າປາກຂອງເຮົາຈະບອກວ່າເຮົານັບຖືພຣະເຈົ້າແຕ່ຖ້າພຣະອົງບໍ່ໄດ້ເປັນຜູ້ຍິ່ງໃຫຍ່ສູງສຸດໃນຈິດໃຈຂອງເຮົາ ເຮົາກໍ່ຜິດພຣະບັນ ຍັດຂອງພຣະເຈົ້າແລ້ວ ເພາະພຣະເຈົ້າເບິ່ງພາຍໃນຈິດໃຈ

ເລີ່ມແຕ່ທຳອິດ ເມື່ອອາດາມໄດ້ຫັນຫຼັງໃຫ້ພຣະເຈົ້າ ແລະບໍ່ຍອມໃຫ້ພຣະອົງເປັນຜູ້ຄອບຄອງຕໍ່ມາ ເຊື້ອສາຍຂອງອາດາມກໍ່ໄດ້ເລືອກທາງຂອງຕົນເອງທຸກຄົນດ້ວຍເໝືອນກັນ ບໍ່ມີໃຜຍອມໃຫ້ພຣະອົງຄອບຄອງທັງໝົດບັນພຣະບູລຸດຂອງເຮົາໄດ້ເຮັດຜິດຕໍ່ພະບັນຍັດຂໍ້ທີ່1 ຂອງພຣະເຈົ້າ ພວກເຂົາຍອມຮັບໃຫ້ພວກຜີປີສາດໃຫ້ເປັນໃຫຍ່ແທນພຣະເຈົ້າ ແລະຊາຕານໄດ້ເຂົ້າມາຄອບຄອງຊີວິດຂອງພວກເຂົາ ເມື່ອເຮັດຜິດເຊັ່ນນັ້ນ ມະນຸດຕ້ອງຮັບໂທດ ຄືຕ້ອງຖືກແຍກຈາກພຣະເຈົ້າຕະຫລອດໄປ

**ອົບພະຍົບ 20:4-6 - ພະບັນຍັດຂໍ້ທີ 2**

ໃຫ້ຊາວອິດສະລະເອນລະລຶກເຖິງລັກສະນະຂອງພຣະເຈົ້າ ຜູ້ເປັນວິນຍານທີ່ບໍ່ມີຈຸດເລີ້ມຕົ້ນຫລືຈຸດສິ້ນສຸດ ບໍ່ເໝືອນສິ່ງທີ່ມີຮ່າງກາຍເຊິ່ງເປັນສິ່ງທີ່ຖືກສ້າງໄວ້ ພຣະເຈົ້າບໍ່ໄດ້ເປັນມະນຸດ, ນົກ, ສັດຫລືປາ ເຫດສະ ນັ້ນ ເຮົາບໍ່ຄວນສ້າງຮູບໃດໆ ໄວ້ແທນພຣະເຈົ້າຊົງຜູ້ສ້າງທຸກສິ່ງ ບໍ່ມີໃຜສາມາດ ສ້າງຮູບຫຍັງ ທີ່ສົມກັບພຣະລັກສະນະກັບພຣະເຈົ້າໄດ້ ເຮົາຮູ້ລັກສະນະຂອງ ພຣະເຈົ້າຈາກພຣະຄຳພີ ສ່ວນຄຳສອນອື່ນໆທີ່ແຕກຕ່າງໄປຈາກພຣະຄຳພີ ແມ່ນມາຈາກຊາຕານທັງນັ້ນ ຄົນທົ່ວໂລກໄດ້ຖືກຊາຕານລໍ້ລ່ວງໃຫ້ອອກຫ່າງຈາກຄວາມຈິງຂອງພຣະເຈົ້າ ຊາຕານຈູງຄົນທັງຫລາຍໃຫ້ມີຄວາມຄິດກ່ຽວກັບພຣະເຈົ້າໄປບໍ່ຖືກຕ້ອງ ເມື່ອ

ຂອງພຣະອົງ ເຮົາກໍ່ເປັນຄົນຜິດບາບແລ້ວ ແລະຕ້ອງຖືກລົງໂທດ ພຣະເຈົ້າຢາກໃຫ້ທຸກຄົນເຂົ້າໃຈ ແລະໜັກ  ແໜ້ນວ່າ ການກະທຳຂອງເຮົາບໍ່ພໍທີ່ຈະໃຫ້ພຣະເຈົ້າຍອມຮັບເຮົາ ການທີ່ມະນຸດຈະຮັກສາຂໍ້ບັນຍັດຂອງພຣະເຈົ້າໄດ້ຢ່າງຄົບຖ້ວນນັ້ນ ເປັນສິ່ງທີ່ເປັນໄປບໍ່ໄດ້ເພາະເຮົາທັງຫລາຍເກີດມາເປັນຄົນບາບ ເຮົາບໍ່ສາມາດຮູ້ຈັກການທີ່ຈະຮັກ ແລະເຊື່ອຟັງພຣະເຈົ້າໄດ້ດີ ພໍທີ່ຈະໃຫ້ພຣະອົງພໍພຣະໄທໃນການກະທຳຂອງເຮົາທຸກດ້ານ

ແທ້ຈິງແລ້ວ ເຮົາບໍ່ສາມາດເຂົ້າໃຈໃນເລື້ອງນີ້ເອງໄດ້ ຈົນກ່ວາພຣະເຈົ້າຈະໄດ້ສອນເຮົາ ພຣະອົງໄດ້ສອນໃຫ້ເຮົາຮູ້ວ່າ ເຮົາເປັນຜູ້ຝ່າຝືນບັນຍັດຂອງພຣະອົງ ແລະສົມຄວນຮັບໂທດຈາກພຣະເຈົ້າ ເປັນຜູ້ທີ່ເກີດມາໃນສະພາບບາບເປັນຄົນບາບ ແລະເຮົາກໍ່ບໍ່ສາມາດຈະເຮັດໃຫ້ພຣະເຈົ້າພໍພຣະໄທໂດຍການເຮັດດີຂອງເຮົາໄດ້ ບໍ່ມີວັນທີ່ພຣະເຈົ້າຈະຍອມຮັບເຮົາເພາະການດີທີ່ເຮົາເຮັດ

ເມື່ອເຮົາອ່ານທຳບັນຍັດຂອງພຣະເຈົ້າ ພຣະອົງຢາກໃຫ້ເຮົາຍອມຮັບວ່າ ເຮົາໄດ້ເຮັດບາງສິ່ງເປັນທີ່ລັງກຽດສຳລັບພຣະອົງ ແລະເຮົາກໍ່ບໍ່ສາມາດຮັກສາບັນຍັດໃຫ້ຄົບທັງໝົດໄດ້ ເຫດສະນັ້ນ ເຮົາຈຶ່ງບໍ່ສາມາດຊ່ວຍຕົນເອງໃຫ້ພົ້ນຈາກການລົງໂທດໄດ້ ຕາມຫລັກຂອງພຣະເຈົ້າຄວາມບາບຕ້ອງມີໂທດ ແລະ ໂທດນັ້ນຄືຄວາມຕາຍ ເຊິ່ງໝາຍເຖິງການຖືກແຍກອອກຈາກພຣະເຈົ້າຕະ ຫລອດໄປເປັນນິດ

**ອົບພະຍົບ 20:1-3 - ພະບັນຍັດຂໍ້ທີ 1**

ກ່ຽວກັບການທີ່ມະນຸດນັບຖືພຣະເຈົ້າດ້ວຍໃຈຈິງ ພຣະເຈົ້າໄດ້ກ່າວວ່າພຣະອົງຜູ້ດຽວທີ່ເປັນພຣະເຈົ້າ ມະນຸດຕ້ອງເຊື່ອຟັງພຣະອົງແຕ່ຜູ້ດຽວເທົ່ານັ້ນ ພຣະເຈົ້າບໍ່ຍອມໃຫ້ເຮົາວາງໃຈ ແລະເພິ່ງສິ່ງອື່ນແທນພຣະອົງ





**ຊາວອິດສະລະເອນຕ້ອງຕຽມຕົວໃຫ້ພ້ອມກ່ອນທີ່ພຣະເຈົ້າຈະສຳແດງພຣະອົງ ທີ່ພູເຂົາຊີນາຍ**

**ອົບພະຍົບ 19:9-19**

ໃນຂໍ້ 9-19 ເຮົາເຫັນວ່າພຣະເຈົ້າປາດທະໜາຈະສຳແດງລິດອຳນາດອັນຍິ່ງໃຫຍ່ ແລະຄວາມບໍລິສຸດຂອງພຣະອົງ ທີ່ມີຕໍ່ຊາວອິດສະລະເອນ ເພື່ອເຂົາຈະເຂົ້າໃຈເຖິງຄວາມບໍລິສຸດ ແລະໝົດຈົດຂອງພຣະເຈົ້າຜູ້ກຽດຊັງຄວາມບາບ ແລະບໍ່ສາມາດຍອມຮັບຜູ້ໝິ່ນປະໝາດຕໍ່ພຣະອະຈະນະອັນບໍລິສຸດຂອງພຣະອົງ

ພຣະເຈົ້າໃຫ້ຊາວອິດສະລະເອນກຳນົດເຂດຮອບພູເຂົາ(2:12) ເພື່ອບໍ່ໃຫ້ມະນຸດແລະສັດເຂົ້າມາແຕະຕ້ອງພູເຂົານັ້ນ ຜູ້ທີ່ເຂົ້າມາແຕະຕ້ອງຈະຕ້ອງຕາຍ(2:17) ຄວາມຈິງໂທດຂອງຄວາມບາບທຸກຢ່າງ ຄືຄວາມຕາຍເພາະພຣະເຈົ້າບໍລິສຸດໝົດຈົດ ບໍ່ເໝືອນມະນຸດຜູ້ເຊິ່ງເຕັມໄປດ້ວຍຄວາມບາບ ພຣະເຈົ້າຈະບໍ່ຍອມຮັບຜູ້ທີ່ບໍ່ບໍລິສຸດ ຄວາມບໍລິສຸດຂອງພຣະອົງເຮັດໃຫ້ຕ້ອງແຍກຄົນບາບອອກຈາກພຣະອົງ ມະນຸດເຊິ່ງເປັນຄົນບາບຈະມາຫາພຣະເຈົາບໍ່ໄດ້ ເຫດວ່າທີ່ອາດາມແລະເອວາຖືກຕັດຂາດຈາກພຣະເຈົ້າ ກໍ່ເນື່ອງມາຈາກຄວາມບາບຂອງຕົນ ເມື່ອອາດາມແລະເອວາເຮັດຜິດ ເຂົາຖືກໄລ່ອອກຈາກສວນ ແລະຫ່າງໄກຈາກພຣະເຈົ້າ ພຣະເຈົ້າກຽດຊັງຄົນໝິ່ນປະໝາດຕໍ່ພຣະບັນຊາຂອງພຣະອົງ ພຣະອົງຈະບໍ່ຍອມເປັນມິດກັບຄົນບາບ

ຝ່າຍໂມເຊໄດ້ຕຽມຄົນຕາມທີ່ພຣະເຈົ້າໄດ້ສັ່ງໄວ້ທຸກປະການ ເຂົາຕ້ອງທຳຕາມທາງຂອງພຣະເຈົ້າ ບໍ່ສະນັ້ນຈະຕ້ອງຕາຍ

**ພຣະເຈົ້າໃຫ້ພຣະບັນຊາຈາກພູເຂົາຊີນາຍ**

**ອົບພະຍົບ 19:20-25**

ເມື່ອພຣະເຈົ້າໃຫ້ພະວະຈະນະແກ່ປະຊາຊົນວັນນັ້ນ ກໍ່ບໍ່ແປກທີ່ພວກເຂົາຈະຮູ້ສຶກຢ້ານຫລາຍ ຖ້າພຣະອົງສຳແດງພຣະອົງແກ່ເຮົາເຊັ່ນນັ້ນ ເຮົາຈະຮູ້ສຶກຢ່າງໃດ?

ເມື່ອພຣະເຈົ້າໃຫ້ເກີດຟ້າຮ້ອງຟ້າແມບເມກມືດ ແລະແຜ່ນດິນໄຫວນັ້ນ ກໍ່ເພື່ອສະແດງໃຫ້ຊາວອິດສະລະເອນຮູ້ວ່າ ພຣະເຈົ້າຊົງມີລິດອຳນາດຍິ່ງໃຫຍ່ ຊົງເປັນຜູ້ບໍລິສຸດແລະຄວາມບໍລິດສຸດຂອງພຣະອົງສຳແດງອອກມາເປັນພຣະພິໂລດ ເພື່ອລົງໂທດຕໍ່ຄວາມບາບທຸກຢ່າງ

ໃນສະໄໝຂອງໂນອາ ພຣະເຈົ້າໄດ້ເຄີຍສຳແດງໃຫ້ຊາວໂລກຮູ້ເຖິງລິດອຳນາດອັນຍິ່ງໃຫຍ່ ໂດຍພຣະພິໂລດຂອງພຣະອົງທີ່ລົງໂທດຕໍ່ຄວາມບາບ ເມື່ອຄັ້ງທີ່ທຳລາຍໂລກ ຕໍ່ມາພຣະເຈົ້າກໍ່ໃຫ້ໄຟແລະກຳມະຖັນຕົກລົງມາເຜົາເມືອງໂຊໂດມແລະໂກໂມລາ ເພາະຄວາມຊົ່ວຂອງຊາວເມືອງນັ້ນ ຈາກນັ້ນພຣະເຈົ້າໃຫ້ມະນຸດຮູ້ເຖິງລິດອຳນາດແລະການທີ່ພຣະອົງຕ້ອງລົງໂທດ ໂດຍການສົ່ງໄພພິບັດແກ່ຊາວອີຢິບ ຕະຫລອດເຖິງການທີ່ໃຫ້ທະຫານທັງຫລາຍຕາຍໃນທະເລແດງ ເຮົາຈຶ່ງເຫັນວ່າພຣະເຈົ້າຊັງຄວາມບາບ ແລະພຣະອົງຈະລົງໂທດຕໍ່ຄວາມບາບສະເໝີ

ຊາວອິດສະລະເອນເປັນຄົນບາບ ຖ້າພວກເຂົາເຂົ້າມາເຖິງພູເຂົາສັກສິດທີ່ພຣະເຈົ້າ ຜູ້ບໍລິສຸດກຳລັງສຳແດງພຣະອົງຢູ່ ພວກເຂົາຈະຕ້ອງຕາຍແນ່ນອນ ເຫດສະນັ້ນພຣະເຈົ້າເຕືອນໂມເຊອີກຄັ້ງໜຶ່ງ ໂມເຊເອງກໍ່ເປັນຄົນບາບດ້ວຍ ແຕ່ໂດຍຄວາມເມດຕາຂອງພຣະອົງ ພຣະອົງຍອມຮັບລາວ ເພາະການທີ່ລາວວາງໃຈໃນພຣະກະລຸນາຂອງພຣະອົງ ແລະໄດ້ມາຫາພຣະອົງຕາມທາງທີ່ພຣະອົງບອກໄວ້ ໂມເຊບໍ່ສົມຄວນມາຫາ





ພະບັນຍັດຂອງພຣະເຈົ້າ ຍັງເປັນເໝືອນເຄື່ອງເອັກສະເລ (x-ray) ທີ່ໝໍໃຊ້ເຄື່ອງນັ້ນ ເຮັດໃຫ້ໝໍເຫັນສິ່ງຕ່າງໆ ທີ່ຢູ່ພາຍໃນຮ່າງກາຍ ແລະພຣະເຈົ້າໃຊ້ພະບັນຍັດກວດສອບສະພາບພາຍໃນຈິດໃຈຂອງມະນຸດເຊັ່ນກັນ

ສົມມຸດວ່າ ເຮົາຮັກສາພະບັນຍັດຂອງພຣະເຈົ້າ ບາງຂໍ້ເຮົາອາດເຮັດເທົ່າທີ່ເຮົາເຮັດໄດ້ ພຣະເຈົ້າຈະຍອມຮັບເຮົາ ເພາະເຫັນແກ່ຂໍ້ເຫລົ່ານັ້ນທີ່ເຮົາເຮັດໄດ້ນັ້ນບໍ່? ບໍ່ເລີຍ! ພຣະເຈົ້າບັນຊາໃຫ້ເຮົາຮັກສາທຸກຂໍ້ຕະຫລອດເວລາ ພຣະເຈົ້າກ່າວວ່າ ແມ້ແຕ່ຜູ້ທີ່ຮັກສາພະບັນຍັດໄດ້ຫລາຍຂໍ້ ຖ້າພວກເຂົາເຮັດຜິດພຽງຂໍ້ດຽວ ກໍ່ຍັງນັບວ່າ ເຂົາເປັນຜູ້ລະເມີດພະບັນຍັດ ຄົນນັ້ນຍັງເປັນຄົນບາບຢູ່ ແລະຈະຕ້ອງຮັບໂທດຈາກພຣະເຈົ້າ

ໃຫ້ເຮົາສັງເກດເບິ່ງໃນປະຖົມມະການ ອາດາມແລະເອວາໄດ້ເຮັດຜິດຈັກຄັ້ງ ກ່ອນທີ່ພຣະເຈົ້າຕັດຂາດຄວາມສຳພັນຈາກພວກເຂົາ ແລະໄລ່ພວກເຂົາອອກຈາກສວນນັ້ນ? ພວກເຂົາເຮັດຜິດພຽງແຕ່ຄັ້ງດຽວ ແລະພວກເຂົາກໍ່ໄດ້ຮັບໂທດແຫ່ງຄວາມຕາຍ ເຫດສະນັ້ນ ເຮົາເຫັນວ່າພຣະເຈົ້າບັນຊາໃຫ້ເຮົາເຊື່ອຟັງຕະ ຫລອດເວລາໃນທຸກສິ່ງ ການຝ່າຝືນພຽງແຕ່ຄັ້ງດຽວກໍ່ຈຳເປັນຕ້ອງຮັບໂທດ

ເຮົາອາດລ່າມໂສ້ຊ້າງໂຕໃຫຍ່ໄວ້ ແຕ່ຖ້າລູກໂສ້ນັ້ນຂາດໄປພຽງຂໍ້ດຽວ ໂສ້ ນັ້ນກໍ່ໃຊ້ບໍ່ໄດ້ແລ້ວ

ເຖິງແມ້ນວ່າຂໍ້ອື່ນໆ ອາດດີທັງໝົດແຕ່ເພາະຂໍ້ດຽວນັ້ນ ໂສ້ກໍ່ບໍ່ມີຄວາມໝາຍອີກຕໍ່ໄປ ຂໍ້ບັນຍັດຕ່າງໆ ຂອງພຣະເຈົ້າກໍ່ເຊັ່ນດຽວກັນ ພຣະເຈົ້າກ່າວວ່າຖ້າເຮົາຝ່າຝືນ ຫລືເຮັດຜິດພຽງຂໍ້ດຽວໃນພະບັນຍັດ

ຈະຕ້ອງຮັບໂທດນັ້ນຄືບ່ອນເຊິ່ງພຣະເຈົ້າຕຽມໄວ້ສຳລັບຊາຕານ ແລະສະໝຸນຂອງມັນຜູ້ທີ່ກະບົດຕໍ່ພຣະເຈົ້າ

ໃນຂະນະເມື່ອພຣະເຈົ້າໃຫ້ພຣະບັນຍັດນັ້ນ ພຣະອົງຊົງຮູ້ແລ້ວວ່າຊາວອິດສະລະເອນບໍ່ສາມາດຈະເຊື່ອຟັງທຸກຂໍ້ຕະຫລອດເວລາ ເປັນຫຍັງພຣະເຈົ້າຈຶ່ງໃຫ້ພຣະບັນຍັດນັ້ນແກ່ພວກເຂົາ ທັງທີ່ຮູ້ວ່າພວກເຂົາຈະຮັກສາບໍ່ໄດ້? ພຣະເຈົ້າໃຫ້ພຣະບັນຍັດເພື່ອຊາວອິດສະລະເອນຈະໄດ້ຕະໜັກວ່າ ພວກເຂົາບໍ່ສາມາດ ເຊື່ອຟັງພຣະເຈົ້າໄດ້ຢ່າງຄົບຖ້ວນ ແລະການຕະກຽດຕະກາຍຂອງພວກເຂົາບໍ່ພຽງພໍ ທີ່ຈະໃຫ້ພຣະເຈົ້າຍອມຮັບເຂົາ

ຢ່າງໃດກໍ່ຕາມ ພຣະເຈົ້າບໍ່ໄດ້ໃຫ້ພຣະສັນຍາຂອງພຣະອົງພຽງແຕ່ພິສູດໃຫ້ເຫັນວ່າ ຊາວອິດສະລະເອນບໍ່ສາມາດເຮັດຕົນໃຫ້ເປັນທີ່ພໍພຣະໄທພຣະອົງໄດ້ເທົ່ານັ້ນ ແຕ່ພຣະອົງຍັງໃຫ້ພຣະບັນຍັດໄວ້ ເພື່ອມະນຸດທຸກຊາດຈະຮູ້ເຖິງຄວາມຮ້າຍແຮງແຫ່ງຄວາມບາບຂອງຕົນ ແລະໃຫ້ຮູ້ວ່າ ບໍ່ມີໃຜສາມາດເຮັດໃຫ້ຕົນເປັນທີ່ພໍພຣະໄທພຣະເຈົ້າໄດ້ ໂດຍການກະທຳຂອງຕົນເອງ

ອີກເຫດຜົນໜຶ່ງ ພຣະເຈົ້າໃຫ້ພະບັນຍັດເພື່ອມະນຸດໂລກຈະວາງໃຈໃນພຣະເມດຕາຂອງພຣະອົງພຽງຢ່າງດຽວ ເຊິ່ງຈະຊ່ວຍໃຫ້ເຂົາພົ້ນຈາກໂທດນິລັນແຫ່ງຄວາມບາບໄດ້

ພຣະບັນຍັດຕ່າງໆ ຂອງພຣະເຈົ້າເປັນເໝືອນກະຈົກເງົາ ເຮົາບໍ່ຮູ້ຄວາມສົກກະປົກຢູ່ເທິງໃບໜ້າຈົນກວ່າເຮົາຈະເບິ່ງໃນກະຈົກນັ້ນ ເຮົາບໍ່ຮູ້ຈັກຄວາມບາບໃນຈິດໃຈຂອງເຮົາຈົນກ່ວາພະບັນຍັດບໍລິສຸດຂອງພຣະເຈົ້າ ຈະຊີ້ໃຫ້ເຮົາເຫັນຄວາມບາບຂອງເຮົາເຊັ່ນນັ້ນ





ພຣະເຈົ້າແລະເວົ້າກັບພຣະອົງ ແຕ່ພຣະເຈົ້າໄດ້ເລືອກໂມເຊໃຫ້ເຜີຍພະວະຈະນະຂອງພຣະອົງແກ່ຊາວອິດສະລະເອນ ຊາວອິດສະລະເອນປະຕິເສດຄຳເວົ້າຂອງໂມເຊ ກໍ່ເທົ່າກັບປະຕິເສດຄຳເວົ້າຂອງພຣະເຈົ້າ ແລະຈະຕ້ອງໄດ້ຮັບໂທດ

ເຊັ່ນດຽວກັນ ເຮົາກຳລັງຟັງພຣະຄຳພີເຊິ່ງເປັນຄຳເວົ້າຂອງພຣະເຈົ້າທີ່ມາເຖິງເຮົາ ແລະຜູ້ທີ່ປະຕິເສດຂໍ້ຄວາມໃນພຣະຄຳພີນີ້ກໍ່ຈະຕ້ອງຮັບໂທດຈາກພຣະເຈົ້າຕະຫລອດໄປເປັນນິດ

**ທົບທວນ**

1. ຕອນທຳອິດທີ່ພຣະເຈົ້າສຳແດງພຣະອົງແກ່ໂມເຊທີ່ພຸ່ມໄມ້ນັ້ນ ພຣະອົງໄດ້ສັນຍາຫຍັງແກ່ໂມເຊ?
2. ພຣະເຈົ້າເຮັດຕາມພຣະສັນຍາຂອງພຣະອົງແທ້ບໍ່?
3. ເປັນຫຍັງພຣະເຈົາຈຶ່ງໃຫ້ພະບັນຍັດຂອງພຣະອົງແກ່ຊາວອິດສະລະເອນ?
4. ເປັນຫຍັງຊາວອິດສະລະເອນຄິດວ່າ ພວກເຂົາສາມາດຮັກສາພະບັນຍັດໄດ້ທຸກຂໍ້?
5. ເປັນຫຍັງພຣະເຈົ້າໃຫ້ໂມເຊກຳນົດເຂດຮອບພູເຂົາຊີນາຍ?
6. ເປັນຫຍັງປະຊາຊົນຕົກໃຈແລະຢ້ານຫລາຍ?
7. ການສຳແດງຢ່າງນັ້ນ ເພື່ອໃຫ້ຊາວອິດສະລະເອນຮູ້ຫຍັງກ່ຽວກັບພຣະເຈົ້າ?
8. ພຣະເຈົ້າເລືອກໃຜເປັນຜູ້ເຜີຍພຣະວະຈະນະຂອງພຣະອົງແກ່ຊາວອິດສະລະເອນ?
9. ໃນສະໄໝເຮົານີ້ ພຣະເຈົ້າເວົ້າກັບເຮົາຢ່າງໃດ?

**ຄວາມຈິງທີ່ຕ້ອງເນັ້ນ**

- ພຣະເຈົ້າຊົງເປັນຜູ້ຍິ່ງໃຫຍ່ສູງສຸດ ແລະຊົງຄອບຄອງເໜືອທຸກສິ່ງ
- ພຣະເຈົ້າຊົງສັດຊື່ ແລະບໍ່ປ່ຽນແປງ
- ມະນຸດຈະມາເຖິງພຣະເຈົ້າໄດ້ຕ້ອງມາຕາມທາງທີ່ພຣະເຈົ້າໄດ້ກຳນັດໄວ້
- ມະນຸດເປັນຄົນບາບ ແລະຊ່ວຍຕົນເອງບໍ່ໄດ້ ຈຳເປັນຕ້ອງເພິ່ງພຣະເຈົ້າ
- ພຣະເຈົ້າຊົງບໍລິສຸດ ແລະຊອບທຳ ໄດ້ຊົງກຳນົດຄວາມຕາຍເປັນໂທດຂອງຄວາມບາບ
- ພຣະເຈົ້າຊື່ສານກັບມະນຸດ







**ບົດທີ 16**

**ພຣະບັນຍັດສິບປະການ**

**ອົບພະຍົບ 20:1-17**

**ສ້າງຄວາມສົນໃຈ**

ຄຳສອນຂອງທຸກສາສະໜານັ້ນຈະມີຂໍ້ຫ້າມ ແລະຂໍ້ທີ່ເຮົາຄວນປະຕິ ບັດ ເຊິ່ງເຮົາເອີ້ນວ່າ “ສິນລະທຳ” ເຮົາສາມາດຢຶດຖືການປະຕິບັດຕາມສິນລະທຳເຫລົ່ານັ້ນໄດ້ບໍ່? ໄດ້ຈັກຂໍ້? ຂໍ້ຫ້າມຂອງມະນຸດນັ້ນຍາກແທ້ໆ

ເຮົາຢາກຈະຮູ້ເຖິງຄວາມຈິງຂອງ ພຣະເຈົ້າທ່ຽງແທ້ບໍ່? ເຮົາຄິດວ່າເຮົາ ຈະຍຶດຖື ຫລືປະຕິບັດຕາມໄດ້ບໍ່?

**ພະຄຳບັນຍັດເຊິ່ງເວົ້າຢູ່ເທິງພູເຂົາ**

**ອົບພະຍົບ 19:16-19**

ຫລັງຈາກໂມເຊໄດ້ລົງມາຈາກພູເຂົາແລ້ວ ພຣະເຈົ້າເວົ້າອອກມາຈາກພູເຂົານັ້ນໃຫ້ຊາວອິດສະລະເອນຟັງ ໃນຂະນະນັ້ນພູເຂົາສະທ້ານຫວັ່ນໄຫວໄປທົ່ວ ປະຊາຊົນໄດ້ຍິນສຽງຟ້າຮ້ອງແລະເຫັນຟ້າແມບແລະຄວັນໄຟແລະເມກ ເຂົາທັງ ຫລາຍຖອຍອອກດ້ວຍຄວາມຢ້ານ ເວລານັ້ນພຣະເຈົ້າໄດ້ພຣະບັນຍັດຂອງ ພຣະອົງແກ່ພວກເຂົາ

ຖ້າປະຊາຊົນຝ່າຝືນຕໍ່ພຣະບັນຍັດພຣະອົງນັ້ນແມ້ແຕຂໍ້ດຽວ ໂທດທີ່ຕ້ອງຮັບຄືຕ້ອງຖືກຕັດຂາດຈາກພຣະເຈົ້າຕະຫລອດໄປເປັນນິດ ບ່ອນທີ່